ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
Souvanny Home Center Public Company

ໜັງສືຊວນຊື້



ເພື່ອສະເໜີຂາຍຈຳໜ່າຍ

ປະເພດຮຸ້ນກູ້:	ລະບຸຊື່ຜູ້ຖືປະເພດບໍ່ດ້ອຍສິດ, ບໍ່ມີການຄ້ຳປະກັນ ແລະ ບໍ່ມີຜູ້ແທນຜູ້ຖືຮຸ້ນກູ້ ຮຸ້ນກູ້ທີ່ສາມາດໄຖ່ຖອນໄດ້ກ່ອນຄົບກຳນົດ
ຈຳນວນໜ່ວຍທັງໝົດ:	ໜ່ວຍ
ມູນຄ່າກຳນົດ:	50.000 ໂດລາ ສະຫະລັດ
ລາຄາຂາຍ:	50.000 ໂດລາ ສະຫະລັດ
ມູນຄ່າລວມ:	ໂດລາ ສະຫະລັດ
ການອອກຈຳໜ່າຍ:	ໃນວົງຈຳກັດ, ແກ່ນັກລົງທຶນ ປະເພດ ສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່

ວັນ.ເດືອນ.ປີ ອອກຮຸ້ນກູ້:	19/05/2023
ວັນ.ເດືອນ.ປີ ຄົບກຳນົດ ອາຍຸການໄຖ່ຖອນ:	19/05/2027
ອັດຕາດອກເບ້ຍ:	7,5 % ຕໍ່ປີ (ຄົງທີ)
ການຈ່າຍດອກເບ້ຍ:	ທຸກໆ 6 ເດືອນ (2ຄັ້ງ/ປີ) ຕະຫຼອດຮຸ້ນກູ້
ອາຍຸ:	4 ປີ

ໜັງສືຊວນຊື້

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
ເພື່ອສະເໜີອອກຈຳໜ່າຍ

ຮຸ້ນກູ້ປະເພດ	ລະບຸຊື່ຜູ້ຖືປະເພດບໍ່ດ້ອຍສິດ, ບໍ່ມີການຄ້ຳປະກັນ, ແລະ ບໍ່ມີຕົວແທນຜູ້ຖືຮຸ້ນກູ້
ຈຳນວນໜ່ວຍທັງໝົດ	60 ໜ່ວຍ
ມູນຄ່ານຳນິດ	50.000ໂດລາ ສະຫະລັດ
ລາຄາຂາຍ	50.000ໂດລາ ສະຫະລັດ
ມູນຄ່າລວມ	ໂດລາ ສະຫະລັດ
ການອອກຈຳໜ່າຍ	ໃນວົງຈຳກັດ, ອອກໃຫ້ແກ່ຜູ້ລົງທຶນ ປະເພດ ສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່
ວັນອອກຮຸ້ນກູ້	19 ພຶດສະພາ 2023
ວັນຄົບກຳນົດ ອາຍຸການໄຖ່ຖອນ	19 ພຶດສະພາ 2027
ອັດຕາດອກເບ້ຍ	7,5% (ຄົງທີ່) ຕໍ່ປີ
ການຈ່າຍດອກເບ້ຍ	ທຸກໆ 6 ເດືອນ (2 ຄັ້ງ/ປີ) ຕະຫຼອດອາຍຸຮຸ້ນກູ້
ອາຍຸ	4 ປີ
ການຈັດລຳດັບຄວາມໜ້າເຊື່ອຖື	ບໍ່ມີການຈັດລຳດັບຄວາມໜ້າເຊື່ອຖື

ໄລຍະເວລາການອອກຈຳໜ່າຍ

15 ຫາ 19 ພຶດສະພາ 2023, ມື້ປິດຈອງວັນທີ 19 ພຶດສະພາ 2023 (ເວລາ 15:30 ໂມງ)

ເວລາເປີດຈອງ 8:30 - 15:30ໂມງ

ທີ່ປຶກສາດ້ານການເງິນ	ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ
ຕົວແທນການຈັດຈຳໜ່າຍຮຸ້ນກູ້	ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ
ຕົວແທນຜູ້ຖືຮຸ້ນກູ້	ບໍ່ມີ
ນາຍທະບຽນຫຼັກຊັບ	ຕະຫຼາດຫຼັກຊັບລາວ

ໜັງສືຊວນຊື້ສະບັບນີ້ສ້າງຂຶ້ນເພື່ອໃຫ້ກຸ່ມຜູ້ລົງທຶນທີ່ສົນໃຈຈະລົງທຶນໃນ ຮຸ້ນກູ້ໃນວົງຈຳກັດ ທີ່ອອກໂດຍ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ໃຊ້ເປັນຂໍ້ມູນເບື້ອງຕົ້ນສຳລັບການລົງທຶນເທົ່ານັ້ນ ບໍ່ໄດ້ໝາຍຄວາມວ່າ ຄຄຊ ຫຼື ສຳນັກງານ ຄຄຊ ແນະນຳໃຫ້ລົງທຶນໃນຮຸ້ນກູ້ທີ່ສະເໜີອອກຈຳໜ່າຍ, ຮັບປະກັນກ່ຽວກັບລາຄາ ຫຼື ຜົນຕອບແທນຂອງຮຸ້ນກູ້ ດັ່ງກ່າວ, ຮັບຮອງຄວາມຄົບຖ້ວນ ແລະ ຖືກຕ້ອງຂອງຂໍ້ມູນ ໃນໜັງສືຊວນຊື້ສະບັບນີ້ແຕ່ຢ່າງໃດ. ການຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເນື້ອໃນ ແລະ ຂໍ້ມູນຕ່າງໆ ໃນໜັງສືຊວນຊື້ສະບັບນີ້ ເປັນຄວາມຮັບຜິດຊອບຂອງບໍລິສັດອອກຈຳໜ່າຍຮຸ້ນກູ້ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຖ້າວ່າເນື້ອໃນ ຫຼື ຂໍ້ມູນໃນໜັງສືຊວນຊື້ ບໍ່ເປັນຄວາມຈິງ ຫຼື ຂາດຂໍ້ມູນທີ່ຄວນແຈ້ງ ຜູ້ຖືຮຸ້ນກູ້ ສາມາດຮຽກຮ້ອງຄ່າເສຍຫາຍຈາກບໍລິສັດອອກຮຸ້ນກູ້ ຫຼື ເຈົ້າຂອງຮຸ້ນກູ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ບຸກຄົນທົ່ວໄປສາມາດຂໍກວດສອບ ຫຼື ຂໍສຳເນົາ ໜັງສືຊວນຊື້ຂອງບໍລິສັດອອກຈຳໜ່າຍຮຸ້ກູ້ທີ່ໄດ້ຍື່ນໄວ້ ທີ່ສຳນັກງານ ຄຄຊ ຫຼື ໃນ Website ຂອງສຳນັກງານ ຄຄຊ (www.lsc.gov.la)

"ທຸກການລົງທຶນມີຄວາມສ່ຽງ ຜູ້ລົງທຶນຄວນສຶກສາຂໍ້ມູນລະອຽດກ່ອນການຕັດສິນໃຈລົງທຶນ"

ຂໍ້ຈຳກັດຄວາມຮັບຜິດຊອບ

ໜັງສືຊວນຊື້ສະບັບນີ້ ສ້າງຂຶ້ນເພື່ອເຜີຍແຜ່ຕໍ່ຜູ້ລົງທຶນສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງ ວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ (ສະບັບປັບປຸງ) ເລກທີ່ 20/ຄຄຊ ລົງວັນທີ 23/06/2021 ເພື່ອໃຊ້ເປັນຂໍ້ມູນເບື້ອງຕົ້ນສຳລັບການພິຈາລະນາລົງທຶນ ໃນຮຸ້ນກູ້ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ທີ່ອອກໃນປີ 2023 ທີ່ຈະຄົບກຳນົດໃນປີ 2027 (ເຊິ່ງຕໍ່ໄປນີ້ ເອີ້ນວ່າ: ຮຸ້ນກູ້) ທີ່ຈະອອກໂດຍ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ (ເຊິ່ງຕໍ່ໄປນີ້ ເອີ້ນວ່າ: ບໍລິສັດ ຫຼື ຜູ້ອອກຮຸ້ນກູ້) ໂດຍການອອກ ແລະ ສະເໜີຂາຍຮຸ້ນກູ້ໃນຄັ້ງນີ້ ເປັນການອອກ ແລະ ສະເໜີຂາຍຮຸ້ນກູ້ສະເພາະ ຕໍ່ຜູ້ລົງທຶນສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່ ດັ່ງທີ່ໄດ້ ກ່າວຂ້າງຕົ້ນເທົ່ານັ້ນ ໂດຍ ຜູ້ອອກຮຸ້ນກູ້ ຈະໄດ້ສະຫງວນສິດໃນການລະບຸຂໍ້ຈຳກັດ ໃນໜັງສືຊວນຊື້ສະບັບນີ້. ທັງນີ້, ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ ໃນນາມເປັນ ຕົວແທນການຈັດຈຳໜ່າຍຮຸ້ນກູ້ (ເຊິ່ງຕໍ່ໄປນີ້ ເອີ້ນວ່າ ຕົວແທນການຈັດຈຳໜ່າຍຮຸ້ນກູ້) ບໍ່ອະນຸຍາດໃຫ້ໃຊ້ຂໍ້ມູນໃນໜັງສືຊວນຊື້ ສະບັບນີ້ ເພື່ອວັດຖຸປະສົງອື່ນ ຫຼື ສ້າງຂໍ້ມູນດັ່ງກ່າວຂຶ້ນໃໝ່ ບໍ່ວ່າ ທັງໝົດ ຫຼື ບາງສ່ວນ ຫຼື ເປີດເຜີຍຂໍ້ມູນດັ່ງກ່າວ ແກ່ບຸກຄົນອື່ນໃດ ທີ່ບໍ່ແມ່ນ ຜູ້ລົງທຶນສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່ ທີ່ໄດ້ລະບຸໄວ້ຂ້າງຕົ້ນ.

ຂໍ້ມູນທັງໝົດທີ່ກ່ຽວກັບ ບໍລິສັດ ແລະ ຮຸ້ນກູ້ ລວມເຖິງຂໍ້ມູນກ່ຽວກັບທຸລະກິດໃນປະຈຸບັນ ແລະ ຜົນການດຳເນີນການໃນທຸລະກິດຂອງບໍລິສັດ ແລະ ແຜນການດຳເນີນງານຂອງບໍລິສັດ ເປັນຂໍ້ມູນທີ່ໄດ້ຮັບຈາກ ແລະ ຈັດກຽມຂຶ້ນໂດຍ ບໍລິສັດ. ນອກຈາກນັ້ນ, ໜັງສືຊວນຊື້ສະບັບນີ້ຍັງມີຂໍ້ຄວາມທີ່ມີລັກສະນະເປັນການຄາດຄະເນໃນອານາຄົດຕາມຄວາມເຫັນຂອງບໍລິສັດ ແມ່ນບໍ່ໄດ້ມີການຮັບຮອງຜົນຂອງການຄາດຄະເນຂອງບໍລິສັດແຕ່ຢ່າງໃດ. ດັ່ງນັ້ນ, ຜົນທີ່ຈະເກີດຂຶ້ນໃນອານາຄົດອາດຈະມີຄວາມແຕກຕ່າງຕາມສະພາບເສດຖະກິດໃນຊ່ວງໄລຍະເວລານັ້ນ ເຊິ່ງຜູ້ລົງທຶນຄວນພິຈາລະນາ ແລະ ບໍ່ຍຶດຖືຕາມຂໍ້ຄວາມທີ່ມີລັກສະນະເປັນການຄາດຄະເນໃນອານາຄົດໄດ້.

ເຖິງແມ່ນວ່າຂໍ້ມູນທີ່ລະບຸໃນໜັງສືຊວນຊື້ສະບັບນີ້ ເປັນຂໍ້ມູນທີ່ໄດ້ຮັບຈາກແຫຼ່ງຂໍ້ມູນທີ່ໜ້າເຊື່ອຖື ຕົວແທນການຈັດຈຳໜ່າຍຮຸ້ນກູ້ ບໍ່ອາດຮັບຮອງ ຫຼື ຢັ້ງຢືນຄວາມຖືກຕ້ອງ ຫຼື ຄວາມສົມບູນຂອງຂໍ້ມູນໃດໆ ດັ່ງກ່າວມາຂ້າງເທິ່ງນັ້ນ ແລະ ຂໍ້ມູນດັ່ງກ່າວ ອາດມີການປ່ຽນແປງ, ເພີ່ມຕື່ມ ຫຼື ແກ້ໄຂໄດ້ ໃນອານາຄົດ ໂດຍບໍ່ມີການແຈ້ງລ່ວງໜ້າ. ທັງນີ້, ຕົວແທນການຈັດຈຳໜ່າຍຮຸ້ນກູ້ຈະບໍ່ມີຄວາມຮັບຜິດຊອບໃນຄວາມຖືກຕ້ອງ ຫຼື ຄວາມສົມບູນຂອງຂໍ້ມູນທີ່ລະບຸໃນໜັງສືຊວນຊື້ນີ້ແຕ່ຢ່າງໃດ.

ການລົງທຶນໃນຮຸ້ນກູ້ເປັນການລົງທຶນທີ່ມີຄວາມສ່ຽງ ຜູ້ລົງທຶນຄວນໃຊ້ວິຈາລະນະຍານຢ່າງຮອບຄອບ ໃນການພິຈາລະນາຄວາມສ່ຽງໃນການເຂົ້າລົງທຶນ ຜູ້ລົງທຶນຄວນສຶກສາ ແລະ ທຳຄວາມເຂົ້າໃຈໃນຄວາມສ່ຽງຂອງການລົງທຶນໃນຮຸ້ນກູ້ດັ່ງກ່າວເປັນຢ່າງດີ.

ໜັງສືຊວນຊື້ສະບັບນີ້ ຄວນພິຈາລະນາຄວບຄູ່ກັບເອກະສານທີ່ຄັດຕິດມາພ້ອມນີ້ (ຖ້າມີ) ຊຶ່ງຖືເປັນສ່ວນໜຶ່ງຂອງໜັງສືຊວນຊື້ນີ້. ຜູ້ລົງທຶນຈະຕ້ອງຕັດສິນໃຈການລົງທຶນດ້ວຍຕົນເອງ ໂດຍໃຊ້ຂໍ້ມູນຈາກໜັງສືຊວນຊື້ນີ້ເປັນພຽງເອກະສານປະກອບຂໍ້ມູນກ່ຽວກັບບໍລິສັດ ແລະ ຮຸ້ນກູ້. ຜູ້ທີ່ໄດ້ຮັບໜັງສືຊ່ວນຊື້ສະບັບນີ້ຈະຕ້ອງບໍ່ຖືວ່າຂໍ້ມູນທີ່ລະບຸໃນໜັງສືຊວນຊື້ສະບັບນີ້ ເປັນການໃຫ້ຄຳປຶກສາທາງດ້ານກົດໝາຍ, ທຸລະກິດ ຫຼື ຜູ້ຊ່ຽວຊານ. ຜູ້ທີ່ໄດ້ຮັບໜັງສືຊວນຊື້ສະບັບນີ້ ຄວນປຶກສາກັບທີ່ປຶກສາທາງດ້ານກົດໝາຍ, ທຸລະກິດ ແລະ ຜູ້ຊ່ຽວຊານ ທີ່ກ່ຽວກັບການລົງທຶນໃນຮຸ້ນກູ້ນີ້ດ້ວຍຕົນເອງ.

ໜັງສືຊວນຊື້ສະບັບນີ້ ບໍ່ໄດ້ມີການຮັບຮອງໂດຍ ຕົວແທນການຈັດຈຳໜ່າຍຮຸ້ນກູ້ວ່າ ຂໍ້ມູນທີ່ລະບຸໃນໜັງສືຊ່ວນຊື້ສະບັບນີ້ຖືກຕ້ອງຄົບຖ້ວນສົມບູນ. ນອກຈາກນັ້ນ, ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບກໍ່ບໍ່ໄດ້ຮັບຮອງຄວາມຖືກຕ້ອງສົມບູນຂອງໜັງສືຊ່ວນຊື້ສະບັບນີ້ເຊັ່ນກັນ.

ສາລະບານ

ໜ້າ

ພາກທີ 1
ພາກສັງລວມ

1. ສະຫຼຸບຂໍ້ມູນກ່ຽວກັບບໍລິສັດ 01
2. ສະຫຼຸບຂໍ້ມູນກ່ຽວກັບຮຸ້ນກູ້ທີ່ສະເໜີອອກຈຳໜ່າຍ.....07
3. ສະຫຼຸບຂໍ້ມູນກ່ຽວກັບເອກະສານລາຍງານການເງິນ 08
4. ສະຫຼຸບກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງບໍລິສັດໃນໄລຍະທີ່ຜ່ານມາ.....10

ພາກທີ 2
ບໍລິສັດອອກຮຸ້ນກູ້

1. ບໍລິສັດອອກຈຳໜ່າຍຮຸ້ນກູ້ 12
2. ປັດໄຈຄວາມສ່ຽງ.....14
3. ການຈັດລຳດັບຄວາມໜ້າເຊື່ອຖື 18
4. ເປົ້າໝາຍການອອກຈຳໜ່າຍ ແລະ ແຜນການນຳໃຊ້ທຶນ. 19
5. ການດຳເນີນທຸລະກິດ 20
6. ການຄວບຄຸມພາຍໃນ.....32
7. ໂຄງສ້າງການບໍລິຫານ 33
8. ໂຄງສ້າງຜູ້ຖືຮຸ້ນ. 44
9. ລາຍການທີ່ກ່ຽວພັນ.....45
10. ສັບສິນທີ່ໃຊ້ໃນການດຳເນີນທຸລະກິດ.....46
11. ຂໍ້ມູນທາງການເງິນ, ວິເຄາະຖານະການເງິນ ແລະ ຜົນການດຳເນີນກິດຈະການ 47
12. ຂໍ້ຂັດແຍ່ງທາງດ້ານກົດໝາຍ 51
13. ການຈົດທະບຽນໃນຕະຫຼາດລັກຊັບລາວ 52

ພາກທີ 3
ຂໍ້ມູນກ່ຽວກັບການອອກຈຳໜ່າຍຮຸ້ນກູ້

1. ຂໍ້ມູນກ່ຽວກັບການອອກຈຳໜ່າຍຮຸ້ນກູ້ 53
2. ລາຍລະອຽດຂອງຮຸ້ນກູ້ສະເໜີຂາຍ 53
3. ວິທີ່ການກຳນົດລາຄາຮຸ້ນກູ້ 57
4. ຂັ້ນຕອນ ແລະ ວິທີການຈອງຊື້ຮຸ້ນກູ້.....57
5. ການຈັດສັນຮຸ້ນກູ້.....59
6. ການສົ່ງມອບໃບຢັ້ງຢືນຮຸ້ນກູ້.....60
7. ການອອກໃບຢັ້ງຢືນຮຸ້ນກູ້ 60
8. ຂໍ້ຈຳກັດການໂອນຮຸ້ນກູ້.....60
9. ກອງປະຊຸມຜູ້ຖືຮຸ້ນກູ້ 61

10. ຂໍ້ກຳນົດວ່າດ້ວຍສິດ ແລະ ໜ້າທີ່ຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້.....61
11. ພັນທະທາງອາກອນຂອງຜູ້ຖືຮຸ້ນກູ້ 61

ພາກທີ 4

ການຮັບຮອງຄວາມຖືກຕ້ອງ

1. ການຮັບຮອງຄວາມຖືກຕ້ອງ ຂໍ້ມູນໃນສ່ວນຂອງບໍລິສັດອອກຈຳໜ່າຍຮຸ້ນກູ້.....62
2. ການຮັບຮອງຄວາມຖືກຕ້ອງ ຂໍ້ມູນໃນສ່ວນຂອງທີ່ປຶກສາດ້ານການເງິນ 64

ເອກະສານຊ້ອນທ້າຍ

1. ກຳນົດວ່າດ້ວຍສິດ ແລະ ໜ້າທີ່ ຂອງຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້
2. ຫຼັກເກນໃນການຈັດກອງປະຊຸມຜູ້ຖືຮຸ້ນກູ້
3. ຮ່າງໃບຢັ້ງຢືນຮຸ້ນກູ້
4. ສັນຍາແຕ່ງຕັ້ງນາຍທະບຽນຫຼັກຊັບ
5. ເອກະສານລາຍງານການເງິນ 1 ປີ ຄືນຫຼັງທີ່ໄດ້ຮັບຮອງການຢັ້ງຢືນຈາກຜູ້ກວດສອບບັນຊີພາຍນອກ
6. ແບບຟອມການສະເໜີຂໍຈອງຊື້ຮຸ້ນກູ້

ນິຍາມຄຳສັບ

ຄຄຊ	ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຄຄຊ ຫຼື LSCO	ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ສປປ ລາວ	ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ຕລຊລ ຫຼື LSX	ຕະຫຼາດຫຼັກຊັບລາວ
ບໍລິສັດ ຫຼື ຜູ້ອອກຮຸ້ນກູ້	ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
ບໍລິສັດ ທີ່ປຶກສາທາງດ້ານການເງິນ ຫລື BCEL-KT	ບໍລິສັດຫຼັກຊັບ ທຄຕລ-ນທ ຈຳກັດ
ຕົວແທນການຈຳໜ່າຍຮຸ້ນ	ໝາຍເຖິງ ບໍລິສັດ ຫຼັກຊັບ ທຄຕລ-ນທ ຈຳກັດ ທີ່ມີໜ້າທີ່ສ້າງກົນໄກໃນການ ຈອງຊື້ຮຸ້ນ ແລະ ວ່າງເງິນມັດຈຳ, ການຈັດສັນຮຸ້ນ ແລະ ການອອກໃບຢັ້ງຢືນການຈັດສັນຮຸ້ນ ຊ່ວຍຜູ້ອອກຮຸ້ນກູ້
ຮຸ້ນກູ້	ໝາຍເຖິງຮຸ້ນກູ້ທີ່ອອກໂດຍບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ທີ່ມີຄຸນລັກສະນະຕາມຂໍ້ກຳນົດສະບັບນີ້
ຜູ້ຖືຮຸ້ນກູ້	ໝາຍເຖິງນັກລົງທຶນ ປະເພດສະຖາບັນ ຫຼື ນັກລົງທຶນລາຍໃຫຍ່ທີ່ມີນິຍາມກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ (ປັ່ງປຸ໋ງ) ເລກທີ່ 20/ຄຄຊ ລົງວັນທີ 23/06/2021
ຮຸ້ນກູ້ປະເພດບໍ່ດ້ອຍສິດບໍ່ມີຄ້ຳປະກັນ	ໝາຍເຖິງ ຮຸ້ນກູ້ທີ່ບໍ່ມີເງື່ອນໄຂ ບໍ່ມີການຄ້ຳປະກັນ ແລະ ເປັນໜີ້ ບໍ່ດ້ອຍສິດ ໂດຍໜີ້ຮຸ້ນກູ້ມີຖານະທາງກົດໝາຍເທົ່າທຽມກັນທຸກໜ່ວຍ ທັ້ງນີ້, ຜູ້ຖືຮຸ້ນກູ້ແຕ່ລະລາຍຈະມີສິດໄດ້ຮັບຊຳລະໜີ້ຕາມຮຸ້ນກູ້ຂອງຕົນບໍ່ດ້ອຍກວ່າສິດໃນການຮັບຊຳລະໜີ້ຂອງເຈົ້າໜີ້ສາມັນທີ່ມີຫຼັກຊັບຄ້ຳປະກັນ ແລະ ບໍ່ດ້ອຍສິດທັ້ງໃນປະຈຸບັນ ແລະ ອານາຄົດຂອງຜູ້ອອກຮຸ້ນກູ້ ເວັ້ນເສຍແຕ່ ບັນດາໜີ້ທີ່ມີກົດໝາຍຄຸ້ມຄອງໂດຍຊັດເຈນ ຫຼື ໂດຍທົ່ວໄປໄດ້ຮັບຊຳລະໜີ້ກ່ອນ.

ພາກທີ 1
ພາກສັງລວມ

1. ສະຫຼຸບຂໍ້ມູນກ່ຽວກັບບໍລິສັດ

ຜູ້ສະເໜີອອກຈຳໜ່າຍຮຸ້ນກູ້	:	ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ (SVN) SOUVANNY HOMECENTER PUBLIC COMPANY
ປະເພດທຸລະກິດ	:	ປະກອບທຸລະກິດຈັດຈຳໜ່າຍສິນຄ້າ ວັດສະດຸກໍ່ສ້າງ, ອຸປະກອນຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ນອກຈາກນັ້ນ ຍັງໃຫ້ບໍລິການ ກ່ຽວກັບ ການອອກແບບ, ຕິດຕັ້ງ ແລະ ການສ້ອມແປງ
ສັນຍາລັກ	:	
ສຳນັກງານໃຫຍ່	:	ບ້ານເລກທີ່ 366, ບ້ານໂພນຕ້ອງສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ສປປ ລາວ ໂທລະສັບຕັ້ງໂຕະ 021 561111
ສາຂາ		1. ສາຂາໂພນຕ້ອງ (ນະຄອນຫຼວງວຽງຈັນ) 2. ສາຂາ ສີໄຄ (ນະຄອນຫຼວງວຽງຈັນ) 3. ສາຂາໂຊກໃຫຍ່ (ນະຄອນຫຼວງວຽງຈັນ) 4. ສາຂາປາກຊັນ (ແຂວງບໍລິຄຳໄຊ) 5. ສາຂາ ປາກເຊ (ແຂວງຈຳປາສັກ) 6. ສາຂາ ທ່າແຂກ (ແຂວງຄຳມ່ວນ) 7. ສາຂາສະຫວັນນະເຂດ (ແຂວງສະຫວັນນະເຂດ)
ໃບທະບຽນວິສາຫະກິດ	:	0036/ຈທວ
ເລກປະຈຳຕົວຜູ້ເສຍອາກອນ	:	661512765-900
ທຶນຈົດທະບຽນ	:	330 ຕື້ກີບ
ອີເມວ	:	info@souvanny.la
ເວັບໄຊ	:	www.souvanny.la
ໂທລະສັບ	:	+856 21 561111

1.1 ປັດໄຈຄວາມສ່ຽງ

ປັດໄຈຄວາມສ່ຽງຂອງ ຜູ້ອອກຮຸ້ນກູ້ມີບັນດາປັດໄຈສຳຄັນທີ່ຈະຕ້ອງໄດ້ພິຈາລະນາກ່ອນການລົງທຶນມີດັ່ງນີ້:

- ❖ ຄວາມສ່ຽງຂອງຜູ້ອອກຮຸ້ນກູ້
  - ຄວາມສ່ຽງດ້ານການແຂ່ງຂັນ;
  - ຄວາມສ່ຽງທີ່ຕ້ອງເພິ່ງພາຜູ້ສະໜອງສິນຄ້າຈາກຕ່າງປະເທດ;
  - ຄວາມສ່ຽງໃນການບໍລິຫານສາງ;

- ຄວາມສ່ຽງກັບການຊຳລະໜີ້ລ່າຊ້າຂອງລູກໜີ້ການຄ້າ;
- ຄວາມສ່ຽງໃນການສະເໜີຂາຍຮຸ້ນກູ້;
- ຄວາມສ່ຽງຈາກອັດຕາແລກປ່ຽນ.

❖ ຄວາມສ່ຽງຂອງຮຸ້ນກູ້
- ຄວາມສ່ຽງດ້ານການຊຳລະດອກເບ້ຍ ແລະ ຕົ້ນທຶນຮຸ້ນກູ້;
- ຄວາມສ່ຽງດ້ານລາຄາ;
- ຄວາມສ່ຽງດ້ານສະພາບຄ່ອງ.

1.2 ການຈັດລຳດັບຄວາມໜ້າເຊື່ອຖື

ການອອກຈຳໜ່າຍຮຸ້ນກູ້ ໃນຄັ້ງນີ້ ບໍລິສັດ ບໍ່ໄດ້ມີການດຳເນີນການກ່ຽວກັບ ການຈັດລຳດັບຄວາມໜ້າເຊື່ອຖື ເນື່ອງຈາກເປັນການອອກຮຸ້ນກູ້ໃນວົງຈຳກັດ.

1.3 ການດຳເນີນທຸລະກິດໃນປະຈຸບັນ

❖ ລັກສະນະການປະກອບທຸລະກິດ
- ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ປະກອບທຸລະກິດຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ , ອຸປະກອນຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ນອກຈາກນັ້ນ ຍັງໃຫ້ບໍລິການ ກ່ຽວກັບ ການອອກແບບ, ຕິດຕັ້ງ ແລະ ການສ້ອມແປງ;
- ມີອາຄານສູນວ່າງສິນຄ້າຂະໜາດໃຫຍ່ ເພື່ອຮ່ອງຮັບ ບັນດາສິນຄ້າຫຼາຍປະເພດ,ຫຼາຍຍີ່ຫໍ້ ທີ່ນຳເຂົ້າມາຈາກ ພາຍໃນ-ຕ່າງປະເທດ ທີ່ມີຄຸນນະພາບ, ມີສື່ສຽງ ແລະ ເປັນທີ່ຍອມຮັບລະດັບສາກົນ ຫຼາຍກວ່າ 400 ຍີ່ຫໍ້ ຫຼາຍກວ່າ 30.000 ລາຍການ ;
- ສິນຄ້າທັງໝົດທີ່ບໍລິສັດນຳມາຈຳໜ່າຍແມ່ນປະກອບດ້ວຍ 3 ກຸ່ມຜະລິດຕະພັນ ແບ່ງອອກເປັນ 20 ປະເພດຍ່ອຍ:

❖ ປະຈຸບັນ (2023) ບໍລິສັດມີສາຂາທັງໝົດ 7 ຄື:
1)ສາຂາໂພນຕ້ອງ , 2) ສາຂາ ສີໄຄ, 3) ສາຂາໂຊກໃຫຍ່, 4) ສາຂາປາກຊັນ 5)ສາຂາປາກເຊ, 6) ສາຂາ ທ່າແຂກ ແລະ 7) ສາຂາສະຫວັນນະເຂດ.

❖ ໂຄງສ້າງລາຍຮັບ ແລະ ແບ່ງກຸ່ມຕາມສິນຄ້າ

ລາຍລະອຽດ	ປີ 2022	
	ມູນຄ່າ (ລ້ານກີບ)	%
ໂຄງສ້າງລາຍຮັບ		
ລູກຄ້າທົ່ວໄປ	517,729	80%
ລູກຄ້າຮ້ານຄ້າ	97,074	15%
ລູກຄ້າໂຄງການ	32,358	5%
ລວມ	647,161	100.00%
ແບ່ງຕາມກຸ່ມສິນຄ້າ		
ກຸ່ມໂຄງສ້າງຫຼັກ	194,148	30%

ກຸ່ມຕົ໋ວແຕ່ງ	453,013	70%
ລວມລາຍຮັບ-ສຸດທິ	**647,161**	**100.00%**

ໝາຍເຫດ: ແຫຼ່ງຂໍ້ມູນຈາກບໍລິສັດ

1.4 ການຄຸ້ມຄອງພາຍໃນ ແລະ ການບໍລິຫານຄວາມສ່ຽງ

ບໍລິສັດມີຄະນະກຳມະການກວດກາພາຍໃນ ແລະ ໜ່ວຍງານກວດກາພາຍໃນ ຕາມໂຄງສ້າງຂອງ ບໍລິສັດຈົດທະບຽນ ຕາມການກຳນົດຂອງ ສຄຄຊ ແລະ ຕລຊລ ທີ່ເຮັດໜ້າທີ່ເປັນຜູ້ສ້າງນະໂຍບາຍ, ກົນໄກ, ລະບຽບ ແລະ ຄູ່ມື ຕ່າງໆ ໃນວຽກງານການຄຸ້ມຄອງພາຍໃນ ແລະ ການບໍລິຫານຄວາມສ່ຽງ ເຮັດໜ້າ ທີ່ປະເມີນໜ່ວຍງານແຕ່ລະໜ້າວຽກ ແລະ ຝ່າຍງານໃຫ້ເປັນໄປຕາມເປົ້າໝາຍທີ່ກຳນົດໄວ້ ພ້ອມກັບຄວບ ຄຸມການປະຕິບັດງານໃຫ້ເປັນໄປຕາມລະບຽບຢ່າງຖືກຕ້ອງ, ມີການນຳໃຊ້ເຄື່ອງມືໃນການວັດແທກຄ່າດ້ວຍ Key Performance Indicator (KPI), ມີການກວດສອບຕິດຕາມເປັນໄລຍະ ແລະ ປະເມີນຜົນງານ ປະຈຳປີຂອງແຕ່ລະບຸກຄົນ ເຊິ່ງເປັນຕົວບົ່ງບອກເຖິງຄວາມສາມາດໃນການປະຕິບັດໜ້າທີ່ຂອງບຸກຄະລາ ກອນຂອງບໍລິສັດເອງ. ນອກນີ້, ໜ່ວຍງານກວດກາພາຍໃນຈະດຳເນີນການເຮັດບົດລາຍງານ ເພື່ອນຳສະເ ໜີຕໍ່ຄະນະກຳມະການກວດກາພາຍໃນ ເພື່ອພິຈາລະນາ ແລະ ດຳເນີນການປັບປຸງ ແນະນຳ ສະເໜີຕໍ່ສະພາ ບໍລິຫານຕໍ່ໄປ.

ໃນປະຈຸບັນ ບໍລິສັດໄດ້ຮັບການຮັບຮອງຄຸນນະພາບມາດຕະຖານລະດັບສາກົນ ຄື: ISO 9001: 2015 ມາດຕະຖານຄຸນນະພາບດ້ານການບໍລິຫານງານ ແລະ ມີການກວດສອບຄຸນນະພາບມາດຕະຖານ ຂອງ ISO ເປັນປະຈຳ ເພື່ອໃຫ້ການປະຕິບັດງານ ແລະ ບໍລິຫານງານ ເປັນໄປຕາມລະບຽບ ແລະ ມີຄຸນ ນະພາບຕະຫຼອດເວລາ. ພ້ອມກັນນີ້ ບໍລິສັດຍັງປະຕິບັດຕາມລະບຽບ ISO ຄຽງຄູ່ກັບນະໂຍບາຍ 5 ສ ໃຫ້ ພະນັກງານປະຕິບັດໄດ້ຢ່າງມີລະບຽບ ແລະ ມີຄຸນນະພາບ.

1.5 ໂຄງສ້າງການບໍລິຫານ

ລຳດັບ	ລາຍຊື່	ຕຳແໜ່ງ
I.	**ກອງປະຊຸມຜູ້ຖືຮຸ້ນ**	
II.	**ສະພາບໍລິຫານ (Board of Directors)**	
1	ທ່ານ ສົມຈິດ ອິນທະມິດ	ປະທານສະພາບໍລິຫານ / ສະມາຊິກອິດສະຫຼະ
2	ທ່ານ ຣສ.ປອ. ໄຊພອນ ກອງມະນີລາ	ຮອງປະທານສະພາບໍລິຫານ / ສະມາຊິກອິດສະຫຼະ
3	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ/ ຜູ້ອຳນວຍການໃຫຍ່
4	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການໃຫຍ່,ຜູ້ອຳ ນວຍການຝ່າຍການເງິນ
5	ທ່ານ ກິດສະດາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການໃຫຍ່,ຜູ້ອຳ ນວຍການຝ່າຍປະຕິບັດການ
6	ທ່ານ ບຸນເຕີມ ກົມມິດຕະພາບ	ສະມາຊິກສະພາບໍລິຫານ / ສະມາຊິກອິດສະຫຼະ
7	ທ່ານ ນາງ ຄຳໄຂ ລໍວັນໄຊ	ສະມາຊິກສະພາບໍລິຫານ

8	ທ່ານ ນາງ ຊຸຕິການ ສີແສງຈັນ	ສະມາຊິກສະພາບໍລິຫານ
9	ທ່ານ ພິພົບ ວາດສະໜາອາຊາສະກຸນ	ສະມາຊິກສະພາບໍລິຫານ
III.	**ຄະນະກຳມະການກວດກາພາຍໃນ (Audit Committee)**	
1	ທ່ານ ຣສ.ປອ. ໄຊພອນ ກອງມະນີລາ	ປະທານຄະນະກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ຄະນະກຳມະການກວດກາພາຍໃນ / ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ຄະນະກຳມະການກວດກາພາຍໃນ / ຮອງຜູ້ອຳນວຍການໃຫຍ່ ,ຜູ້ອຳນວຍການຝ່າຍການເງິນ
IV.	**ຄະນະກຳມະການຄຸ້ມຄອງຄວາມສ່ຽງ**	
1	ທ່ານ ສົມຈິດ ອິນທະມິດ	ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ
V	**ຄະນະກຳມະການກຳນົດຄ່າຕອບແທນ**	
1	ທ່ານ ບຸນເຕີມ ກົມມິດຕະພາບ	ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ
VI	**ຄະນະກຳມະການຄັດເລືອກ**	
1	ທ່ານ ສົມຈິດ ອິນທະມິດ	ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ
VII.	**ຄະນະອຳນວຍການ**	
1	ທ່ານ ວັດດານາ ສຸຄະບັນດິດ	ຜູ້ອຳນວຍການໃຫຍ່
2	ທ່ານ ພັນໂນລາ ສຸຄະບັນດິດ	ຮອງອຳນວຍການໃຫຍ່,ຜູ້ອຳນວຍການຝ່າຍການເງິນ
3	ທ່ານ ກິດສະດາ ສຸຄະບັນດິດ	ຮອງຜູ້ອຳນວຍໃຫຍ່,ຜູ້ອຳນວຍການຝ່າຍການປະຕິບັດການ
4	ທ່ານ ມິດໄຊ ເປົ້ອງກາງ	ຜູ້ຈັດການຝ່າຍການຕະຫຼາດ
5	ທ່ານ ຄຳພອນ ພິລາພັນ	ຜູ້ຈັດການຝ່າຍຂາຍ
6	ທ່ານ ນາງ ຄຳໄຂ ລໍວັນໄຊ	ຜູ້ຈັດການຝ່າຍຈັດຊື້
7	ທ່ານ ອິນທິລາດ ທຳມະວົງ	ຜູ້ຈັດການຝ່າຍບຸກຄົນ
8	ທ່ານ ບຸນທະວີ ສົມມະໄຊ	ຜູ້ຈັດການຝ່າຍບັນຊີ-ການເງິນ

1.6 ໂຄງສ້າງຜູ້ຖືຮຸ້ນ

ຜູ້ຖືຮຸ້ນ	ປີ 2022		
	ຈຳນວນຮຸ້ນ	ມູນຄ່າ (ລ້ານກີບ)	ອັດຕາສ່ວນຮ້ອຍ (ປະມານ)
1. ກຸ່ມຄອບຄົວ ສຸຄະບັນດິດ	83.893.600	167.787	50,8445%
1.1 ທ່ານ ວັດດານາ ສຸຄະບັນດິດ	28.524.440	57.049	17,2875%
1.2 ທ່ານ ກິດສະດາ ສຸຄະບັນດິດ	26.844.580	53.689	16,2694%
1.3 ທ່ານ ພັນໂນລາ ສຸຄະບັນດິດ	26.844.580	53.689	16,2694%
1.4 ທ່ານ ນາງ ປະພັດສອນ ສຸຄະບັນດິດ	840.000	1.680	0,5091%
1.5 ທ່ານ ນາງ ວຽງດາລາ ບຸບຜາ	840.000	1.680	0,5091%
2. ບໍລິສັດ ໂກວ້ອນເຮົ້າ ອິນເຕີເນຊັ້ນແນວ ຈຳກັດ	56.000.000	112.000	33,9394%
3. ກຸ່ມຜູ້ຖືຮຸ້ນອື່ນໆ	106.400	213	0,0646%
3.1 ທ່ານ ສຸວັນນີ ສີສົມໃຈ	28.000	56	0,0170%
3.2 ທ່ານ ໄຊສັງຄົມ ຊຸ່ມມະນີວົງ	28.000	56	0,0170%
3.3 ທ່ານ ອານຸສອນ ອຸ່ນໄຕ	28.000	56	0,0170%
3.4 ທ່ານ ບຸນທະວີ ສົມມາໄຊ	22.400	45	0,0136%
4. ນັກລົງທຶນທົ່ວໄປ	25.000.000	50.000	15,1515%
ລວມ	165.000.000	330.000	100,0000%

1.7 ລາຍການທີ່ກ່ຽວພັນ

ບໍລິສັດ ບໍລິຫານໂດຍ ຄອບຄົວ ສຸຄະບັນດິດ ເຊິ່ງເປັນຜູ້ທີ່ຖືຮຸ້ນສ່ວນໃຫຍ່ຂອງບໍລິສັດ, ຖືຮຸ້ນ 51% ຂອງ ຮຸ້ນ ບໍລິສັດ. 34% ຂອງຮຸ້ນ ບໍລິສັດ ແມ່ນຖືໂດຍ “ Global house International Limited” ເຊິ່ງ ເປັນບໍລິສັດທີ່ຈົດທະບຽນໃນປະເທດໄທ ແລະ ສ່ວນເຫຼືອ 15% ແມ່ນຖືໂດຍ ບຸກຄົນທົ່ວໄປ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໃນປີ 31 ທັນວາ ປີ 2022 ທີ່ມີຄວາມສຳຄັນ ເຊິ່ງມີລາຍ ລະອຽດດັ່ງລຸ່ມນີ້:

❖ ລາຍຮັບ ແລະ ລາຍຈ່າຍ

ລາຍລະອຽດ	2022 (ກີບ)	2021 (ກີບ)
ຊື້ສິນຄ້າ ຈາກພາກສ່ວນທີ່ກ່ຽວຂ້ອງ	118.292.444.214	81.054.770.914
ຄ່າເຊົ່າ	13.604.490.242	6.475.803.333

ລາຍຈ່າຍໃນການເຊົ່າແມ່ນຄ່າເຊົ່າທີ່ດິນ ແລະ ສິ່ງປຸກສ້າງ ຈາກຜູ້ຖືຮຸ້ນຫຼັກ ເພື່ອໃນການດຳເນີນງານ ໂດຍ ຄ່າເຊົ່າແມ່ນຂຶ້ນຢູ່ກັບການຕົກລົງທັງສອງຝ່າຍ ໂດຍອ້າງອີງຈາກລາຄາຕາມທ້ອງຕະຫຼາດ.

❖ **ຍອດຍັງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງກັນ**

ລາຍລະອຽດ	2022 (ກີບ)	2021 (ກີບ)
ລ່ວງໜ້າຄ່າເຊົ່າ - ພາກສ່ວນທີ່ກ່ຽວຂ້ອງ	33.760.220.765	
ໜີ້ຕ້ອງສິ່ງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ	10.877.529.142	10.943.297.126
ລາຍຈ່າຍຄ່າເຊົ່າຄ້າງຈ່າຍ	-	2.594.224.397

❖ **ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ**

ຜູ້ບໍລິຫານຫຼັກລວມເຖິງຜູ້ອຳນວຍການ. ເງິນສິດເຊີຍທີ່ຈ່າຍໃຫ້ກັບຜູ້ບໍລິຫານສຳລັບການບໍລິການການຈ້າງງານແມ່ນ ດັ່ງຕໍ່ໄປນີ້:

ລາຍລະອຽດ	2022 (ກີບ)	2021 (ກີບ)
ເງິນເດືອນ	2.978.805.616	2.138.794.365

1.8 ຊັບສິນທີ່ໃຊ້ດຳເນີນທຸລະກິດ

(ຫົວໜ່ວຍ ລ້ານກີບ)

ໃບລາຍງານສະຖານະການເງິນ	2021	%	2022	%
ຊັບສິນ				
ຊັບສິນໝຸນວຽນ				
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3.285,27	0,35%	38.288,45	2,75%
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	12.497,87	1,32%	6.217,86	0,45%
ສິນຄ້າໃນສາງ, ສຸດທິ	289.175,47	30,45%	402.463,93	28,90%
ຊັບສິນໝຸນວຽນອື່ນໆ	7.159,85	0,75%	20.547,73	1,48%
ລວມຊັບສິນໝຸນວຽນ	**312.118,46**	**32,87%**	**467.517,99**	**33,57%**
ຊັບສິນບໍ່ໝຸນວຽນ				
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	637.484,07	67,13%	904.691,25	64,96%
ຊັບສິນຄົງທີ່ ບໍ່ມີຕົວຕົນ, ສຸດທິ	41,68	0,00%	116,39	0,01%
ຊັບສິນບໍ່ໝຸນວຽນອື່ນໆ		0,00%	20.355,86	1,46%
ລວມຊັບສິນບໍ່ໝຸນວຽນ	**637.525,75**	**67,13%**	**925.163,51**	**66,43%**
ລວມຊັບສິນ	**949.644,21**	**100,00%**	**1.392.681,50**	**100,00%**

ໝາຍເຫດ: ແຫຼ່ງຂໍ້ມູນຈາກບໍລິສັດ

1.9 ຂໍ້ຂັດແຍ່ງດ້ານກົດໝາຍ

ຜູ້ອອກຮຸ້ນກູ້ ໄດ້ດຳເນີນການສະເໜີຂໍໃບຢັ້ງຢືນກ່ຽວກັບການບໍ່ຖືກຮ້ອງຟ້ອງການດຳເນີນຄະດີກັບສານປະຊາຊົນເຂດທີ່ທຸລະກິດຂອງຕົນດຳເນີນໃນປະຈຸບັນ ເພື່ອຢັ້ງຢືນວ່າ ຜູ້ອອກຮຸ້ນກູ້ ບໍ່ມີການຖືກ

ຮ້ອງຟ້ອງດຳເນີນຄະດີທີ່ຈະມີຜົນຮ້າຍແຮງຕໍ່ການດຳເນີນທຸລະກິດ ໃນຊ່ວງໄລຍະການກະກຽມ ຍື່ນຂໍ້ສະເໜີ ຂໍອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດນຳ ສຄຄຊ ແລະ ໃນໄລຍະຍື່ນພິຈາລະນາການຂໍທົບທວນຄວາມເປັນໄປໄດ້ໃນການນຳຮຸ້ນກູ້ເຂົ້າຈົດທະບຽນກັບ ຕລຊລ.

ການຢັ້ງຢືນຈາກສານປະຊາຊົນ ເຂດຕ່າງໆ ໄດ້ຢັ້ງຢືນມີດັ່ງລຸ່ມນີ້:

ສານປະຊາຊົນ ເຂດ	ຜົນການຢັ້ງຢືນ	ເລກທີ່ເອກະສານ
ນະຄອນຫຼວງວຽງຈັນ	ບໍ່ມີສຳນວນຄະດີຮ້ອງຟ້ອງຢູ່ສານ	ເລກທີ 14/ ສປຊ.ນວ ລົງວັນທີ 28/03/2023
ບໍລິຄຳໄຊ	ບໍ່ມີສຳນວນຄະດີຮ້ອງຟ້ອງຢູ່ສານ	ເລກທີ 61/ ສປຊ.ຂ ລົງວັນທີ 07/04/2023
ຄຳມ່ວນ	ບໍ່ມີສຳນວນຄະດີຮ້ອງຟ້ອງຢູ່ສານ	ເລກທີ 06/ ສປຊ.ຄມ ລົງວັນທີ 30/03/2023
ສະຫວັນນະເຂດ	ບໍ່ມີສຳນວນຄະດີຮ້ອງຟ້ອງຢູ່ສານ	ເລກທີ 04/ ສປຊ.ສຂ ລົງວັນທີ 07/04/2023
ຈຳປາສັກ	ບໍ່ມີສຳນວນຄະດີຮ້ອງຟ້ອງຢູ່ສານ	ເລກທີ 157/ ສປຊ.ຈສ ລົງວັນທີ 28/03/2023

1.10 ການຈົດທະບຽນໃນຕະຫຼາດຫຼັກຊັບລາວ

ຜູ້ອອກຮຸ້ນກູ້ ຈະນຳຮຸ້ນກູ້ໄປຝາກໄວ້ໃນສູນຮັບຝາກຫຼັກຊັບ ພາຍຫຼັງໄດ້ຮັບໃບຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້ ຈາກ ສຄຄຊ ຕາມນິຕິກຳທີ່ກ່ຽວຂ້ອງກຳນົດ.

2. ສະຫຼຸບຂໍ້ມູນກ່ຽວກັບຮຸ້ນກູ້ທີ່ສະເໜີອອກຈຳໜ່າຍ

ຜູ້ອອກຮຸ້ນກູ້	ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
ປະເພດຮຸ້ນກູ້	• ຮຸ້ນກູ້ປະເພດລະບຸຊື່ຜູ້ຖື • ຮຸ້ນກູ້ປະເພດບໍ່ດ້ອຍສິດບໍ່ມີຄ້ຳປະກັນ
ປະເພດການສະເໜີຂາຍ	ອອກໃນວົງຈຳກັດ (Private Placement) ສະເໜີຂາຍໃຫ້ແກ່ ສະຖາບັນ ກັບ ຜູ້ລົງທຶນລາຍໃຫຍ່ ແມ່ນ ລວມກັນ ບໍ່ເກີນ 10 ລາຍ
ສະກຸນເງິນ	ໂດລາ
ຈຳນວນຮຸ້ນກູ້ທີ່ສະເໜີຂາຍ	60 ໜ່ວຍ
ມູນຄ່າລວມຂອງຮຸ້ນກູ້ທີ່ສະເໜີຂາຍ	3.000.000 ໂດລາ ສຫລ
ມູນຄ່າກຳນົດ	50.000 ໂດລາ ສຫລ ຕໍ່ ໜ່ວຍ
ລາຄາສະເໜີຂາຍ	50.000 ໂດລາ ສຫລ ຕໍ່ ໜ່ວຍ
ອາຍຸຮຸ້ນກູ້	4 ປີ
ອັດຕາດອກເບ້ຍຮຸ້ນກູ້	7,5% (ຈ່າຍແບບຄົງທີ່) ຕໍ່ປີ
ງວດການຊຳລະດອກເບ້ຍ	ທຸກໆ 6 ເດືອນ (2 ຄັ້ງ/ປີ)
ມື້ຈ່າຍດອກເບ້ຍ	19 ພຶດສະພາ ແລະ 19 ພະຈິກ ຕະຫຼອດອາຍຸຮຸ້ນກູ້
ໄລຍະເວລາການສະເໜີຂາຍ	15 ພຶດສະພາ ຫາ 19 ພຶດສະພາ 2023
ວັນອອກຮຸ້ນກູ້	19 ພຶດສະພາ 2023
ວັນຄົບກຳນົດການໄຖ່ຖອນຮຸ້ນກູ້	19 ພຶດສະພາ 2027

ການຊຳລະຄືນເງິນຕົ້ນ	ໄຖ່ຖອນເມື່ອເຖິງວັນຄົບກຳນົດ
ສິດຂອງຜູ້ຖືຮຸ້ນກູ້ໃນການໄຖ່ຖອນຮຸ້ນກູ້ກ່ອນວັນຄົບກຳນົດ	ບໍ່ມີ
ສິດຂອງຜູ້ອອກຮຸ້ນກູ້ໃນການໄຖ່ຖອນຮຸ້ນກູ້ກ່ອນວັນຄົບກຳນົດ	ມີສິດ
ຂໍ້ຈຳກັດໃນການຂາຍ/ໂອນ	ຮຸ້ນກູ້ທີ່ສະເໜີຂາຍ ເປັນການສະເໜີຂາຍຕໍ່ຜູ້ລົງທຶນປະເພດສະຖາບັນການເງິນ ແລະ / ຫຼື ຜູ້ລົງທຶນລາຍໃຫຍ່ເທົ່ານັ້ນ ດັ່ງນັ້ນ ຜູ້ອອກຮຸ້ນກູ້ ຂໍສະຫງວນສິດທີ່ຈະປະຕິເສດບໍ່ຮັບການຈົດທະບຽນການໂອນຮຸ້ນກູ້ໃນທຸກໆ ກໍລະນີ ທີ່ບໍ່ແມ່ນ ຜູ້ລົງທຶນປະເພດສະຖາບັນການເງິນ ແລະ / ຫຼື ຜູ້ລົງທຶນລາຍໃຫຍ່ ເວັ້ນເສຍແຕ່ແມ່ນການໂອນຮຸ້ນກູ້ຕາມການສືບທອດທາງມູນມໍລະດົກ.
ການຈັດອັນດັບຄວາມໜ້າເຊື່ອຖື	ບໍ່ມີການຈັດ
ຕະຫຼາດຮອງຂອງຮຸ້ນກູ້	ມີ
ການຄ້ຳປະກັນ/ຫຼັກຊັບຄ້ຳປະກັນ	ບໍ່ມີ
ຕົວແທນການຈັດຈຳໜ່າຍຮຸ້ນກູ້	ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ (BCEL-KT)
ຕົວແທນຜູ້ຖືຮຸ້ນກູ້	ບໍ່ມີ
ນາຍທະບຽນຫຼັກຊັບ	ຕະຫຼາດຫຼັກຊັບລາວ

ໝາຍເຫດ: ແຫຼ່ງຂໍ້ມູນຈາກບໍລິສັດ (ຂໍ້ກຳນົດສິດ)

2.1 ພັນທະທາງອາກອນຂອງຜູ້ຖືຮຸ້ນກູ້

ອີງຕາມກົດໝາຍວ່າດ້ວຍອາກອນລາຍໄດ້ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ມາດຕາ 35 ລາຍໄດ້ທີ່ຖືກຍົກເວັ້ນອາກອນລາຍໄດ້ ຂໍ້ 11. ເຫັນວ່າ ລາຍໄດ້ດອກເບ້ຍຈາກການຖືຮຸ້ນກູ້ແມ່ນຈະຖືກຍົກເວັ້ນອາກອນລາຍໄດ້ ເວັ້ນເສຍແຕ່ ກົດໝາຍ ຫຼື ນິຕິກຳຈະມີການກຳນົດເປັນຢ່າງອື່ນ.

3 ສະຫຼຸບຂໍ້ມູນກ່ຽວກັບເອກະສານລາຍງານການເງິນ

❖ ໃບລາຍງານສະຖານະທາງການເງິນ (ຫົວໜ່ວຍ ລ້ານກີບ)

ໃບລາຍງານສະຖານະທາງການເງິນ	2020	%	2021	%	2022	%
ຊັບສິນໝຸນວຽນ	266.804,99	30,67%	312.118,46	32,87%	467.517,99	33,57%
ຊັບສິນບໍ່ໝຸນວຽນ	603.085,13	69,33%	637.525,75	67,13%	925.163,51	66,43%
ລວມຊັບສິນ	869.890,12	100,00%	949.644,21	100,00%	1.392.681,50	100,00%
ໜີ້ສິນໝຸນວຽນ	157.023,58	18,05%	180.253,41	18,98%	185.263,04	13,30%
ໜີ້ສິນບໍ່ໝຸນວຽນ	8.998,42	1,03%	9.671,63	1,02%	58.329,41	4,19%
ລວມໜີ້ສິນ	166.022,00	19,09%	189.925,04	20,00%	243.592,46	17,49%
ລວມທຶນ	703.868,12	80,91%	759.719,17	80,00%	1.149.089,05	82,51%
ລວມໜີ້ສິນ ແລະ ທຶນ	869.890,12	100,00%	949.644,21	100,00%	1.392.681,50	100,00%

❖ ໃບລາຍງານຜົນໄດ້ຮັບ (ຫົວໜ່ວຍ ລ້ານກີບ)

ໃບລາຍງານຜົນໄດ້ຮັບ	2020	%	2021	%	2022	%
ລາຍໄດ້ຈາກການຂາຍ	396.712,89	100,00%	455.188,80	100,00%	647.161,52	100,00%
ຕົ້ນທຶນໃນການຂາຍ	(326.144,24)	-82,21%	(358.083,96)	-78,67%	(485.502,86)	-75,02%
ກຳໄລລວມຂັ້ນຕົ້ນ	**70.568,65**	**17,79%**	**97.104,84**	**21,33%**	**161.658,66**	**24,98%**
ລາຍຮັບອື່ນໆ (ລາຍຈ່າຍອື່ນໆ)	2.112,33	0,53%	1.541,72	0,34%	2.561,65	0,40%
ລາຍຈ່າຍໃນການຂາຍ	(31.813,07)	-8,02%	(35.015,27)	-7,69%	(53.069,06)	-8,20%
ລາຍຈ່າຍບໍລິຫານ	(28.552,98)	-7,20%	(31.639,11)	-6,95%	(43.132,82)	-6,66%
ລາຍຈ່າຍການເງິນ	(4.684,27)	-1,18%	(4.989,58)	-1,10%	(8.124,60)	-1,26%
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນ, ສຸດທິ	5.076,20	1,28%	1.610,15	0,35%	6.662,86	1,03%
ກຳໄລ ກ່ອນຈ່າຍອາກອນລາຍໄດ້	**12.706,85**	**3,20%**	**28.612,75**	**6,29%**	66.556,67	10,28%
ອາກອນກຳໄລ	(697,39)	-0,18%	(3.943,26)	-0,87%	(9.994,96)	-1,54%
ກຳໄລສຸດທິ	**12.009,46**	**3,03%**	**24.669,49**	**5,42%**	56.611,71	8,75%
ກຳໄລຕໍ່ຮຸ້ນ	**70**		**150**		**343**	

ໝາຍເຫດ: ແຫຼ່ງຂໍ້ມູນຈາກບໍລິສັດ

❖ ໃບລາຍງານກະແສເງິນສົດ (ຫົວໜ່ວຍ ລ້ານກີບ)

ໃບລາຍງານກະແສເງິນສົດ	2020	2021	2022
ເງິນສົດສຸດທິ ໃຊ້ໄປສຳລັບກິດຈະກຳການດຳເນີນງານ	9.558,72	23.470,76	49.790,28
ເງິນສົດສຸດທິໃຊ້ໃນກິດຈະກຳການລົງທຶນ	(10.918,47)	(22.592,52)	(14.002,53)
ເງິນສົດສຸດທິຈາກກິດຈະກຳທາງການເງິນ	(3.443,97)	(3.204,51)	(1.531,27)
ຫຼຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ	(4.803,72)	(2.326,28)	34.256,85
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ	3.740,21	3.734,54	3.285,27
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4.798,05	1.877,02	746,32
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3.734,54	3.285,28	38.288,45

ໝາຍເຫດ: ແຫຼ່ງຂໍ້ມູນຈາກບໍລິສັດ

❖ ອັດຕາສ່ວນທາງການເງິນທີ່ສຳຄັນ

ອັດຕາສ່ວນທາງການເງິນທີ່ສຳຄັນ	2020	2021	2022
ອັດຕາສ່ວນວັດສະພາບຄ່ອງ (Liquidity ratio)			
ອັດຕາສ່ວນສະພາບຄ່ອງ (Current ratio)	1,70	1,73	2,52
ອັດຕາສ່ວນໝຸນໄວ (Quick ratio)	0,14	0,13	0,35

ອັດຕາສ່ວນໝຸນວຽນລູກໜີ້ການຄ້າ.(A/R turnover)	35,35	36,42	104,08
ໄລຍະເວລາເກັບໜີ້ (Days A/R)	10,32	10,02	3,51
ອັດຕາໝຸນສິນຄ້າງໃນສາງ (Inventories turnover)	1,33	1,24	1,21
ໄລຍະເວລາຂາຍສິນຄ້າ (Days inventories)	274,43	294,35	301,65
ອັດຕາໝຸນເຈົ້າໜີ້ການຄ້າ (A/P turnover)	7,48	5,99	9,38
ໄລຍະເວລາຊໍາລະເຈົ້າໜີ້ການຄ້າ (Days A/P)	48,80	60,93	38,91
ອັດຕາສ່ວນຄວາມສາມາດໃນການສ້າງກໍາໄລ (Profitability ratio)			
ອັດຕາສ່ວນກໍາໄລຂັ້ນຕົ້ນ (Gross profit margin)	17,79%	21,33%	24,98%
ອັດຕາສ່ວນກໍາໄລກອນຫັກອາກອນ (Profit before tax)	3,20%	6,29%	10,28%
ອັດຕາສ່ວນກໍາໄລສຸດທິ (Net profit margin)	3,03%	5,42%	8,75%
ອັດຕາສ່ວນກໍາໄລສຸດທິຕໍ່ສ່ວນຂອງຜູ້ຖືຮຸ້ນ (ROE)	1,71%	3,25%	4,93%
ອັດຕາສ່ວນກໍາໄລສຸດທິຕໍ່ຊັບສິນລວມ (ROA)	1,38%	2,60%	4,06%
ອັດຕາສ່ວນນະໂຍບາຍທາງການເງິນ (Financial policy ratio)			
ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ (D/E)	0,24	0,25	0,21
ອັດຕາສ່ວນຄວາມສາມາດໃນການຊໍາລະດອກເບ້ຍ (interest coverage)	3,71	6,73	9,19

ໝາຍເຫດ: ແຫຼ່ງຂໍ້ມູນຈາກບໍລິສັດ

4 ສະຫຼຸບກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງບໍລິສັດໃນໄລຍະທີ່ຜ່ານມາ

ປີ	ການເຄື່ອນໄຫວທີ່ສໍາຄັນຂອງບໍລິສັດທີ່ຜ່ານມາ
1988	ສ້າງຕັ້ງ ຮ້ານ ສຸວັນນີການຄ້າ ຕັ້ງຢູ່ ບ້ານທົ່ງຂັນຄໍາ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ດ້ວຍທຶນຈົດທະບຽນ 3.250.000 ກີບ.
1993	ຈົດທະບຽນເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈໍາກັດຜູ້ດຽວ, ທຶນຈົດທະບຽນ 100 ຮ້ອຍລ້ານກີບ.
2000	ເປີດສາຂາ ໂພນຕ້ອງ (ນະຄອນຫຼວງວຽງຈັນ) ໄດ້ຍ້າຍສໍານັກງານໃຫຍ່ ຈາກສາຂາທົ່ງຂັນຄໍາ ມາຢູ່ ສາຂາໂພນຕ້ອງ ທີ່ເປັນສໍານັກງານໃຫຍ່ໃນປະຈຸບັນ.
2004	ເປີດສາຂາ ສີໄຄ (ນະຄອນຫຼວງວຽງຈັນ)
2015	• ຫັນປ່ຽນມາເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກຂາ-ຂົ້າ ຈໍາກັດ ດ້ວຍທຶນຈົດທະບຽນ 500 ລ້ານກີບ • ເພີ່ມທຶນຈົດທະບຽນ ຈາກ 500 ລ້ານກີບ ຂຶ້ນເປັນ 280 ຕື້ກີບ ໂດຍໄດ້ຮ່ວມລົງທຶນກັບ ບໍລິສັດ ໂກວ້ຍ້ອນເຮົ້າ ອິນເຕີເນຊັ້ນແນວ ຈໍາກັດ (ໂດຍຄອບຄົວສຸຄະບັນດິດ ຖືຮຸ້ນ 51% ແລະ ບໍລິສັດ ໂກວ້ຍ້ອນເຮົ້າ ອິນເຕີເນຊັ້ນແນວ ຈໍາກັດ (ມະຫາຊົນ) ຖືຮຸ້ນ 33.94%) • ໃນວັນທີ 13/09/2015 ໄດ້ຫັນເປັນ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ • ໄດ້ສະເໜີຂອກາຈໍາໜ່າຍຮຸ້ນເພີ່ມທຶນຄັ້ງທໍາອິດ ຈໍານວນ 25 ລ້ານຮຸ້ນ ມູນຄ່າ 50 ຕື້ກີບ, ມູນຄ່າກໍານົດ 2.000ກີບ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ (11/12/2015)

	• ໄດ້ຮັບໃບຢັ້ງຢືນ ລະບົບການບໍລິຫານຈັດການຕາມມາດຕະຖານ ISO9001:201 ວັນທີ 25/09/2015.
2017	ເປີດສາຂາ ໂຊກໃຫຍ່(ມັງກອນ) ແລະ ສາຂາປາກຊັນ(ກັນຍາ)
2018	• ເປີດສາຂາປາກເຊ • ໄດ້ຮັບໃບຢັ້ງຢືນ ລະບົບການບໍລິຫານຈັດການມາດຕະຖານ ISO 9001 ສະບັບປີ 2015
2020	ເປີດສາຂາ ທ່າແຂກ (ແຂວງຄຳມ່ວນ)
2021	ເປີດສາຂາ ແຂວງສະຫວັນນະເຂດ

ພາກທີ 2
ບໍລິສັດອອກຮຸ້ນກູ້

1. ບໍລິສັດອອກຈຳໜ່າຍຮຸ້ນກູ້

ຜູ້ສະເໜີອອກຈຳໜ່າຍຮຸ້ນກູ້	:	ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ (SVN) SOUVANNY HOME CENTER PUBLIC COMPANY
ປະເພດທຸລະກິດ	:	ປະກອບທຸລະກິດຈັດຈຳໜ່າຍສິນຄ້າ ວັດສະດຸກໍ່ສ້າງ, ອຸປະກອນຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ນອກຈາກນັ້ນ ຍັງໃຫ້ບໍລິການ ກ່ຽວກັບ ການອອກແບບ, ຕິດຕັ້ງ ແລະ ການສ້ອມແປງ
ສັນຍາລັກ	:	
ສຳນັກງານໃຫຍ່	:	ບ້ານເລກທີ 366, ບ້ານໂພນຕ້ອງສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ສປປ ລາວ ໂທລະສັບຕັ້ງໂຕະ 021 561111
ສາຂາ		1. ສາຂາໂພນຕ້ອງ (ນະຄອນຫຼວງວຽງຈັນ) 2. ສາຂາ ສີໄຄ (ນະຄອນຫຼວງວຽງຈັນ) 3. ສາຂາໂຊກໃຫຍ່ (ນະຄອນຫຼວງວຽງຈັນ) 4. ສາຂາປາກຊັນ (ແຂວງບໍລິຄຳໄຊ) 5. ສາຂາ ປາກເຊ (ແຂວງຈຳປາສັກ) 6. ສາຂາ ທ່າແຂກ (ແຂວງຄຳມ່ວນ) 7. ສາຂາສະຫວັນນະເຂດ (ແຂວງສະຫວັນນະເຂດ)
ໃບທະບຽນວິສາຫະກິດ	:	0036/ຈທວ
ເລກປະຈຳຕົວຜູ້ເສຍອາກອນ	:	661512765-900
ທຶນຈົດທະບຽນ	:	330 ຕື້ກີບ
ອີເມວ	:	info@souvanny.la
ເວັບໄຊ	:	www.souvanny.la
ໂທລະສັບ	:	+856 21 561111

1.1. ປະຫວັດຄວາມເປັນມາຂອງບໍລິສັດ

ປີ	ການເຄື່ອນໄຫວທີ່ສຳຄັນຂອງບໍລິສັດທີ່ຜ່ານມາ
1988	ສ້າງຕັ້ງ ຮ້ານ ສຸວັນນີການຄ້າ ຕັ້ງຢູ່ ບ້ານທົ່ງຂັນຄຳ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ດ້ວຍທຶນຈົດທະບຽນ 3.250.000 ກີບ.
1993	ຈົດທະບຽນເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ, ທຶນຈົດທະບຽນ 100 ຮ້ອຍລ້ານກີບ.
2000	ເປີດສາຂາ ໂພນຕ້ອງ (ນະຄອນຫຼວງວຽງຈັນ) ໄດ້ຍ້າຍສຳນັກງານໃຫຍ່ ຈາກສາຂາທົ່ງຂັນຄຳ ມາຢູ່ ສາຂາໂພນຕ້ອງ ທີ່ເປັນສຳນັກງານໃຫຍ່ໃນປະຈຸບັນ.
2004	ເປີດສາຂາ ສີໄຄ (ນະຄອນຫຼວງວຽງຈັນ)
2015	• ຫັນປ່ຽນມາເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກຂາ-ຂ້ຳ ຈຳກັດ ດ້ວຍທຶນຈົດທະບຽນ 500 ລ້ານກີບ. • ເພີ່ມທຶນຈົດທະບຽນຈາກ 500 ລ້ານກີບ ຂຶ້ນເປັນ 280 ຕື້ກີບ ໂດຍໄດ້ຮ່ວມລົງທຶນກັບ ບໍລິສັດ ໂກວ້ອນເຮົ້າ ອິນເຕີເນຊັ້ນແນວ ຈຳກັດ (ໂດຍຄອບຄົວສຸຄະບັນດິດ ຖືຮຸ້ນ 51% ແລະ ບໍລິສັດ ໂກວ້ອນເຮົ້າ ອິນເຕີເນຊັ້ນແນວ ຈຳກັດ (ມະຫາຊົນ) ຖືຮຸ້ນ 33.94%) • ໃນວັນທີ 13/09/2015 ໄດ້ຫັນເປັນ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ • ໄດ້ສະເໜີຂອກຈຳໜ່າຍຮຸ້ນເພີ່ມທຶນຄັ້ງທຳອິດ ຈຳນວນ 25 ລ້ານຮຸ້ນ ມູນຄ່າ 50 ຕື້ກີບ, ມູນຄ່າກຳນົດ 2.000ກີບ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ (11/12/2015) • ໄດ້ຮັບໃບຢັ້ງຢືນ ລະບົບການບໍລິຫານຈັດການຕາມມາດຕະຖານ ISO9001:2008 ວັນທີ 25/09/2015.
2017	ເປີດສາຂາ ໂຊກໃຫຍ່(ມັງກອນ) ແລະ ສາຂາປາກຊັນ(ກັນຍາ)
2018	• ເປີດສາຂາປາກເຊ (ແຂວງຈຳປາສັກ) • ໄດ້ຮັບໃບຢັ້ງຢືນ ລະບົບການບໍລິຫານຈັດການມາດຕະຖານ ISO 9001 ສະບັບປີ 2015
2020	ເປີດສາຂາ ທ່າແຂກ (ແຂວງຄຳມ່ວນ)
2021	ເປີດສາຂາ ແຂວງສະຫວັນນະເຂດ

2. ປັດໄຈຄວາມສ່ຽງ

2.1 ຄວາມສ່ຽງຂອງຜູ້ອອກຮຸ້ນກູ້

2.1.1 ຄວາມສ່ຽງໃນການດຳເນີນທຸລະກິດ

1) ຄວາມສ່ຽງດ້ານການແຂ່ງຂັນ

ການແຂ່ງຂັນໃນທຸລະກິດຮ້ານຄ້າວັດສະດຸກໍ່ສ້າງ ແລະ ອຸປະກອນຕົກແຕ່ງ ທີ່ເປັນຮ້ານຄ້າຂະໜາດນ້ອຍ, ຂະໜາດກາງຖືວ່າມີການແຂ່ງຂັນທີ່ເພີ່ມຂຶ້ນຢ່າງຕໍ່ເນື່ອງໃນປະຈຸບັນ ເຊິ່ງຖືເປັນຄູ່ແຂ່ງຂັນທາງທຸລະກິດໂດຍກົງກັບບໍລິສັດ ໜຶ່ງໃນປັດໃຈທີ່ສຳຄັນ ເຫັນວ່າ ທຸລະກິດປະເພດນີ້ ສາມາດເຂົ້າສູ່ທຸລະກິດໄດ້ງ່າຍ ສິ່ງຜົນໃຫ້ມີຈຳນວນຜູ້ປະກອບການໃນຂະແໜງນີ້ມີຈຳນວນຫຼາຍ.

ນອກຈາກນີ້, ບໍລິສັດ ອາດປະເຊີນກັບການແຂ່ງຂັນຈາກຄູ່ແຂ່ງຢູ່ໃນປະເທດເພື່ອນບ້ານ ໂດຍສະເພາະແມ່ນຄູ່ແຂ່ງຢູ່ໃນຈັງຫວັດຊາຍແດນ ລາວ-ໄທ ເຊັ່ນ: ໜອງຄາຍ, ອຸດອນທານີ ເຊິ່ງມີໄລຍະທາງບໍ່ໄກຈາກຂົວມິດຕະພາບໄທ-ລາວ ທີ່ເຊື່ອມຕໍ່ກັບນະຄອນຫຼວງວຽງຈັນ ເນື່ອງຈາກຜູ້ບໍລິໂພກໃນ ສປປ ລາວ ສາມາດເດີນທາງໄປເລືອກຊື້ສິນຄ້າໄດ້ຢ່າງສະດວກ ເຊິ່ງມີຜູ້ຈຳໜ່າຍສິນຄ້າປະເພດດັ່ງກ່າວຂະໜາດໃຫຍ່ທີ່ລ້ອນແຕ່ມີສາຂາຢູ່ຈັງຫວັດ ເຫຼົ່ານີ້ ເຊັ່ນ: ຮ້ານດູໂຮມ (Do Home), ຮ້ານໂຮມຮັບ (Home Hub), ຮ້ານໂຮມໂປຣ (Home Pro) ແລະ ຮ້ານໄທວັດສະດຸ (Thai Watsadu) ເປັນຕົ້ນ.

ດ້ວຍເຫດນີ້, ບໍລິສັດຈຶ່ງໄດ້ມີການປະເມີນຕິດຕາມເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວ ໂດຍສະເພາະການແຂ່ງຂັນກັບຜູ້ປະກອບການໃນ ສປປ ລາວ ເນື່ອງຈາກ ບໍລິສັດ ເປັນຜູ້ຈັດຈຳໜ່າຍສິນຄ້າ ແລະ ບໍລິການ ກ່ຽວກັບວັດສະດຸກໍ່ສ້າງ ອຸປະກອນຕົກແຕ່ງບ້ານ ແລະ ອາຄານແບບຄົບວົງຈອນ ຜ່ານທາງສູນສະແດງສິນຄ້າຂະໜາດໃຫຍ່ທີ່ທັນສະໄໝ (Showroom) ໂດຍເນັ້ນໃສ່ການຈຳໜ່າຍສິນຄ້າແບບຄົບວົງຈອນ ເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ບໍລິໂພກ ໂດຍມີສິນຄ້າທີ່ມີຄຸນນະພາບລະດັບສາກົນຫຼາຍກວ່າ 400 ຍີ່ຫໍ້ ແລະ ມີລາຍການສິນຄ້າຫຼາຍກວ່າ 30.000 ລາຍການ. ສຳລັບ ຄວາມສ່ຽງຂອງການແຂ່ງຂັນຈາກຜູ້ປະກອບການພາຍນອກທີ່ຈະເຂົ້າມາແຂ່ງຂັນກັບບໍລິສັດ ລວມເຖິງຜູ້ປະກອບການຈາກປະເທດເພື່ອນບ້ານ ທີ່ດຶງດູດຜູ້ບໍລິໂພກໃນປະເທດໃຫ້ໄປໃຊ້ຈ່າຍໃນຕ່າງປະເທດນັ້ນ ບໍລິສັດມີນະໂຍບາຍການບໍລິຫານເພື່ອຫຼຸດຄວາມສ່ຽງດັ່ງກ່າວ ໂດຍການນຳເຂົ້າສິນຄ້າຈາກປະເທດຄູ່ແຂ່ງ ໂດຍການຕັ້ງລາຄາທີ່ຈະຈຳໜ່າຍໃນລາຄາທີ່ເໝາະສົມ ແລະ ສາມາດແຂ່ງຂັນໄດ້ ລູກຄ້າໄດ້ຮັບປະໂຫຍດຄຸ້ມຄ່າກວ່າເມື່ອປຽບທຽບກັບລາຄາທີ່ຊື້ສິນຄ້າຈາກຕ່າງປະເທດ ລວມຄ່າຂົນສົ່ງ ແລະ ຄ່າໃຊ້ຈ່າຍກ່ຽວກັບພາສີ. ນອກນັ້ນ, ບໍລິສັດ ຍັງມີເປົ້າໝາຍຂະຫຍາຍສາຂາໃຫ້ຄອບຄຸມພື້ນທີ່ໃນເຂດຕ່າງໆ ຂອງ ສປປ ລາວ ເພື່ອເປັນຊ່ອງທາງຈັດຈຳໜ່າຍສິນຄ້າ ການຂະຫຍາຍອອກໄປເຂດຕ່າງໆເປັນການສ້າງຖານຜູ້ບໍລິໂພກ.

2) ຄວາມສ່ຽງທີ່ຕ້ອງເພິ່ງພາຜູ້ສະໜອງສິນຄ້າຈາກຕ່າງປະເທດ

ບໍລິສັດຈັດຫາສິນຄ້າສ່ວນຫຼາຍມາຈາກຜູ້ສະໜອງ (Suppliers) ຈາກຕ່າງປະເທດເປັນຫຼັກ ໂດຍສະເພາະຈາກປະເທດໄທເຊິ່ງກວມເອົາປະມານ 89,19%, ຜູ້ສະໜອງຈາກ ສປ ຈີນ ກວມເອົາ 6,26% ແລະ ສ່ວນທີ່ເຫຼືອຄືຜູ້ສະໜອງສິນຄ້າພາຍໃນ ສປປ ລາວ ແລະ ຈາກຕ່າງປະເທດອື່ນໆ ມີພຽງ 4,55%

ບໍລິສັດດຳເນີນນະໂຍບາຍການສັ່ງຊື້ສິນຄ້າ ແລະ ການຂົນສົ່ງທາງເຮືອໂດຍມາຂຶ້ນທ່າເຮືອໃນປະເທດໄທເກືອບທັງໝົດ ຫຼັງຈາກນັ້ນຈຶ່ງຂົນສົ່ງໂດຍລົດຂົນສົ່ງທາງບົກຜ່ານດ່ານມິດຕະພາບລາວ-ໄທ

ແລະນຳມາສົ່ງບໍລິສັດ ເຊິ່ງປະເທດໄທຍັງຖືວ່າຍັງມີຄວາມສ່ຽງກ່ຽວກັບສະຖານະການທາງການເມືອງຢູ່ ເຖິງແມ່ນວ່າຄວາມສ່ຽງດັ່ງກ່າວໃນປະຈຸບັນຈະຫຼຸດລົງແລ້ວພາຍຫຼັງການເລືອກຕັ້ງ ແຕ່ການຂົນສົ່ງສິນຄ້າ ຍັງຄົງມີຂະບວນການກວດສອບ ແລະ ການຄວບຄຸມການຂົນສົ່ງ ແລະ/ຫຼື ການເດີນທາງຂ້າມຕາມເຂດ ຊາຍແດນລະຫວ່າງລາວ-ໄທ ທີ່ເຂັ້ມງວດ ສິ່ງຜົນໃຫ້ເພີ່ມໄລຍະເວລາໃນການຂົນສົ່ງສິນຄ້າຈາກຜູ້ສະໜອງ ມາບໍລິສັດ. ທັງນີ້, ອາດຍັງມີຄວາມສ່ຽງກ່ຽວກັບການປິດຊາຍແດນຫ້າມການຂົນສົ່ງ ທີ່ມາຈາກສະຖານະ ການທາງການເມືອງ ແລະ ການກັບມາແຜລະບາດຂອງພະຍາດສາຍພັນໃໝ່ອີກ ອາດຈະສົ່ງຜົນຕໍ່ການຈັດ ຫາສິນຄ້າຂອງບໍລິສັດ ເຮັດໃຫ້ສິນຄ້າບໍ່ສາມາດມາເຖິງສາງຕາມກຳນົດ.

ເຖິງແນວໃດກໍ່ຕາມ ບໍລິສັດໄດ້ມີການບໍລິຫານ ແລະ ແນວທາງການຮັບມືກັບຄວາມສ່ຽງດັ່ງກ່າວ ໂດຍ ການດຳເນີນນະໂຍບາຍໃນການຈັດຊື້ສິນຄ້າໂດຍໃຊ້ລະບົບໂປຣແກຣມຄອມພິວເຕີ ເຊິ່ງສາມາດກຳ ນົດຈຸດສັ່ງຊື້ ແລະ ແຈ້ງເຕືອນມາຍັງຝ່າຍຈັດຊື້ ເພື່ອດຳເນີນການສັ່ງຊື້ຕໍ່ໄປ ເຊິ່ງຫາກມີເຫດການປິດຊາຍ ແດນລາວ-ໄທ ບໍລິສັດຍັງສາມາດຈັດຊື້ສິນຄ້າຈາກຊ່ອງທາງອື່ນໄດ້ ແຕ່ເຖິງຢ່າງໃດກໍຕາມຜູ້ບໍລິຫານກໍບໍ່ໄດ້ ລະເລີຍຕໍ່ຄວາມສ່ຽງດັ່ງກ່າວ ໂດຍຈະຕິດຕາມຂ່າວສານຕາມສື່ຕ່າງໆ ເພື່ອປະເມີນສະຖານະການ ແລະ ກຳນົດນະໂຍບາຍການສັ່ງຊື້ ເຊິ່ງອາດດຳເນີນການປ່ຽນແປງຈຸດສັ່ງຊື້ສິນຄ້າ ເຮັດໃຫ້ການຂົນສົ່ງສິນຄ້າທີ່ ອາດຈະຕ້ອງໃຊ້ເວລາຫຼາຍຂຶ້ນ ລວມເຖິງການສັ່ງຊື້ສິນຄ້າໃນຈຳນວນຫຼາຍຂຶ້ນ ເພື່ອຮອງຮັບສະຖານະການ ຄວາມສ່ຽງທີ່ອາດຈະເກີດຂຶ້ນ.

3) ຄວາມສ່ຽງໃນການບໍລິຫານສາງ

ບໍລິສັດ ດຳເນີນທຸລະກິດເປັນທຸລະກິດຈັດຈຳໜ່າຍອັດສະດຸກໍ່ສ້າງແບບຄົບວົງຈອນ. ດັ່ງນັ້ນ, ບໍລິສັດມີໂອກາດທີ່ຈະປະເຊີນກັບຄວາມສ່ຽງໃນດ້ານການບໍລິຫານຈັດການສິນຄ້າໃນສາງໃຫ້ຢູ່ໃນ ປະລິມານທີ່ເໝາະສົມ ທີ່ກ່ຽວຂ້ອງກັບການລະບາຍສິນຄ້າ ແລະ ສະພາບຄ່ອງທາງການເງິນ. ຖ້າຫາກມີ ການໃຊ້ເງິນຈຳນວນຫຼາຍຊື້ສິນຄ້າມາເກັບໄວ້ເພື່ອຂາຍ ຫຼື ຖ້າຫາກມີການສຳຮອງສິນຄ້າໃນສາງໜ້ອຍເກີນ ໄປ ອາດເຮັດໃຫ້ບໍລິສັດພົບບັນຫາຂາດແຄນສິນຄ້າ ບໍ່ພຽງພໍຕໍ່ຄວາມຕ້ອງການຂອງລູກຄ້າທີ່ຈະເຮັດໃຫ້ ບໍລິສັດເສຍໂອກາດໃນການດຳເນີນທຸລະກິດ.

ເຖິງຢ່າງໃດກໍຕາມ, ບໍລິສັດໄດ້ນຳໃຊ້ລະບົບໂປຣແກຣມການບໍລິຫານຈັດການສິນຄ້າໃນສາງ ເຮັດ ໃຫ້ສາມາດຕິດຕາມ, ກວດສອບ, ແຈ້ງເຕືອນ ແລະ ຮັບຮູ້ຈຳນວນສິນຄ້າໃນສາງໄດ້ຕະຫຼອດເວລາ (Real time), ສາມາດຕັ້ງຄ່າແຈ້ງເຕືອນສິນຄ້າທີ່ຍັງເຫຼືອຂັ້ນຕ່ຳເຖິງຈຸດສັ່ງຊື້. ນອກຈາກນີ້, ບໍລິສັດຍັງສາມາດ ຕິດຕາມຜົນຂອງອັດຕາໝຸນຂອງສິນຄ້າແຕ່ລະຊະນິດ ເພື່ອຄົ້ນຫາວ່າສິນຄ້າຊະນິດໃດເລີ່ມມີອັດຕາການ ໝຸນຊ້າ (ຈຳໜ່າຍອອກຊ້າ) ແລະ ມີໂອກາດເປັນສິນຄ້າຫຼ້າສະໄໝ ພ້ອມກັນນັ້ນ ກໍ່ມີການຈັດການສົ່ງເສີມ ການຂາຍເຊິ່ນຊວນໃຫ້ລູກຄ້າເລືອກຊື້ສິນຄ້າ ເພື່ອລະບາຍສິນຄ້າອອກ ໂດຍບໍລິສັດອາດຈະມີການດຳເນີນ ການຮ່ວມກັບຜູ້ສະໜອງ ຫຼື ຜູ້ຜະລິດສິນຄ້າໃນການນຳສະເໜີການສົ່ງເສີມການຂາຍ (promotion) ພິເສດໃນສິນຄ້າດັ່ງກ່າວ ເຊິ່ງນະໂຍບາຍການບໍລິຫານດັ່ງກ່າວສາມາດຫຼຸດຜ່ອນຄວາມສ່ຽງຂອງສິນຄ້າຫຼ້າ ສະໄໝໄດ້.

4) ຄວາມສ່ຽງກັບການການຊຳລະໜີ້ລ່າຊ້າຂອງລູກໜີ້ການຄ້າ

ບໍລິສັດແມ່ນມີຄວາມສ່ຽງໃນການຮຽກຊຳລະລູກໜີ້ການຄ້າຈາກກຸ່ມລູກຄ້າຄື: ກຸ່ມລູກຄ້າໂຄງການ ແລະ ກຸ່ມລູກຄ້າທີ່ເປັນຮ້ານຄ້າ ເຊິ່ງກວມອັດຕາສ່ວນປະມານ 20% ທີ່ຊື້ສິນຄ້າໃນຮູບແບບສິນເຊື່ອ ສ່ວນລູກຄ້າທົ່ວໄປ ແມ່ນຈະຊຳລະເປັນເງິນສົດ.

ເຖິງແນວໃດກໍ່ຕາມ ບໍລິສັດໄດ້ມີຂັ້ນຕອນໃນການຕິດຕາມລູກໜີ້ການຄ້າ ໂດຍສ່ວນຫຼາຍບໍລິສັດຈະດຳເນີນການຄ້າຂາຍ ກັບລູກຄ້າຮ້ານຄ້າປະຈຳ ເຊິ່ງມີການຄ້າກັບບໍລິສັດມາເປັນເວລາດົນນານ ນະໂຍບາຍໃນການໃຫ້ຄ້າງຊຳລະສິນຄ້າໃນໄລຍະເວລາ 30-60 ວັນ (ແລ້ວແຕ່ກໍລະນີ) ບໍລິສັດຈະດຳເນີນການຕິດຕາມຢ່າງໃກ້ຊິດເມື່ອເຖິງກຳນົດຊຳລະ ແລະ ໃນກໍລະນີລູກຄ້າຄ້າງຊຳລະເປັນໄລຍະເວລາດົນນານ. ຖ້າຫາກລູກຄ້າລາຍດັ່ງກ່າວຕ້ອງການສັ່ງຊື້ສິນຄ້າກັບທາງບໍລິສັດ ຈະຕ້ອງຊຳລະຄ່າສິນຄ້າທີ່ຄ້າງຄ້າງໃຫ້ຮຽບຮ້ອຍກ່ອນ. ນອກຈາກນີ້ ບໍລິສັດຍັງມີການກຳນົດວົງເງິນສິນເຊື່ອຄ່າສິນຄ້າໃຫ້ກັບລູກຄ້າແຕ່ລະລາຍ ເພື່ອເປັນການຄວບຄຸມລະດັບຄວາມສ່ຽງ ລວມທັງຜົນກະທົບທີ່ອາດຈະເກີດຂຶ້ນ ຫາກບໍລິສັດບໍ່ໄດ້ຮັບການຊຳລະສິນຄ້າ ເຊິ່ງຈະຊ່ວຍຫຼຸດຄວາມສ່ຽງໃນສ່ວນດັ່ງກ່າວ.

2.1.2 ຄວາມສ່ຽງໃນການສະເໜີຂາຍຮຸ້ນກູ້

ບໍລິສັດມີວັດຖຸປະສົງສະເໜີຂໍອອກຈຳໜ່າຍຮຸ້ນກູ້ ໃນວົງຈຳກັດ ແລະຝາກຮຸ້ນກູ້ໄວ້ໃນສູນຮັບຝາກຂອງຕະຫຼາດຫຼັກຊັບລາວ ໂດຍ ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ (BCEL-KT) ໃນຖານະທີ່ປຶກສາທາງການເງິນໄດ້ມີການພິຈາລະນາເງື່ອນໄຂຂອງບໍລິສັດໃນເບື້ອງຕົ້ນ ແລະ ເຫັນວ່າບໍລິສັດມີເງື່ອນໄຂຄົບຖ້ວນ ຕາມການກຳນົດຂອງ ສຄຄຊ ແລະ ຕລຊລ ຍົກເວັ້ນເລື່ອງຜົນຄວາມສຳເລັດຂອງການຂາຍຮຸ້ນກູ້ໃນວົງຈຳກັດ.

ດັ່ງນັ້ນ ບໍລິສັດຈຶ່ງຍັງບໍ່ທັນມີຄວາມແນ່ນອນໃນເລື່ອງ ຜົນສຳເລັດຂອງການຂາຍຮຸ້ນກູ້ ໃນວົງຈຳກັດ ຖ້າຫາກວ່າ ໃນກໍລະນີ ທີ່ຜົນຂອງການຂາຍຮຸ້ນກູ້ຂາຍໄດ້ບໍ່ໝົດ ຫຼື ກໍລະນີທີ່ຂາຍບໍ່ໝົດ ບໍ່ໄດ້ຮັບການຢັ້ງຢືນຜົນສຳເລັດຈາກ ສະພາບໍລິຫານຂອງບໍລິສັດ ຫຼື ກອງປະຊຸມສາມັນຜູ້ຖືຮຸ້ນ.

2.1.3 ຄວາມສ່ຽງທາງດ້ານການເງິນ

1) ຄວາມສ່ຽງຈາກອັດຕາແລກປ່ຽນ

ບໍລິສັດນຳເຂົ້າສິນຄ້າມາຈາກຜູ້ສະໜອງສິນຄ້າຈາກຕ່າງປະເທດ ສ່ວນຫຼາຍແມ່ນມາຈາກປະເທດໄທ ສິນຄ້າທີ່ນຳເຂົ້າມາຖືກຊຳລະຄ່າສິນຄ້າເປັນສະກຸນເງິນບາດ (ໄທ) ເປັນສ່ວນໃຫຍ່. ແຕ່ບໍລິສັດຈຳໜ່າຍສິນຄ້າແກ່ກຸ່ມລູກຄ້າຕ່າງໆ ພາຍໃນ ສປປ ລາວ ແມ່ນຈະໄດ້ຮັບການຊຳລະຄ່າສິນຄ້າເປັນສະກຸນເງິນກີບ ແລະ ບາງສ່ວນໄດ້ຮັບເປັນສະກຸນເງິນໂດລາສະຫະລັດ ຫຼື ເງິນບາດ ໂດຍສະເພາະຈາກລູກຄ້າໂຄງການເປັນຕົ້ນ. ດ້ວຍເຫດນັ້ນ, ຈຶ່ງເຮັດໃຫ້ບໍລິສັດມີຄວາມສ່ຽງດ້ານອັດຕາແລກປ່ຽນ.ໃນໄລຍະຜ່ານມາເຫັນວ່າ ເຄື່ອງມືບໍລິຫານຄວາມສ່ຽງອັດຕາແລກປ່ຽນ (Forward Contract) ໄດ້ມີການປະກາດນຳໃຊ້ແລ້ວ ແຕ່ຍັງບໍ່ມີການໃຫ້ບໍລິການຕາມບັນດາທະນາຄານທຸລະກິດຢ່າງແຜ່ຫຼາຍເທື່ອ ສຳລັບເຄື່ອງມືທາງການເງິນ Option ຫຼື Swap ປະຈຸບັນ ແມ່ນຍັງບໍ່ມີທະນາຄານ ຫຼື ສະຖາບັນການເງິນແຫ່ງໃດໃຫ້ບໍລິການ. ດັ່ງນັ້ນ, ສິ່ງຜົນໃຫ້ບໍລິສັດຕ້ອງໄດ້ຮັບພາລະຄວາມສ່ຽງດ້ານອັດຕາແລກປ່ຽນ ເຊິ່ງອາດຈະສົ່ງຜົນກະທົບຕໍ່ຜົນການດຳເນີນທຸລະກິດຂອງບໍລິສັດ.

ເຖິງຢ່າງໃດກໍຕາມ ບໍລິສັດໄດ້ສ້າງວິທີຄຸ້ມຄອງບໍລິຫານຄວາມສ່ຽງຈາກອັດຕາແລກປ່ຽນ ໂດຍ ພະແນກການເງິນຈະເປັນຜູ້ຮັບຜິດຊອບໃນການບໍລິຫານຄ່າເງິນດັ່ງກ່າວ ໂດຍໃຊ້ນະໂຍບາຍໃນການຮັກສາ ລະດັບເງິນຕາຕ່າງປະເທດບໍ່ຕ່ຳກວ່າ 70% ຂອງພາລະໜີ້ສິນ ແລະ ຄ່າສິນຄ້າທີ່ເປັນສະກຸນເງິນຕາ ຕ່າງປະເທດ ໂດຍຈະປະສານງານຮ່ວມກັບພະແນກບັນຊີ ເພື່ອສະຫຼຸບຍອດພາລະໜີ້ສິນ ແລະ ຄ່າໃຊ້ຈ່າຍ ທີ່ຈະເກີດຂຶ້ນໃນສະກຸນເງິນຕາຕ່າງປະເທດເປັນລາຍງານປະຈຳວັນ ແລ້ວພະແນກການເງິນຈະພິຈາລະນາ ຮ່ວມກັບຜູ້ບໍລິຫານໃນການບໍລິຫານຮັກສາສະກຸນເງິນຕາຕ່າງປະເທດ ໂດຍສະເພາະຫາກໄດ້ຮັບຊຳລະຄ່າ ສິນຄ້າເປັນສະກຸນເງິນບາດ ຫຼື ສະກຸນເງິນໂດລາສະຫະລັດ ບໍລິສັດຈະຍັງບໍ່ແລກປ່ຽນເປັນເງິນກີບ ໂດຍຈະ ຮັກສາເງິນສະກຸນດັ່ງກ່າວໄວ້ເພື່ອລໍຖ້າຊຳລະພາລະໜີ້ສິນໃນສະກຸນເງິນບາດ (Natural Hedge).

ນອກຈາກນີ້ ຫາກບໍລິສັດພິຈາລະນາແລ້ວວ່າ ອັດຕາແລກປ່ຽນໃນແຕ່ລະມື້ຈະມີທ່າອ່ຽງຜັນຜວນ ບໍລິສັດກໍຈະໃຊ້ວິທີຄາດຄະເນກະແສເງິນສິດສ່ວນທີ່ເຫຼືອຈາກການດຳເນີນທຸລະກິດມາແລກປ່ຽນເປັນ ເງິນຕາຕ່າງປະເທດໄວ້ເພື່ອສຳຮອງສຳລັບການຊຳລະຄ່າສິນຄ້າໃຫ້ແກ່ຜູ້ສະໜອງທີ່ຢູ່ຕ່າງປະເທດຕໍ່ ໂດຍ ນະໂຍບາຍທີ່ບໍລິສັດໃຊ້ບໍລິຫານຄວາມສ່ຽງກ່ຽວກັບອັດຕາແລກປ່ຽນສາມາດຫຼຸດຜ່ອນຄວາມສ່ຽງໄດ້ໃນ ລະດັບໜຶ່ງ, ແຕ່ວ່າບໍລິສັດເອງບໍ່ໄດ້ຢຸດການພັດທະນາການຄຸ້ມຄອງບໍລິຫານຄວາມສ່ຽງດັ່ງກ່າວ. ໃນ ອະນາຄົດ ຫາກທະນາຄານ ຫຼື ສະຖາບັນການເງິນໃດ ຫາກອອກເຄື່ອງມືເພື່ອຮອງຮັບຄວາມສ່ຽງນີ້ ບໍລິສັດ ກໍຈະສຶກສາເພື່ອນຳໃຊ້ເຄື່ອງມືດັ່ງກ່າວໃນການຫຼຸດຜ່ອນຄວາມສ່ຽງດ້ານອັດຕາແລກປ່ຽນ.

2.2 ຄວາມສ່ຽງຂອງຮຸ້ນກູ້

2.2.1 ຄວາມສ່ຽງດ້ານການຊຳລະດອກເບ້ຍ ແລະ ຕົ້ນທຶນຮຸ້ນກູ້

ຜູ້ຖືຮຸ້ນກູ້ມີຄວາມສ່ຽງທີ່ອາດຈະບໍ່ໄດ້ຮັບການຊຳລະດອກເບ້ຍ ຫຼື ເງິນຕົ້ນ ໃນກໍລະນີທີ່ທຸລະກິດ ແລະ ຜົນການດຳເນີນງານຂອງຜູ້ອອກຮຸ້ນກູ້ ບໍ່ເປັນໄປຕາມຄາດໝາຍ ຫຼື ຊັບສິນຂອງຜູ້ອອກຮຸ້ນກູ້ບໍ່ ພຽງພໍຕໍ່ການຊຳລະໜີ້. ດັ່ງນັ້ນ, ກ່ອນການຕັດສິນໃຈລົງທຶນ ຜູ້ລົງທຶນຄວນພິຈາລະນາ ຖານະການເງິນ ແລະ ຄວາມສາມາດໃນການຊຳລະໜີ້ຂອງຜູ້ອອກຮຸ້ນກູ້ເສຍກ່ອນ ທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້ ສະບັບນີ້.

2.2.2 ຄວາມສ່ຽງດ້ານລາຄາ

ລາຄາຕະຫຼາດຂອງຮຸ້ນກູ້ ອາດມີການປ່ຽນແປງ ຂຶ້ນຢູ່ກັບຫຼາຍປັດໄຈ ເປັນຕົ້ນແມ່ນ ລະດັບອັດຕາ ດອກເບ້ຍໃນຕະຫຼາດເງິນ, ນະໂຍບາຍຂອງທະນາຄານກາງໃນການປັບອັດຕາດອກເບ້ຍໃນແຕ່ລະໄລຍະ, ອັດຕາເງິນເຟີ້, ອາຍຸຂອງຮຸ້ນກູ້ ແລະ ອຸປະສິງ-ອຸປະທານຂອງຮຸ້ນກູ້. ດັ່ງນັ້ນ, ຜູ້ຖືຮຸ້ນກູ້ ອາດຈະໄດ້ຮັບຜົນ ກະທົບຕໍ່ການເໜັງຕີງຂອງລາຄາຮຸ້ນກູ້ ໃນກໍລະນີທີ່ຜູ້ຖືຮຸ້ນກູ້ມີການຊື້ຂາຍຮຸ້ນກູ້ກ່ອນກຳນົດໄຖ່ຖອນ.

2.2.3 ຄວາມສ່ຽງດ້ານສະພາບຄ່ອງ

ຜູ້ຖືຮຸ້ນກູ້ ອາດບໍ່ສາມາດຂາຍຮຸ້ນກູ້ກ່ອນ ວັນຄົບກຳນົດໄຖ່ຖອນຮຸ້ນກູ້ໄດ້ທັນທີ ຕາມລາຄາທີ່ຕົນ ຕ້ອງການ ເຖິງແມ່ນວ່າຮຸ້ນກູ້ຈະມີຕະຫຼາດຂັ້ນສອງຮ່ອງຮັບ ແຕ່ເນື່ອງຈາກການອອກຮຸ້ນກູ້ໃນວົງຈຳກັດ ມີ ຜູ້ລົງທຶນຈຳນວນບໍ່ຫຼາຍ ນອກຈາກນີ້ ຜູ້ຖືຮຸ້ນກູ້ຈະບໍ່ສາມາດຂາຍ ຫຼື ໂອນຮຸ້ນກູ້ໃຫ້ແກ່ບຸກຄົນທົ່ວໄປໄດ້ ແຕ່ຈະຖືກຈຳກັດການຂາຍ ຫຼື ໂອນຮຸ້ນກູ້ໄດ້ສະເພາະຜູ້ລົງທຶນປະເພດສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່ ເທົ່ານັ້ນ ເນື່ອງຈາກຜູ້ອອກຮຸ້ນກູ້ໄດ້ມີການກຳນົດຂໍ້ຈຳກັດໃນການໂອນໄວ້.

3. ການຈັດລຳດັບຄວາມໜ້າເຊື່ອຖື

ການອອກຈຳໜ່າຍຮຸ້ນກູ້ ໃນຄັ້ງນີ້ ບໍລິສັດ ບໍ່ໄດ້ມີການດຳເນີນການກ່ຽວກັບ ການຈັດລຳດັບຄວາມໜ້າເຊື່ອຖື ເນື່ອງຈາກເປັນການອອກຮຸ້ນກູ້ໃນວົງຈຳກັດ.

4. ເປົ້າໝາຍການອອກຈຳໜ່າຍ ແລະ ແຜນການນຳໃຊ້ທຶນ.

ເງິນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນກູ້ ບໍລິສັດ ມີເປົ້າໝາຍໃນການນຳໃຊ້ທຶນ ດັ່ງລຸ່ມນີ້:

ເປົ້າໝາຍການນຳໃຊ້ທຶນ	ມູນຄ່າການນຳໃຊ້	ອັດຕາສ່ວນໃນການນຳໃຊ້	ມູນຄ່າອອກຈຳໜ່າຍຮຸ້ນກູ້ ບໍ່ເກີນ	ຄາດຄະເນປີນຳໃຊ້
ຂະຫຍາຍສາຂາ (ສາຂາ ສົມສະໜຸກ ນະຄອນຫຼວງວຽງຈັນ)	2.340.000 ໂດລາ ສະຫະລັດ	78%	3.000.000 ໂດລາ ສະຫະລັດ	2023-2024
ທຶນໝຸນວຽນ	660.000 ໂດລາ ສະຫະລັດ	22%		2023-2024

ບໍລິສັດສະເໜີອອກຈຳໜ່າຍຮຸ້ນກູ້ ໃນຄັ້ງນີ້ ເປັນເງິນສະກຸນໂດລາ ສະຫະລັດ ເນື່ອງຈາກໂຄງການການກໍ່ສ້າງສາຂາໃໝ່ມີຄວາມຈຳເປັນໃນການຊື້ ວັດສະດຸອຸປະກອນໃນໂຄງການເປັນເງິນຕາຕ່າງປະເທດ ຕາມສະພາບຂອງພາວະເສດຖະກິດຂອງປະເທດລາວ. ດັ່ງນັ້ນ, ບໍລິສັດ ຈຶ່ງໄດ້ອອກຮຸ້ນກູ້ເປັນເງິນຕາຕ່າງປະເທດ ເພື່ອນຳໃຊ້ໃນໂຄງການດັ່ງກ່າວ.

5. ການດຳເນີນທຸລະກິດໃນປະຈຸບັນ

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ປະກອບທຸລະກິດເປັນຜູ້ນຳໃນການຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົກແຕ່ງພາຍໃນ ເຊັ່ນ: ກະໂລ, ສຸຂະພັນ, ນ້ຳສີ, ວັດສະດຸຕົກແຕ່ງບ້ານ ແລະ ອາຄານສຳນັກງານຕ່າງໆ, ໃຫ້ບໍລິການຕິດຕັ້ງ, ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າ ເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ , ການອອກແບບພາຍໃນຫ້ອງຄົວ-ຫ້ອງນ້ຳ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ. ການຈັດຈຳໜ່າຍສິນຄ້າຮູບແບບທັນສະໄໝ ພາຍໃນສູນວາງສະແດງສິນຄ້າຂະໜາດໃຫຍ່ (Showroom) ພາຍໃຕ້ເຄື່ອງໝາຍການຄ້າ “ສຸວັນນີ” (Souvanny) ທີ່ໃຫຍ່ເປັນອັນດັບໜຶ່ງ ໃນ ສປປ ລາວ. ສິນຄ້າສ່ວນຫຼາຍນຳເຂົ້າຈາກຕ່າງປະເທດ ເປັນສິນຄ້າທີ່ມີຄຸນນະພາບ ເຄື່ອງໝາຍການຄ້າທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບລະດັບສາກົນ ຫຼາຍກວ່າ 400 ຍີ່ຫໍ້ ເຊິ່ງມີສິນຄ້າຫຼາຍກວ່າ 30.000 ລາຍການ ໃຫ້ລູກຄ້າໄດ້ເລືອກຊື້ຕາມວັດຖຸປະສົງທີ່ຈະນຳໄປໃຊ້. ນອກຈາກນັ້ນ, ຍັງໄດ້ນຳໃຊ້ລະບົບຄວບຄຸມລາຍການສິນຄ້າດ້ວຍໂປຣແກຣມຄອມພິວເຕີທີ່ທັນສະໄໝ. ການຈັດການດ້ານການຈຳໜ່າຍ ແລະ ການຄວບຄຸມສິນຄ້າໃນສາງມີປະສິດທິພາບສູງຂຶ້ນ ສາມາດຊອກຫາຂໍ້ມູນຂອງສິນຄ້າແຕ່ລະລາຍການໄດ້ຢ່າງວ່ອງໄວ. ສິນຄ້າທັງໝົດທີ່ບໍລິສັດນຳມາຈຳໜ່າຍປະກອບດ້ວຍ 3 ກຸ່ມຜະລິດຕະພັນ ແບ່ງອອກເປັນ 20 ປະເພດຍ່ອຍ.

ປະຈຸບັນມີສາຂາໃຫ້ບໍລິການລູກຄ້າທັງໝົດ 7 ສາຂາ ໄດ້ແກ່:

1) ສາຂາໂພນຕ້ອງ (ນະຄອນຫຼວງວຽງຈັນ)
2) ສາຂາ ສີໄຄ (ນະຄອນຫຼວງວຽງຈັນ)
3) ສາຂາໂຊກໃຫຍ່ (ນະຄອນຫຼວງວຽງຈັນ)
4) ສາຂາປາກຊັນ (ແຂວງບໍລິຄຳໄຊ)
5) ສາຂາ ປາກເຊ (ແຂວງຈຳປາສັກ)
6) ສາຂາ ທ່າແຂກ (ແຂວງຄຳມ່ວນ)
7) ສາຂາສະຫວັນນະເຂດ (ແຂວງສະຫວັນນະເຂດ)

ສາຂາ	ທີ່ຢູ່	ເປີດດຳເນີນການ	ເວລາໃຫ້ບໍລິການ	ຂະໜາດເນື້ອທີ່ (ຕາແມັດ)
1.ສຳນັກງານໃຫຍ່ (ໂພນຕ້ອງ)	ຕັ້ງຢູ່ ຖະໜົນໂພນຕ້ອງ ເຮືອນເລກທີ 366 ບ້ານ ໂພນຕ້ອງສະຫວາດ ເມືອງ ຈັນທະບຸລີ ນະຄອນຫຼວງ ວຽງຈັນ	ກໍລະກົດ 2000	ວັນຈັນ-ວັນອາທິດ ເວລາ 08:00-18:00 ໂມງ	ເນື້ອທີ່ດິນທັງໝົດ: 6,408 ຕາ ແມັດ ເນື້ອທີ່ວາງສະແດງສິນຄ້າ: 4,320 ເນື້ອທີ່ສາງສິນຄ້າ: 3,053 ເນື້ອທີ່ສຳລັບຈອດລົດ: 40 ຄັນ
2.ສາຂາສີໄຄ	ຕັ້ງຢູ່ ຖະໜົນເລກທີ 13 ເໜືອ ເຮືອນເລກທີ 109 ບ້ານໂພສີ, ເມືອງສີໂຄດ ຕະບອງ, ນະຄອນຫຼວງ ວຽງຈັນ	ທັນວາ 2004	ວັນຈັນ-ວັນອາທິດ ເວລາ 08:00-18:00 ໂມງ	ເນື້ອທີ່ດິນທັງໝົດ: 42,181 ຕາ ແມັດ ເນື້ອທີ່ວາງສະແດງສິນຄ້າ: 6,520 ເນື້ອທີ່ສາງສິນຄ້າ: 12,230 ຕາ ແມັດ ເນື້ອທີ່ສຳລັບຈອດລົດ: 130ຄັນ
3.ສາຂາໂຊກໃຫຍ່	ຕັ້ງຢູ່ ຖະໜົນ 450 ປີ ບ້ານໂຊກໃຫຍ່, ເມືອງໄຊ	ມັງກອນ2017	ວັນຈັນ-ວັນອາທິດ ເວລາ	ພື້ນທີ່ວາງສະແດງສິນຄ້າບໍ່ຕ່ຳກ່ວາ 12,000 ຕາແມັດ

	ເສດຖາ, ແຂວງ ນະຄອນຫຼວງວຽງຈັນ		08:00-18:00 ໂມງ	
4.ສາຂາປາກຊັນ	ຕັ້ງຢູ່ ຖະໜົນເລກທີ 13 ໃຕ້ ບ້ານ ສີສະອາດ, ເມືອງ ປາກຊັນ, ແຂວງບໍລິຄຳໄຊ	ກັນຍາ 2017	ວັນຈັນ-ວັນອາທິດ ເວລາ 08:00-18:00 ໂມງ	ພື້ນທີ່ວາງສະແດງສິນຄ້າບໍ່ຕ່ຳກ່ວາ 7,500 ຕາແມັດ ແລະ ເນື້ອທີ່ສາງ ປະມານ 7,500 ຕາແມັດ
5,ສາຂາປາກເຊ	ຕັ້ງຢູ່ ຖະໜົນເລກທີ 38, ບ້ານ ກາງ ນະຄອນປາກເຊ ແຂວງ ຈຳປາສັກ	ມີຖຸນາ 2018	ວັນຈັນ-ວັນອາທິດ ເວລາ 08:00-18:00 ໂມງ	ມີເນື້ອທີ່ລວມປະມານ 10.000ຕາ ແມັດ
6ສາຂາ ທ່າແຂກ	ຕັ້ງຢູ່ ຖະໜົນ 13ໃຕ້ ,ທີ່ ບ້ານ ໂພນພິມ, ເມືອງ ທ່າ ແຂກ ແຂວງ ຄຳມ່ວນ	ມີນາ 2020	ວັນຈັນ-ວັນອາທິດ ເວລາ 08:00-18:00 ໂມງ	ມີເນື້ອທີ່ລວມປະມານ 14.000ຕາ ແມັດ
7 ສະຫວັນນະ ເຂດ	ຕັ້ງຢູ່: ຖະໜົນ ເລກທີ 09, ບ້ານ ໂພນສະຫວ່າງເໜືອ, ນະຄອນໄກສອນພົມວິຫານ , ແຂວງ ສະຫວັນນະເຂດ.	ທັນວາ 2021	ວັນຈັນ-ວັນອາທິດ ເວລາ 08:00-18:00 ໂມງ	ມີເນື້ອທີ່ລວມປະມານ 16.000ຕາ ແມັດ

ໝາຍເຫດ: ແຫຼ່ງຂໍ້ມູນຈາກບໍລິສັດ

ບໍລິສັດບໍລິຫານທຸລະກິດພາຍໃຕ້ຄຳຂວັນ ແລະ ເຄື່ອງໝາຍການຄ້າ “ສຸວັນນີ” (Souvanny) ທີ່ ໄດ້ຜ່ານການຢັ້ງຢືນ ແລະ ຂຶ້ນທະບຽນເຄື່ອງໝາຍການຄ້າແຫ່ງຊາດ

1. <u>ຄຳຂວັນບໍລິສັດ</u> : ຍົກລະດັບສິນຄ້າ ແລະ ການບໍລິການໃຫ້ມີຄຸນນະພາບ ສົ່ງມອບຖືກຕ້ອງ ຄົບຖ້ວນ ທັນ ເວລາ ສ້າງຄວາມເພິ່ງພໍໃຈໃຫ້ລູກຄ້າ ພັດທະນາຢ່າງຕໍ່ເນື່ອງ.
2. <u>ເຄື່ອງໝາຍການຄ້າ</u>: “Souvanny” ສຸວັນນີ ແມ່ນຊື່ຂອງຜູ້ກໍ່ຕັ້ງບໍລິສັດ ທັງເປັນບຸພະການີຂອງຄະນະຜູ້ ບໍລິຫານ ເຊິ່ງເປັນທີ່ຍຶດໝັ້ນທາງຈິດໃຈໃຫ້ກັບບຸກຄົນໃນອ້ອມກອນ ພ້ອມທັງເປັນສັນຍາລັກ ຂອງຄວາມເຊື່ອໝັ້ນຂອງລູກຄ້າທີ່ມາຊື້ສິນຄ້າ ແລະ ບໍລິການ. ເຄື່ອງໝາຍການຄ້າ ສຸວັນນີ ຍັງເປັນທີ່ຮູ້ຈັກກັນດີຂອງຄົນທົ່ວ ສປປ ລາວ ໂດຍສະເພາະແມ່ນນະຄອນຫຼວງວຽງຈັນ ໃນຖານະທີ່ເປັນຜູ້ຈັດຈຳໜ່າຍວັດສະດຸກໍ່ສ້າງມາຫຼາຍກວ່າ 20ປີ. ເຄື່ອງໝາຍການຄ້າຂອງ ສຸວັນນີແມ່ນສັນຍາລັກທີ່ສະແດງໃຫ້ເຫັນເຖິງຄຸນນະພາບ, ການຮັບປະກັນ ແລະ ຄວາມ ເປັນຜູ້ນຳດ້ານວັດສະດຸກໍ່ສ້າງ ໃນ ສປປ ລາວ.
   - ຄວາມໝາຍຂອງການໃຊ້ສີໃນໂລໂກ້ : ສີສົ້ມທີ່ເປັນອັກສອນໂຕ “ສ” ດ້ານໜ້າໝາຍເຖິງ ຄວາມສົດໃສ, ຄວາມຈະເລີນກ້າວໜ້າ, ຄວາມຂະຫຍັນຂັນແຂງ ຄວາມມຸ່ງໝັ້ນໃນການ ພັດທະນາຢ່າງບໍ່ຢຸດຢັ້ງ, ເປັນສີແຫ່ງພະລັງງານ. ສ່ວນສີຂຽວທີ່ໃສ່ອັກສອນທັງໝົດດ້ານ ຫຼັງຫມາຍເຖິງຄວາມສຸຂຸມຮອບຄອບ ແລະ ຄວາມສົມດຸນ, ຄວາມພ້ອມພຽງສາມັກຄີໃນ ການເຮັດທຸລະກິດ. ການເອົາສອງສີດັ່ງກ່າວມາລວມໃນໂລໂກ້ຂອງບໍລິສັດແມ່ນມີຄວາມໝ ายໃນການເນັ້ນຄວາມສົມດຸນລະຫວ່າງຮ້ອນ ແລະ ເຢັນ ອັນເປັນພື້ນຖານການພັດທະນາ ຂອງທຳມະຊາດ.

3. <u>ວິໄສທັດ</u>: ສ້າງຕົນເອງໃຫ້ເປັນບໍລິສັດຊັ້ນນຳໃນທຸລະກິດການຄ້າວັດສະດຸກໍ່ສ້າງ ແລະ ຕົກແຕ່ງເຮືອນທີ່ທັນສະໄໝໃນ ສປປ ລາວ ກ້າວເຊື່ອມໂຍງສູ່ອາຊຽນ.

4. <u>ພາລະກິດ</u>: ພັດທະນາດ້ານສິນຄ້າ ແລະ ບໍລິການໃຫ້ໄດ້ມາດຕະຖານ, ມີຄວາມທັນສະໄໝເພື່ອມຸ່ງໝັ້ນສູ່ຄວາມເປັນເລີດດ້ານບໍລິການ ແລະ ພັດທະນາບຸກຄະລາກອນໃຫ້ມີຄວາມຮູ້ ຄວາມສາມາດ ໃນການຮັບມືກັບພາລະໜ້າທີ່ອັນໃໝ່ທີ່ໃຫຍ່ກວ່າເກົ່າ ຂະຫຍາຍທຸລະກິດໃຫ້ກະຈາຍໄປທົ່ວປະເທດ ເພື່ອຍາດແຍ່ງໂອກາດໃນການທີ່ເປັນຈຸດເຊື່ອມຕໍ່ທາງພາກພື້ນລະຫວ່າງ ສປ ຈີນ ແລະ ອາຊຽນ ປະກອບສ່ວນຢ່າງຕັ້ງໜ້າໃນການສ້າງສາພັດທະນາສັງຄົມ ແລະ ປະເທດຊາດ.

ນອກນັ້ນ, ບໍລິສັດໄດ້ມີນະໂຍບາຍແກ່ການປະຕິບັດງານຂອງພະນັກງານອີກດ້ວຍ ເຊັ່ນ: ນະໂຍບາຍພະນັກງານດີເດັ່ນ ໂດຍໃຫ້ພະນັກງານປະຕິບັດຕາມນະໂຍບາຍ 5ສ ຫຼື ນະໂຍບາຍ 5S ເຊິ່ງມີຄວາມໝາຍດັ່ງນີ້:

- ສ. ສະສາງ ຫຼື SEIRE ມີຄວາມໝາຍວ່າ: ການເຮັດໃຫ້ມີສະເພາະສິ່ງຂອງທີ່ຈຳເປັນໃນປະລິມານທີ່ ຕ້ອງໃຊ້ ແລະ ຕ້ອງມີສະເພາະສິ່ງຂອງທີ່ໃຊ້ໄດ້ເທົ່ານັ້ນ
- ສ. ສະດວກ ຫຼື SEITON ມີຄວາມໝາຍວ່າ: ການຈັດວາງ, ຈັດລ່ຽງ, ບ່ຶງບອກ, ສິ່ງຂອງທີ່ຈຳເປັນເພື່ອໃຫ້ ສາມາດໃຊ້ງານໄດ້ທັນທີ ແລະ ວ່ອງໄວ
- ສ. ສະອາດ ຫຼື SEISO ການຈຳກັດສິ່ງທີ່ບໍ່ສະອາດ ແລະ ການກວດສອບເພື່ອເຮັດໃຫ້ເກີດການສະສາງ ແລະ ສະດວກ
- ສ. ສຸຂະອະນາໄມ ຫຼື SEIKETSU ການເຮັດໃຫ້ສິ່ງແວດລ້ອມຮອບຕົວມີຄວາມເໝາະສົມກັບ ຄົນ ແລະ ພື້ນທີ່ເຮັດກິດຈະກຳນັ້ນ
- ສ. ສ້າງນິໄສ ຫຼື SHISUKE ການເຮັດ 5ສ ປ່ຽນເອງໂດຍບໍ່ຕ້ອງມີການຄວບຄຸມ ເພາະທຸກໆຄົນຮູ້ໜ້າທີ່ຢູ່ແລ້ວ

ບໍລິສັດແມ່ນໄດ້ຮັບໃບຮັບຮອງຄຸນນະພາບການບໍລິຫານ ISO 9001-2008 ຈາກອົງກອນລະດັບນານາຊາດຈາກ UKAS: United Kingdom Accreditation Service

5.1 ຜະລິດຕະພັນ ແລະ ການບໍລິການ

"ສຸວັນນີ" (Souvanny) ເປັນຜູ້ນຳໃນການຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ. ສິນຄ້າທັງໝົດທີ່ບໍລິສັດນຳມາຈຳໜ່າຍແມ່ນປະກອບດ້ວຍ 3 ກຸ່ມ ຜະລິດຕະພັນ ແບ່ງອອກເປັນ 20 ປະເພດຍ່ອຍ:

ກຸ່ມສິນຄ້າ ແລະ ປະເພດສິນຄ້າ	ລາຍການສິນຄ້າ	ຈຳນວນລາຍການທີ່ຈັດຈຳໜ່າຍ
I. ໂຄງສ້າງຫຼັກ		
01-CB	ປູນ, ຊີມັງ ແລະ ບ່ອກ	35
02-ST	ເຫຼັກ ແລະ ທ່ໍສະແຕນເລດ	509
03-RT	ຫຼັງຄາ, ງານຝາ ແລະ ອຸປະກອນຕິດຕັ້ງ	2.836
II. DIY		

04-TP	ຖັງນ້ຳ, ທໍ່ນ້ຳ, ປ໊ຳນ້ຳ ລະບົບປະປາ	3.256
05-GT	ສວນ ແລະ ອຸປະກອນທຳສວນ	4.533
06-HW	ເຄື່ອງມືຊ່ຳງ ແລະ ອຸປະກອນ	8.804
07-FT	ອຸປະກອນຮາດແວ ແລະ ອຸປະກອນເຟີນິເຈີ້	3.938
08-DW	ປະຕູ, ປ່ອງຢ້ຽມ, ໄມ້ ແລະ ອຸປະກອນ	1.312
09-ET	ໄຟຟ້ຳ ແລະ ອຸປະກອນໄຟຟ້ຳ	11.154
10-AP	ເຄື່ອງໃຊ້ໄຟຟ້ຳໃນເຮືອນ	2.375
III.ຕົກແຕ່ງ		
11-EK	ເຄືອງຄົວໄຟຟ້ຳ, ອຸປະກອນເຄື່ອງຄົວໄຟຟ້ຳ	690
12-KC	ຫ້ອງຄົວ ແລະ ອຸປະກອນ	4.067
13-BR	ສຸຂະພັນ ຫ້ອງນ້ຳ ແລະ ອຸປະກອນ	5.924
14-FC	ວັດສະດຸປູພື້ນ ແລະ ຝຳ	11.353
15-FD	ວັດສະດຸຕົກແຕ່ງພື້ນ ແລະ ຝຳ	1.102
16-PA	ສີ	2.569
17-CC	ເຄມີພັນກ່ຳສ້ຳງ, ກັນຮົ່ວ, ກັນຊຶມ, ກາວ	440
18-HM	ອຸປະກອນຕົກແຕ່ງ ແລະ ທຳຄວາມສະອາດລົດ	174
19-EC	ເຄື່ອງມື ອຸປະກອນ ທຳຄວາມສະອາດ	1.675
20-FO	ເຟີນິເຈີ້ ແລະ ເຄືອງໃຊ້ພາຍໃນເຮືອນ	6.989
ລວມລາຍການສິນຄ້າທັ້ງໝົດ		75.224

ໝາຍເຫດ: ແຫ່ງ່ຂໍ້ມູນຈາກບໍລິສັດ

5.2 ໂຄງສ້ຳງລາຍຮັບ

❖ ໂຄງສ້ຳງລາຍຮັບແບ່ງຕາມກຸ່ມລູກຄ້ຳ

ລາຍລະອຽດ	ປີ 2022	
	ມູນຄ່ຳ (ລ້ານກີບ)	%
ລູກຄ້ຳທົ່ວໄປ	517.729	80%
ລູກຄ້ຳຮ້ານຄ້ຳ	97.074	15%
ລູກຄ້ຳໂຄງກຳນ	32.358	5%
ລວມ	647.161	100%

ໝາຍເຫດ: ແຫ່ງ່ຂໍ້ມູນຈາກບໍລິສັດ

❖ ໂຄງສ້ຳງລາຍຮັບແບ່ງຕາມກຸ່ມສິນຄ້ຳ

ລາຍລະອຽດ	ປີ 2022

	ມູນຄ່າ (ລ້ານກີບ)	%
ກຸ່ມໂຄງສ້າງຫຼັກ	194.148	30%
ກຸ່ມຕົກແຕ່ງ	453.013	70%
ລວມລາຍຮັບ-ສຸດທິ	647.161	100%

ໝາຍເຫດ: ແຫຼ່ງຂໍ້ມູນຈາກບໍລິສັດ

5.3 ການຕະຫຼາດ ແລະ ພາວະການແຂ່ງຂັນ

5.3.1 ຍຸດທະສາດດ້ານການຕະຫຼາດ

1) ຍຸດທະສາດດ້ານຜະລິດຕະພັນ

- ສະໜອງສິນຄ້າໃຫ້ແກ່ຜູ້ບໍລິໂພກດ້ວຍສິນຄ້າທີ່ມີຄຸນນະພາບ, ທັນສະໄໝ, ອັບເດດ ແລະ ຄວາມຫຼາກຫຼາຍໃຫ້ແກ່ຜູ້ບໍລິໂພກ
- ສົ່ງມອບສິນຄ້າທີ່ມີຄຸນນະພາບໃຫ້ແກ່ຜູ້ບໍລິໂພກ ມີບໍລິການຫຼັງການຂາຍທີ່ດີ ມີການຮັບປະກັນຄຸນນະພາບຂອງສິນຄ້າ
- ໃຫ້ບໍລິການຂົນສົ່ງສິນຄ້າເຖິງບ້ານຂອງລູກຄ້າຕາມໄລຍະທາງທີ່ເປັນນະໂຍບາຍຂອງບໍລິສັດ
- ມີບໍລິການຕິດຕັ້ງ, ສ້ອມແປງ ແລະ ບໍລິການແບບຄົບວົງຈອນ
- ມີພະນັກງານຂາຍທີ່ໄດ້ຮັບການຝຶກຝົນມີຄວາມພ້ອມທີ່ໃຫ້ຂໍ້ມູນໃຫ້ຄຳແນະນຳລູກຄ້າເວລາເຂົ້າມາເລືອກຊື້ເຄື່ອງ.
- ມີລະບົບການຊຳລະເຄື່ອງສິນຄ້າທີ່ວ່ອງໄວ

2) ຍຸດທະສາດດ້ານລາຄາ

- ສິນຄ້າທີ່ມີຄຸນນະພາບດ້ວຍລາຄາທີ່ຍຸດຕິທຳ ແລະ ສາມາດແຂ່ງຂັນໄດ້
- ລາຄາດຽວສຳລັບເຂດພື້ນທີ່ການຂາຍໃດໜຶ່ງ (Global Market Price)

3) ຍຸດທະສາດດ້ານຊ່ອງທາງການຈັດຈຳໜ່າຍ

- ຂະຫຍາຍສາຂາໄປສູ່ຕົວເມືອງຍຸດທະສາດ ພາຍໃນນະຄອນຫຼວງວຽງຈັນ
- ຂະຫຍາຍສາຂາໄປສູ່ຕົວເມືອງຍຸດທະສາດ ທາງພາກເໜືອ, ກາງ ແລະ ໃຕ້ ໃນອານາຄົດ
- ຊ່ອງທາງຈັດຈຳໜ່າຍສິນຄ້າທາງອິນເຕີເນັດ ຜ່ານທາງເວັບໄຊ http://www.souvanny.la
- ມີການສຳຫຼວດລູກຄ້າໂຄງການທີ່ມີສັກກະຍາພາບເພື່ອນຳສະເໜີການເປັນຜູ້ສະໜອງສິນຄ້າໃຫ້ແກ່ໂຄງການ.

4) ຍຸດທະສາດດ້ານການສົ່ງເສີມການຕະຫຼາດ

- ໂຄສະນາຫຼາກຫຼາຍຊ່ອງທາງ ເປັນຕົ້ນແມ່ນ ທາງໜັງສືພິມ, ວາລະສານ ແລະ ສື່ທາງອອນລາຍຕ່າງໆ (Social Media) ເພື່ອນຳສະເໜີຜະລິດຕະພັນໃໝ່ ແລະ ອັບເດດສິນຄ້າໃນແຕ່ລະໄລຍະ
- ຈັດກິດຈະກຳການສົ່ງເສີມການຂາຍ ຕາມເທດສະການ ແລະ ວັນສຳຄັນຕ່າງໆ ເພື່ອກະຕຸ້ນການຊື້
- ຈັດກິດຈະກຳສົ່ງເສີມການຂາຍລຸດລາຄາພິເສດ ເພື່ອບໍລິການສິນຄ້າໃນສາງ
- ຈັດກິດຈະກຳມອບໂຊກໃຫ້ແກ່ລູກຄ້າທີ່ມາຊື້ສິນຄ້າ

- ມີການປະຊາສຳພັນ ເພື່ອສ້າງພາບລັກທີ່ດີຂອງ ແບຣນ ສຸວັນນີ, ໃຫ້ການສະໜັບສະໜູນກິດຈະກຳຂອງຊຸມຊົນ


5) ຍຸດທະສາດຂອງການບໍລິຫານ

- ຕົກແຕ່ງສູນສິນຄ້າ (Showroom) ໃຫ້ເກີດຄວາມປະທັບໃຈໃນການບໍລິການຕາມເທດສະການຕ່າງໆ
- ສ້າງການບໍລິການໃຫ້ເກີດຄວາມປະທັບໃຈ ເຊັ່ນ: ຈັດໃຫ້ມີພະນັກງານຕ້ອນຮັບ ກ່າວສະບາຍດີ, ແນະນຳໂຊນເຄື່ອງ, ຊ່ວຍລູກຄ້າເລືອກເຄື່ອງ, ຊ່ວຍຖືເຄື່ອງໄປສິ້ງປ່ອງຈ່າຍເງິນ
- ຈັດໂຊນສິນຄ້າຢ່າງເປັນລະບຽບ ງ່າຍຕໍ່ການເລືອກສິນຄ້າ
- ມີການຝຶກອົບຮົມການຂາຍ, ການບໍລິການ ຈາກຊ່ຽວຊານ ເປັນປະຈຳ

5.3.2 ສະພາບອຸດສາຫະກຳ ແລະ ການແຂ່ງຂັນ

ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດ, ເສດຖະກິດຂອງ ສປປ ລາວ ໄດ້ຂະຫຍາຍຕົວພຽງແຕ່ 3,3% ໃນປີ 2020 ເຊິ່ງເປັນອັດຕາການຂະຫຍາຍຕົວທີ່ຕ່ຳສຸດ ນັບຕັ້ງແຕ່ ປີ 1990. ເຖິງຢ່າງໃດກໍ່ຕາມ ອັດຕາການຂະຫຍາຍຕົວຂອງ ຍອດລວມຜະລິດຕະພັນພາຍໃນ (GDP) ໃນປີ 2021 ແມ່ນໄດ້ເພີ່ມຂຶ້ນ 0,2% ຈາກ 3,28% ໃນປີ 2020 ມາເປັນ 3,48% ໃນປີ 2021 ເຊິ່ງຖືເປັນສັນຍານທຳອິດຂອງການຟື້ນຕົວທາງເສດຖະກິດ. ນອກຈາກນີ້, ອັດຕາການສັກວັກຊີນທີ່ເພີ່ມຂຶ້ນ ໄດ້ສ້າງເງື່ອນໄຂອັນດີສຳລັບການມາເປີດດຳເນີນກິດຈະກຳທາງເສດຖະກິດທີ່ສຳຄັນອີກຄັ້ງໜຶ່ງ ແລະ ໄດ້ສົ່ງຜົນໃຫ້ການຜະລິດສິນຄ້າ ແລະ ບໍລິການ ລວມທັງການບໍລິໂພກພາຍໃນມີການຂະຫຍາຍຕົວ ເຊັ່ນດຽວກັນກັບ ການຟື້ນຕົວຂອງປະເທດ ທີ່ມີເສດຖະກິດຂະໜາດໃຫຍ່ເຊັ່ນ ສປ.ຈີນ ເຊິ່ງໄດ້ຊຸກຍູ້ການສົ່ງອອກສິນຄ້າຈາກ ສປປ ລາວ. ມູນຄ່າລວມຍອດຜະລິດຕະພັນພາຍໃນ ເພີ່ມຂຶ້ນຈາກ 172.919 ຕື້ກີບ ໃນປີ 2020, ມາເປັນ 184.982 ຕື້ກີບ (ຕາມລາຄາໃນປີ) ແລະ ລາຍໄດ້ ສະເລ່ຍຕໍ່ຫົວຄົນ ສາມາດບັນລຸໄດ້ 25 ລ້ານກີບ ຫຼື ທຽບເທົ່າ 2.595 ໂດລາສະຫະລັດ ໃນປີ 2021.

ອັດຕາການຂະຫຍາຍຕົວທາງເສດຖະກິດ ແຕ່ປີ 2017-2021




ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

ໝາຍເຫດ: ແຫຼ່ງຂໍ້ມູນຈາກ ທຫລ (ອັດເດດຂໍ້ມູນລ້າສຸດ 31/03/2023)

ໃນພາກສ່ວນອຸດສາຫະກຳເຫັນວ່າ ຂະຫຍາຍຕົວ 6,1% ເຊິ່ງກວມເອົາ 34% ຂອງ GDP ແລະ ຍັງເປັນຂະແໜງການທີ່ປະກອບສ່ວນໃຫ້ແກ່ການຂະຫຍາຍຕົວຂອງເສດຖະກິດຫຼາຍທີ່ສຸດ. ໃນນັ້ນ, ທ່າແຮງທີ່ໄດ້ປະກອບສ່ວນໃນການຂະຫຍາຍຕົວຂອງຂະແໜງອຸດສາຫະກຳໄດ້ປ່ຽນຈາກຂະແໜງບໍ່ແຮ່

ແລະ ຂຸດຄົ້ນມາເປັນ ຂະແໜງພະລັງງານໄຟຟ້າ ແລະ ຂະແໜງກໍ່ສ້າງ ເຊິ່ງຂະແໜງດັ່ງກ່າວໄດ້ຮັບຜົນກະທົບຕໍ່າຈາກການແຜ່ລະບາດຂອງພະຍາດ ລວມທັງຄວາມຕໍ່ເນື່ອງຂອງໂຄງການຂະໜາດໃຫຍ່ເຊັ່ນ ໂຄງການທາງດ່ວນ ແລະ ທາງລົດໄຟ ລາວ-ຈີນ ໄດ້ຂະຫຍາຍຕົວ 8,2%; 8,9%; ແລະ 4,7% ຕາມລໍາດັບ. ນອກຈາກນີ້, ຂະແໜງອຸດສາຫະກໍາປຸງແຕ່ງອື່ນໆ ຂະຫຍາຍຕົວ 4,7% ແລະ ຂະແໜງການບໍ່ແຮ່ ແລະ ການຂຸດຄົ້ນ ຂະຫຍາຍຕົວ 1,6%

ການປະກອບສ່ວນການຂະຫຍາຍຕົວຂອງຂະແໜງອຸດສາຫະກໍາ ປີ 2017-2021



ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

ຕາຕະລາງສະແດງມູນຄ່າການນໍາເຂົ້າ ທຸກໝວດສິນຄ້າພາຍໃນປີ ຂອງ ສປປ ລາວ (ຫົວໜ່ວຍ ລ້ານໂດລາ ສະຫະລັດ)

ລາຍການ	2017	2018	2019	2020(R)	2021(P)
ການນໍາເຂົ້າ	**5.667,32**	**6.314,64**	**6.271,92**	**5.370,40**	**6.275,03**
(ອັດຕາການປ່ຽນແປງ %)	5,49%	11,42%	-0,68%	-14,37%	16,84%
1.ນ້ຳມັນດິບ, ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອື່ນໆ	808,73	1.001,36	827,76	632,01	800,54
2.ເຄື່ອງໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ	589,93	653,07	559,74	575,53	579,23
3.ເຫຼັກເສັ້ນ, ເຫຼັກແຜ່ນ ແລະ ໂລຫະອື່ນໆ	529,27	671,39	791,82	526,71	409,69
4.ຢາພະຫະນະ ແລະ ອຸປະກອນກ່ຽວຂ້ອງ	660,68	695,47	590,03	463,14	708,10
5.ເຄື່ອງຈັກ ແລະ ອຸປະກອນ	810,26	1.079,86	848,67	615,06	513,05
6.ອາຫານ, ເຄື່ອງດື່ມ,ຢາ ແລະ ເຄື່ອງໃຊ້ສອຍຫົວໄປ	791,50	772,25	869,78	778,64	895,46
7.ສັດທີ່ມີຊີວິດ	125,04	170,07	271,29	325,27	259,57
8.ແຜ່ນແພ ແລະ ເຄື່ອງທີ່ເຮັດດ້ວຍຜ້າຕ່ຳ	124,68	151,04	204,87	183,58	292,55
9.ຜະລິດຕະພັນພລາຕິກ ແລະ ຢາງ	217,48	215,09	248,51	266,47	34,84
10.ຊີມັງ, ປຸນຂາວ ແລະ ວັດຖຸດິບທໍາມະຊາດ	87,33	131,68	79,16	46,00	35,93
11.ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ	86,41	132,18	219,02	221,24	438,93
12.ໄຟຟ້າ	29,27	15,39	78,96	91,43	78,53
13.ຄໍາ, ທອງແດງ ແລະ ໂລຫະມີຄ່າອື່ນໆ	51,85	79,22	25,46	14,48	292,63
14.ຜະລິດຕະພັນອື່ນໆ	754,88	546,58	656,86	630,84	740,79


ໝາຍເຫດ: P ໝາຍເຖິງຕົວເລກເບື້ອງຕົ້ນ
R ໝາຍເຖິງຕົວເລກປັບປຸງໃໝ່

ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ.

ຕົວເລກການນຳເຂົ້າໃນປີ 2000 ຫາ 2021 ເຫັນວ່າມີການເພີ່ມໃນອັດຕາ 16,84% ຫຼື ມີມູນຄ່າເທົ່າກັບ 5.370 ລ້ານໂດລາ, 6.275 ລ້ານໂດລາ ຕາມລຳດັບ. ໃນນັ້ນເຫັນວ່າ ຕົວເລກການນຳເຂົ້າໃນປະເພດ: ເຄື່ອງໃຊ້ໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ ມີມູນຄ່າເທົ່າກັບ 575 ລ້ານໂດລາ, 579 ລ້ານໂດລາ ຕາມລຳດັບ ເຫັນວ່າເພີ່ມຂຶ້ນພຽງເລັກນ້ອຍ; ການນຳເຂົ້ຍານພະຫະນະ ແລະ ອຸປະກອນທີ່ກ່ຽວຂ້ອງ ມີການມູນຄ່າເທົ່າກັບ 463 ລ້ານໂດລາ, 708 ລ້ານ ໂດລາ ຕາມລຳດັບ ຖືວ່າເພີ່ມຂຶ້ນຫຼາຍ ຫຼື ປະມານ 52%; ການນຳເຂົ້າປະເພດເຫຼັກເສັ້ນ, ເຫຼັກແຜ່ນ ແລະ ໂລຫະອື່ນ ມີມູນຄ່າເທົ່າກັບ 526 ລ້ານໂດລາ, 409 ລ້ານໂດລາ ຕາມລຳດັບ ເຫັນວ່າຫຼຸດລົງ ຫຼື ປະມານ 22%; ປະເພດເຄື່ອງຈັກ ແລະ ອຸປະກອນ ມີມູນຄ່ານ້ຳເຂົ້າຫຼຸດລົງເທົ່າກັບ 615 ລ້ານໂດລາ, 513 ລ້ານໂດລາ ຕາມລຳດັບ ຫຼື ປະມານ 16%. ຈາກຂໍ້ມູນການນຳເຂົ້າຂ້າງເທິ່ງທີ່ກ່າວມານັ້ນ ຕໍ່ກັບການແຜ່ລະບາດຂອງພະຍາດ ໂຄວິດ 19 ໃນທ້າຍປີ 2019 ທີ່ຜ່ານມາ ຂະແໜງທຸລະກິດທີ່ມີການນຳເຂົ້າປະເພດສິນຄ້າດັ່ງກ່າວ ທີ່ກ່າວມາຂ້າງຕົ້ນ ນັ້ນ ກໍ່ຍັງບໍ່ທັນມີສັນຍານວ່າຈະມີການນຳເຂົ້າທີ່ຫຼຸດລົງຫຼາຍແບບກະທັນຫັນ. ສະນັ້ນ, ບັນດາຫ້ອໜ່ວຍວິສາຫະກິດຂະໜາດໃຫຍ່, ຂະໜາດກາງ ແລະ ຂະໜາດນ້ອຍ ທີ່ກ່ຽວຂ້ອງກັບໝວດສິນຄ້າເຫຼົ່ານີ້ ຄາດຄະເນວ່າຍັງມີແນວໂນ້ມທີ່ສາມາດດຳເນີນທຸລະກິດໄປໄດ້ ແລະ ອາດຂະຫຍາຍຕົວໄດ້ ທາມກາງ ຜົນກະທົບຂອງພະຍາດໂຄວິດ 19.

5.4 ຂະບວນການຈັດຊື້ສິນຄ້າ ຈາກຜູ້ສະໜອງມາຍັງສ້າງສິນຄ້າ ແລະ ການຈຳໜ່າຍໄປໃຫ້ລູກຄ້າ

ແຜນພາບຂະບວນການຈັດຊື້ສິນຄ້າ



1) ຂະບວນການຈັດສົ່ງສິນຄ້າຈາກຜູ້ສະໜອງ

ສປປ ລາວ ເປັນປະເທດທີ່ນຳເຂົ້າສິນຄ້າບໍ່ວ່າຈະເປັນເຄື່ອງອຸປະໂພກ ແລະ ບໍລິໂພກຫຼາຍຢ່າງຈາກຕ່າງປະເທດ ແຕ່ເນື່ອງຈາກເປັນປະເທດທີ່ຕັ້ງຢູ່ພາກພື້ນອາຊີຕາເວັນອອກສ່ຽງໃຕ້ເຊິ່ງເປັນປະເທດດຽວທີ່ບໍ່ມີ

ຊາຍແດນຕິດກັບທະເລ ແລະ ເປັນປະເທດໜຶ່ງທີ່ມີຄວາມຈຳເປັນຕ້ອງນຳສິນຄ້າເຂົ້າຢ່າງຫຼວງຫຼາຍມາໃນປະເທດ. ສະນັ້ນການຄົມມະນາຄົມຂົນສົ່ງທາງບົກຈຶ່ງເປັນສິ່ງສຳຄັນ ໂດຍຕ້ອງອາໃສການນຳເຂົ້າຈາກຜູ້ສະໜອງໂດຍຜ່ານການຂົນສົ່ງທາງບົກໃຊ້ລົດຂົນສົ່ງເປັນພາຫະນະ ເຊິ່ງສ່ວນໃຫຍ່ໃນການຂົນສົ່ງທາງບົກແມ່ນຈະນຳເຂົ້າຜ່ານທາງປະເທດທີ່ມີຊາຍແດນຕິດກັບສປປ ລາວ ເຊັ່ນ: ສສ ຫວຽດນາມ, ສປ ຈີນ ແລະ ປະເທດໄທ. ສຳລັບບໍລິສັດແມ່ນມີຜູ້ສະໜອງຫຼັກທີ່ມີໂຮງງານຕັ້ງຢູ່ປະເທດໄທເປັນສ່ວນຫຼາຍ ໃນການບໍລິຫານຈັດການເລື່ອງຂົນສົ່ງແມ່ນຈະເປັນຜູ້ສະໜອງທີ່ເລືອກເຟັ້ນເອົາບໍລິສັດຂົນສົ່ງທີ່ໄດ້ຄຸນນະພາບ, ມີຊື່ສຽງ, ໄດ້ມາດຕະຖານທີ່ຍອມຮັບໄດ້ໃນເລື່ອງການບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ເຊິ່ງຕ້ອງຂົນສົ່ງສິນຄ້າຈາກໂຮງງານທີ່ຜະລິດຢູ່ຕ່າງປະເທດມາຍັງ ບໍລິສັດ ໃນລະຫວ່າງຂະບວນການນຳສິນຄ້າເຄື່ອນຍ້າຍຈາກໂຮງງານມາຍັງບໍລິສັດທາງໜ່ວຍງານທີ່ກ່ຽວຂ້ອງໂດຍສະເພາະແມ່ນຝ່າຍຈັດຊື້ແມ່ນໄດ້ຕິດຕາມປະສານງານກັບໜ່ວຍງານທີ່ກ່ຽວຂ້ອງຈາກທາງຝ່າຍຜູ້ສະໜອງ ແລະ ບໍລິສັດຮັບຂົນສົ່ງທີ່ຜູ້ສະໜອງໃຊ້ ຈົນກວ່າບໍລິສັດຂົນສົ່ງຈະນຳສິນຄ້າຈະມາເຖິງໜ້າບໍລິສັດ ໂດຍໃຊ້ເວລາສະເລ່ຍ 1 ວັນ ແລະ ບໍລິຫານເວລານັດໝາຍໃຫ້ມາເຖິງໜ້າບໍລິສັດໃນໄລຍະເວລາ 19:00 ຫາ 20:00 ໂມງ ເຊິ່ງເປັນເວລາທີ່ທາງບໍລິສັດປິດໃຫ້ບໍລິການແກ່ລູກຄ້າແລ້ວ ທັງນີ້ກໍເພື່ອບໍ່ໃຫ້ເປັນການລົບກວນລູກຄ້າທີ່ເຂົ້າມາເລືອກຊື້ສິນຄ້າ. ໃນການນຳສິນຄ້າລົງໜ້າບໍລິສັດແມ່ນໃຊ້ເວລາພຽງ 5 ຫາ 10 ນາທີເທົ່ານັ້ນ ເພາະສິນຄ້າສ່ວນໃຫຍ່ແມ່ນໃຊ້ລົດຍົກສິນຄ້າ (forklift) ໃນການຍົກຂົນສິນຄ້າລົງ ໄວ້ສະຖານທີ່ທີ່ຈັດກຽມໄວ້. ຫຼັງຈາກນັ້ນ ຝ່າຍກວດສອບສິນຄ້າກໍຈະກວດນັບສິນຄ້າໃຫ້ຄົບຖ້ວນຕາມຈຳນວນ, ປະລິມານ, ຄຸນນະພາບ ແລະ ຢູ່ໃນສະພາບປົກກະຕິທີ່ສາມາດນຳໄປຈຳໜ່າຍໄດ້. ຈາກນັ້ນເຊັນຮັບສິນຄ້າເພື່ອຈະນຳສິນຄ້າເຂົ້າເກັບໄວ້ໃນສາງ ແລະ ບັນທຶກລົງລາຍການສິນຄ້າໃນສາງຕາມໝວດໝູ່ລະຫັດຂອງສິນຄ້າຢ່າງເປັນລະບົບ ແລະ ງ່າຍໃນການກວດນັບ ພ້ອມລາຍງານໄປຍັງ ຝ່າຍຈັດຊື້ສິນຄ້າວ່າໄດ້ຮັບສິນຄ້າຄົບຖ້ວນຕາມໃບສັ່ງຊື້. ຖ້າຫາກມີລະນີໄດ້ຮັບສິນຄ້າບໍ່ຄົບຕາມຈຳນວນ ຫຼື ສິນຄ້າທີ່ຜູ້ສະໜອງນຳມາຫາກແຕກຫັກ ຫຼື ເສຍຫາຍ, ບໍ່ຢູ່ໃນສະພາບປົກກະຕິ, ບໍ່ສາມາດນຳໄປຈຳໜ່າຍໄດ້ ທາງໜ່ວຍງານຝ່າຍຈັດຊື້ກໍຈະໄດ້ປະສານງານໄປຍັງຜູ້ສະໜອງເພື່ອທຳການແກ້ໄຂເຊິ່ງມີ 2 ວິທີຄື: ຂໍຮຽກເກັບສິນຄ້າຄືນ ຫຼື ເຮັດແຈ້ງການໄປຍັງຝ່າຍການເງິນໃຫ້ທຳການເບີກຈ່າຍເງິນຕາມຈຳນວນສິນຄ້າທີ່ໄດ້ຮັບຕົວຈິງ ທັງນີ້ກໍເພື່ອເປັນການຮັກສາຕົ້ນທຶນ ແລະ ບໍລິຫານຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ ທີ່ເປັນສິ່ງສຳຄັນຫຼາຍໃນການດຳເນີນທຸລະກິດຂອງບໍລິສັດ.

2) ຂະບວນການຈັດຊື້ສິນຄ້າຈາກຜູ້ສະໜອງ

ໃນການດຳເນີນງານທຸລະກິດຂອງບໍລິສັດ ກິດຈະກຳຫຼັກກໍຄືການຊື້ສິນຄ້າມາ ແລະ ກໍຂາຍສິນຄ້າໄປ ເຊິ່ງບໍລິສັດບໍ່ໄດ້ມີໂຮງງານເພື່ອຜະລິດສິນຄ້າເອງ. ສິນຄ້າທີ່ຂາຍຢູ່ທັງໝົດແມ່ນນຳເຂົ້າຈາກຜູ້ສະໜອງ ເຊິ່ງຜູ້ສະໜອງແມ່ນມີຫຼາຍບໍລິສັດເຮັດໜ້າທີ່ເປັນຜູ້ທີ່ສະໜອງສິນຄ້າໃຫ້ແກ່ບໍລິສັດເພື່ອນຳມາຂາຍໃຫ້ແກ່ລູກຄ້າລາຍຍ່ອຍອີກເທື່ອໜຶ່ງ ແລະ ຜູ້ສະໜອງທີ່ກ່າວມາແມ່ນມີໂຮງງານຕັ້ງຢູ່ຕ່າງປະເທດທັງໝົດ ແລະ ສ່ວນໃຫຍ່ແມ່ນຢູ່ປະເທດໄທ ຂໍ້ມູນສິນຄ້າທີ່ຈະນຳມາຂາຍສ່ວນໜຶ່ງແມ່ນມາຈາກການນຳສະເໜີຈາກຜູ້ສະໜອງທັງຜູ້ສະໜອງລາຍເກົ່າ ແລະ ຜູ້ສະໜອງລາຍໃໝ່. ອີກສ່ວນໜຶ່ງກໍ່ມາຈາກຄວາມຕ້ອງການຂອງລູກຄ້າທີ່ມາສະເໜີ ຫຼື ສອບຖາມຈາກບໍລິສັດ ແລະທາງໜ່ວຍງານຝ່າຍຂາຍບໍ່ວ່າຈະເປັນຝ່າຍຂາຍໂຄງການ, ຂາຍສົ່ງແກ່ຮ້ານຄ້າຍ່ອຍ ຫຼື ຝ່າຍຂາຍໜ້າຮ້ານ. ເມື່ອໄດ້ຮັບຄຳສະເໜີຄວາມຕ້ອງການສິນຄ້າປະເພດນັ້ນໆຂອງລູກຄ້າ ແຕ່ວ່າບໍລິສັດຍັງບໍ່ມີສິນຄ້າທີ່ຈະສະໜອງໃຫ້, ຝ່າຍຂາຍກໍ່ຕ້ອງນຳສະເໜີແກ່ໜ່ວຍງານຝ່າຍຈັດຊື້ ເພື່ອໃຫ້ຊອກຫາສິນຄ້າດັ່ງກ່າວມາສະໜອງແກ່ລູກຄ້າ ແຕ່ສິນຄ້າທີ່ຈະນຳມາຂາຍນັ້ນກໍຕ້ອງໄດ້ຮັບການພິຈາລະນາຈາກໜ່ວຍງານຝ່າຍວິໄຈ ແລະ ຕ້ອງໄດ້ຮັບອະນຸມັດຈາກຜູ້ບໍລິຫານຕາມຂັ້ນຕອນເສຍກ່ອນຈຶ່ງຈະສາມາດສັ່ງຊື້ຈາກຜູ້ສະໜອງເພື່ອມາ

ທົດລອງຂາຍໃຫ້ຜ່ານຕາມມາດຕະຖານທີ່ບໍລິສັດໄດ້ຕັ້ງໄວ້ ແລ້ວຈຶ່ງສັ່ງຊື້ເປັນປົກກະຕິ ເພາະວ່າບໍລິສັດແມ່ນໄດ້ແບ່ງສະຖານະສິນຄ້າອອກເປັນ 3 ສະຖານະຄື:

1). ສິນຄ້າໃໝ່ : ແມ່ນສິນຄ້າທີ່ນຳເຂົ້າມາຂາຍໃໝ່ ເຊິ່ງໄດ້ມາຈາກ 3 ຊ່ອງທາງຄື: ຜູ້ສະໜອງເກົ່າ, ຜູ້ສະໜອງ ໃໝ່ ແລະ ສິນຄ້າທີ່ລູກຄ້າຕ້ອງການ ເຊິ່ງຂະບວນການວິໄຈແມ່ນຈະທົດລອງຂາຍ 3 ເດືອນ ຖ້າຜ່ານຕາມເງື່ອນໄຂທີ່ໜ່ວຍງານວິໄຈກຳນົດກໍຈະເປັນໜ້າທີ່ຂອງໜ່ວຍງານການຕະຫຼາດສັ່ງຊື້ເຂົ້າມາຈຳໜ່າຍເປັນສິນຄ້າປົກກະຕິ.

- ສຳລັບຜູ້ສະໜອງໃໝ່ ແມ່ນໄດ້ມາຈາກ ການໄປຮ່ວມງານສະແດງສິນຄ້າຕ່າງໆ, ການແນະນຳຈາກ ຜູ້ ສະ ໜອງເກົ່າ, ການຄົ້ນຫາທາງອິນເຕີເນັດຕາມສິນຄ້າທີ່ລູກຄ້າຕ້ອງການ.

2) ສິນຄ້າປົກກະຕິ: ແມ່ນສິນຄ້າທີ່ຜ່ານການຄົ້ນຄວ້າຈາກໜ່ວຍງານວິໄຈຕະຫຼາດເປັນທີ່ຮຽບຮ້ອຍແລ້ວ ແລະ ມີຍອດຂາຍເປັນປົກກະຕິ ເຊິ່ງບໍ່ຕ່ຳກວ່າປະລິມານຂັ້ນຕ່ຳທີ່ກຳນົດໄວ້ ແລະ ກໍຈະມີການສັ່ງຊື້ເຂົ້າມາຈຳໜ່າຍເປັນປົກກະຕິຕາມສູດຄິດໄລ່ຂອງໜ່ວຍງານຝ່າຍຈັດຊື້ທີ່ກຳນົດໄວ້.

3) ສິນຄ້າຕາຍ: ແມ່ນຈຳພວກສິນຄ້າຫຼ້າທັນສະໄໝ, ສິນຄ້າຈຳພວກທີ່ເຄື່ອນໄຫວຊ້າ, ເປັນສິນຄ້າທີ່ບໍ່ມີຄວາມຕ້ອງການຂອງຕະຫຼາດແລ້ວ, ບໍ່ມີການເຄື່ອນໄຫວເກີນ 6 ເດືອນເປັນຕົ້ນ ເຊິ່ງທາງໜ່ວຍງານຕະຫຼາດກໍຈະພິຈາລະນາຈັດການສົ່ງເສີມການຂາຍພິເສດ ເພື່ອກະຕຸ້ນຍອດຂາຍຂອງສິນຄ້າດັ່ງກ່າວ. ພາຍຫຼັງການຈຳໜ່າຍສິນຄ້າດັ່ງກ່າວ ກໍຈະພິຈາລະນາຄວາມເໝາະສົມໃນການສັ່ງຊື້ເພື່ອນຳມາຈຳໜ່າຍພາຍໃນອະນາຄົດ ຫຼື ບໍ່.

ບໍລິສັດຈະມີລະບົບການຈັດຊື້ສິນຄ້າຈາກຜູ້ສະໜອງ ເຊິ່ງເປັນໜ້າທີ່ຮັບຜິດຊອບຫຼັກຂອງໜ່ວຍງານຝ່າຍຈັດຊື້ຂອງບໍລິສັດ ທີ່ຕ້ອງໄດ້ປະສານງານກັບໜ່ວຍງານທີ່ກ່ຽວຂ້ອງອື່ນຢ່າງເປັນລະບົບ ແລະ ຕາມຂັ້ນຕອນຂອງຂະບວນການຈັດຊື້ສິນຄ້າຈາກຜູ້ສະໜອງທີ່ຢູ່ຕ່າງປະເທດ ເຊິ່ງກໍເປັນຂະບວນການໜຶ່ງທີ່ສຳຄັນຂອງການດຳເນີນທຸລະກິດຂອງບໍລິສັດ ເຊິ່ງຕ້ອງມີການວາງແຜນແລະບໍລິຫານຈັດການໃຫ້ສອດຄ່ອງກັບນະໂຍບາຍແລະການຄາດການຂອງສິນຄ້າທີ່ຈະຈັດຈຳໜ່າຍໃຫ້ແກ່ລູກຄ້າ ເຊິ່ງມີຂະບວນການດັ່ງນີ້:

- ບໍລິສັດໄດ້ໃຊ້ລະບົບໂປຣແກຣມຄອມພິວເຕີ ທີ່ຝ່າຍຂາຍໃຊ້ຄຳນວນປະລິມານຂອງສິນຄ້າ ໃນການຕັດ ແລະ ເພີ່ມຈຳນວນສິນຄ້າ ເວລາມີການຊື້-ຂາຍຂອງສິນຄ້າທຸກລາຍການ ທຸກປະເພດຢ່າງລະອຽດ ແລະ ຖືກຕ້ອງ. ລະບົບດັ່ງກ່າວຍັງແຈ້ງເຕືອນລາຍການສິນຄ້າທີ່ຢູ່ໃນສະຖານະຕ້ອງສັ່ງຊື້ເພີ່ມ ຝ່າຍຂາຍກໍຈະອອກໃບສະເໜີໃຫ້ຝ່າຍຈັດຊື້ໄດ້ສັ່ງຊື້ສິນຄ້າຈາກຜູ້ສະໜອງຕ່າງປະເທດ ເພື່ອຮອງຮັບຄວາມຕ້ອງການຂອງລູກຄ້າໄດ້ທັນຕາມເວລາເມື່ອລູກຄ້າຕ້ອງການຊື້ສິນຄ້າດັ່ງກ່າວ.
- ຝ່າຍຈັດຊື້ແມ່ນໄດ້ຮວບຮວມສິນຄ້າທີ່ຕ້ອງການຊື້ ແລະ ກວດສອບເອກະສານຢ່າງລະອຽດທີ່ຝ່າຍຂາຍສະເໜີຊື້ສິນຄ້າເພີ່ມ ຖ້າຫາກທຸກຢ່າງບໍ່ມີບັນຫາປະການໃດ ທາງຝ່າຍຈັດຊື້ກໍ່ຈະດຳເນີນການຕໍ່ໂດຍສົ່ງເອກະສານສັ່ງຊື້ໄປຍັງຜູ້ສະໜອງສິນຄ້າດັ່ງກ່າວ. ໃນການຮວບຮ່ວມຈຳນວນສິນຄ້າທີ່ຈະສັ່ງຊື້ ແມ່ນພະຍາຍາມໃຫ້ໄດ້ເຕັມຕູ້ຄອນເທນເນີ້ (Container) ແລະ ພໍດີກັບປະລິມານທີ່ລິດຂົນສົ່ງສິນຄ້າຮັບໄດ້ ເປັນການບໍລິຫານຈັດການເລື່ອງຕົ້ນທຶນການຂົນສົ່ງ ໃຫ້ໄດ້ຮັບຜົນປະໂຫຍດທີ່ສຸດຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໃນການນຳໃຊ້ບໍລິສັດຂົນສົ່ງສິນຄ້າລະຫວ່າງປະເທດ.
- ຫຼັງຈາກສົ່ງເອກະສານສັ່ງຊື້ຮຽບຮ້ອຍແລ້ວ ແມ່ນລໍຖ້າຄຳຢືນຢັນຈາກຜູ້ສະໜອງທີ່ຈະສົ່ງເອກະສານຢືນຢັນລາຍການສິນຄ້າພ້ອມດ້ວຍລາຄາສິນຄ້າທີ່ທາງບໍລິສັດຕ້ອງການ ໂດຍຝ່າຍຈັດຊື້ຈະນຳມາໃຫ້ຜູ້ບໍລິຫານ ແລະ ໜ່ວຍງານທີ່ກ່ຽວຂ້ອງພິຈາລະນາຕາມຂັ້ນຕອນ ຖ້າທຸກຝ່າຍຕົກລົງເຫັນດີອະນຸມັດໃຫ້

ຊື້ສິນຄ້າໄດ້. ຝ່າຍຈັດຊື້ກໍຈະດຳເນີນການນັດໝາຍອັນສົ່ງສິນຄ້າກັບຜູ້ສະໜອງເພື່ອຂົນສົ່ງສິນຄ້າຂ້າມ ມາ ແລະ ຂັ້ນຕອນຕໍ່ໄປກໍຢູ່ໃນຂະບວນການຈັດສົ່ງສິນຄ້າຂອງຜູ້ສະໜອງ ແລະ ບໍລິສັດຂົນສົ່ງ .

3) ຂະບວນການຈັດສົ່ງສິນຄ້າໃຫ້ແກ່ລູກຄ້າ

ຂະບວນການຈັດສົ່ງສິນຄ້າໃຫ້ລູກຄ້າກໍເປັນການບໍລິການທີ່ສຳຄັນຫຼາຍຂອງບໍລິສັດ ແລະ ເປັນປັດໄຈຫຼັກຂອງບໍລິສັດທີ່ເອົາໃຈໃສ່ ເພາະມັນເປັນການຮັກສາພາບລັກຂອງອົງກອນ ດັ່ງຄຳຂວັນ ຂອງບໍລິສັດທີ່ວ່າ : ຍົກລະດັບສິນຄ້າ ການບໍລິການໃຫ້ມີຄຸນນະພາບ ສິ່ງມອບຖືກຕ້ອງຄົບຖ້ວນທັນ ເວລາ ສ້າງຄວາມເພິ່ງພໍໃຈໃຫ້ລູກຄ້າ ພັດທະນາຢ່າງຕໍ່ເນື່ອງ ແລະ ວຽກງານຂະບວນການຈັດສົ່ງສິນຄ້າ ໃຫ້ແກ່ລູກຄ້າ ຈະເປັນໜ່ວຍງານຝ່າຍຂາຍທີ່ເປັນຜູ້ປະສານງານຫຼັກເຊິ່ງໄດ້ແບ່ງໜ່ວຍງານຝ່າຍຂາຍ ອອກເປັນ 2 ໜ່ວຍງານຄື: ໜ່ວຍງານຝ່າຍຂາຍໂຄງການ ແລະ ໜ່ວຍງານຝ່າຍຂາຍໜ້າຮ້ານ, ລູກຄ້າ ຂອງບໍລິສັດສາມາດແບ່ງອອກເປັນ 3 ປະເພດ ແລະ ແຕ່ລະປະເພດກໍຈະມີຂັ້ນຕອນການສົ່ງມອບ ສິນຄ້າທີ່ຕ່າງກັນດັ່ງນີ້:

- **ກຸ່ມລູກຄ້າໂຄງການ:** ລູກຄ້າກຸ່ມໂຄງການນີ້ການສັ່ງຊື້ສິນຄ້າແມ່ນຈະເປັນການເຊັນສັນຍາຂອງຜູ້ ຮັບຜິດຊອບໂຄງການ ແລະ ບໍລິສັດ ໂດຍໜ່ວຍງານຝ່າຍຂາຍໂຄງການເປັນເປັນຜູ້ປະສານງານ ໂດຍເລີ່ມຈາກພະນັກງານຝ່າຍຂາຍໂຄງການລົງໄປສຳຫລວດ ແລະ ສະເໜີສິນຄ້າໃຫ້ແກ່ ໂຄງການທີ່ເຫັນວ່າເປັນກຸ່ມລູກຄ້າເປົ້າ ໝາຍ ມີທັງໂຄງການລັດ ແລະ ໂຄງການເອກະຊົນ. ຫຼັງ ຈາກນັ້ນກໍຈະມີການເຈລະຈາຕໍ່ລອງກັນເລື່ອງລາຄາ ໂດຍຝ່າຍຂາຍໂຄງການຈະສະເໜີຜະລິດຕະ ພັນຂອງບໍລິສັດໃຫ້ແກ່ໂຄງການ ຖ້າຫາກໂຄງການດັ່ງກ່າວມີຄວາມສົນໃຈ ກໍຈະມີການເຈລະຈາຕໍ່ ລອງລາຄາເກີດຂຶ້ນ. ຫຼັງຈາກນັ້ນພະນັກງານຝ່າຍຂາຍໂຄງການທີ່ຮັບຜິດຊອບໂຄງການດັ່ງກ່າວກໍ ຈະນຳຂໍ້ສະເໜີລາຍງານໃຫ້ກັບຜູ້ບໍລິຫານເພື່ອພິຈາລະນາ ແລະ ຖ້າຫາກທຸກຢ່າງຕົກລົງກັນໄດ້ທັງ ສອງຝ່າຍ ພະນັກງານຜູ້ຮັບຜິດຊອບກໍຈະດຳເນີນເລື່ອງເບີກສິນຄ້າອອກໃຫ້ກັບລູກຄ້າ ໂດຍຈະ ຂຽນໜັ້ງສືສະເໜີເບີກສິນຄ້າຕາມທີ່ລູກຄ້າຕ້ອງການ. ຫຼັງຈາກນັ້ນໜ່ວຍງານຝ່າຍສາງກໍຈະກວດ ສອບຄວາມຖືກຕ້ອງຂອງປະເພດ ແລະ ຈຳນວນສິນຄ້າທີ່ຝ່າຍຂາຍສະເໜີມາ ເມື່ອເຫັນວ່າທຸກ ຢ່າງຖືກຕ້ອງແລ້ວ ກໍຈະເຊັນອະນຸຍາດໃຫ້ເບີກສິນຄ້າ ແລະ ດຳເນີນການຈັດສົ່ງສິນຄ້າໄປຍັງລູກ ຄ້າໂຄງການນັ້ນ ແລະ ນຳສົ່ງໃບສົ່ງສິນຄ້າໃຫ້ກັບໜ່ວຍງານຝ່າຍການເງິນ ເພື່ອຮຽກເກັບເງິນຕາມ ວັນເວລາທີ່ຕົກລົງກັບໂຄງການນັ້ນໄວ້ (ປົກກະຕິຈະໃຫ້ສິນເຊື່ອແກ່ລູກຄ້າໂຄງການ 30 ວັນ).
- **ກຸ່ມລູກຄ້າທີ່ເປັນຮ້ານຄ້າຍ່ອຍຢູ່ຕ່າງແຂວງ:** ກຸ່ມລູກຄ້ານີ້ຈະແມ່ນຝ່າຍຂາຍທີ່ໄດ້ຮັບການສະເໜີ ສັ່ງຊື້ສິນຄ້າ ຈະສັ່ງເປັນຈຳນວນຫຼາຍ ແລະ ສ່ວນໃຫຍ່ຈະເປັນກຸ່ມລູກຄ້າທີ່ເປັນຮ້ານຄ້າສັ່ງປະຈຳຢູ່ ແລ້ວ ເມື່ອໄດ້ຮັບຈຳນວນສິນຄ້າທີ່ສັ່ງຊື້ ທາງຝ່າຍຂາຍທີ່ຮັບຜິດຊອບລູກຄ້າດັ່ງກ່າວ ກໍຈະຂຽນໃບ ສະເໜີໃຫ້ຝ່າຍຈັດຊື້ໄດ້ສັ່ງສິນຄ້າຈາກຜູ້ສະໜອງທີ່ຢູ່ຕ່າງປະເທດ ເພື່ອນຳສິ່ງສິນຄ້າທີ່ລູກຄ້າ ຕ້ອງການ ໂດຍນຳສົ່ງທາງກົງບໍ່ຜ່ານສາງຂອງບໍລິສັດ ແຕ່ຈະຖ້າປະສານງານຈົນກວ່າລູກຄ້າຈະໄດ້ ຮັບສິນຄ້າຄົບຖ້ວນຕາມຈຳນວນ ແລະ ກໍຈະລາຍງານໄປຍັງຝ່າຍການເງິນເພື່ອຮຽກເກັບເງິນຕາມ ລາຄາ ແລະ ຈຳນວນທີ່ໄດ້ຕົກລົງກັນໄວ້ ພ້ອມທັງຊຳລະເງິນໃຫ້ແກ່ຜູ້ສະໜອງເຊັ່ນກັນ.
- **ກຸ່ມລູກຄ້າທົ່ວໄປ:** ກຸ່ມລູກຄ້ານີ້ຈະແມ່ນກຸ່ມລູກຄ້າທົ່ວໄປເຊິ່ງເປັນຈຳນວນຫຼາຍມີທັງລູກຄ້າເກົ່າ ລູກຄ້າ ໃໝ່ ແລະ ກໍຈະມີຈຳນວນເພີ່ມຂຶ້ນຫຼາຍເລື້ອຍໆ ເຊິ່ງກຸ່ມນີ້ເປັນກຸ່ມລູກຄ້າຫຼັກກໍວ່າໄດ້ ໂດຍປົກກະຕິກຸ່ມນີ້ຈະເຂົ້າມາສອບຖາມເລືອກຊື້ສິນຄ້າໂດຍກົງຢູ່ແຕ່ລະສາຂາ ຈະມີພະນັກງານ

ຂອງບໍລິສັດຫຼາຍຄົນທີ່ຄອຍໃຫ້ບໍລິການຄຳແນະນຳກ່ຽວກັບສິນຄ້າທຸກປະເພດທີ່ລູກຄ້າສົນໃຈ. ເມື່ອລູກຄ້າຕົກລົງເລືອກສິນຄ້າໄດ້ແລ້ວພະນັກງານຂາຍກໍຈະຂຽນໜັງສືເພື່ອສະເໜີເບີກຈ່າຍສິນຄ້າອອກໃຫ້ແກ່ລູກຄ້າ ໂດຍຈະໃຫ້ລູກຄ້າເບີກຈ່າຍເງິນກັບໜ່ວຍງານຮັບເງິນທີ່ໜ້າຮ້ານໃຫ້ຄົບຖ້ວນຕາມຈຳນວນເສຍກ່ອນ ແລະ ກໍຈະເຊັນໃບອະນຸຍາດເບີກຈ່າຍສິນຄ້າອອກ. ໜ່ວຍງານຝ່າຍຂາຍໜ້າຮ້ານຈະປະສານງານກັບໜ່ວຍງານຝ່າຍສາງເພື່ອອຳນວຍຄວາມສະດວກ ແລະ ວ່ອງໄວໃຫ້ແກ່ລູກຄ້າ, ເມື່ອໜ່ວຍງານຝ່າຍສາງໄດ້ຮັບໃບອະນຸຍາດຂໍເບີກຈ່າຍສິນຄ້າອອກ ກໍຈະກວດເບິ່ງຄວາມຖືກຕ້ອງຂອງເອກະສານດັ່ງກ່າວ ເມື່ອເຫັນວ່າທຸກຢ່າງຖືກຕ້ອງຄົບຖ້ວນ ແລະ ເປັນໄປຕາມຂັ້ນຕອນແລ້ວ ກໍຈະເບີກຈ່າຍສິນຄ້າອອກໃຫ້ແກ່ລູກຄ້າ, ເຊິ່ງລູກຄ້າສາມາດນຳລົດເຂົ້າໄປຮັບສິນຄ້າທີ່ໜ້າສາງໄດ້ເລີຍ ຫຼື ຫາກລູກຄ້າບໍ່ສະດວກ ທາງໜ່ວຍງານຝ່າຍສາງກໍຈະມີທີມງານໄວ້ບໍລິການນຳສິ່ງສິນຄ້າໃຫ້ເຖິງຕາມທີ່ຢູ່ຂອງລູກຄ້າລະບຸໄວ້ໃຫ້ ແລະ ຖືວ່າສິ້ນສຸດຂະບວນການ.

6 ການຄວບຄຸມພາຍໃນ


ບໍລິສັດມີຄະນະກຳມະການກວດກາພາຍໃນ ແລະ ໜ່ວຍງານກວດກາພາຍໃນ ຕາມໂຄງສ້າງຂອງ ບໍລິສັດຈົດທະບຽນ ຕາມການກຳນົດຂອງ ສຄຄຊ ແລະ ຕລຊລ ທີ່ເຮັດໜ້າທີ່ເປັນຜູ້ສ້າງນະໂຍບາຍ, ກົນ ໄກ, ລະບຽບ ແລະ ຄູ່ມື ຕ່າງໆ ໃນວຽກງານການຄຸ້ມຄອງພາຍໃນ ແລະ ການບໍລິຫານຄວາມສ່ຽງ. ເຮັດ ໜ້າທີ່ປະເມີນໜ່ວຍງານແຕ່ລະໜ້າວຽກ ແລະ ຝ່າຍງານໃຫ້ເປັນໄປຕາມເປົ້າໝາຍທີ່ກຳນົດໄວ້ ພ້ອມກັບ ຄວບຄຸມການປະຕິບັດງານໃຫ້ເປັນໄປຕາມລະບຽບຢ່າງຖືກຕ້ອງ, ມີການນຳໃຊ້ເຄື່ອງມືໃນການວັດແທກຄ່າ ດ້ວຍ Key Performance Indicator (KPI), ມີການກວດສອບຕິດຕາມເປັນໄລຍະ ແລະ ປະເມີນ ຜົນງານປະຈຳປີຂອງແຕ່ລະບຸກຄົນ ເຊິ່ງເປັນຕົວບົ່ງບອກເຖິງຄວາມສາມາດໃນການປະຕິບັດໜ້າທີ່ຂອງບຸກ ຄະລາກອນຂອງບໍລິສັດເອງ. ນອກນີ້ ໜ່ວຍງານກວດກາພາຍໃນຈະດຳເນີນການເຮັດບົດລາຍງານ ເພື່ອນຳ ສະເໜີຕໍ່ຄະນະກຳມະການກວດກາພາຍໃນ ເພື່ອພິຈາລະນາ ແລະ ດຳເນີນການປັບປຸງ ແນະນຳ ສະເໜີຕໍ່ ສະພາບໍລິຫານຕໍ່ໄປ.

ໃນປະຈຸບັນ ບໍລິສັດໄດ້ຮັບການຮັບຮອງຄຸນນະພາບມາດຕະຖານລະດັບສາກົນ ຄື: ISO 9001: 2015 ມາດຕະຖານຄຸນນະພາບດ້ານການບໍລິຫານງານ ແລະ ມີການກວດສອບຄຸນນະພາບມາດຕະຖານ ຂອງ ISO ເປັນປະຈຳ ເພື່ອໃຫ້ການປະຕິບັດງານ ແລະ ບໍລິຫານງານ ເປັນໄປຕາມລະບຽບ ແລະ ມີຄຸນ ນະພາບຕະຫຼອດເວລາ. ພ້ອມກັນນີ້ ບໍລິສັດຍັງປະຕິບັດຕາມລະບຽບ ISO ຄຽງຄູ່ກັບນະໂຍບາຍ 5 ສ ໃຫ້ ພະນັກງານປະຕິບັດໄດ້ຢ່າງມີລະບຽບ ແລະ ມີຄຸນນະພາບ.

ໂດຍລວມແລ້ວ ບໍລິສັດມີລະບົບການຄວບຄຸມພາຍໃນທີ່ດີ, ການກຳກັບດູແລກິດຈະການທີ່ດີ, ລວມໄປເຖິງວຽກງານການບໍລິຫານຄວາມສ່ຽງ ເປັນໄປຕາມມາດຕະຖານ ແລະ ຍອມຮັບໃນລະດັບ ສາກົນ.

7 ໂຄງສ້າງການບໍລິຫານ

7.1 ໂຄງຮ່າງການຈັດຕັ້ງຂອງບໍລິສັດ



7.2 ກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ

ກ. ກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ ມີດັ່ງນີ້:

1. ກອງປະຊຸມສາມັນຜູ້ຖືຮຸ້ນ: ຕ້ອງຈັດຂຶ້ນຢ່າງໜ້ອຍປີລະ 1 ຄັ້ງ ຢ່າງຊ້າພາຍໃນເດືອນ 6 ຂອງທຸກປີ ແລະ ການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ. ບໍລິສັດຈະຕ້ອງປະຕິບັດຕາມ ລະບຽບຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ລະບຽບຂອງຕະຫຼາດຫຼັກຊັບລາວ ລວມເຖິງກົດໝາຍອື່ນທີ່ກ່ຽວຂ້ອງ.
2. ກອງປະຊຸມວິສາມັນຜູ້ຖືຮຸ້ນ: ການຈັດປະຊຸມອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ ຫຼື ກົດລະບຽບບໍລິສັດ ຫຼື ກົດໝາຍທີ່ກ່ຽວຂ້ອງ.

ຂ. ອົງປະຊຸມຂອງກອງປະຊຸມຜູ້ຖືຮຸ້ນ

ອົງປະຊຸມຂອງກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ ມີດັ່ງນີ້:

- ກອງປະຊຸມສາມັນຜູ້ຖືຮຸ້ນ: ຕ້ອງມີຜູ້ເຂົ້າຮ່ວມຢ່າງໜ້ອຍສອງຄົນ ແລະ ຕ້ອງມີຈຳນວນຮຸ້ນເກີນເຄິ່ງໜຶ່ງຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.
- ກອງປະຊຸມວິສາມັນຜູ້ຖືຮຸ້ນ: ຕ້ອງມີຜູ້ເຂົ້າຮ່ວມຢ່າງໜ້ອຍສອງຄົນ ແລະ ຕ້ອງມີຈຳນວນຮຸ້ນເກີນເຄິ່ງໜຶ່ງຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ໝາຍເຫດ: ຮຸ້ນທີ່ເປັນໂມຄະຈາກການໂອນບໍ່ໃຫ້ນັບເປັນອົງປະຊຸມຂອງກອງປະຊຸມຜູ້ຖືຮຸ້ນເຖິງວ່າຜູ້ຖືຮຸ້ນນັ້ນຈະເຂົ້າຮ່ວມການປະຊຸມກໍຕາມ.

ຄ. ສິດໃນການອອກສຽງ

ໂດຍທົ່ວໄປແລ້ວ ຜູ້ຖືຮຸ້ນມີສິດອອກສຽງຕາມຫຼັກການ 1 ຮຸ້ນຕໍ່ 1 ສຽງ ມະຕິຂອງກອງປະຊຸມຜູ້ຖືຮຸ້ນຈະໄດ້ຮັບອະນຸມັດກໍຕໍ່ເມື່ອມີສຽງສ່ວນຫຼາຍຈາກກອງປະຊຸມຜູ້ຖືຮຸ້ນ ແຕ່ສຳລັບມະຕິສະເພາະຈະຕ້ອງໄດ້ຮັບການອະນຸມັດໂດຍການອອກສຽງຢ່າງໜ້ອຍສອງສ່ວນສາມຂອງຈຳນວນຜູ້ຖືຮຸ້ນ ຫຼື ຕົວແທນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນແລ້ວຫຼາຍກວ່າ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ. ປະເດັນເຈາະຈີ້ມທີ່ພົວພັນເຖິງບໍລິສັດດັ່ງຕໍ່ໄປນີ້ ຈຳເປັນຕ້ອງມີມະຕິສະເພາະຂອງຜູ້ຖືຮຸ້ນ:

- ການລົງຄະແນນສຽງໃນບັນຫາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ
- ການປ່ຽນແປງກົດລະບຽບ ຫຼື ສັນຍາສ້າງຕັ້ງບໍລິສັດ
- ການເພີ່ມທຶນ ຫຼື ການຫຼຸດທຶນຂອງບໍລິສັດ
- ການຄວບ ຫຼື ຍຸບເລີກບໍລິສັດ
- ການຂາຍ ຫຼື ການໂອນກິດຈະການທັງໝົດ ຫຼື ບາງສ່ວນທີ່ມີຄວາມສຳຄັນໃຫ້ບຸກຄົນອື່ນ
- ການຊື້ ຫຼື ຮັບໂອນກິດຈະການຂອງວິສາຫະກິດອື່ນ

ອີງຕາມກົດໝາຍ ວ່າດ້ວຍວິສາຫະກິດ, ຜູ້ຖືຮຸ້ນອາດຈະຖືກຫ້າມລົງຄະແນນສຽງກ່ຽວກັບບັນຫາທີ່ຕົນມີຄວາມກ່ຽວຂ້ອງ ຫຼື ອາດຈະໄດ້ຮັບກຳໄລ ຫຼື ຜົນປະໂຫຍດໂດຍກົງ. ບັນດາສະມາຊິກທີ່ມີໜ້າທີ່ເຂົ້າຮ່ວມປະຊຸມຜູ້ຖືຮຸ້ນຈະຕ້ອງກຳນົດວ່າຜູ້ຖືຮຸ້ນນັ້ນຕົກຢູ່ໃນກໍລະນີດັ່ງກ່າວນີ້ ຫຼື ບໍ່.

7.3 ສະພາບໍລິຫານ ແລະ ຄະນະກຳມະການສະພາບໍລິຫານ

ໂຄງສ້າງຂອງບໍລິສັດ ແມ່ນໄດ້ມີການດັດປັບເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງທຸລະກິດ ແລະ ການເປັນບໍລິສັດມະຫາຊົນ. ຄະນະກຳມະການ ແລະ ຜູ້ບໍລິຫານຂອງບໍລິສັດປະກອບດ້ວຍ ສະພາບໍລິຫານ 9 ທ່ານ, ຄະນະກຳມະການກວດກາພາຍໃນ 3 ທ່ານ, ຄະນະກຳມະການສະເພາະດ້ານ 4 ທ່ານ ແລະ ຄະນະອຳນວຍການຂອງບໍລິສັດ 8 ທ່ານ.

ລຳດັບ	ລາຍຊື່	ຕຳແໜ່ງ
I.	**ກອງປະຊຸມຜູ້ຖືຮຸ້ນ**	
II.	**ສະພາບໍລິຫານ (Board of Directors)**	
1	ທ່ານ ສົມຈິດ ອິນທະມິດ	ປະທານສະພາບໍລິຫານ / ສະມາຊິກອິດສະຫຼະ
2	ທ່ານ ຮສ.ປອ. ໄຊພອນ ກອງມະນີລາ	ຮອງປະທານສະພາບໍລິຫານ / ສະມາຊິກອິດສະຫຼະ
3	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ/ ຜູ້ອຳນວຍການໃຫຍ່
4	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການໃຫຍ່ ,ຜູ້ອຳນວຍການຝ່າຍການເງິນ
5	ທ່ານ ກິດສະດາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການໃຫຍ່ ,ຜູ້ອຳນວຍການຝ່າຍປະຕິບັດການ
6	ທ່ານ ບຸນເຕີມ ກົມມິດຕະພາບ	ສະມາຊິກສະພາບໍລິຫານ / ສະມາຊິກອິດສະຫຼະ

7	ທ່ານ ນາງ ຄຳໄຂ ລໍວັນໄຊ	ສະມາຊິກສະພາບໍລິຫານ
8	ທ່ານ ນາງ ຊຸຕິການ ສີແສງຈັນ	ສະມາຊິກສະພາບໍລິຫານ
9	ທ່ານ ພິພົບ ວາດສະໜາອາຊາສະກຸນ	ສະມາຊິກສະພາບໍລິຫານ
III.	**ຄະນະກຳມະການກວດກາພາຍໃນ (Audit Committee)**	
1	ທ່ານ ຮສ.ປອ. ໄຊພອນ ກອງມະນີລາ	ປະທານຄະນະກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ຄະນະກຳມະການກວດກາພາຍໃນ / ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ຄະນະກຳມະການກວດກາພາຍໃນ / ຮອງຜູ້ອຳນວຍການໃຫຍ່,ຜູ້ອຳນວຍການຝ່າຍການເງິນ
IV.	**ຄະນະກຳມະການຄຸ້ມຄອງຄວາມສ່ຽງ**	
1	ທ່ານ ສົມຈິດ ອິນທະມິດ	ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ
V	**ຄະນະກຳມະການກຳນົດຄ່າຕອບແທນ**	
1	ທ່ານ ບຸນເຕີມ ກົມມິດຕະພາບ	ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ
VI	**ຄະນະກຳມະການຄັດເລືອກ**	
1	ທ່ານ ສົມຈິດ ອິນທະມິດ	ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ
VII.	**ຄະນະອຳນວຍການ**	
1	ທ່ານ ວັດດານາ ສຸຄະບັນດິດ	ຜູ້ອຳນວຍການໃຫຍ່
2	ທ່ານ ພັນໂນລາ ສຸຄະບັນດິດ	ຮອງອຳນວຍການໃຫຍ່,ຜູ້ອຳນວຍການຝ່າຍການເງິນ
3	ທ່ານ ກິດສະດາ ສຸຄະບັນດິດ	ຮອງຜູ້ອຳນວຍໃຫຍ່,ຜູ້ອຳນວຍການຝ່າຍການປະຕິບັດການ
4	ທ່ານ ມິດໄຊ ເປົ້ອງກາງ	ຜູ້ຈັດການຝ່າຍການຕະຫຼາດ
5	ທ່ານ ຄຳພອນ ພິລາພັນ	ຜູ້ຈັດການຝ່າຍຂາຍ
6	ທ່ານ ນາງ ຄຳໄຂ ລໍວັນໄຊ	ຜູ້ຈັດການຝ່າຍຈັດຊື້
7	ທ່ານ ອິນທິລາດ ທຳມະວົງ	ຜູ້ຈັດການຝ່າຍບຸກຄົນ
8	ທ່ານ ບຸນທະວີ ສົມມະໄຊ	ຜູ້ຈັດການຝ່າຍບັນຊີ-ການເງິນ

ກ. ຜູ້ມີສິດອຳນາດ ລົງລາຍເຊັ້ນໃນເອກະສານຜູກພັນບໍລິສັດ

ຜູ້ອຳນວຍການທີ່ມີອຳນາດລົງລາຍເຊັ້ນຜູກພັນບໍລິສັດ ແມ່ນ ທ່ານ ວັດດານາ ສຸຄະບັນດິດ, ທ່ານ ພັນໂນລາ ສຸຄະບັນດິດ ແລະ ທ່ານ ກົດສະດາ ສຸຄະບັນດິດ ຜູ້ອຳນວຍການສອງໃນສາມທ່ານລົງລາຍເຊັ້ນ ແລະ ປະທັບກາບໍລິສັດ ເພື່ອປະຕິບັດໜ້າທີ່ໃນນາມ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ.

7.4 ຂອບເຂດອຳນາດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຄະນະກຳມະການ ແລະ ຜູ້ບໍລິຫານຂອງບໍລິສັດ

7.4.1 ສະພາບໍລິຫານ (Board of Directors)

ກ. ອົງປະກອບຂອງສະພາບໍລິຫານ

ສະພາບໍລິຫານຂອງບໍລິສັດ ປະກອບມີ 9 ທ່ານຄື:

ລຳດັບ	ສະພາບໍລິຫານ (Board of Directors)	ຕຳແໜ່ງ
1	ທ່ານ ສົມຈິດ ອົນທະມິດ	ປະທານສະພາບໍລິຫານ / ສະມາຊິກອິດສະຫຼະ
2	ທ່ານ ຣສ.ປອ. ໄຊພອນ ກອງມະນີລາ	ຮອງປະທານສະພາບໍລິຫານ / ສະມາຊິກ ອິດສະຫຼະ
3	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ/ ຜູ້ອຳນວຍການໃຫຍ່
4	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການ ໃຫຍ່,ຜູ້ອຳນວຍການຝ່າຍການເງິນ
5	ທ່ານ ກົດສະດາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການ ໃຫຍ່,ຜູ້ອຳນວຍການຝ່າຍປະຕິບັດການ
6	ທ່ານ ບຸນເຕີມ ກົມມິດຕະພາບ	ສະມາຊິກສະພາບໍລິຫານ / ສະມາຊິກອິດສະຫຼະ
7	ທ່ານ ນາງ ຄຳໄຂ ລໍວັນໄຊ	ສະມາຊິກສະພາບໍລິຫານ
8	ທ່ານ ນາງ ຊຸຕິການ ສີແສງຈັນ	ສະມາຊິກສະພາບໍລິຫານ
9	ທ່ານ ພິພົບ ວາດສະໜາອາຊາສະກຸນ	ສະມາຊິກສະພາບໍລິຫານ

ຂ. ສິດ ແລະ ໜ້າທີ່ຂອງສະພາບໍລິຫານ

- ເປັນໃຈກາງປະສານງານ ແລະ ດັດປັບວຽກງານຂອງບັນດາສະມາຊິກສະພາບໍລິຫານບໍລິສັດ.
- ແຕ່ງຕັ້ງສະມາຊິກສະພາບໍລິຫານບໍລິສັດໃດໜຶ່ງທີ່ວ່າງລົງໃນລະຫວ່າງສອງກອງປະຊຸມສາມັນ ຂອງຜູ້ຖືຮຸ້ນ.
- ກຳນົດທິດທາງແຜນການໃນການບໍລິຫານຈັດການບໍລິສັດ ເພື່ອສະເໜີຜ່ານກອງປະຊຸມຜູ້ຖື ຮຸ້ນ.
- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງບໍລິສັດ.
- ປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບ, ດ້ວຍຄວາມລະມັດລະວັງ, ດ້ວຍຄວາມສຸດຈະລິດ ແລະ ປະຕິບັດຕາມກົດລະບຽບຂອງບໍລິສັດ, ມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ແລະ ຕາມລະບຽບກົດໝາຍ.

- ພິຈາລະນາແຕ່ງຕັ້ງຄະນະກຳມະການບໍລິຫານ ໂດຍຄັດເລືອກຈາກສະມາຊິກສະພາບໍລິຫານ ຂອງບໍລິສັດ ພ້ອມທັງກຳນົດຂອບເຂດສິດອຳນາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ຄະນະກຳມະການບໍລິຫານ.
- ໃນກໍລະນີ ທີ່ຕຳແໜ່ງສະມາຊິກອິດສະຫຼະ ແລະ ຄະນະການມະການກວດກາພາຍໃນວ່າງລົງ ໃນລະຫວ່າງດຳລົງວາລະ ສະພາບໍລິຫານສາມາດພິຈາລະນາແຕ່ງຕັ້ງສະມາຊິກອິດສະຫຼະ ແລະ ຄະນະກຳມະການກວດກາພາຍໃນທົດແທນໃນຕຳແໜ່ງດັ່ງກ່າວ ໂດຍພິຈາລະນາຈາກ ຄຸນສົມບັດ ແລະ ຂໍ້ຫ້າມຕ່າງໆຂອງສະມາຊິກອິດສະຫຼະ ແລະ ຄະນະກຳມະການກວດກາ ພາຍໃນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ຕ້ອງແຈ້ງໃຫ້ທີ່ປະຊຸມຜູ້ຖືຮຸ້ນ ຮັບຊາບ ແລະ ຮັບຮອງເອົາ ໃນຄັ້ງຖັດໄປ.
- ພິຈາລະນາກຳນົດ ແລະ ແກ້ໄຂ ປ່ຽນແປງສະມາຊິກສະພາບໍລິຫານຂອງບໍລິສັດ ທີ່ມີສິດ ອຳນາດໃນການສ້າງຂໍ້ຜູກພັນກັບບໍລິສັດ.
- ແຕ່ງຕັ້ງບຸກຄົນໃດໜຶ່ງໃຫ້ດຳເນີນທຸລະກິດ ທີ່ຢູ່ພາຍໃຕ້ການຄວບຄຸມຂອງສະມາຊິກສະພາ ບໍລິຫານບໍລິສັດ ຫຼື ອາດຈະເປັນການມອບສິດໃຫ້ບຸກຄົນດັ່ງກ່າວມີສິດໃນການດຳເນີນການ ໃດໜຶ່ງ ພາຍໃນໄລຍະເວລາໃດໜຶ່ງ ແລະ ສາມາດຍົກເລີກໄດ້ທຸກເວລາ.
- ພິຈາລະນາ ແລະ ອະນຸມັດການມອບໂອນ-ຮັບໂອນ, ຊື້-ຂາຍ ຊັບສິນຂອງບໍລິສັດ ຍົກເວັ້ນ ລາຍການຊັບສິນທີ່ຕ້ອງໄດ້ຮັບການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ. ໃນການພິຈາລະນາ ແລະ ການອະນຸມັດນັ້ນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວກັບຫຼັກຊັບ.
- ພິຈາລະນາ ແລະ ອະນຸມັດລາຍການທີ່ກ່ຽວຂ້ອງກັບຊັບສິນ ຍົກເວັ້ນແຕ່ລາຍການທີ່ຈະຕ້ອງ ໄດ້ຮັບຄຳເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ ໃນການພິຈາລະນາ ແລະ ອະນຸມັດນັ້ນ ໃຫ້ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວກັບ ກົດໝາຍວ່າດ້ວຍຫຼັກຊັບ.
- ປະເມີນຜົນການປະຕິບັດງານ ແລະ ກຳນົດຄ່າຕອບແທນຂອງສະພາບໍລິຫານ ແລະ ຜູ້ ບໍລິຫານລະດັບສູງ.
- ຊຸກຍູ້ໃຫ້ຝ່າຍບໍລິຫານ ມີລະບົບການບໍລິຫານຄວາມສ່ຽງຢ່າງເໝາະສົມ ແລະ ມີ ປະສິດທິພາບ.
- ຕິດຕາມ ແລະ ຊຸກຍູ້ໃຫ້ກຳນົດເປົ້າໝາຍການດຳເນີນທຸລະກິດທີ່ຈະແຈ້ງ ແລະ ສາມາດວັດ ຜົນໄດ້ ເພື່ອໃຊ້ໃນການກຳນົດເປົ້າໝາຍ ໃນການດຳເນີນທຸລະກິດ ໂດຍພິຈາລະນາຈາກ ຄວາມເໝາະສົມ ແລະ ຄວາມເປັນໄປໄດ້.

ຄ. ວາລະການດຳລົງຕຳແໜ່ງຂອງສະພາບໍລິຫານ

ສະພາບໍລິຫານຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍກອງປະຊຸມຜູ້ຖືຮຸ້ນດ້ວຍຄະແນນ ສຽງສ່ວນຫຼາຍຂອງບັນດາຜູ້ຖືຮຸ້ນທີ່ໄດ້ເຂົ້າຮ່ວມໃນກອງປະຊຸມ. ສະພາບໍລິຫານທຸກທ່ານມີອາຍຸ ການດຳລົງຕຳແໜ່ງ 2 ປີ ແລະ ອາດຈະມີການເລືອກຕັ້ງຄືນໃໝ່ໃນສະໄໝຕໍ່ໄປໄດ້ ດັ່ງທີ່ໄດ້ມີການ ລະບຸໄວ້ໃນກົດລະບຽບບໍລິສັດ ຫຼື ກົດໝາຍທີ່ກ່ຽວຂ້ອງ.

ງ. ຄ່າຕອບແທນຂອງສະພາບໍລິຫານ

ອີງຕາມກອງປະຊຸມສາມັນຜູ້ຖືຮຸ້ນຄັ້ງທີ 1/2021 ໃນວັນທີ 5 ເມສາ 2022 ໄດ້ກຳນົດຄ່າຕອບແທນໃຫ້ແກ່ສະພາບໍລິຫານ ໂດຍມີລາຍລະອຽດດັ່ງນີ້:

- **ເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະເທື່ອ ສະເພາະຜູ້ທີ່ເປັນສະມາຊິກອິດສະຫຼະເທົ່ານັ້ນ**
  - ປະທານສະພາບໍລິຫານ 6.500.000 ກີບ/ເດືອນ/ທ່ານ
  - ຮອງປະທານສະພາບໍລິຫານ 4.300.000 ກີບ/ເດືອນ/ທ່ານ
  - ສະມາຊິກສະພາບໍລິຫານ 4.300.000 ກີບ/ເດືອນ/ທ່ານ
- **ເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະເທື່ອ ຂອງສະມາຊິກສະພາບໍລິຫານ ຂອງບໍລິສັດ ທີ່ບໍ່ແມ່ນສະມາຊິກອິດສະຫຼະ**
  - ສະມາຊິກສະພາບໍລິຫານ 2.200.000 ກີບ ຕໍ່ 1 ຄັ້ງ.

7.5 ຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ປະກອບມີດັ່ງລຸ່ມນີ້:

1) ຄະນະກຳມະການກວດກາພາຍໃນ (Audit committee)
2) ຄະນະກຳມະການຄຸ້ມຄອງຄວາມສ່ຽງ (Risk Management Committee)
3) ຄະນະກຳມະການກຳນົດຜົນຕອບແທນ (Remuneration committee)
4) ຄະນະກຳມະການຄັດເລືອກ (Nomination Committee)

7.5.1 ຄະນະກຳມະການກວດກາພາຍໃນ (Audit Committee)

ກ.ອົງປະກອບຂອງຄະນະກຳມະການກວດກາພາຍໃນ

ອົງປະກອບຂອງຄະນະກຳມະການກວດກາພາຍໃນຂອງບໍລິສັດ ປະກອບມີ 3 ທ່ານຄື:

ລຳດັບ	ຄະນະກຳມະການກວດກາພາຍໃນ	ຕຳແໜ່ງ
1	ທ່ານ ຮສ.ປອ. ໄຊພອນ ກອງມະນີລາ	ປະທານຄະນະກຳມະການກວດກາພາຍໃນ / ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ຄະນະກຳມະການກວດກາພາຍໃນ / ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ຄະນະກຳມະການກວດກາພາຍໃນ/ຮອງອຳນວຍການໃຫຍ່,ຜູ້ອຳນວຍການຝ່າຍການເງິນ

ຂ. ຄຸນສົມບັດຂອງຄະນະກຳມະການກວດກາພາຍໃນ

- ຄຸນວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ ສາຂາການບັນຊີ, ກວດສອບ, ກົດໝາຍ, ການເງິນ-ການທະນາຄານ ຫຼື ບໍລິຫານທຸລະກິດ ຫຼື ຄຸນວຸດທິອື່ນໆທີ່ກ່ຽວຂ້ອງກັບທຸລະກິດຂອງບໍລິສັດ.
- ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນທີ່ຖືກສານຕັດສິນໃຫ້ລົ້ມລະລາຍ.

- ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາເປັນຕົ້ນ ໃນສະຖານສໍ້ໂກງຊັບ, ຍັກຍອກຊັບ, ປອມແປງ ເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ.
- ຖືຮຸ້ນບໍ່ເກີນໜຶ່ງສ່ວນຮ້ອຍຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດທີ່ກ່ຽວຂ້ອງ.
- ບໍ່ເຄີຍ ຫຼື ເຄີຍເປັນຜູ້ອຳນວຍການທີ່ມີສ່ວນຮ່ວມໃນການບໍລິຫານ, ພະນັກງານ, ທີ່ປຶກສາທີ່ໄດ້ຮັບ ເງິນເດືອນປະຈຳ ຫຼື ຜູ້ທີ່ມີອຳນາດຄວບຄຸມບໍລິສັດ ແລະ ບໍລິສັດທີ່ກ່ຽວຂ້ອງ.
- ບໍ່ເປັນບຸກຄົນ ທີ່ມີຄວາມຜູກພັນທາງສາຍເລືອດ ຫຼື ໂດຍການຈົດທະບຽນຕາມກົດໝາຍ ທີ່ເປັນພໍ່, ແມ່, ຄູ່ສົມລົດ, ພີ່ນ້ອງ ແລະ ລູກ ຂອງຜູ້ບໍລິຫານ ຫຼື ຜູ້ຖືຮຸ້ນລາຍໃຫຍ່, ຜູ້ມີອຳນາດຄວບຄຸມ ຫຼື ບຸກຄົນທີ່ຈະໄດ້ຮັບການສະເໜີໃຫ້ເປັນຜູ້ບໍລິຫານ ຫຼື ຜູ້ມີອຳນາດຄວບຄຸມບໍລິສັດ ຫຼື ບໍລິສັດໃນເຄືອ.
- ບໍ່ມີ ຫຼື ເຄີຍມີຄວາມສຳພັນທາງທຸລະກິດກັບບໍລິສັດໃຫຍ່, ບໍລິສັດທີ່ກ່ຽວຂ້ອງ, ຜູ້ຖືຮຸ້ນລາຍໃຫຍ່, ຜູ້ ຖືຮຸ້ນທີ່ມີອຳນາດຄວບຄຸມບໍລິສັດ ໃນລັກສະນະທີ່ອາດຈະຂັດກັບການໃຊ້ການອິນິດໄສຢ່າງ ອິດສະຫຼະຂອງຕົນ. ລວມທັງການທີ່ບໍ່ໄດ້ເປັນ ຜູ້ຖືຮຸ້ນ ຫຼື ຜູ້ທີ່ມີອຳນາດໃນການຄວບຄຸມ ບໍລິສັດ ທີ່ ມີລັກສະນະສຳພັນທາງທຸລະກິດກັບບໍລິສັດໃຫຍ່ ແລະ ບໍລິສັດທີ່ກ່ຽວຂ້ອງ.
- ບໍ່ເປັນ ຫຼື ເຄີຍເປັນຜູ້ຖືຮຸ້ນ, ຜູ້ທີ່ມີອຳນາດຄວບຄຸມໃນບໍລິສັດກວດສອບບັນຊີ ທີ່ບໍລິສັດກາລັງຈະ ຈ້າງເປັນທີ່ປຶກສາດ້ານການກວດສອບບັນຊີ.
- ບໍ່ເປັນ ຫຼື ເຄີຍເປັນຜູ້ໃຫ້ບໍລິການທາງດ້ານວິຊາຊີບດ້ານກົດໝາຍ ຫຼື ການເງິນທີ່ໄດ້ຮັບຄ່າແຮງງານເຖິງ 500.000.000 ກີບຈາກບໍລິສັດນີ້ ແລະ ບໍລິສັດທີ່ກ່ຽວຂ້ອງ ຫຼື ຈາກຜູ້ທີ່ມີອຳນາດຄວບຄຸມຂອງ ບໍລິສັດ ຍົກເວັ້ນໃນກໍລະນີທີ່ໄດ້ໝົດໜ້າທີ່ດັ່ງກ່າວມາໄດ້ 2 ປີແລ້ວກ່ອນການຍື່ນຈົດທະບຽນເຂົ້າ ຕະຫຼາດຫຼັກຊັບລາວ.
- ບໍ່ເປັນຜູ້ອຳນວຍການທີ່ໄດ້ຮັບການແຕ່ງຕັ້ງ ເປັນຕົວແທນຂອງຜູ້ອຳນວຍການຂອງບໍລິສັດ, ຜູ້ຖືຮຸ້ນ ລາຍໃຫຍ່ ຫຼື ຜູ້ຖືຮຸ້ນຄົນອື່ນທີ່ມີຄວາມກ່ຽວຂ້ອງກັບຜູ້ຖືຮຸ້ນລາຍໃຫຍ່.
- ບໍ່ປະກອບກິດຈະການທີ່ມີລັກສະນະດຽວກັນ ຫຼື ເປັນການແຂ່ງຂັນກັນກັບບໍລິສັດ ແລະ ບໍລິສັດທີ່ ກ່ຽວຂ້ອງ.
- ບໍ່ມີສິ່ງຂັດຂວາງອື່ນໆ ທີ່ຈະເປັນອຸປະສັກໃນການໃຫ້ຄຳເຫັນຢ່າງອິດສະຫຼະຕໍ່ການບໍລິຫານຂອງ ບໍລິສັດ.
- ຄຸນສົມບັດຂອງຄະນະກຳມະການກວດກາພາຍໃນ ທີ່ກ່າວມານີ້ອາດໄດ້ຮັບມອບໝາຍຈາກສະພາ ບໍລິຫານຂອງບໍລິສັດ ໃຫ້ຕັດສິນໃຈໃນການດຳເນີນກິດຈະການຂອງບໍລິສັດໃຫຍ່, ບໍລິສັດທີ່ກ່ຽວຂ້ອງ, ບໍລິສັດຮ່ວມ, ຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ມີອຳນາດໃນການຄວບຄຸມ ໂດຍໃຊ້ວິທີການຕັດສິນໃຈແບບ ອົງຄະນະ (Collective Decision).

ຄ. ສິດ ແລະ ໜ້າທີ່ຂອງຄະນະກຳມະການກວດກາພາຍໃນ

- ສ້າງແຜນການກວດກາໃຫ້ສອດຄ່ອງກັບຂອບເຂດສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ຮັບມອບໝາຍຈາກ ສະພາບໍລິຫານ ເຊິ່ງແຜນດັ່ງກ່າວຕ້ອງກວມເອົາທຸລະກຳທີ່ສຳຄັນຂອງບໍລິສັດ ແລະ ຕ້ອງໄດ້ຮັບການ ຮັບຮອງຈາກສະພາບໍລິຫານ.
- ເຂົ້າຮ່ວມໃນການສ້າງແຜນການເຄື່ອນໄຫວຂອງບໍລິສັດ ເພື່ອຄວາມສະດວກໃນການຕິດຕາມກວດກາ.

- ຕິດຕາມການປະຕິບັດວຽກງານຂອງຄະນະກຳມະການຕ່າງໆ ໃຫ້ສອດຄ່ອງກັບແຜນການ ການເຄື່ອນໄຫວ ທີ່ກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ໄດ້ຮັບຮອງເອົາ ພ້ອມທັງລາຍງານໃຫ້ສະພາບໍລິຫານຮັບຊາບຢ່າງເປັນປົກກະຕິ.
- ເຮັດບົດລາຍງານການກວດກາປະຈຳປີ ແລ້ວສົ່ງໃຫ້ສະພາບໍລິຫານຮັບຮອງ.
- ປະສານງານກັບຄະນະກວດກາພາຍນອກ ໃນການປະຕິບັດໜ້າທີ່ໃນການກວດກາ.
- ຕີລາຄາຄຸນນະພາບຂອງບໍລິສັດກວດສອບ, ຄວາມເປັນເອກະລາດ ແລະ ການພົວພັນກັບບຸກຄົນອື່ນໆ ຂອງຜູ້ກວດສອບ.
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງສະພາບໍລິຫານ.

ງ. ວາລະການດຳລົງຕຳແໜ່ງຂອງຄະນະກຳມະການກວດກາພາຍໃນ

ຄະນະກຳມະການກວດກາພາຍໃນຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍກອງປະຊຸມຜູ້ຖືຮຸ້ນດ້ວຍຄະແນນສຽງສ່ວນຫຼາຍຂອງບັນດາຜູ້ຖືຮຸ້ນທີ່ໄດ້ເຂົ້າຮ່ວມໃນກອງປະຊຸມ. ສະພາບໍລິຫານທຸກທ່ານມີອາຍຸການດຳລົງຕຳແໜ່ງ 2 ປີ ແລະ ອາດຈະມີການເລືອກຕັ້ງຄືນໃໝ່ໃນສະໄໝຕໍ່ໄປໄດ້ ດັ່ງທີ່ໄດ້ມີການລະບຸໄວ້ໃນກົດລະບຽບບໍລິສັດ ຫຼື ກົດໝາຍທີ່ກ່ຽວຂ້ອງ.

7.5.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ (Risk Management Committee)

ກ. ອົງປະກອບຂອງຄະນະກຳມະການຄຸ້ມຄອງຄວາມສ່ຽງ

ລຳດັບ	ຄະນະກຳມະການຄຸ້ມຄອງຄວາມສ່ຽງ	ຕຳແໜ່ງ
1	ທ່ານ ສົມຈິດ ອິນທະມິດ	ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ

ຂ ສິດ ແລະ ໜ້າທີ່ຂອງຄະນະກຳມະການບໍລິຫານຄວາມສ່ຽງ

- ກຳນົດນະໂຍບາຍ ແລະ ໂຄງສ້າງກ່ຽວກັບການບໍລິຫານຄວາມສ່ຽງເພື່ອສະເໜີຕໍ່ຄະນະກຳມະການບໍລິຫານ ໂດຍໃຫ້ສອດຄ່ອງຕາມທິດທາງການບໍລິຫານຄວາມສ່ຽງຕະຫຼາດພາຍໃນ ແລະ ຕ່າງປະເທດ.
- ວາງຍຸດທະສາດໃນການບໍລິຫານຄວາມສ່ຽງເພື່ອສາມາດປະເມີນ ແລະ ຕິດຕາມ ແລະ ຄວບຄຸມ ຄວາມສ່ຽງ ແຕ່ລະປະເພດໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້ ໂດຍປະສານສົມທົບກັບໜ່ວຍງານຕ່າງໆ.
- ປະເມີນຄວາມສ່ຽງໃນລະດັບບໍລິສັດ ແລະ ກຳນົດວິທີການບໍລິຫານຈັດການຄວາມສ່ຽງນັ້ນໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້ ລວມທັງສາມາດຄວບຄຸມບໍລິຫານຈັດການຄວາມສ່ຽງຕາມທີ່ວາງແຜນໄວ້.
- ທົບທວນນະໂຍບາຍການບໍລິຫານຈັດການຄວາມສ່ຽງ ແລະ ພ້ອມທັງປັບປຸງໃຫ້ມີປະສິດທິພາບສູງຂຶ້ນ ເພື່ອຈະສາມາດຮັບມືກັບຄວາມສ່ຽງທີ່ອາດເກີດຂຶ້ນ.

- ລາຍງານຜົນຂອງການບໍລິຫານຈັດການຄວາມສ່ຽງຕໍ່ຄະນະກຳມະການບໍລິຫານຄວາມສ່ຽງ ເພື່ອສະເໜີຕໍ່ສະພາບໍລິຫານທຸກໆໄຕມາດ.
- ສ້າງຄູ່ມືກ່ຽວກັບການບໍລິຫານຈັດການຄວາມສ່ຽງ.
- ລະບຸຄວາມສ່ຽງດ້ານຕ່າງໆພ້ອມທັງວິເຄາະ ແລະ ປະເມີນຄວາມສ່ຽງທີ່ອາດຈະເກີດຂຶ້ນ ລວມທັງທ່າອຽງທີ່ອາດຈະເກີດຂຶ້ນ ແລະ ສິ່ງຜົນກະທົບຕໍ່ບໍລິສັດ.
- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງບໍລິສັດ.
- ອາຍຸການໃນການດຳລົງຕຳແໜ່ງແມ່ນ 2 ປີ.

7.5.3 ຄະນະກຳມະການກຳນົດຄ່າຕອບແທນ (Remuneration committee)

ກ. ອົງປະກອບຂອງຄະນະກຳມະການກຳນົດຄ່າຕອບແທນ

ລຳດັບ	ຄະນະກຳມະການກຳນົດຄ່າຕອບແທນ	ຕຳແໜ່ງ
1	ທ່ານ ບຸນເຕີມ ກົມມົດຕະພາບ	ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ

ກ. ສິດ ແລະ ໜ້າທີ່ຂອງ ຄະນະກຳມະການກຳນົດຄ່າຕອບແທນ

1) ກຳນົດຫຼັກການ ແລະ ຮູບແບບການຈ່າຍຄ່າຕອບແທນ;
2) ຄົ້ນຄວ້າຄ່າຕອບແທນຂອງສະພາບໍລິຫານ, ຄະນະກຳມະການ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຮັບຮອງ;
3) ຄົ້ນຄວ້າຄ່າຕອບແທນຂອງ ຫົວໜ້າພະແນກ ແລະ ຮອງຫົວໜ້າພະແນກ ເພື່ອສະເໜີຕໍ່ສະພາບໍລິຫານຮັບຮອງ;
4) ລາຍງານຜົນການເຄື່ອນໄຫວວຽກງານຂອງຕົນຕໍ່ສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ;
5) ເປີດເຜີຍຂໍ້ມູນໃນບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີທີ່ຕິດພັນກັບລາຍຊື່, ຈຳນວນຄັ້ງການປະຊຸມ , ຈຳນວນຄັ້ງຂອງການເຂົ້າຮ່ວມປະຊຸມຂອງແຕ່ລະຄົນ, ຜົນການປະເມີນ ແລະ ເນື້ອໃນການເຄື່ອນໄຫວຂອງຄະນະກຳມະການກຳນົດຄ່າຕອບແທນໂດຍຫຍໍ້;
6) ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງສະພາບໍລິຫານ;

7.5.4 ຄະນະກຳມະການຄັດເລືອກ (Nomination Committee)

ກ. ອົງປະກອບຂອງຄະນະກຳມະການຄັດເລືອກ

ລຳດັບ	ຄະນະກຳມະການຄັດເລືອກ	ຕຳແໜ່ງ
1	ທ່ານ ສົມຈິດ ອິນທະມິດ	ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ
2	ທ່ານ ວັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່
3	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ

ຂ. ສິດ ແລະ ໜ້າທີ່ຂອງຄະນະກຳມະການຄັດເລືອກ

1) ກຳນົດຫຼັກການ ແລະ ຂັ້ນຕອນກ່ຽວກັບການຄັດເລືອກບຸກຄະລາກອນ ເພື່ອດຳລົງຕຳແໜ່ງຢູ່ໃນ ສະພາບໍລິຫານ, ຄະນະອຳນວຍການ, ພະນັກງານຂັ້ນພະແນກ ຫຼື ທຽບເທົ່າຂອງບໍລິສັດ, ຊຶ່ງຫຼັກການ ແລະ ຂັ້ນຕອນດັ່ງກ່າວຕ້ອງມີຄວາມໂປ່ງໃສ ແລະ ກວດສອບໄດ້;
2) ຄົ້ນຄວ້າຄຸນນະສົມບັດ, ຄວາມຮູ້, ປະສົບການ ແລະ ຄວາມເໝາະສົມຕາມເງື່ອນໄຂຂອງສະມາຊິກ ສະພາບໍລິຫານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;
3) ສະເໜີຊື່ບຸກຄົນທີ່ຜ່ານການຄັດເລືອກເພື່ອໃຫ້ສະພາບໍລິຫານພິຈາລະນາ ແລະ ສະເໜີຕໍ່ກອງປະຊຸມຜູ້ ຖືຮຸ້ນພິຈາລະນາຮັບຮອງ;
4) ລາຍງານຜົນການເຄື່ອນໄຫວວຽກງານຂອງຕົນຕໍ່ສະພາບໍລິຫານ;
5) ເປີດເຜີຍຂໍ້ມູນໃນບົດລາຍງານປະຈຳປີທີ່ຕິດພັນກັບລາຍຊື່, ຈຳນວນຄັ້ງການປະຊຸມ, ຈຳນວນຄັ້ງຂອງ ການເຂົ້າຮ່ວມປະຊຸມຂອງຄະນະກຳມະການຄັດເລືອກແຕ່ລະຄົນ ແລະ ຜົນການປະເມີນ ແລະ ເນື້ອ ໃນການເຄື່ອນໄຫວຂອງຄະນະກຳມະການຄັດເລືອກໂດຍຫຍໍ້;
6) ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງສະພາບໍລິຫານ.

7.6 ຄະນະອຳນວຍການ

ກ. ອົງປະກອບຂອງ ຄະນະອຳນວຍການ

ລຳດັບ	ລາຍຊື່	ຕຳແໜ່ງ
1	ທ່ານ ອັດດານາ ສຸຄະບັນດິດ	ຜູ້ອຳນວຍການໃຫຍ່
2	ທ່ານ ພັນໂນລາ ສຸຄະບັນດິດ	ຮອງອຳນວຍການໃຫຍ່,ຜູ້ອຳນວຍການຝ່າຍການເງິນ
3	ທ່ານ ກົດສະດາ ສຸຄະບັນດິດ	ຮອງຜູ້ອຳນວຍໃຫຍ່,ຜູ້ອຳນວຍການຝ່າຍການ ປະຕິບັດການ

ຂ. ສິດ ແລະ ໜ້າທີ່ຂອງ ຄະນະອຳນວຍການ

ສິດ ແລະ ໜ້າທີ່ຂອງ ຄະນະອຳນວຍການຈະລຸບຸໄວ້ຕາມລະບຽບຂອງບໍລິສັດຂອງບໍລິສັດ.

7.7 ບຸກຄະລາກອນບໍລິສັດ


ບໍລິສັດແມ່ນໃຫ້ຄວາມສຳຄັນທີ່ສຸດຕໍ່ຊີວິດການເປັນຢູ່ຂອງພະນັກງານ, ບໍລິສັດຄຳນຶງຕະຫຼອດ ເວລາວ່າພະນັກງານທຸກຄົນທີ່ເຂົ້າມາເຮັດວຽກກັບບໍລິສັດຈະຕ້ອງມີຊີວິດການເປັນຢູ່ທີ່ດີ ຕະຫຼອດຮອດ ຊີວິດຄອບຄົວກໍເຊັ່ນດຽວກັນ ເພື່ອຊຸກຍູ້ໃຫ້ພະນັກງານທຸກຄົນມີກຳລັງໃຈ ແລະ ສຸມເຫຶ່ອແຮງທັງສະຕິ ປັນຍາເຂົ້າໃນການປະຕິບັດໜ້າທີ່ຂອງຕົນເອງຢ່າງເຕັມທີ່.

ກ. ບຸກຄະລາກອນ

ໃນເດືອນ ມີນາ 2023 ບໍລິສັດມີພະນັກງານທັງໝົດຈຳນວນ 828 ທ່ານ ໃນ້ນ ຜູ້ຊາຍ 545 ທ່ານ ແລະ ຜູ້ຍິງ 293 ທ່ານ.

ປີ	ຊາຍ	ຍິງ	ລວມ
ມີນາ 2023	545	283	828

ອັດຕາການສະເລ່ຍອາຍຸຂອງພະນັກງານພາຍໃນອົງກອນ



ຂ. ຂໍ້ພິພາກກັບບຸກຄະລາກອນ

ນັບແຕ່ສ້າງຕັ້ງບໍລິສັດຕັ້ງແຕ່ປີ 1993 ເຖິງປັດຈຸບັນບໍລິສັດແມ່ນບໍ່ເຄີຍເກີດມີການຮ້ອງຟ້ອງທາງ ດ້ານແຮງງານ ແລະ ບໍ່ເຄີຍມີການປະທ້ວງ ຫຼື ຖືກສານປະຊາຊົນສັ່ງໃຫ້ຢຸດເຊົາດຳເນີນທຸລະກິດໃດໆ.

ຄ. ນະໂຍບາຍໃນການພັດທະນາບຸກຄະລາກອນ

ບໍລິສັດມີນະໂຍບາຍກ່ຽວກັບການພັດທະນາບຸກຄະລາກອນຂອງບໍລິສັດຢ່າງຕໍ່ເນື່ອງ ໂດຍເນັ້ນ ເສີມສ້າງເພື່ອໃຫ້ຄວາມຮູ້ ແລະ ພັດທະນາຄວາມສາມາດໃຫ້ແກ່ບຸກຄະລາກອນຂອງບໍລິສັດ ມີການຈັດ ເຝິກອົບຮົມພາຍໃນບໍລິສັດ ແລະ ຈັດສົ່ງພະນັກງານເຂົ້າຮັບການອົບຮົມກັບໜ່ວຍງານຕ່າງໆ ຄວບຄູ່ໄປ ກັບການຮຽນຮູ້ການປະຕິບັດວຽກງານຕົວຈິງພາຍໃຕ້ການຄວບຄຸມ ແລະ ແນະນຳຈາກຜູ້ຄວບຄຸມແຕ່ລະ ຝ່າຍ. ນອກຈາກນີ້ ບໍລິສັດຍັງສົ່ງເສີມໃຫ້ບຸກຄະລາກອນໄປພັດທະນາຍົກລະດັບຄວາມຮູ້ຄວາມສາມາດ, ເພື່ອນຳມາພັດທະນາອົງກອນ. ບໍລິສັດໃຫ້ຄວາມສຳຄັນກັບການສ້າງຂວັນກຳລັງໃຈໃຫ້ກັບບຸກຄະລາກອນ ໂດຍພິຈາລະນາປັບປຸງສະຫວັດດີການ ແລະ ເບິ່ງແຍງບຸກຄະລາກອນທຸກຄົນຕາມຄວາມເໝາະສົມເພື່ອ ໃຫ້ບຸກຄະລາກອນມີການເຕີບໂຕໄປພ້ອມໆກັບບໍລິສັດ ແລະ ເພື່ອເພີ່ມສັກກະຍາພາບໃຫ້ແກ່ບຸກຄະລາ ກອນໃຫ້ມີຄວາມຮູ້ຄວາມສາມາດ ແລະ ຊຳນິຊຳນານຍິ່ງຂຶ້ນ.

8 ໂຄງສ້າງຜູ້ຖືຮຸ້ນ

ຜູ້ຖືຮຸ້ນ	ປີ 2022		
	ຈຳນວນຮຸ້ນ	ມູນຄ່າ (ລ້ານກີບ)	ອັດຕາສ່ວນຮ້ອຍ (ປະມານ)
1. ກຸ່ມຄອບຄົວ ສຸຄະບັນດິດ	**83.893.600**	**167.787**	**50,8445%**
1.1 ທ່ານ ອັດດາມາ ສຸຄະບັນດິດ	28.524.440	57.049	17,2875%
1.2 ທ່ານ ກົດສະດາ ສຸຄະບັນດິດ	26.844.580	53.689	16,2694%
1.3 ທ່ານ ພັນໂມລາ ສຸຄະບັນດິດ	26.844.580	53.689	16,2694%
1.4 ທ່ານ ນາງ ປະພັດສອນ ສຸຄະບັນດິດ	840.000	1.680	0,5091%
1.5 ທ່ານ ນາງ ວຽງດາລາ ບຸບຜາ	840.000	1.680	0,5091%
2. ບໍລິສັດ ໂກວບ້ອນເຮົ້າ ອິນເຕີເນຊັ້ນແນວ ຈຳກັດ	**56.000.000**	**112.000**	**33,9394%**
3. ກຸ່ມຜູ້ຖືຮຸ້ນອື່ນໆ	**106.400**	**213**	**0,0646%**
3.1 ທ່ານ ສຸວັນນີ ສີສົມໃຈ	28.000	56	0,0170%
3.2 ທ່ານ ໄຊສັງຄົມ ຊຸ່ມມະນີວົງ	28.000	56	0,0170%
3.3 ທ່ານ ອານຸສອນ ອຸ່ນໄຕ	28.000	56	0,0170%
3.4 ທ່ານ ບຸນທະວີ ສົມມາໄຊ	22.400	45	0,0136%
4. ນັກລົງທຶນທົ່ວໄປ	**25.000.000**	**50.000**	**15,1515%**
ລວມ	**165.000.000**	**330.000**	**100,0000%**

9 ລາຍການທີ່ກ່ຽວພັນ

ລາຍການທີ່ກ່ຽວພັນ ໝາຍເຖິງ ວິສາຫະກິດ ແລະ ສ່ວນບຸກຄົນທີ່ມີ ການຄວບຄຸມ ຫຼື ຖືກຄວບຄຸມ ຫຼື ຢູ່ພາຍໃຕ້ການຄວບຄຸມທົ່ວໄປໂດຍກົງ ຫຼື ໂດຍທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍຊ່ອງທາງ ກັບ ບໍລິສັດ. ລວມທັງ ບໍລິສັດຖືຮຸ້ນ, ບໍລິສັດຍ່ອຍ ແລະ ບໍລິສັດອື່ນໆ ທີ່ກ່ຽວຂ້ອງກິດຈະການຂອງບໍລິສັດ, ສະມາຄົມ ແລະ ບຸກຄົນທີ່ເປັນເຈົ້າຂອງ ໂດຍກົງ ຫຼື ທາງອ້ອມ. ມີສິດໃນການລົງຄະແນນສຽງຂອງບໍລິສັດ ທີ່ເຮັດໃຫ້ເຂົາເຈົ້າມີອິດທິພົນສຳຄັນໃນວິສາຫະກິດ. ຜູ້ບໍລິຫານ ລວມທັງຜູ້ອຳນວຍການ ແລະ ພະນັກງານ ຂອງ ບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວ ຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັບບຸກຄົນ ເຫຼົ່ານີ້ ຖືເປັນພາສ່ວນທີ່ກ່ຽວຂ້ອງ. ໃນການພິຈາລະນາສາຍສຳພັນ ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ບໍລິສັດ ຄຳນຶງເຖິງເນື້ອຫາຂອງສາຍສຳພັນ ແລະ ບໍ່ພຽງແຕ່ຮູບແບບທາງກົດໝາຍ.

ບໍລິສັດ ບໍລິຫານໂດຍ ຄອບຄົວ ສຸຄະບັນດິດ ເຊິ່ງເປັນຜູ້ທີ່ຖືຮຸ້ນສ່ວນໃຫຍ່ຂອງບໍລິສັດ ຊຶ່ງຖືຮຸ້ນ 51% ຂອງຮຸ້ນ ບໍລິສັດ. 34% ຂອງຮຸ້ນ ບໍລິສັດ ແມ່ນຖືໂດຍ “ Global house International Limited” ເຊິ່ງເປັນບໍລິສັດທີ່ຈົດທະບຽນໃນປະເທດໄທ ແລະ ສ່ວນເຫຼືອ 15% ແມ່ນຖືໂດຍ ບຸກຄົນທົ່ວ ໄປ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໃນປີ 31 ທັນວາ ປີ 2022 ທີ່ມີຄວາມສຳຄັນ ເຊິ່ງມີ ລາຍລະອຽດດັ່ງລຸ່ມນີ້:

9.1 ລາຍຮັບ ແລະ ລາຍຈ່າຍ

ລາຍລະອຽດ	2022 (ກີບ)	2021 (ກີບ)
ຊື້ສິນຄ້າ ຈາກພາກສ່ວນທີ່ກ່ຽວຂ້ອງ	118.292.444.214	81.054.770.914
ຄ່າເຊົ່າ	13.604.490.242	6.475.803.333

ລາຍຈ່າຍໃນການເຊົ່າແມ່ນຄ່າເຊົ່າທີ່ດິນ ແລະ ສິ່ງປຸກສ້າງ ຈາກຜູ້ຖືຮຸ້ນຫຼັກ ເພື່ອໃນການດຳເນີນງານ ໂດຍ ຄ່າເຊົ່າແມ່ນຂຶ້ນຢູ່ກັບການຕົກລົງທັງສອງຝ່າຍ ໂດຍອ້າງອີງຈາກລາຄາຕາມທ້ອງຕະຫຼາດ,

9.2 ຍອດຍັງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງກັນ

ລາຍລະອຽດ	2022 (ກີບ)	2021 (ກີບ)
ລ່ວງໜ້າຄ່າເຊົ່າ - ພາກສ່ວນທີ່ ກ່ຽວຂ້ອງ	33.760.220.765	
ໜີ້ຕ້ອງສິ່ງການຄ້າ - ພາກສ່ວນທີ່ ກ່ຽວຂ້ອງ	10.877.529.142	10.943.297.126
ລາຍຈ່າຍຄ່າເຊົ່າຄ້າງຈ່າຍ	-	2.594.224.397

9.3 ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ

ຜູ້ບໍລິຫານຫຼັກລວມເຖິງຜູ້ອຳນວຍການ. ເງິນສິດເຊີຍທີ່ຈ່າຍໃຫ້ກັບຜູ້ບໍລິຫານສຳລັບການ ບໍລິການການຈ້າງງານແມ່ນ ດັ່ງຕໍ່ໄປນີ້:

ລາຍລະອຽດ	2022 (ກີບ)	2021 (ກີບ)
ເງິນເດືອນ	2.978.805.616	2.138.794.365

10 ສັບສິນທີ່ໃຊ້ໃນການດຳເນີນທຸລະກິດ

ຫົວໜ່ວຍ ລ້ານກີບ

ໃບລາຍງານສະຖານະການເງິນ	2021	%	2022	%
ຊັບສິນ				
ຊັບສິນໝຸນວຽນ				
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3.285,27	0,35%	38.288,45	2,75%
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	12.497,87	1,32%	6.217,86	0,45%
ສິນຄ້າໃນສາງ, ສຸດທິ	289.175,47	30,45%	402.463,93	28,90%
ຊັບສິນໝຸນວຽນອື່ນໆ	7.159,85	0,75%	20.547,73	1,48%
ລວມຊັບສິນໝຸນວຽນ	**312.118,46**	**32,87%**	**467.517,99**	**33,57%**
ຊັບສິນບໍ່ໝຸນວຽນ				
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	637.484,07	67,13%	904.691,25	64,96%
ຊັບສິນຄົງທີ່ ບໍ່ມີຕົວຕົນ, ສຸດທິ	41,68	0,00%	116,39	0,01%
ຊັບສິນບໍ່ໝຸນວຽນອື່ນໆ		0,00%	20.355,86	1,46%
ລວມຊັບສິນບໍ່ໝຸນວຽນ	**637.525,75**	**67,13%**	**925.163,51**	**66,43%**
ລວມຊັບສິນ	**949.644,21**	**100,00%**	**1.392.681,50**	**100,00%**

ແຫຼ່ງຂໍ້ມູນຈາກບໍລິສັດ

11 ຂໍ້ມູນທາງການເງິນ

❖ ໃບລາຍງານສະຖານະທາງດ້ານການເງິນ ຫົວໜ່ວຍ ລ້ານກີບ

ໃບລາຍງານສະຖານະທາງການເງິນ	2020	%	2021	%	2022	%
ຊັບສິນໝຸນວຽນ						
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3.734,54	0,43%	3.285,27	0,35%	38.288,45	2,75%
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	11.221,22	1,29%	12.497,87	1,32%	6.217,86	0,45%
ສິນຄ້າໃນສາງ, ສຸດທິ	244.475,54	28,10%	289.175,47	30,45%	402.463,93	28,90%
ຊັບສິນໝຸນວຽນອື່ນໆ	7.373,68	0,85%	7.159,85	0,75%	20.547,73	1,48%
ລວມຊັບສິນໝຸນວຽນ	**266.804,99**	**30,67%**	**312.118,46**	**32,87%**	**467.517,99**	**33,57%**
ຊັບສິນບໍ່ໝຸນວຽນ	-	0,00%	-	0,00%		
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	603.046,16	69,32%	637.484,07	67,13%	904.691,25	64,96%
ຊັບສິນຄົງທີ່ ບໍ່ມີຕົວຕົນ, ສຸດທິ	38,98	0,00%	41,68	0,00%	116,39	0,01%
ຊັບສິນບໍ່ໝຸນວຽນອື່ນໆ		0,00%		0,00%	20.355,86	1,46%
ລວມຊັບສິນບໍ່ໝຸນວຽນ	**603.085,13**	**69,33%**	**637.525,75**	**67,13%**	**925.163,51**	**66,43%**
ລວມຊັບສິນ	**869.890,12**	**100,00%**	**949.644,21**	**100,00%**	**1.392.681,50**	**100,00%**
ໜີ້ສິນ ແລະ ທຶນ						
ໜີ້ສິນ						
ໜີ້ສິນໝຸນວຽນ						
ເງິນເບີກເກີນບັນຊີ ແລະ ເງິນກູ້ຍືມໄລຍະສັ້ນ	85.933,29	9,88%	85.686,57	9,02%	84.934,34	6,10%
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	43.605,03	5,01%	59.803,23	6,30%	51.745,04	3,72%
ສ່ວນໝຸນວຽນຂອງເງິນກູ້ຍືມໄລຍະຍາວ	9.068,67	1,04%	13.820,25	1,46%	20.671,00	1,48%
ອາກອນກຳໄລ	740,79	0,09%	4.066,65	0,43%	11.564,14	0,83%
ເງິນມັດຈຳຈາກລູກຄ້າ	1.130,45	0,13%	2.129,49	0,22%	2.003,39	0,14%
ໜີ້ສິນໝຸນວຽນອື່ນໆ	16.545,35	1,90%	14.747,21	1,55%	14.345,11	1,03%
ລວມໜີ້ສິນໝຸນວຽນ	**157.023,58**	**18,05%**	**180.253,41**	**18,98%**	**185.263,04**	**13,30%**
ໜີ້ສິນບໍ່ໝຸນວຽນ	**-**	**0,00%**	**-**	**0,00%**		
ເງິນກູ້ຍືມໄລຍະຍາວຈາກສະຖາບັນການເງິນ	8.998,42	1,03%	9.671,63	1,02%	58.329,40	4,19%
ລວມໜີ້ສິນບໍ່ໝຸນວຽນ	**8.998,42**	**1,03%**	**9.671,63**	**1,02%**	**58.329,40**	**4,19%**
ລວມໜີ້ສິນ	**166.022,00**	**19,09%**	**189.925,04**	**20,00%**	**243.592,45**	**17,49%**
ທຶນ						
ທຶນຈົດທະບຽນ	330.000,00	37,94%	330.000,00	34,75%	330.000,00	23,70%
ສ່ວນເພີ່ມມູນຄ່າຮຸ້ນ	24.735,72	2,84%	24.735,72	2,60%	24.735,72	1,78%
ກຳໄລສະສົມ						
ເງິນສຳຮອງຕາມກົດໝາຍ	5.973,93	0,69%	8.440,88	0,89%	14.102,04	1,01%

ເງິນສຳຮອງອື່ນໆ	5.723,93	0,66%	8.190,88	0,86%	13.852,04	0,99%
ກຳໄລລໍ່ຖ້າແບ່ງປັນ	164.542,72	18,92%	180.915,61	19,05%	217.954,97	15,65%
ຜິດຜ່ຽງຈາກການແປງຄ່າເອກະສານລາຍງານການເງິນ	172.891,82	19,88%	207.436,09	21,84%	548.444,25	39,38%
ລວມທຶນ	**703.868,12**	**80,91%**	**759.719,17**	**80,00%**	**1.149.089,04**	**82,51%**
ລວມໜີ້ສິນ ແລະ ທຶນ	**869.890,12**	**100,00%**	**949.644,21**	**100,00%**	**1.392.681,50**	**100,00%**

❖ ໃບລາຍງານຜົນໄດ້ຮັບ ຫົວໜ່ວຍ ລ້ານກີບ

ໃບລາຍງານຜົນໄດ້ຮັບ	2020	%	2021	%	2022	%
ລາຍໄດ້ຈາກການຂາຍ	396.712,89	100,00%	455.188,80	100,00%	647.161,52	100,00%
ຕົ້ນທຶນໃນການຂາຍ	(326.144,24)	-82,21%	(358.083,96)	-78,67%	(485.502,86)	-75,02%
ກຳໄລລວມຂັ້ນຕົ້ນ	**70.568,65**	**17,79%**	**97.104,84**	**21,33%**	**161.658,66**	**24,98%**
ລາຍຮັບອື່ນໆ (ລາຍຈ່າຍອື່ນໆ)	2.112,33	0,53%	1.541,72	0,34%	2.561,65	0,40%
ລາຍຈ່າຍໃນການຂາຍ	(31.813,07)	-8,02%	(35.015,27)	-7,69%	(53.069,06)	-8,20%
ລາຍຈ່າຍບໍລິຫານ	(28.552,98)	-7,20%	(31.639,11)	-6,95%	(43.132,82)	-6,66%
ລາຍຈ່າຍການເງິນ	(4.684,27)	-1,18%	(4.989,58)	-1,10%	(8.124,60)	-1,26%
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນ, ສຸດທິ	5.076,20	1,28%	1.610,15	0,35%	6.662,86	1,03%
ກຳໄລ ກ່ອນຈ່າຍອາກອນລາຍໄດ້	**12.706,85**	**3,20%**	**28.612,75**	**6,29%**	**66.556,67**	**10,28%**
ອາກອນກຳໄລ	(697,39)	-0,18%	(3.943,26)	-0,87%	(9.994,96)	-1,54%
ກຳໄລສຸດທິ	**12.009,46**	**3,03%**	**24.669,49**	**5,42%**	**56.611,71**	**8,75%**
ກຳໄລຕໍ່ຮຸ້ນ	**73**		**150**		**343**	

❖ ໃບລາຍງານກະແສເງິນສົດ ຫົວໜ່ວຍ ລ້ານກີບ

ໃບລາຍງານກະແສເງິນສົດ	2020	2021	2022
ກະແສເງິນສົດຈາກກິດຈະກຳດຳເນີນງານ			
ກຳໄລສຸດທິກ່ອນອາກອນກຳໄລສຳລັບປີ	12.706,85	28.612,75	66.556,67
ການດັດແກ້			
ຄ່າຫຼຸຍຫ້ຽນ	16.947,51	18.280,66	23.011,15
ການຕັດຈ່າຍ	43,16	26,85	6.694,68
(ກຳໄລ)/ຂາດທຶນຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ	(11,66)	(26,92)	(341,14)
(ກຳໄລ)/ຂາດທຶນຈາກອັດຕາແລກປ່ຽນ	(3.545,41)	(507,67)	10.898,52
ລາຍຈ່າຍດອກເບ້ຍ	4.684,29	4.989,58	8.124,60

ສຳຮອງເງິນແຮເຄື່ອງໃນສາງເຄື່ອນໄຫວຊ້າ ແລະ ລ້າສະໄໝ	39,53	73,12	1.507,68
ສຳຮອງເງິນແຮໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	374,66	588,64	3.660,18
ສຳຮອງສຳລັບສິ່ງຄືນການຂາຍຂອງໜີ້ຕ້ອງຮັບ	102,61	130,96	800,69
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນໝຸນວຽນ	31.341,54	52.167,96	114.225,06
ການປ່ຽນແປງຈາກການດຳເນີນງານຂອງເງິນທຶນໝຸນວຽນ			
- ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	6.258,78	(1.454,75)	7.318,07
- ເຄື່ອງໃນສາງ	(14.988,00)	(32.972,70)	12.438,56
- ຊັບສິນໝຸນວຽນອື່ນໆ	1.625,05	569,74	(30.593,48)
- ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ	(6.172,30)	12.501,74	(33.568,27)
- ເງິນມັດຈຳຈາກລູກຄ້າ	155,42	944,47	(1.063,05)
- ໜີ້ສິນໝຸນວຽນອື່ນໆ	(3.692,67)	(2.756,30)	(69.949,82)
ກະແສເງິນສົດໃຊ້ຈາກການດຳເນີນງານ	14.527,80	29.000,17	61.807,06
ຈ່າຍດອກເບ້ຍ	(4.643,20)	(4.830,02)	(8.065,52)
ຈ່າຍອາກອນກຳໄລ	(325,89)	(699,38)	(3.951,26)
ເງິນສົດສຸດທິ ໃຊ້ໄປສຳລັບກິດຈະກຳການດຳເນີນງານ	**9.558,72**	**23.470,76**	**49.790,28**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດຖິ່ງທີ່	(11.051,30)	(22.689,53)	(14.489,15)
ຊື້ຊັບສິນບັດບໍ່ມີຕົວຕົນ	(7,96)	(28,51)	(63,06)
ຮັບເງິນຈາກການຂາຍດິນ, ອາຄານ ແລະ ອຸປະກອນ	140,79	125,52	550,06
ເງິນສົດສຸດທີ່ໃຊ້ໃນກິດຈະກຳການລົງທຶນ	**(10.918,47)**	**(22.592,52)**	**(14.002,15)**
ກະແສເງິນສົດຈາກກິດຈະກຳການເງິນ			
ຮັບເງິນກູ້ຍືມຈາກທະນາຄານ	373.688,46	405.638,54	496.320,01
ການຊຳລະຄືນຂອງເງິນກູ້ຈາກທະນາຄານ	(374.492,43)	(405.480,36)	(489.601,28)
ຈ່າຍເງິນປັນຜົນ	(2.640,00)	(3.362,70)	(8.250,00)
ເງິນສົດສຸດທິຈາກກິດຈະກຳທາງການເງິນ	**(3.443,97)**	**(3.204,51)**	**(1.531,27)**
ຫຼຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ	(4.803,72)	(2.326,27)	34.256,85
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ	3.740,21	3.734,54	3.285,27
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4.798,05	1.877,02	746,32
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	**3.734,54**	**3.285,28**	**38.288,45**
ລາຍການບໍ່ແມ່ນເງິນສົດ			
ໜີ້ຕ້ອງສິ່ງອື່ນໆ ຈາກການຊື້ຊັບສິນຖິ່ງທີ່	554,74	1.591,87	789,04

ດອກເບ້ຍຄ້າງຊຳລະ	41,09	159,56	69,70

❖ ອັດຕາສ່ວນທາງການເງິນທີ່ສຳຄັນ

ອັດຕາສ່ວນທາງການເງິນທີ່ສຳຄັນ	2020	2021	2022
ອັດຕາສ່ວນວັດສະພາບຄ່ອງ (Liquidity ratio)			
ອັດຕາສ່ວນສະພາບຄ່ອງ (Current ratio)	1,70	1,73	2,52
ອັດຕາສ່ວນໝູນໄວ (Quick ratio)	0,14	0,13	0,35
ອັດຕາສ່ວນໝູນວຽນລູກໜີ້ການຄ້າ.(A/R turnover)	35,35	36,42	104,08
ໄລຍະເວລາເກັບໜີ້ (Days A/R)	10,32	10,02	3,51
ອັດຕາໝູນສິນຄ້າງໃນສາງ (Inventories turnover)	1,33	1,24	1,21
ໄລຍະເວລາຂາຍສິນຄ້າ (Days inventories)	274,43	294,35	301,65
ອັດຕາໝູນເຈ້ົາໜີ້ການຄ້າ (A/P turnover)	7,48	5,99	9,38
ໄລຍະເວລາຊຳລະເຈ້ົາໜີ້ການຄ້າ (Days A/P)	48,80	60,93	38,91
ອັດຕາສ່ວນຄວາມສາມາດໃນການສ້າງກຳໄລ (Profitability ratio)			
ອັດຕາສ່ວນກຳໄລຂັ້ນຕົ້ນ (Gross profit margin)	17,79%	21,33%	24,98%
ອັດຕາສ່ວນກຳໄລກອນຫັກອາກອນ (Profit before tax)	3,20%	6,29%	10,28%
ອັດຕາສ່ວນກຳໄລສຸດທິ (Net profit margin)	3,03%	5,42%	8,75%
ອັດຕາສ່ວນກຳໄລສຸດທິຕໍ່ສ່ວນຂອງຜູ້ຖືຮຸ້ນ (ROE)	1,71%	3,25%	4,93%
ອັດຕາສ່ວນກຳໄລສຸດທິຕໍ່ຊັບສິນລວມ (ROA)	1,38%	2,60%	4,06%
ອັດຕາສ່ວນນະໂຍບາຍທາງການເງິນ (Financial policy ratio)			
ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງຜູ້ຖືຮຸ້ນ (D/E)	0,24	0,25	0,21
ອັດຕາສ່ວນຄວາມສາມາດໃນການຊຳລະດອກເບ້ຍ (interest coverage)	3,71	6,73	9,19

12 ຂໍ້ຂັດແຍ່ງທາງດ້ານກົດໝາຍ

ຜູ້ອອກຮຸ້ນກູ້ ໄດ້ດຳເນີນການສະເໜີຂໍໃບຢັ້ງຢືນກ່ຽວກັບການບໍ່ຖືກຮ້ອງຟ້ອງການດຳເນີນຄະດີກັບສານປະຊາຊົນເຂດທີ່ທຸລະກິດຂອງຕົນດຳເນີນໃນປະຈຸບັນ ເພື່ອຢັ້ງຢືນວ່າ ຜູ້ອອກຮຸ້ນກູ້ ບໍ່ມີການຖືກຮ້ອງຟ້ອງດຳເນີນຄະດີທີ່ຈະມີຜົນຮ້າຍແຮງຕໍ່ການດຳເນີນທຸລະກິດ ໃນຊ່ວງໄລຍະການກະກຽມ ຍື່ນຂໍ້ສະເໜີ ຂໍອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດນຳ ສຄຄຊ ແລະ ໃນໄລຍະຍື່ນພິຈາລະນາການຂໍທຶບທວນຄວາມເປັນໄປໄດ້ໃນການນຳຮຸ້ນກູ້ເຂົ້າຈົດທະບຽນກັບ ຕລຊລ.

ການຢັ້ງຢືນຈາກສານປະຊາຊົນ ເຂດຕ່າງໆ ໄດ້ຢັ້ງຢືນມີດັ່ງລຸ່ມນີ້:

ສານປະຊາຊົນ ເຂດ	ຜົນການຢັ້ງຢືນ	ເລກທີ່ເອກະສານ
ນະຄອນຫຼວງວຽງຈັນ	ບໍ່ມີສຳນວນຄະດີຮ້ອງຟ້ອງຢູ່ສານ	ເລກທີ 14/ ສປຊ.ນວ ລົງວັນທີ 28/03/2023
ບໍລິຄຳໄຊ	ບໍ່ມີສຳນວນຄະດີຮ້ອງຟ້ອງຢູ່ສານ	ເລກທີ 61/ ສປຊ.ຂ ລົງວັນທີ 07/04/2023
ຄຳມ່ວນ	ບໍ່ມີສຳນວນຄະດີຮ້ອງຟ້ອງຢູ່ສານ	ເລກທີ 06/ ສປຊ.ຄມ ລົງວັນທີ 30/03/2023
ສະຫວັນນະເຂດ	ບໍ່ມີສຳນວນຄະດີຮ້ອງຟ້ອງຢູ່ສານ	ເລກທີ 04/ ສປຊ.ສຂ ລົງວັນທີ 07/04/2023
ຈຳປາສັກ	ບໍ່ມີສຳນວນຄະດີຮ້ອງຟ້ອງຢູ່ສານ	ເລກທີ 157/ ສປຊ.ຈສ ລົງວັນທີ 28/03/2023

13 ການຈົດທະບຽນໃນຕະຫຼາດລັກຊັບລາວ

ຜູ້ອອກຮຸ້ນກູ້ ຈະດຳເນີນການນຳຮຸ້ນກູ້ໄປ ຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ແລະ ຝາກໄວ້ໃນສູນຮັບຝາກຫຼັກຊັບ ພາຍຫຼັງໄດ້ຮັບຮັບໃບຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້ ຈາກ ສຄຄຊ ຕາມນິຕິກຳທີ່ກ່ຽວຂ້ອງກຳນົດ.

ພາກທີ 3

ຂໍ້ມູນກ່ຽວກັບການອອກຈຳໜ່າຍຮຸ້ນກູ້

1. ຂໍ້ມູນການອອກຈຳໜ່າຍຮຸ້ນກູ້

ຮຸ້ນກູ້ຂອງ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ປະເພດລະບຸຊື່ຜູ້ຖື ບໍ່ດ້ອຍສິດບໍ່ມີຄ້ຳປະກັນ ແລະ ຕົວແທນຜູ້ຖືຮຸ້ນກູ້ຄັ້ງທີ່ 1, ງວດທີ່ 1, ອາຍຸ 4ປີ ຄົບອາຍຸການໄຖ່ຖອນ ປີ 2027, ມູນຄ່າອອກຈຳໜ່າຍລວມ 3.000.000 ໂດລາ ສະຫະລັດ, ມູນຄ່າກຳນົດ 50.000 ໂດລາ ສະຫະລັດ, ລາຄາຂາຍ 50.000 ໂດລາ ສະຫະລັດ ອັດຕາດອກເບ້ຍຮຸ້ນກູ້ 7,5% ຕໍ່ປີ ຈ່າຍດອກເບ້ຍ ທຸກໆ 6 ເດືອນ ທຸກໆ ວັນທີ 19 ພຶດສະພາ ແລະ 19 ພະຈິກ ຕະຫຼອດອາຍຸຮຸ້ນກູ້, ວັນຄົບອາຍຸການໄຖ່ຖອນ 19 ພຶດສະພາ 2027

ການສະເໜີຂາຍຮຸ້ນກູ້ໃນຄັ້ງນີ້ ແມ່ນດຳເນີນຜ່ານຕົວແທນການຈັດຈຳໜ່າຍຮຸ້ນກູ້ ຊຶ່ງໄດ້ສະເໜີຂາຍໃຫ້ສະເພາະແກ່ ຜູ້ລົງທຶນປະເພດສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່ ໂດຍອີ່ງຕາມ ຂໍ້ຕົກລົງວ່າ ດ້ວຍ ການອອກຈຳໜ່າຍຮຸ້ນກູ້ (ສະບັບປັບປຸງ) ເລກທີ່ 20/ຄຄຊ ລົງວັນທີ 23 ມິຖຸນາ 2021 ໄດ້ກຳນົດນິຍາມຄື ດັ່ງລຸ່ມນີ້:

ກ. ຜູ້ລົງທຶນບຸກຄົນລາຍໃຫຍ່

ຜູ້ລົງທຶນບຸກຄົນລາຍໃຫຍ່ ຕ້ອງເປັນຜູ້ທີ່ມີຄວາມຮູ້ ຄວາມສາມາດທາງດ້ານການເງິນ, ມີປະສົບການດ້ານການລົງທຶນ, ມີຊັບສິນທັງໝົດ ບໍ່ໜ້ອຍ 5 ຕື້ກີບ ຫຼື ລາຍຮັບທັງໝົດປະຈຳປີ ບໍ່ໜ້ອຍ 400.000.000 ກີບ ຫຼື ມູນຄ່າລົງທຶນໃນຫຼັກຊັບທັງໝົດ ບໍ່ໜ້ອຍ 1 ຕື້ກີບ.

ຂ. ຜູ້ລົງທຶນສະຖາບັນ

ຜູ້ລົງທຶນສະຖາບັນ ແມ່ນຜູ້ລົງທຶນນິຕິບຸກຄົນ ທີ່ມີປະສົບການດ້ານການລົງທຶນ ຕ້ອງບໍ່ແມ່ນ ຜູ້ລົງທຶນປະເພດສະຖາບັນ ຕາມທີ່ໄດ້ກຳນົດໄວ້ໃນ ກົດ ໝາຍວ່າດ້ວຍຫຼັກຊັບ (ສະບັບ ປັບປຸງ) ຕາມມາດຕາ 3 ຂໍ້ 19 ປະກອບມີ: ທະນາຄານທຸລະກິດ, ບໍລິສັດຫຼັກຊັບ, ກອງທຶນ ເພື່ອການລົງທຶນ, ບໍລິສັດປະກັນໄພ, ກອງທຶນປະກັນສັງຄົມ ແລະ ສະຖາບັນ ຫຼື ນິຕິບຸກຄົນ ອື່ນຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ. ມີຊັບສິນສຸດທິ ບໍ່ໜ້ອຍ 10 ຕື້ ກີບ ຫຼື ມູນຄ່າການລົງທຶນທັງໝົດ ບໍ່ໜ້ອຍ 2ຕື້ກີບ.

ຕົວແທນການຈັດຈຳໜ່າຍຮຸ້ນກູ້ຈະເປັນຜູ້ຊ່ວຍໃນການຈັດຈຳໜ່າຍຮຸ້ນ ອີງຕາມສັນຍາວ່າດ້ວຍ ການໃຫ້ບໍລິການທີ່ປຶກສາການເງິນ ແລະ ຕົວແທນການຈັດຈຳໜ່າຍຮຸ້ນກູ້ ສະບັບລົງວັນທີ 27 ກຸມພາ 2023 ແຕ່ຈະບໍ່ມີການຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ແຕ່ຢ່າງໃດ.

2. ລາຍລະອຽດຂອງຮຸ້ນກູ້ທີ່ສະເໜີຂາຍ

ຄຳສັບ ແລະ ຂໍ້ຄວາມທີ່ໄດ້ລະບຸໄວ້ໃນສ່ວນທີ 3 ນີ້ ແມ່ນມີຄວາມໝາຍເຊັ່ນດຽວກັບທີ່ໄດ້ລະບຸ ໄວ້ໃນ ເອກະສານ ຂໍ້ກຳນົດສິດ ແລະ ໜ້າທີ່ຂອງ ຜູ້ອອກ ແລະ ຜູ້ຖືຮຸ້ນກູ້ ສຳລັບຮຸ້ນກູ້ທີ່ສະເໜີຂາຍ ຄັ້ງນີ້ ຕາມເອກະສານຊ້ອນທ້າຍ 1 (ຂໍ້ກຳນົດ ເວັ້ນເສຍແຕ່ຈະໄດ້ກຳນົດ ແລະ ຂຽນອະທິບາຍເພີ່ມຕື່ມ ສະເພາະ ໃນສ່ວນນີ້).

2.1 ລາຍລະອຽດຂອງຮຸ້ນກູ້ທີ່ສະເໜີຂາຍ

ຜູ້ອອກຮຸ້ນກູ້	ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
ປະເພດຮຸ້ນກູ້	• ຮຸ້ນກູ້ປະເພດລະບຸຊື່ຜູ້ຖື • ຮຸ້ນກູ້ປະເພດບໍ່ດ້ອຍສິດບໍ່ມີຄ້ຳປະກັນ
ປະເພດການສະເໜີຂາຍ	ອອກໃນວົງຈຳກັດ (Private Placement) ສະເໜີຂາຍໃຫ້ແກ່ ຜູ້ລົງທຶນສະຖາບັນການເງິນ ກັບ ຜູ້ລົງທຶນລາຍໃຫຍ່ ແມ່ນ ລວມກັນ ບໍ່ເກີນ 10 ລາຍ
ສະກຸນເງິນ	ໂດລາ
ຈຳນວນຮຸ້ນກູ້ທີ່ສະເໜີຂາຍ	60 ໜ່ວຍ
ມູນຄ່າລວມຂອງຮຸ້ນກູ້ທີ່ສະເໜີຂາຍ	3.000.000 ໂດລາ ສຫລ
ມູນຄ່າກຳນົດ	50.000 ໂດລາ ສຫລ ຕໍ່ ໜ່ວຍ
ລາຄາສະເໜີຂາຍ	50.000 ໂດລາ ສຫລ ຕໍ່ ໜ່ວຍ
ອາຍຸຮຸ້ນກູ້	4 ປີ
ອັດຕາດອກເບ້ຍຮຸ້ນກູ້	7,5% (ຈ່າຍແບບຄົງທີ່) ຕໍ່ປີ
ງວດການຊຳລະດອກເບ້ຍ	ທຸກໆ 6 ເດືອນ (2 ຄັ້ງ/ປີ)
ມື້ຈ່າຍດອກເບ້ຍ	19 ພຶດສະພາ ແລະ 19 ພະຈິກ ຕະຫຼອດອາຍຸຮຸ້ນກູ້
ໄລຍະເວລາການສະເໜີຂາຍ	15 ຫາ 19 ພຶດສະພາ 2023
ວັນອອກຮຸ້ນກູ້	19 ພຶດສະພາ 2023
ວັນຄົບກຳນົດການໄຖ່ຖອນຮຸ້ນກູ້	19 ພຶດສະພາ 2027
ການຊຳລະຄືນເງິນຕົ້ນ	ໄຖ່ຖອນເມື່ອເຖິງວັນຄົບກຳນົດ
ສິດຂອງຜູ້ຖືຮຸ້ນກູ້ໃນການໄຖ່ຖອນຮຸ້ນກູ້ກ່ອນວັນຄົບກຳນົດ	ບໍ່ມີ
ສິດຂອງຜູ້ອອກຮຸ້ນກູ້ໃນການໄຖ່ຖອນຮຸ້ນກູ້ກ່ອນວັນຄົບກຳນົດ	ມີສິດ
ຂໍ້ຈຳກັດໃນການຂາຍ/ໂອນ	ຮຸ້ນກູ້ທີ່ສະເໜີຂາຍເປັນການສະເໜີຂາຍຕໍ່ຜູ້ລົງທຶນປະເພດສະຖາບັນ ແລະ / ຫຼື ຜູ້ລົງທຶນລາຍໃຫຍ່ເທົ່ານັ້ນ ດັ່ງນັ້ນ ຜູ້ອອກຮຸ້ນກູ້ຂໍສະຫງວນສິດທີ່ຈະປະຕິເສດບໍ່ຮັບການຈົດທະບຽນການໂອນຮຸ້ນກູ້ໃນທຸກໆ ກໍລະນີ ທີ່ບໍ່ແມ່ນ ຜູ້ລົງທຶນປະເພດສະຖາບັນ ແລະ / ຫຼື ຜູ້ລົງທຶນລາຍໃຫຍ່ ເວັ້ນເສຍແຕ່ແມ່ນການໂອນຮຸ້ນກູ້ຕາມການສືບທອດທາງມູນມໍລະດົກ.
ການຈັດອັນດັບຄວາມໜ້າເຊື່ອຖື	ບໍ່ມີການຈັດ
ຕະຫຼາດຮອງຂອງຮຸ້ນກູ້	ມີ
ການຄ້ຳປະກັນ/ຫຼັກຊັບຄ້ຳປະກັນ	ບໍ່ມີ
ຕົວແທນການຈັດຈຳໜ່າຍຮຸ້ນກູ້	ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ (BCEL-KT)
ຕົວແທນຜູ້ຖືຮຸ້ນກູ້	ບໍ່ມີ
ນາຍທະບຽນຫຼັກຊັບ	ຕະຫຼາດຫຼັກຊັບລາວ

2.2 ແຜນການຊຳລະຕົ້ນທຶນ ແລະ ດອກເບ້ຍ

ການຊຳລະຄືນຕົ້ນທຶນ	ຊຳລະຄືນເງິນຕົ້ນທຶນຈຳນວນທັງໝົດໃນມື້ຄົບກຳນົດໄຖ່ຖອນຮຸ້ນກູ້ ໃນກໍລະນີທີ່ອັນຄົບກຳນົດການໄຖ່ຖອນຮຸ້ນກູ້ດັ່ງກ່າວ ຫາກກົງກັບອັນພັກ ອັນຊຳລະເງິນດັ່ງກ່າວຈະຖືກເລື່ອນເປັນອັນຊື້ຂາຍຖັດໄປ
ການຊຳລະດອກເບ້ຍ	ບໍລິສັດຈະຊຳລະດອກເບ້ຍຂອງຮຸ້ນກູ້ທຸກໆ 6 (ຫົກ) ເດືອນ ໃນວັນທີ 19 ພຶດສະພາ ແລະ 19 ພະຈິກ ຂອງທຸກປີ ຕະຫຼອດອາຍຸຂອງຮຸ້ນກູ້. ໂດຍດອກເບ້ຍງວດທຳອິດຈະເລີ່ມຊຳລະແມ່ນໃນວັນທີ 19 ພະຈິກ 2023 ແລະ ດອກເບ້ຍງວດສຸດທ້າຍ ຈະຊຳລະໃນວັນຄົບກຳນົດໄຖ່ຖອນຮຸ້ນກູ້. ໃນກໍລະນີທີ່ ວັນຄົບກຳນົດຊຳລະດອກເບ້ຍຂອງຮຸ້ນກູ້ດັ່ງກ່າວ ຫາກບໍ່ກົງກັບ ວັນຊື້ຂາຍຮຸ້ນ ແມ່ນໃຫ້ເລື່ອນວັນຊຳລະດອກເບ້ຍເປັນວັນ ຊື້ຂາຍຮຸ້ນໃນມື້ວັນຖັດໄປ ໂດຍບໍລິສັດບໍ່ຈຳເປັນຕ້ອງຊຳລະດອກເບ້ຍ ຫຼື ເງິນເພີ່ມໃດໆສຳລັບການເລື່ອນຊຳລະດອກເບ້ຍ. ຍົກເວັ້ນໃນກໍລະນີ ການຊຳລະດອກເບ້ຍຮຸ້ນກູ້ງວດສຸດທ້າຍນັ້ນ ໃຫ້ຄຳນວນດອກເບ້ຍ ຕາມເງື່ອນໄຂໃນຂໍ້ກຳນົດຕໍ່ໄປຈົນເຖິງ (ແຕ່ບໍ່ລວມ) ວັນທີ່ມີການຊຳລະຕົວຈິງ.
ການຄິດໄລ່ດອກເບ້ຍ	ຈຳນວນດອກເບ້ຍທີ່ຈະຕ້ອງຊຳລະ ຈະຄິດໄລ່ໂດຍການນຳ (ກ) ຜົນຄູນຂອງຈຳນວນເງິນຕົ້ນຄົງຄ້າງຂອງຮຸ້ນກູ້ແຕ່ລະງວດ ກັບອັດຕາດອກເບ້ຍຮຸ້ນກູ້ ໄປຄູນກັບ (ຂ) ຈຳນວນວັນສຳລັບງວດດອກເບ້ຍນັ້ນແລ້ວນຳມາຫານດ້ວຍ 365 ຫຼື ຈຳນວນວັນຕົວຈິງໃນປີປະຕິທິນນັ້ນ. ການຄິດໄລ່ດອກເບ້ຍແມ່ນເລີ່ມຕັ້ງແຕ່ (ລວມເຖິງ) ວັນອອກພັນທະບັດ ຈົນເຖິງ (ແຕ່ບໍ່ນັບລວມ) ວັນຈ່າຍດອກເບ້ຍແຕ່ລະງວດ ຫຼື ວັນຄົບກຳນົດໄຖ່ຖອນຮຸ້ນກູ້ດັ່ງກ່າວ ແລະ ໃຫ້ຜົນຄິດໄລ່ດອກເບ້ຍຮຸ້ນກູ້ມີຈຳນວນດອກເບ້ຍຈະກຳນົດທິດສະນິຍົມບໍ່ເກີນ 2 ຕຳແໜ່ງ (ໃນກໍລະນີຜົນອອກມາມີ 3 ຕຳແໜ່ງ ໃຫ້ປັດເສດທິດສະນິຍົມໃນຕຳແໜ່ງທີ 2 ຂຶ້ນ ຫາກມີເລກເສດຫຼາຍກວ່າ ຫຼື ເທົ່າກັບ 5, ນອກນັ້ນໃຫ້ປັດລົງ). ສະແດງສູດຄືໄລ່ຄື: (ເງິນຕົ້ນຄົງຄ້າງຂອງຮຸ້ນກູ້) x (ອັດຕາດອກເບ້ຍຮຸ້ນກູ້) x (ຈຳນວນວັນສຳລັບງວດດອກເບ້ຍງວດນັ້ນ) _____ (365 ຫຼື ຈຳນວນວັນຕົວຈິງໃນປະຕິທິນນັ້ນ)
ດອກເບ້ຍຜິດນັດ	ກໍລະນີ ຜິດນັດຊຳລະດອກເບ້ຍຮຸ້ນກູ້ທີ່ຍັງບໍ່ຮອດກຳນົດໄຖ່ຖອນ ແລະ ເຫດການຜິດນັດຊຳລະ ບໍ່ໄດ້ເປັນສາເຫດ ເຮັດໃຫ້ຮຸ້ນກູ້ຮອດກຳນົດການໄຖ່ຖອນກ່ອນກຳນົດແມ່ນ: ໃຫ້ຄິດໄລ່ດອກເບ້ຍໃນອັດຕາດອກເບ້ຍຜິດນັດ ສຳລັບຈຳນວນເງິນຕົ້ນທີ່ຄ້າງຊຳລະ ໂດຍຄຳນວນນັບຈາກວັນຜິດນັດຊຳລະຈົນເຖິງ (ແຕ່

	ບໍ່ລວມ) ອັນທີ ຜູ້ຖືຮຸ້ນກູ້ໄດ້ຮັບຊຳລະດອກເບ້ຍຜິດນັດທີ່ຄ້າງຊຳລະຄົບຖ້ວນແລ້ວ. ກໍລະນີ ຜິດນັດຊຳລະດອກເບ້ຍຮຸ້ນກູ້ທີ່ຍັງບໍ່ຮອດກຳນົດໄຖ່ຖອນແຕ່ເຫດການຜິດນັດຊຳລະ ເປັນເຫດໃຫ້ຮຸ້ນກູ້ຮອດກຳນົດໄຖ່ຖອນກ່ອນກຳນົດເວລາແມ່ນ: ໃຫ້ຄິດໄລ່ດອກເບ້ຍໃນອັດຕາດອກເບ້ຍຜິດນັດ ສຳລັບຈຳນວນເງິນຕົ້ນທີ່ຄ້າງຊຳລະ ໂດຍຄຳນວນນັບຈາກວັນຄົບກຳນົດໄຖ່ຖອນຮຸ້ນກູ້ງວດນັ້ນທີ່ຮອດກຳນົດຊຳລະກ່ອນວັນຄົບກຳນົດໄຖ່ຖອນອັນເນື່ອງຈາກການຜິດນັດຊຳລະຈົນເຖິງ (ແຕ່ບໍ່ລວມ) ວັນທີ ຜູ້ຖືຮຸ້ນກູ້ໄດ້ຮັບຊຳລະເງິນຕົ້ນທີ່ຄ້າງຊຳລະຄົບຖ້ວນແລ້ວ. ກໍລະນີ ຜິດນັດຊຳລະດອກເບ້ຍຮຸ້ນກູ້ທີ່ຄົບກຳນົດໄຖ່ຖອນ ແມ່ນ: ໃຫ້ຄິດໄລ່ດອກເບ້ຍໃນອັດຕາດອກເບ້ຍຜິດນັດ ສຳລັບຈຳນວນເງິນຕົ້ນທີ່ຄ້າງຊຳລະ ໂດຍຄຳນວນນັບຈາກວັນຄົບກຳນົດໄຖ່ຖອນຮຸ້ນກູ້ຈົນເຖິງ (ແຕ່ບໍ່ລວມ) ວັນທີ ຜູ້ຖືຮຸ້ນກູ້ໄດ້ຮັບຊຳລະເງິນຕົ້ນທີ່ຄ້າງຊຳລະຄົບຖ້ວນແລ້ວ. ອັດຕາດອກເບ້ຍຜິດນັດ ແມ່ນອັດຕາດອກເບ້ຍທີ່ກຳນົດຕາມການເຈລະຈາລະຫວ່າງ ຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້ ແຕ່ຕ້ອງບໍ່ໜຸດ ຫຼື ເທົ່າກັບຕາມອັດຕາດອກເບ້ຍທີ່ໄດ້ຮັບຈາກການອອກຮຸ້ນກູ້ໃນຄັ້ງນີ້.
ວິທີການຊຳລະດອກເບ້ຍ ແລະ ຕົ້ນທຶນ	ຜູ້ອອກຮຸ້ນກູ້ຈະຊຳລະດອກເບ້ຍແຕ່ລະງວດ ໃຫ້ແກ່ຜູ້ຖືຮຸ້ນກູ້ຜ່ານນາຍທະບຽນຫຼັກຊັບຕາມຊື່ທີ່ປະກົດຢູ່ໃນປຶ້ມທະບຽນຜູ້ຖືຮຸ້ນກູ້ໃນມື້ປິດປຶ້ມເພື່ອກຳນົດສິດຮັບດອກເບ້ຍແລ້ວໂອນໃຫ້ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ (ຫຼື ບໍລິສັດຫຼັກຊັບທີ່ຜູ້ຖືຮຸ້ນກູ້ເປີດບັນຊີນຳ) ເປັນຜູ້ກະຈາຍເງິນໄປຫາຜູ້ລົງທຶນ ໂດຍການໂອນເງິນຜ່ານຕົວແທນຂອບໍລິສັດ ຫຼື ວິທີ່ອື່ນໆ ຕາມຜູ້ອອກ ແລະ ນາຍທະບຽນໄດ້ຕົກລົງກັນຕາມແຕ່ລະກໍລະນີ, ສ່ວນການຊຳລະດອກເບ້ຍງວດສຸດທ້າຍ ແມ່ນຈະຊຳລະພ້ອມກັບຕົ້ນທຶນ.
ການໄຖ່ຖອນຫຸ້ນກູ້ໃນມື້ຄົບກຳນົດ	ຜູ້ອອກຮຸ້ນກູ້ຈະຊຳລະຕົ້ນທຶນພ້ອມກັບດອກເບ້ຍງວດສຸດທ້າຍ ໃຫ້ແກ່ຜູ້ຖືຮຸ້ນກູ້ ຜ່ານນາຍທະບຽນຫຼັກຊັບ ຕາມຊື່ທີ່ປະກົດຢູ່ໃນປຶ້ມທະບຽນຜູ້ຖືຮຸ້ນກູ້ໃນມື້ປິດປຶ້ມເພື່ອກຳນົດສິດຮັບດອກເບ້ຍ ແລ້ວໂອນໃຫ້ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ (ຫຼື ບໍລິສັດຫຼັກຊັບທີ່ຜູ້ຖືຮຸ້ນກູ້ເປີດບັນຊີນຳ) ເປັນຜູ້ກະຈາຍເງິນໄປຫາຜູ້ລົງທຶນ ໂດຍການໂອນເງິນ

	ຜ່ານທະນາຄານຕົວແທນຂອງບໍລິສັດ ຫຼື ວິທີ່ອື່ນໆ ຕາມຜູ້ອອກຮຸ້ນກູ້ ແລະ ນາຍທະບຽນຫຼັກຊັບ ໄດ້ຕົກລົງກັນຕາມແຕ່ລະກໍລະນີ.
ການຊື້ຮຸ້ນກູ້ຄືນ	ຜູ້ອອກຮຸ້ນກູ້ມີສິດຊື້ຮຸ້ນກູ້ຄືນຈາກຜູ້ຖືຮຸ້ນກູ້, ການຊື້ຄືນຮຸ້ນກູ້ ແມ່ນການຊໍາລະຕົ້ນທຶນ ແລະ ດອກເບ້ຍ ຕາມມູນຄ່າທີ່ກໍານົດໄວ້ໃນໜ້າໃບຢັ້ງຢືນຮຸ້ນກູ້ພ້ອມທັງຄ່າເສຍໂອກາດ ຕາມການຕົກລົງລະຫວ່າງ ຜູ້ອອກ ແລະ ຜູ້ຖືຮຸ້ນກູ້ ໃນກໍລະນີຜູ້ອອກຮຸ້ນກູ້ຕ້ອງການໄຖ່ຖອນຮຸ້ນກູ້ກ່ອນຄົບກໍານົດ. ຜູ້ອອກຮຸ້ນກູ້ສາມາດຊື້ຮຸ້ນກູ້ຄືນ ທັງໝົດ ຫຼື ບາງສ່ວນກໍ່ໄດ້ ພາຍຫຼັງທີ່ຮຸ້ນກູ້ອອກຈໍາໜ່າຍເກີນ 1 ປີ ຊຶ່ງນັບຈາກ ວັນທີ 19 ພຶດສະພາ ປີ 2023 (ວັນອອກຮຸ້ນກູ້) ເປັນຕົ້ນໄປ. ເມື່ອຜູ້ອອກຮຸ້ນກູ້ໄດ້ ຊື້ຄືນຮຸ້ນກູ້ແລ້ວໃຫ້ຖືວ່າ ໜີ້ຕາມຮຸ້ນກູ້ ດັ່ງກ່າວ ໄດ້ສິ້ນສຸດແລ້ວ. ການໄຖ່ຖອນຮຸ້ນກູ້ກ່ອນເຖິງວັນຄົບກໍານົດເວລາ ມູນຄ່າຮຸ້ນກູ້ທີ່ບໍ່ສາມາດໄຖ່ຖອນໄດ້ແມ່ນ ປະຕິບັດຕາມລະບຽບການຂອງ ຕລຊລ ທີ່ກ່ຽວຂ້ອງ.
ມື້ພັກ	ຖ້າຫາກວັນຄົບກໍານົດຊໍາລະຕົ້ນທຶນ ຫຼື ດອກເບ້ຍ ຫຼື ມື້ທີ່ຕ້ອງໄດ້ເຮັດການຊໍາລະອື່ນໆ ທີ່ກ່ຽວຂ້ອງກັບຮຸ້ນກູ້ໃຫ້ແກ່ຜູ້ຖືຮຸ້ນກູ້ ຫາກກົງກັບວັນພັກ, ວັນຊໍາລະເງິນດັ່ງກ່າວຈະຖືກເລື່ອນເປັນວັນລັດຖະການຖັດໄປ ໂດຍຈະບໍ່ມີການຄໍານວນດອກເບ້ຍສໍາລັບການເລື່ອນວັນຊໍາລະເງິນ.
ນາຍທະບຽນຫຼັກຊັບ	ຕະຫຼາດຫຼັກຊັບລາວ.

3. ວິທີ່ການກໍານົດລາຄາຮຸ້ນກູ້

ການອອກຮຸ້ນກູ້ໃນຄັ້ງນີ້ ແມ່ນການອອກຮຸ້ນກູ້ໃນວົງຈໍາກັດ ໂດຍອອກໃຫ້ຜູ້ລົງທຶນ ປະເພດສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່ ໃນຈໍານວນບໍ່ເກີນ 10 ລາຍ. ສະນັ້ນ, ໃນການຕັ້ງລາຄາຮຸ້ນກູ້ຈຶ່ງໄດ້ຕັ້ງລາຄາ ໂດຍໃຫ້ມີຄວາມສອດຄ່ອງກັບ ກຸ່ມເປົ້າໝາຍຜູ້ລົງທຶນ ທີ່ລົງທຶນຂັ້ນຕໍ່າ ບໍ່ຫຼຸດ 1 ຕື້ກີບ ສໍາລັບຜູ້ລົງທຶນລາຍໃຫຍ່ ແລະ 2 ຕື້ກີບ ສໍາລັບຜູ້ລົງທຶນປະເພດສະຖາບັນ ສະນັ້ນ ຜູ້ອອກຮຸ້ນກູ້ ຈຶ່ງຕັ້ງລາຄາຂາຍຮຸ້ນກູ້ຢູ່ທີ່ 50.000 ໂດລາ ສະຫະລັດ ຕໍ່ໜ່ວຍ ມູນຄ່າກໍານົດ 50.000 ໂດລາ ສະຫະລັດ.

4. ຂັ້ນຕອນ ແລະ ວິທີ່ການຈອງຊື້ຮຸ້ນກູ້

4.1 ຂັ້ນຕອນການຮັບເອົາໜັງສືຊວນຊື້ ແລະ ໃບຈອງຊື້ຮຸ້ນກູ້

ຜູ້ລົງທຶນສາມາດຂໍເອົາໜັງສືຊວນຊື້ ແລະ ໃບຈອງຊື້ຮຸ້ນກູ້ໄດ້ຢູ່ທີ່ຫ້ອງການຂອງບໍລິສັດຫຼັກຊັບ ທຄຕລ-ກທ ຈໍາກັດ (ຕົວແທນການຈັດຈໍາໜ່າຍຮຸ້ນກູ້), ຊັ້ນ 7 ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ ກໍາແພງເມືອງ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ໃນຮູບແບບເຈ້ຍພິມ ຫຼື ເອເລັກໂຕຣນິກ ແລະ ສາມາດຂໍເອົາໃບຈອງຊື້ຮຸ້ນກູ້ ໃນລະຫວ່າງ 8:30 ໂມງ ຕອນເຊົ້າ ຫາ

3:30 ໂມງ ຕອນແລງ, ໃນລະຫວ່າງ ວັນທີ 15 ພຶດສະພາ ຫາ 19 ພຶດສະພາ 2023 (ຕໍ່ໄປນີ້ເອີ້ນວ່າ: "**ໄລຍະເວລາການອອກຈຳໜ່າຍຮຸ້ນກູ້**").

4.2 ວິທີການຈອງຊື້ຮຸ້ນກູ້

ຜູ້ຈອງຊື້ຮຸ້ນກູ້ສາມາດຂໍຮັບເອົາໃບຈອງຊື້ຮຸ້ນກູ້ໄດ້ຈາກຕົວແທນການຈັດຈຳໜ່າຍຮຸ້ນກູ້ພາຍໃນໄລຍະເວລາການອອກຈຳໜ່າຍຮຸ້ນກູ້ ທີ່ກຳນົດໄວ້ໃນພາກນີ້. ຜູ້ຈອງຊື້ຮຸ້ນກູ້ຕ້ອງໄດ້ປະກອບຂໍ້ມູນໃນໃບຈອງຊື້ຮຸ້ນກູ້ຢ່າງຄົບຖ້ວນ ແລະ ຈະແຈ້ງ ພ້ອມທັງໃຫ້ຜູ້ມີອຳນາດຂອງຕົນລົງລາຍເຊັນຢັ້ງຢືນໄປພ້ອມປະທັບກາ (ຖ້າມີ) ແລະ ຕ້ອງຊຳລະຄ່າຈອງຊື້ຮຸ້ນກູ້ຕາມຂັ້ນຕອນທີ່ກຳນົດໄວ້ໃນພາກນີ້ ພາຍໃນໄລຍະເວລາຂອງການສະເໜີອອກຈຳໜ່າຍຮຸ້ນ.

ໃນການອອກຈຳໜ່າຍຮຸ້ນກູ້ທັງໝົດ, ການຈອງຊື້ຮຸ້ນກູ້ຂັ້ນຕ່ຳ ຕ້ອງຊື້ຂັ້ນຕ່ຳ 50.000 ໂດລາ ສະຫະລັດ ແລະ ທະວີຄູນຄັ້ງລະ 50.000 ໂດລາ ສະຫະລັດຂຶ້ນໄປ.

ຜູ້ຈອງຊື້ຮຸ້ນກູ້ຕ້ອງປະກອບຂໍ້ມູນໃຫ້ຄົບຖ້ວນ ແລະ ຈະແຈ້ງໃນໃບຈອງຊື້ຮຸ້ນກູ້ ພ້ອມທັງຍື່ນເອກະສານທັງໝົດຕາມທີ່ຮຽກຮ້ອງໂດຍຕົວແທນການຈັດຈຳໜ່າຍຮຸ້ນກູ້ ພ້ອມທັງຊຳລະຄ່າຈອງຊື້ຮຸ້ນກູ້ທັງໝົດໃຫ້ຄົບຖ້ວນຕາມລາຄາທີ່ຈອງຊື້ ໃຫ້ກັບຕົວແທນການຈັດຈຳໜ່າຍຮຸ້ນກູ້ ໂດຍຜູ້ຈອງຊື້ຕ້ອງຊຳລະຄ່າຈອງຊື້ຮຸ້ນກູ້ຄົ້ງດຽວເຕັມຕາມຈຳນວນທີ່ຈອງຊື້ພາຍໃນໄລຍະເວລາຂອງການສະເໜີອອກຈຳໜ່າຍຮຸ້ນກູ້ ໂດຍຊຳລະເປັນເງິນໂອນເຂົ້າບັນຊີທີ່ກຳນົດໄວ້ໃນໃບຈອງຮຸ້ນກູ້ໃຫ້ຕົວແທນການຈັດຈຳໜ່າຍຮຸ້ນກູ້ສາມາດຮຽກເກັບເງິນໄດ້ພາຍໃນບໍ່ກາຍມື້ສຸດທ້າຍຂອງການຈອງຊື້ຮຸ້ນ.

ໃຫ້ນຳເອົາ (1).ໃບຈອງຊື້ຮຸ້ນກູ້, (2). ເອກະສານຢັ້ງຢືນຕົວຕົນ, (3). ເອກະສານຢັ້ງຢືນການໂອນເງິນ ຫຼັງຈາກນັ້ນສົ່ງມອບເອກະສານດັ່ງກ່າວໃຫ້ແກ່ ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ ພາຍໃນວັນ ແລະ ເວລາທີ່ລະບຸໄວ້ໃນໃບຈອງຊື້ຮຸ້ນ.

<u>ເອກະສານຢັ້ງຢືນຕົວຕົນທີ່ຕ້ອງການ</u>

1) ຜູ້ລົງທຶນບຸກຄົນພາຍໃນ: ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ, ໃບມອບສິດຈາກຜູ້ຈອງຊື້ (ກໍລະນີໃຫ້ຜູ້ອື່ນຈອງຊື້ຮຸ້ນແທນ)
2) ຜູ້ລົງທຶນບຸກຄົນຕ່າງປະເທດ: ສຳເນົາໜັງສືຜ່ານແດນ, ໃບມອບສິດຈາກຜູ້ຈອງຊື້ (ກໍລະນີໃຫ້ຜູ້ອື່ນຈອງຊື້ຮຸ້ນແທນ)
3) ຜູ້ລົງທຶນສະຖາບັນພາຍໃນ: ສຳເນົາໃບທະບຽນວິສາຫະກິດ ແລະ ສຳເນົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ ຂອງຜູ້ອຳນວຍການ ພ້ອມເຊັນຢັ້ງຢືນສຳເນົາຖືກຕ້ອງຈາກເຈົ້າຂອງບັດ (ກໍລະນີ, ຜູ້ເຄື່ອນໄຫວບັນຊີຫຼັກຊັບບໍ່ແມ່ນຜູ້ອຳນວຍການຕ້ອງສຳເນົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ ຂອງຜູ້ໄດ້ຮັບມອບສິດແທນ)
4) ຜູ້ລົງທຶນສະຖາບັນຕ່າງປະເທດ: ສຳເນົາໃບທະບຽນວິສາຫະກິດ ແລະ ໜັງສືຜ່ານແດນ ຂອງຜູ້ອຳນວຍການ ພ້ອມເຊັນຢັ້ງຢືນສຳເນົາຖືກຕ້ອງຈາກເຈົ້າຂອງບັດ (ກໍລະນີ, ຜູ້ເຄື່ອນໄຫວບັນຊີຫຼັກຊັບບໍ່ແມ່ນຜູ້ອຳນວຍການຕ້ອງສຳເນົາໜັງສືຜ່ານແດນຂອງຜູ້ໄດ້ຮັບມອບສິດແທນ)

ຕົວແທນການຈັດຈຳໜ່າຍຮຸ້ນກູ້ ທີ່ຮັບເອົາການຈອງຊື້ຮຸ້ນກູ້ຈະອອກໃບຢັ້ງຢືນທີ່ເປັນຫຼັກຖານກ່ຽວກັບການຈອງຊື້ຮຸ້ນກູ້ໃຫ້ຜູ້ຈອງຊື້ຮຸ້ນກູ້ ແລະ ແຈ້ງກ່ຽວກັບຜົນການແບ່ງປັນຮຸ້ນກູ້ ຫຼັງຈາກມື້ສິ້ນສຸດໄລຍະເວລາການອອກຈຳໜ່າຍຮຸ້ນ ພາຍໃນ 5 ວັນລັດຖະການ.

4.3 ການຮັບຊຳລະ ແລະ ການຮັກສາຄ່າຈອງຊື້ຮຸ້ນ

ຜູ້ຈອງຊື້ຮຸ້ນກູ້ແຕ່ລະຄົນ ຕ້ອງຊຳລະມູນຄ່າການຈອງຊື້ຮຸ້ນກູ້ໃຫ້ຄົບຖ້ວນ ໃຫ້ແກ່ຕົວແທນການຈັດຈຳ ໜ່າຍຮຸ້ນກູ້ ໂດຍຊຳລະຜ່ານບັນຊີ ຊື້-ຂາຍ ຫຼັກຊັບຂອງຜູ້ຈອງຊື້ຮຸ້ນກູ້ທີ່ເປີດໄວ້ກັບ ທຄຕລ-ກທ ຫຼື ໂອນເຂົ້າສະເພາະບັນຊີທີ່ກຳນົດໄວ້ໃນແບບຟອມການຈອງຊື້ຮຸ້ນກູ້.

ຜູ້ຈອງຊື້ຮຸ້ນກູ້ຈະເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍຄ່າທຳນຽມຂອງທະນາຄານ ຫຼື ຄ່າໃຊ້ຈ່າຍຕ່າງໆ ທີ່ພົວພັນເຖິງອັດຕາແລກປ່ຽນເງິນຕາຕ່າງປະເທດ ໂດຍຊຳລະແຍກອອກຕ່າງຫາກຈາກການຊຳລະການຈອງຊື້ຮຸ້ນກູ້ ແລະ ສິ່ງຫຼັກຖານການຊຳລະດັ່ງກ່າວໃຫ້ແກ່ຕົວແທນການຈັດຈຳໜ່າຍຮຸ້ນກູ້ ໃນມື້ທີ່ມີການຢັ້ງຢືນການຈອງຮຸ້ນກູ້. ຜູ້ຈອງຊື້ຮຸ້ນທີ່ໄດ້ຊຳລະມູນຄ່າການຈອງຊື້ຮຸ້ນກູ້ແລ້ວແມ່ນຈະບໍ່ສາມາດຍົກເລີກການຈອງໄດ້.

5. ການຈັດສັນຮຸ້ນກູ້

5.1 ຫຼັກການແບ່ງປັນຮຸ້ນກູ້

ພາຍຫຼັງທີ່ຕົວແທນການຈັດຈຳໜ່າຍຮຸ້ນກູ້ ໄດ້ດຳເນີນການຮັບຈອງຮຸ້ນກູ້ຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບການແລ້ວ, ການແບ່ງປັນຮຸ້ນກູ້ໃຫ້ແກ່ຜູ້ລົງທຶນແມ່ນຈະໄດ້ດຳເນີນໄປ ຊຶ່ງຄາດວ່າຈະສຳເລັດພາຍໃນ 3 ວັນລັດຖະການ ຫຼັງຈາກສິ້ນສຸດໄລຍະເວລາການອອກຈຳໜ່າຍຮຸ້ນກູ້. ເພື່ອຮັບປະກັນສິດ ແລະ ຜົນປະໂຫຍດສູງສຸດຜູ້ອອກຮຸ້ນກູ້ ແລະ ຜູ້ລົງທຶນ, ຕົວແທນການຈັດຈຳໜ່າຍຮຸ້ນກູ້ ມີສິດພິຈາລະນາໃນການການແບ່ງປັນຮຸ້ນກູ້ໃຫ້ກັບຜູ້ລົງທຶນໃດໜຶ່ງ ຫຼື ທັງໝົດ ດ້ວຍການນຳໃຊ້ວິທີ “ມາກ່ອນໄດ້ກ່ອນ” ເຖິງຢ່າງໃດກໍຕາມ ຕົວແທນການຈັດຈຳໜ່າຍຮຸ້ນກູ້ ຂໍສະຫງວນສິດໃນການປະຕິເສດການຈອງຊື້ຮຸ້ນກູ້ ແລະ ການແບ່ງປັນຮຸ້ນທີ່ອອກຈຳໜ່າຍຕາມໃບຈອງຊື້ຮຸ້ນກູ້ ໃນກໍລະນີທີ່ຕົວແທນການຈັດຈຳໜ່າຍຮຸ້ນກູ້ພິຈາລະນາແລ້ວ ເຫັນວ່າການຈອງຊື້ຮຸ້ນດັ່ງກ່າວເກີດມີບັນຫາ, ອຸປະສັກ ຫຼື ຂໍ້ຈຳກັດໃນການດຳເນີນການເພື່ອໃຫ້ການອອກຈຳໜ່າຍຮຸ້ນກູ້ໃນຄັ້ງນີ້ປະສົບຜົນສຳເລັດສູງສຸດ. ໃນກໍລະນີຮຸ້ນກູ້ທີ່ອອກຈັດຈຳໜ່າຍຫາກຖືກຈອງຊື້ໝົດກ່ອນວັນເວລາທີ່ກຳນົດໄວ້ ຕົວແທນການຈັດຈຳໜ່າຍຮຸ້ນກູ້ສາມາດປິດການຈອງກ່ອນວັນເວລາທີ່ກຳນົດໄວ້.

5.2 ການສົ່ງຄ່າຈອງຮຸ້ນກູ້ຄືນ

1) ໃນກໍລະນີທີ່ບໍ່ໄດ້ຮັບການແບ່ງປັນຮຸ້ນ

ຕົວແທນການຈັດຈຳໜ່າຍຮຸ້ນກູ້ຈະຕ້ອງແຈ້ງຜົນຂອງການແບ່ງປັນຮຸ້ນໃຫ້ຜູ້ຈອງຊື້ຮຸ້ນທີ່ບໍ່ໄດ້ຮັບການແບ່ງປັນຮຸ້ນຕາມຈຳນວນທີ່ຈອງຊື້ທັງໝົດ ຫຼື ບາງສ່ວນຊາບ (ແລ້ວແຕ່ກໍລະນີ). ຕົວແທນການຈັດຈຳໜ່າຍຮຸ້ນກູ້ ຈະຕ້ອງສົ່ງຄ່າຈອງຊື້ຮຸ້ນກູ້ຄືນໃຫ້ແກ່ຜູ້ຈອງຊື້ຮຸ້ນກູ້ທີ່ບໍ່ໄດ້ຮັບການແບ່ງປັນຮຸ້ນໃຫ້ຄົບຖ້ວນ

ຕາມຈຳນວນທີ່ໄດ້ຮັບການຊຳລະການຈອງຊື້ຮຸ້ນທີ່ຜູ້ກ່ຽວໄດ້ຈອງຊື້ຮຸ້ນໂດຍວິທີການຕ່າງໆ ດ້ວຍການໂອນເງິນຜ່ານທະນາຄານ ຫຼື ການອອກແຊັກໃຫ້ແກ່ຜູ້ຈອງຊື້ຮຸ້ນພາຍໃນ 02 (ສອງ) ວັນລັດຖະການ ນັບແຕ່ໄລຍະການແບ່ງປັນຮຸ້ນກູ້ສິ້ນສຸດລົງ. ການສົ່ງເງິນຄືນດັ່ງກ່າວຈະຕ້ອງສົ່ງຄືນຕາມລາຄາຈອງຊື້ຮຸ້ນກູ້ຂອງຮຸ້ນກູ້ທີ່ບໍ່ໄດ້ຮັບການແບ່ງປັນ, ການສົ່ງເງິນຄ່າຮຸ້ນກູ້ທີ່ບໍ່ໄດ້ຮັບການແບ່ງປັນຄືນຈະບໍ່ໄດ້ຄິດໄລ່ດອກເບ້ຍ ຫຼື ການທົດແທນຄວາມເສຍຫາຍໃດໜຶ່ງໃຫ້ ແລະ ຜູ້ຊື້ຈະຕ້ອງໄດ້ຮັບຜິດຊອບທີ່ຕິດພັນກັບການສົ່ງເງິນຄືນຕາມລະບຽບການຂອງທະນາຄານຕົວແທນ ຖ້າການສົ່ງຄືນນັ້ນຫາກໄດ້ປະຕິບັດໄປຕາມຂັ້ນຕອນທີ່ກຳນົດໄວ້ໃນໜັງສືຊວນຊື້ສະບັບນີ້. ຖ້າຫາກວ່າ, ຕົວແທນການຈັດຈຳໜ່າຍຮຸ້ນກູ້ ບໍ່ສາມາດປະຕິບັດໄດ້ຕາມທີ່ກຳນົດໄວ້ຜູ້ອອກຮຸ້ນກູ້ຈະຕ້ອງຮັບຜິດຊອບຈ່າຍດອກເບ້ຍຜິດນັດໃນອັດຕາ 05 (ຫ້າ) ສ່ວນຮ້ອຍຕໍ່ປີ ໃຫ້ແກ່ຜູ້ຈອງຊື້ຮຸ້ນທີ່ກ່ຽວຂ້ອງຈົນກວ່າຜູ້ກ່ຽວຈະໄດ້ຮັບເງິນຄ່າຈອງຊື້ຮຸ້ນຄືນຢ່າງຄົບຖ້ວນ.

2) ກໍລະນີ ຍົກເລີກການອອກຈຳໜ່າຍຮຸ້ນກູ້

ຕົວແທນການຈັດຈຳໜ່າຍຮຸ້ນກູ້ ຈະດຳເນີນສົ່ງເງິນມັດຈຳຄືນໃຫ້ແກ່ຜູ້ຈອງຊື້ຮຸ້ນກູ້ ພາຍໃນເວລາ 5 ວັນລັດຖະການ ນັບແຕ່ວັນ ຂະຫຍາຍໄລຍະເວລາການເປີດຈອງຊື້ຮຸ້ນກູ້, ວັນສິ້ນສຸດການອອກຈຳໜ່າຍຮຸ້ນກູ້, ວັນໄດ້ຮັບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້, ວັນສະເໜີຂອງຜູ້ຊື້ຮຸ້ນກູ້ ຫຼື ວັນອອກແຈ້ງການກ່ຽວກັບການໂຈະ ແລະ ຍົກເລີກຈຳໜ່າຍຮຸ້ນກູ້ ຈາກ ສຄຄຊ ເປັນຕົ້ນໄປ ຫຼື ນັບແຕ່ວັນທີ່ ສະພາບໍລິຫານ ຫຼື ມະຕິກອງປະຊຸມສາມັນຜູ້ຖືຮຸ້ນຫາກມີມະຕິເຫັນດີບ່ຍອມຮັບຜົນການຂາຍຮຸ້ນກູ້. ໃນກໍລະນີ ຫາກການກຳນົດເວລາໃນການສົ່ງເງິນມັດຈຳຄືນ ຕາມເຫດການຂ້າງເທິງນີ້ ຜູ້ອອກຮຸ້ນຈະເປັນຜູ້ຮັບຜິດຊອບດອກເບ້ຍໃຫ້ແກ່ ຜູ້ຈອງຊື້ຮຸ້ນກູ້ ຕາມອັດຕາດອກເບ້ຍເງິນຝາກປະຫຍັດຂອງ ທະນະຄານຕົວແທນເພື່ອການຊຳລະຂອງ ຕົວແທນການຈັດຈຳໜ່າຍຮຸ້ນກູ້ໃນໄລຍະນັ້ນ ຈົນກວ່າຈະສົ່ງເງິນມັດຈຳຄືນໃຫ້ແກ່ຜູ້ຈອງຊື້ຮຸ້ນກູ້ຄົບຖ້ວນ.

6. ການສົ່ງມອບໃບຢັ້ງຢືນຮຸ້ນກູ້

ນາຍທະບຽນຫຼັກຊັບຈະຮັບຝາກຮຸ້ນກູ້ເຂົ້າບັນຊີຫຼັກຊັບທີ່ຜູ້ຈອງຊື້ຮຸ້ນກູ້ມີບັນຊີ ຊື້-ຂາຍ ຫຼັກຊັບຢູ່ນຳບໍລິສັດຫຼັກຊັບທີ່ເປັນສະມາຊິກຂອງສູນຮັບຝາກຫຼັກຊັບຂອງ ຕລຊລ ຕາມທີ່ໄດ້ແຈ້ງໃຫ້ຜູ້ຈອງຊື້ຮັບຊາບໃນໃບຈອງຊື້, ຮຸ້ນຈະຖືກຈົດທະບຽນ ແລະ ຝາກໄວ້ນຳສູນຮັບຝາກຫຼັກຊັບຂອງ ຕລຊລ.

ນາຍທະບຽນຫຼັກຊັບຈະເປັນຜູ້ຈັດພິມໃບຢັ້ງຢືນຮຸ້ນກູ້ ແລະ ສົ່ງມອບໃຫ້ແກ່ຜູ້ຖືຮຸ້ນກູ້ຕາມຈຳນວນທີ່ໄດ້ຮັບການຈັດສັນພາຍໃນ 15 ວັນຊື້ຂາຍ ນັບແຕ່ທີ່ສຳເລັດການຈົດທະບຽນ ແລະ ຝາກຫຼັກຊັບ.

ໃນກໍລະນີ ທີ່ຜູ້ຖືຮຸ້ນກູ້ ຫາກຕ້ອງການຈັດພິມໃບຢັ້ງຢືນຮຸ້ນກູ້ ເພື່ອຢັ້ງຢືນໃນກໍລະນີໃດໜຶ່ງ ກໍ່ສາມາດພ້ອມກັບກັບ ນາຍທະບຽນຫຼັກຊັບ ຫຼື ບໍລິສັດຫຼັກຊັບທີ່ຕົນເປີດບັນຊີຫຼັກຊັບຢູ່ນຳ ເພື່ອຈັດພິມອອກ ແລະ ຢັ້ງຢືນໃຫ້ ໂດຍຈະເສຍຄ່າທຳນຽມຕາມການກຳນົດຂອງ ນາຍທະບຽນ ຫຼື ບໍລິສັດຫຼັກຊັບ.

7. ການອອກໃບຢັ້ງຢືນຮຸ້ນກູ້

ເນື່ອງຈາກການອອກຮຸ້ນກູ້ໃນຄັ້ງນີ້ ຜູ້ອອກຮຸ້ນກູ້ ບໍ່ໄດ້ມີການແຕ່ງຕັ້ງຕົວແທນຈຳໜ່າຍຮຸ້ນກູ້. ສະນັ້ນ, ຜູ້ອອກຮຸ້ນກູ້ຈະເປັນຜູ້ອອກໃບຢັ້ງຢືນການຈັດສັນຮຸ້ນກູ້ ໃຫ້ແກ່ ຜູ້ຊື້ຮຸ້ນກູ້ ພາຍໃນ 5 ວັນລັດຖະການ ນັບແຕ່ວັນສິ້ນສຸດການຈອງຊື້ຮຸ້ນກູ້ເປັນຕົ້ນໄປ.

8. ຂໍ້ຈຳກັດການໂອນຮຸ້ນກູ້

ຮຸ້ນກູ້ທີ່ສະເໜີຂາຍ ເປັນການສະເໜີຂາຍຕໍ່ຜູ້ລົງທຶນປະເພດສະຖາບັນ ແລະ / ຫຼື ຜູ້ລົງທຶນລາຍໃຫຍ່ເທົ່ານັ້ນ ທີ່ກຳນົດໄວ້ຕາມນິຍາມໃນ ຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ (ປັ້ງປຸ໋ງ) ເລກທີ່ 20/ຄຄຊ ລົງວັນທີ23/06/2021 ດັ່ງນັ້ນ ຜູ້ອອກຮຸ້ນກູ້ ຂໍສະຫງວນສິດທີ່ຈະປະຕິເສດບໍ່ຮັບການຈົດທະບຽນການໂອນຮຸ້ນກູ້ໃນທຸກໆ ກໍລະນີ ທີ່ບໍ່ແມ່ນ ຜູ້ລົງທຶນປະເພດສະຖາບັນ ແລະ / ຫຼື ຜູ້ລົງທຶນລາຍໃຫຍ່ ເວັ້ນເສຍແຕ່ແມ່ນການໂອນຮຸ້ນກູ້ຕາມການສືບທອດທາງມູນມໍລະດົກ.

9. ກອງປະຊຸມຜູ້ຖືຮຸ້ນກູ້

ຜູ້ອອກຮຸ້ນກູ້ ໄດ້ມີການກຳນົດຫຼັກເກນໃນການຈັດກອງປະຊຸມຮຸ້ນກູ້ ຊຶ່ງໄດ້ກຳນົດລາຍລະອຽດໄວ້ໃນ ເອກະສານວ່າດ້ວຍການກຳນົດສິດ ແລະ ໜ້າທີ່ ຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້ ໃນເອກະສານຊ້ອນທ້າຍ 1.

10. ຂໍ້ກຳນົດວ່າດ້ວຍ ສິດ ແລະ ໜ້າທີ່ ຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້

ຜູ້ລົງທຶນ ສາມາດ ອ່ານເພີ່ມເຕີມກ່ຽວກັບ ສິດ ແລະ ໜ້າທີ່ຂອງຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້ ໃນເອກະສານຊ້ອນທ້າຍ ຂອງໜັງສືຊວນຊື້ສະບັບນີ້.

11. ພັນທະທາງອາກອນຂອງຜູ້ຖືຮຸ້ນກູ້

ອີງຕາມກົດໝາຍວ່າດ້ວຍອາກອນລາຍໄດ້ ເລກທີ່ 67/ສພຊ ລົງວັນທີ 18 ມິຖຸນາ 2019, ມາດຕາ 35 ລາຍໄດ້ທີ່ຖືກຍົກເວັ້ນອາກອນລາຍໄດ້ ຂໍ້ 11. ເຫັນວ່າ ລາຍໄດ້ດອກເບ້ຍຈາກການຖືຮຸ້ນກູ້ແມ່ນຈະຖືກຍົກເວັ້ນອາກອນລາຍໄດ້ ເວັ້ນເສຍແຕ່ ກົດໝາຍ ຫຼື ນິຕິກຳຈະມີການກຳນົດເປັນຢ່າງອື່ນ.

ພາກທີ 4
ການຮັບຮອງຄວາມຖືກຕ້ອງ

1. ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນສ່ວນຂອງບໍລິສັດອອກຈຳໜ່າຍຮຸ້ນກູ້

ຂ້າພະເຈົ້າໄດ້ກວດກາຂໍ້ມູນໃນໜັງສືຊວນຊື້ສະບັບພາສາລາວແລ້ວ ດ້ວຍຄວາມລະມັດລະວັງໃນຖານະສະພາບໍລິຫານ ຂໍຮັບຮອງວ່າ ຂໍ້ມູນດັ່ງກ່າວນີ້ມີຄວາມຖືກຕ້ອງ ແລະ ຄົບຖ້ວນ.

ໃນນີ້, ເພື່ອເປັນຫຼັກຖານວ່າ ເອກະສານທັງໝົດ ເປັນເອກະສານຊຸດດຽວກັນກັບທີ່ຂ້າພະເຈົ້າໄດ້ຮັບຮອງຄວາມຖືກຕ້ອງແລ້ວຈຶ່ງໄດ້ມອບໝາຍໃຫ້ ທ່ານ ອັດດານາ ສຸຄະບັນດິດ ໃນນາມຜູ້ອຳນວຍການໃຫຍ່ ເປັນຜູ້ເຊັນຫຍໍ້ກຳກັບເອກະສານນີ້ໄວ້ໃນທຸກໜ້າດ້ວຍ. ຫາກເອກະສານໃດບໍ່ໄດ້ມີການເຊັນຫຍໍ້ ຊື່ ທ່ານ ອັດດານາ ສຸຄະບັນດິດ ກຳກັບໄວ້, ຂ້າພະເຈົ້າຈະຖືວ່າເອກະສານນັ້ນບໍ່ແມ່ນຂໍ້ມູນທີ່ພວກຂ້າພະເຈົ້າໄດ້ຮັບຮອງຄວາມຖືກຕ້ອງ.

ການລົງລາຍເຊັນຂອງສະພາຜູ້ບໍລິຫານຂອງບໍລິສັດ (Board of Directors)

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ລາຍເຊັນ
1	ທ່ານ ສົມຈິດ ອິນທະມິດ	ປະທານສະພາບໍລິຫານ / ສະມາຊິກ ອິດສະຫຼະ	
2	ທ່ານ ຣສ.ປອ. ໄຊພອນ ກອງມະນີລາ	ຮອງປະທານສະພາບໍລິຫານ / ສະມາຊິກ ອິດສະຫຼະ	
3	ທ່ານ ອັດດານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ/ ຜູ້ອຳນວຍການໃຫຍ່	
4	ທ່ານ ພັນໂນລາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການໃຫຍ່,ຜູ້ອຳນວຍການຝ່າຍການເງິນ	
5	ທ່ານ ກິດສະດາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການໃຫຍ່,ຜູ້ອຳນວຍການຝ່າຍປະຕິບັດການ	
6	ທ່ານ ບຸນເຕີມ ກົມມິດຕະພາບ	ສະມາຊິກສະພາບໍລິຫານ / ສະມາຊິກ ອິດສະຫຼະ	
7	ທ່ານ ນາງ ຄຳໄຂ ລໍວັນໄຊ	ສະມາຊິກສະພາບໍລິຫານ	
8	ທ່ານ ນາງ ຊຸຕິການ ສີແສງຈັນ	ສະມາຊິກສະພາບໍລິຫານ	
9	ທ່ານ ພິພົບ ວາດສະໜາອາຊາສະກຸນ	ສະມາຊິກສະພາບໍລິຫານ	

ການລົງນາມຂອງຝ່າຍການບັນຊີ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ລາຍເຊັ້ນ
1	ທ່ານ ພັນໂນລາ ສຸຄະບັນດິດ	ຜູ້ອຳນວຍ ຝ່າຍການບັນຊີ-ການເງິນ	

ຜູ້ຮັບມອບອຳນາດ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ລາຍເຊັ້ນ
1	ທ່ານ ອັດຕານາ ສຸຄະບັນດິດ	ສະມາຊິກສະພາບໍລິຫານ/ ຜູ້ອຳນວຍການໃຫຍ່	

2. ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນສ່ວນຂອງທີ່ປຶກສາການເງິນ

ໜັງສືຊວນຊື້ສະບັບນີ້ ເປັນສ່ວນໜຶ່ງຂອງເອກະສານປະກອບສຳນວນໃບຮ້ອງຂໍອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຊຶ່ງ ບໍລິສັດ ສຸວັນນີໂຮມ ເຊັນເຕີ ມະຫາຊົນ ແລະ ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ ຮ່ວມກັນສ້າງຂຶ້ນບົນພື້ນຖານສັນຍາການໃຫ້ບໍລິການເປັນທີ່ປຶກສາປຶກສາ ແລະ ເປັນຕົວແທນການຈັດຈຳໜ່າຍຮຸ້ນກູ້.

ຂ້າພະເຈົ້າ ຮັບປະກັນວ່າຂໍ້ມູນກ່ຽວກັບ ການວິເຄາະ, ການຕີມູນຄ່າ ແລະ ການໃຊ້ສຳນວນຄຳສັບໃນໜັງສືຊວນຊື້ສະບັບນີ້ມີຄວາມຖືກຕ້ອງ, ຄົບຖ້ວນ ບົນພື້ນຖານຂໍ້ມູນຂ່າວສານທີ່ ບໍລິສັດ ສຸວັນນີ ໂຮມ ເຊັນເຕີ ມະຫາຊົນ ສະໜອງໃຫ້.

ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ລາຍເຊັນ
1	ທ່ານ ເທບສະຫວັນ ກິດຕິຍະວົງ	ຜູ້ອຳນວຍການ	

ເອກະສານຊ້ອນທ້າຍ

1) ຂໍ້ກຳນົດວ່າດ້ວຍສິດ ແລະ ໜ້າທີ່ ຂອງຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້
2) ຫຼັກເກນໃນການຈັດກອງປະຊຸມຜູ້ຖືຮຸ້ນກູ້
3) ຮ່າງໃບຢັ້ງຢືນຮຸ້ນກູ້
4) ຊີວະປະຫວັດ ສະມາຊິກສະພາບໍລິຫານ
5) ເອກະສານລາຍງານການເງິນ 2022
6) ແບບຟອມການສະເໜີຂໍຈອງຊື້ຮຸ້ນກູ້

ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ

ເລກທີ 0383/ສ.ວ.ນ

ນະຄອນຫຼວງວຽງຈັນ ວັນທີ: 11/04/2023

ຂໍ້ກົດນິດວ່າດ້ວຍສິດ ແລະ ໜ້າທີ່ຂອງ ຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້
ສຳລັບຮຸ້ນກູ້ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

- ອີງຕາມມະຕິກອງປະຊຸມສະພາບໍລິຫານຂອງ ບໍລິສັດ ສຸວັນນີໂຮມເຊັນເຕີ້ ມະຫາຊົນ ຄັ້ງທີ 01 ປະຈຳປີ 2023, ເລກທີ 0173/ສ.ວ.ນ ວັນທີ 14/02/2023

ຜູ້ອຳນວຍການ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ອອກຂໍ້ກຳນົດວ່າດ້ວຍ ສິດ ແລະ ໜ້າທີ່ຂອງຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້ ສຳລັບຮຸ້ນກູ້ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ວັດຖຸປະສົງ

ຂໍ້ກຳນົດວ່າສະບັບນີ້ອອກເພື່ອກຳນົດ ສິດ ແລະ ໜ້າທີ່ (ຂໍ້ກຳນົດສິດ) ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ຜູ້ອອກຮຸ້ນກູ້), ຜູ້ຖືຮຸ້ນກູ້ບໍລິສັດ ສຸວັນນີໂຮມ ເຊັນເຕີ ມະຫາຊົນ (ຜູ້ຖືຮຸ້ນກູ້), ຮຸ້ນກູ້ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ຮຸ້ນກູ້) ເຊິ່ງໄດ້ອອກຄັ້ງທີ່ 1 ປີ 2023 ຊຸດທີ່ 1 ຄົບອາຍຸການໄຖ່ຖອນ ປີ 2027.

2. ອະທິບາຍຄຳສັບ

ຂໍ້ກຳນົດສິດ	ໝາຍເຖິງຂໍ້ກຳນົດສິດ ແລະ ໜ້າທີ່ຂອງ ຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້ ສຳລັບຮຸ້ນກູ້ທີ່ອອກຄັ້ງທີ່ 1 ປີ 2023 ຊຸດທີ່ 1 ຄົບອາຍຸການໄຖ່ຖອນ ປີ 2027
ຮຸ້ນກູ້	ໝາຍເຖິງຮຸ້ນກູ້ທີ່ອອກໂດຍບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ທີ່ມີຄຸນລັກສະນະຕາມຂໍ້ກຳນົດສະບັບນີ້
ຜູ້ອອກຮຸ້ນກູ້	ໝາຍເຖິງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ຜູ້ຖືຮຸ້ນກູ້	ໝາຍເຖິງນັກລົງທຶນ ປະເພດສະຖາບັນການເງິນ ຫຼື ນັກລົງທຶນລາຍໃຫຍ່ທີ່ມີນິຍາມກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ (ປັ້ງປຸ) ເລກທີ 20/ຄຄຊ ວັນທີ23/06/2021
ຕລຊລ	ໝາຍເຖິງ ຕະຫຼາດຫຼັກຊັບລາວ

ສຄຄຊ	ໝາຍເຖິງ ສຳນັກງານ ຄະນະກຳມະການ ຄຸ້ມຄອງຫຼັກຊັບ
ຕົວແທນການຈຳໜ່າຍຮຸ້ນກູ້	ໝາຍເຖິງ ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ ທີ່ມີໜ້າທີ່ສ້າງກົນໄກໃນການ ຈອງຊື້ຮຸ້ນ ແລະ ວ່າງເງິນມັດຈຳ, ການຈັດສັນຮຸ້ນ ແລະ ການອອກໃບຢັ້ງຢືນການຈັດສັນຮຸ້ນ ຊ່ວຍຜູ້ອອກຮຸ້ນກູ້
ຮຸ້ນກູ້ປະເພດບໍ່ດ້ອຍສິດບໍ່ມີຄ້ຳປະກັນ	ໝາຍເຖິງ ຮຸ້ນກູ້ທີ່ບໍ່ມີເງື່ອນໄຂ ບໍ່ມີການຄ້ຳປະກັນ ແລະ ເປັນໜີ້ ບໍ່ດ້ອຍສິດ ໂດຍໜີ້ຮຸ້ນກູ້ມີຖານະທາງກົດໝາຍເທົ່າທຽມກັນທຸກໜ່ວຍ ທັງນີ້, ຜູ້ຖືຮຸ້ນກູ້ແຕ່ລະລາຍຈະມີສິດໄດ້ຮັບຊຳລະໜີ້ຕາມຮຸ້ນກູ້ຂອງຕົນບໍ່ດ້ອຍກວ່າສິດໃນການຮັບຊຳລະໜີ້ຂອງເຈົ້າໜີ້ສາມັນທີ່ມີຫຼັກຊັບຄ້ຳປະກັນ ແລະ ບໍ່ດ້ອຍສິດທັງໃນປະຈຸບັນ ແລະ ອານາຄົດ ຂອງຜູ້ອອກຮຸ້ນກູ້ ເວັ້ນເສຍແຕ່ ບັນດາໜີ້ທີ່ມີກົດໝາຍຄຸ້ມຄອງໂດຍຊັດເຈນ ຫຼື ໂດຍທົ່ວໄປໄດ້ຮັບຊຳລະໜີ້ກ່ອນ.

3. ຮຸ້ນກູ້

ຜູ້ອອກຈຳໜ່າຍຮຸ້ນກູ້ ໄດ້ກຳນົດຄຸນລັກສະນະຂອງຮຸ້ນກູ້ ຕາມຂໍ້ມູນດັ່ງລຸ່ມນີ້:

ຜູ້ອອກຮຸ້ນກູ້	ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ປະເພດຮຸ້ນກູ້	• ຮຸ້ນກູ້ປະເພດລະບຸຊື່ຜູ້ຖື • ຮຸ້ນກູ້ປະເພດບໍ່ດ້ອຍສິດບໍ່ມີຄ້ຳປະກັນ
ປະເພດການສະເໜີຂາຍ	ອອກໃນວົງຈຳກັດ (Private Placement) ສະເໜີຂາຍໃຫ້ແກ່ ສະຖາບັນການເງິນ ກັບ ຜູ້ລົງທຶນລາຍໃຫຍ່ ແມ່ນ ລວມກັນ ບໍ່ເກີນ 10 ລາຍ
ສະກຸນເງິນ	ໂດລາ
ຈຳນວນຮຸ້ນກູ້ທີ່ສະເໜີຂາຍ	60 ໜ່ວຍ
ມູນຄ່າລວມຂອງຮຸ້ນກູ້ທີ່ສະເໜີຂາຍ	3.000.000 ໂດລາ ສຫລ
ມູນຄ່າກຳນົດ	50.000 ໂດລາ ສຫລ ຕໍ່ ໜ່ວຍ
ລາຄາສະເໜີຂາຍ	50.000 ໂດລາ ສຫລ ຕໍ່ ໜ່ວຍ
ອາຍຸຮຸ້ນກູ້	4 ປີ
ອັດຕາດອກເບ້ຍຮຸ້ນກູ້	7,5% (ຈ່າຍແບບຄົງທີ່) ຕໍ່ປີ
ງວດການຊຳລະດອກເບ້ຍ	ທຸກໆ 6 ເດືອນ (2 ຄັ້ງ/ປີ)
ມື້ຈ່າຍດອກເບ້ຍ	19 ພຶດສະພາ ແລະ 19 ພະຈິກ ຕະຫຼອດອາຍຸຮຸ້ນກູ້
ໄລຍະເວລາການສະເໜີຂາຍ	ວັນທີ 15 ພຶດສະພາ ຫາ 19 ພຶດສະພາ 2023
ວັນອອກຮຸ້ນກູ້	19 ພຶດສະພາ 2023

ວັນຄົບກຳນົດການໄຖ່ຖອນຮຸ້ນກູ້	19 ພຶດສະພາ 2027
ການຊຳລະຄືນເງິນຕົ້ນ	ໄຖ່ຖອນເມື່ອເຖິງວັນຄົບກຳນົດ
ສິດຂອງຜູ້ຖືຮຸ້ນກູ້ໃນການໄຖ່ຖອນຮຸ້ນກູ້ກ່ອນວັນຄົບກຳນົດ	ບໍ່ມີ
ສິດຂອງຜູ້ອອກຮຸ້ນກູ້ໃນການໄຖ່ຖອນຮຸ້ນກູ້ກ່ອນວັນຄົບກຳນົດ	ມີສິດ
ຂໍ້ຈຳກັດໃນການຂາຍ/ໂອນ	• ຮຸ້ນກູ້ທີ່ສະເໜີຂາຍ ເປັນການສະເໜີຂາຍຕໍ່ຜູ້ລົງທຶນປະເພດສະຖາບັນການເງິນ ແລະ / ຫຼື ຜູ້ລົງທຶນລາຍໃຫຍ່ເທົ່ານັ້ນ ດັ່ງນັ້ນ ຜູ້ອອກຈຳໜ່າຍຮຸ້ນກູ້ ຂໍສະຫງວນສິດທີ່ຈະປະຕິເສດບໍ່ຮັບການຈົດທະບຽນການໂອນຮຸ້ນກູ້ໃນທຸກໆ ກໍລະນີ ທີ່ບໍ່ແມ່ນ ຜູ້ລົງທຶນປະເພດສະຖາບັນການເງິນ ແລະ / ຫຼື ຜູ້ລົງທຶນລາຍໃຫຍ່ ເວັ້ນເສຍແຕ່ແມ່ນການໂອນຮຸ້ນກູ້ຕາມການສືບທອດທາງມູນມໍລະດົກ.
ການຈັດອັນດັບຄວາມໜ້າເຊື່ອຖື	ບໍ່ມີການຈັດ
ຕະຫຼາດຮອງຂອງຮຸ້ນກູ້	ມີ
ການຄ້ຳປະກັນ/ຫຼັກຊັບຄ້ຳປະກັນ	ບໍ່ມີ
ຕົວແທນການຈັດຈຳໜ່າຍຮຸ້ນກູ້	ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ (BCEL-KT)
ຕົວແທນຜູ້ຖືຮຸ້ນກູ້	ບໍ່ມີ
ນາຍທະບຽນຫຼັກຊັບ	ຕະຫຼາດຫຼັກຊັບລາວ

4. ໃບຢັ້ງຢືນຮຸ້ນກູ້ ແລະ ປຶ້ມທະບຽນຜູ້ຖືຮຸ້ນກູ້ ແລະ ຜູ້ມີສິດໃນຮຸ້ນກູ້

4.1 ໃບຢັ້ງຢືນຮຸ້ນກູ້

ໃບຢັ້ງຢືນຮຸ້ນກູ້ ແມ່ນໃບຢັ້ງຢືນການຖືຄອງຮຸ້ນກູ້ ທີ່ລະບຸຊື່ຜູ້ຖື ແລະ ຂໍ້ມູນຮຸ້ນກູ້ຕາມລະບຽບການຂອງ ສຄຄຊ ແລະ ຕລຊລ ກຳນົດ ຊຶ່ງໄດ້ສະແດງໄວ້ທີ່ເອກະສານຊ້ອນທ້າຍໃນໜັງສືຊວນຊື້.

ຜູ້ອອກຈຳໜ່າຍຮຸ້ນກູ້ ຈະມອບໝາຍໃຫ້ນາຍທະບຽນຫຼັກຊັບ ເປັນຜູ້ອອກໃບຢັ້ງຢືນຮຸ້ນກູ້ໃຫ້ຜູ້ຖືຮຸ້ນກູ້ ພາຍຫຼັງໄດ້ສຳເລັດການນຳຮຸ້ນເຂົ້າຈົດທະບຽນໃນ ຕລຊລ ຕາມທີ່ລະບຽບການຂອງ ຕລຊລ ກຳນົດ ຫຼື ກໍລະນີທີ່ຜູ້ຖືຮຸ້ນກູ້ຫາກມີຄວາມຕ້ອງການອອກໃບຢັ້ງຢືນຮຸ້ນກູ້ໃໝ່.

4.2 ປຶ້ມທະບຽນຜູ້ຖືຮຸ້ນກູ້

4.2.1 ຜູ້ອອກຮຸ້ນກູ້ຈະມອບໝາຍໃຫ້ນາຍທະບຽນຫຼັກຊັບ ເປັນຜູ້ ສ້າງ ແລະ ເກັບຮັກສາປຶ້ມທະບຽນຜູ້ຖືຮຸ້ນກູ້ໄວ້ ຈົນກວ່າຮຸ້ນກູ້ທັງໝົດຈະໄດ້ຮັບການໄຖ່ຖອນເຕັມຈຳນວນ. ທັງນີ້, ຈະຕ້ອງດຳເນີນການໃຫ້ມີປຶ້ມທະບຽນຜູ້ຖືຮຸ້ນກູ້ຢ່າງຊ້າ ພາຍໃນ 14 ວັນຊື້ຂາຍ ນັບຈາກການສະເໜີຂາຍຮຸ້ນກູ້.

4.2.2 ຜູ້ອອກຮຸ້ນກູ້ຈະດຳເນີນການໃຫ້ນາຍທະບຽນຫຼັກຊັບ ໃນກໍລະນີເພື່ອຈຸດປະສົງຈ່າຍເງິນ ຕົ້ນທຶນ ແລະ ດອກເບ້ຍຂອງຮຸ້ນກູ້ ທີ່ຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ແມ່ນກຳນົດເອົາ 2 ວັນລັດຖະການ ກ່ອນວັນຊຳລະ ເປັນວັນປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນກູ້ ແລະ/ຫຼື ຕາມທີ່ຜູ້ອອກຮຸ້ນກູ້ໄດ້ແຈ້ງເຖິງນາຍທະບຽນຫຼັກຊັບ ເພື່ອກຳນົດສິດຂອງຜູ້ຖືຮຸ້ນກູ້ໃນການໄດ້ຮັບ ຫຼື ສິດທິປະໂຫຍດຕ່າງໆ ໃນຖານະຜູ້ຖືຮຸ້ນກູ້ (ຕໍ່ໄປນີ້ເອີ້ນວ່າ "ມື້ປິດປຶ້ມທະບຽນຜູ້ຖືຮຸ້ນກູ້"). ໃນກໍລະນີມື້ປິດປຶ້ມທະບຽນຮຸ້ນກູ້ດັ່ງກ່າວບໍ່ກົງກັບວັນຊື້ຂາຍກໍ່ໃຫ້ເລື່ອນເປັນວັນຊື້ຂາຍຖັດໄປ.

ຜູ້ອອກຮຸ້ນກູ້ ແລະ ນາຍທະບຽນຫຼັກຊັບ ຂໍສະຫງວນສິດໃນການແກ້ໄຂປ່ຽນແປງ ວັນ,ເວລາ ແລະ ມື້ປິດປຶ້ມທະບຽນຜູ້ຖືຮຸ້ນກູ້ ເພື່ອໃຫ້ເປັນໄປຕາມການປ່ຽນແປງຂອງກົດລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ ຂອງສູນຮັບຝາກຫຼັກຊັບ ຫຼື ໜ່ວຍງານອື່ນໃດທີ່ກ່ຽວຂ້ອງ ໂດຍ ບໍ່ຕ້ອງໄດ້ຮັບຄວາມຍິນຍອມຈາກຜູ້ອອກຮຸ້ນກູ້ ຫຼື ກອງປະຊຸມຜູ້ຖືຮຸ້ນກູ້ (ໂດຍນາຍທະບຽນຫຼັກຊັບຈະຕ້ອງແຈ້ງການແກ້ໄຂການປ່ຽນແປງ ໄລຍະເວລາ ການປິດປຶ້ມທະບຽນຜູ້ຖືຮຸ້ນກູ້ໃຫ້ຜູ້ອອກຮຸ້ນກູ້ຊາບທັນທີ່ພາຍໃນວັນຊື້ຂາຍຖັດໄປ). ທັງນີ້, ການແກ້ໄຂດັ່ງກ່າວຈະຕ້ອງບໍ່ກໍ່ໃຫ້ເກີດຜົນກະທົບໃນທາງລົບຕໍ່ສິດ ແລະ ຜົນປະໂຫຍດໃດໆ ຂອງຜູ້ຖືຮຸ້ນກູ້.

4.3 ຜູ້ມີສິດໃນຮຸ້ນກູ້

ຜູ້ຖືຮຸ້ນກູ້ທີ່ມີລາຍຊື່ໃນປຶ້ມທະບຽນບັນຊີຜູ້ຖືຮຸ້ນກູ້ ຈະມີສິດຮັບເງິນ ດອກເບ້ຍຮຸ້ນກູ້, ເຂົ້າຮ່ວມປະຊຸມຜູ້ຖືຮຸ້ນກູ້ ຫຼື ວັນໃດໜຶ່ງ ເພື່ອວັດຖຸປະສົງຕາມທີ່ກຳນົດໄວ້ໃນຂໍ້ກຳນົດນີ້ ແລະ/ຫຼື ຕາມທີ່ຜູ້ອອກຮຸ້ນກູ້ໄດ້ແຈ້ງເຖິງນາຍທະບຽນຫຼັກຊັບ ເພື່ອກຳນົດສິດຂອງຜູ້ຖືຮຸ້ນກູ້ໃນການໄດ້ຮັບ ຫຼື ສິດທິປະໂຫຍດຕ່າງໆ ໃນຖານະຜູ້ຖືຮຸ້ນກູ້.

ຜູ້ລົງທຶນທີ່ມີການຊື້ຮຸ້ນກູ້ໃນວັນ ອະສິດ ຈະບໍ່ໄດ້ຮັບດອກເບ້ຍຮຸ້ນກູ້, ບໍ່ໄດ້ສິດເຂົ້າຮ່ວມປະຊຸມຜູ້ຖືຮຸ້ນກູ້ ຫຼື ວັນໃດໜຶ່ງ ເພື່ອວັດຖຸປະສົງຕາມທີ່ກຳນົດໄວ້ໃນຂໍ້ກຳນົດນີ້ ແລະ/ຫຼື ຕາມທີ່ຜູ້ອອກຮຸ້ນກູ້ໄດ້ແຈ້ງເຖິງນາຍທະບຽນຫຼັກຊັບ ເພື່ອກຳນົດສິດຂອງຜູ້ຖືຮຸ້ນກູ້ໃນການໄດ້ຮັບ ຫຼື ສິດທິປະໂຫຍດຕ່າງໆ ໃນຖານະຜູ້ຖືຮຸ້ນກູ້.

5. ແຜນການຊຳລະຕົ້ນທຶນ ແລະ ດອກເບ້ຍ

ການຊຳລະຄືນຕົ້ນທຶນ	ຊຳລະຄືນເງິນຕົ້ນທຶນຈຳນວນທັງໝົດໃນມື້ຄົບກຳນົດໄຖ່ຖອນຮຸ້ນກູ້ ໃນກໍລະນີທີ່ວັນຄົບກຳນົດການໄຖ່ຖອນຮຸ້ນກູ້ດັ່ງກ່າວ ຫາກກົງກັບວັນພັກ ວັນຊຳລະເງິນດັ່ງກ່າວຈະຖືກເລື່ອນເປັນວັນຊື້ຂາຍຖັດໄປ
ການຊຳລະດອກເບ້ຍ	ບໍລິສັດຈະຊຳລະດອກເບ້ຍຂອງຮຸ້ນກູ້ທຸກໆ 6 (ຫົກ) ເດືອນ ໃນວັນທີ່19 ພຶດສະພາ ແລະ 19 ພະຈິກ ຂອງທຸກປີ ຕະຫຼອດອາຍຸຂອງຮຸ້ນກູ້. ໂດຍດອກເບ້ຍງວດທຳອິດຈະເລີ່ມຊຳລະແມ່ນໃນວັນທີ່ 19 ພະຈິກ 2023 ແລະ ດອກເບ້ຍງວດສຸດທ້າຍ ຈະຊຳລະໃນວັນຄົບກຳນົດໄຖ່ຖອນຮຸ້ນກູ້.

	ໃນກໍລະນີທີ່ ອັນຄົບກຳນົດຊຳລະດອກເບ້ຍຂອງຮຸ້ນກູ້ດັ່ງກ່າວ ຫາກບໍ່ກົງກັບ ອັນຊື້ຂາຍຮຸ້ນ ແມ່ນໃຫ້ເລື່ອນອັນຊຳລະດອກເບ້ຍເປັນອັນ ຊື້ຂາຍຮຸ້ນໃນມື້ອັນຖັດໄປ ໂດຍບໍລິສັດບໍ່ຈຳເປັນຕ້ອງຊຳລະດອກເບ້ຍ ຫຼື ເງິນເພີ່ມໃດໆສຳລັບການເລື່ອນຊຳລະດອກເບ້ຍ. ຍົກເວັ້ນໃນກໍລະນີການຊຳລະດອກເບ້ຍຮຸ້ນກູ້ງວດສຸດທ້າຍນັ້ນ ໃຫ້ຄຳນວນດອກເບ້ຍຕາມເງື່ອນໄຂໃນຂໍ້ກຳນົດຕໍ່ໄປຈົນເຖິງ (ແຕ່ບໍ່ລວມ) ອັນທີ່ມີການຊຳລະຕົວຈິງ.
ການຄິດໄລ່ດອກເບ້ຍ	ຈຳນວນດອກເບ້ຍທີ່ຈະຕ້ອງຊຳລະ ຈະຄິດໄລ່ໂດຍການນຳ (ກ) ຜົນຄູນຂອງຈຳນວນເງິນຕົ້ນຄົງຄ້າງຂອງຮຸ້ນກູ້ແຕ່ລະງວດ ກັບອັດຕາດອກເບ້ຍຮຸ້ນກູ້ໄປຄູນກັບ (ຂ) ຈຳນວນວັນສຳລັບງວດດອກເບ້ຍນັ້ນແລ້ວນຳມາຫານດ້ວຍ 365 ຫຼື ຈຳນວນວັນຕົວຈິງໃນປີປະຕິທິນນັ້ນ. ການຄິດໄລ່ດອກເບ້ຍແມ່ນເລີ່ມຕັ້ງແຕ່ (ລວມເຖິງ) ວັນອອກພັນທະບັດ ຈົນເຖິງ (ແຕ່ບໍ່ນັບລວມ) ວັນຈ່າຍດອກເບ້ຍແຕ່ລະງວດ ຫຼື ວັນຄົບກຳນົດໄຖ່ຖອນຮຸ້ນກູ້ດັ່ງກ່າວ ແລະ ໃຫ້ຜົນຄິດໄລ່ດອກເບ້ຍຮຸ້ນກູ້ມີຈຳນວນດອກເບ້ຍຈະກຳນົດທິດສະນິຍົມບໍ່ເກີນ 2 ຕຳແໜ່ງ (ໃນກໍລະນີຜົນອອກມາມີ 3 ຕຳແໜ່ງ ໃຫ້ປັດເສດທິດສະນິຍົມໃນຕຳແໜ່ງທີ 2 ຂຶ້ນ ຫາກມີເລກເສດຫຼາຍກວ່າ ຫຼື ເທົ່າກັບ 5, ນອກນັ້ນໃຫ້ປັດລົງ). ສະແດງສູດຄືໄລ່ຄື: (ເງິນຕົ້ນຄົງຄ້າງຂອງຮຸ້ນກູ້) x (ອັດຕາດອກເບ້ຍຮຸ້ນກູ້) x (ຈຳນວນວັນສຳລັບງວດດອກເບ້ຍງວດນັ້ນ) --- (365 ຫຼື ຈຳນວນວັນຕົວຈິງໃນປະຕິທິນນັ້ນ)
ດອກເບ້ຍຜິດນັດ	ກໍລະນີ ຜິດນັດຊຳລະດອກເບ້ຍຮຸ້ນກູ້ທີ່ຍັງບໍ່ຮອດກຳນົດໄຖ່ຖອນ ແລະ ເຫດການຜິດນັ້ນ ບໍ່ໄດ້ເປັນສາເຫດ ເຮັດໃຫ້ຮຸ້ນກູ້ຮອດກຳນົດການໄຖ່ຖອນກ່ອນກຳນົດແມ່ນ: ໃຫ້ຄິດໄລ່ດອກເບ້ຍໃນອັດຕາດອກເບ້ຍຜິດນັດ ສຳລັບຈຳນວນເງິນຕົ້ນທີ່ຄ້າງຊຳລະ ໂດຍຄຳນວນນັບຈາກວັນຜິດນັດຊຳລະຈົນເຖິງ (ແຕ່ບໍ່ລວມ) ວັນທີ ຜູ້ຖືຮຸ້ນກູ້ໄດ້ຮັບຊຳລະດອກເບ້ຍຜິດນັດທີ່ຄ້າງຊຳລະຄົບຖ້ວນແລ້ວ. ກໍລະນີ ຜິດນັດຊຳລະດອກເບ້ຍຮຸ້ນກູ້ທີ່ຍັງບໍ່ຮອດກຳນົດໄຖ່ຖອນແຕ່ເຫດການຜິດນັດຊຳລະ ເປັນເຫດໃຫ້ຮຸ້ນກູ້ຮອດກຳນົດໄຖ່ຖອນກ່ອນກຳນົດເວລາແມ່ນ: ໃຫ້ຄິດໄລ່ດອກເບ້ຍໃນອັດຕາດອກເບ້ຍຜິດນັດ ສຳລັບຈຳນວນເງິນຕົ້ນທີ່ຄ້າງຊຳລະ ໂດຍຄຳນວນນັບຈາກວັນຄົບກຳນົດໄຖ່ຖອນຮຸ້ນກູ້ງວດນັ້ນທີ່ຮອດກຳນົດຊຳລະກ່ອນວັນຄົບກຳນົດໄຖ່ຖອນອັນເນື່ອງຈາກການຜິດນັດຊຳລະຈົນເຖິງ (ແຕ່ບໍ່ລວມ) ວັນທີ ຜູ້ຖືຮຸ້ນກູ້ໄດ້ຮັບຊຳລະເງິນຕົ້ນທີ່ຄ້າງຊຳລະຄົບຖ້ວນແລ້ວ.

	ກໍລະນີ ຜິດນັດຊຳລະດອກເບ້ຍຮຸ້ນກູ້ທີ່ຄົບກຳນົດໄຖ່ຖອນ ແມ່ນ: ໃຫ້ຄິດໄລ່ດອກເບ້ຍໃນອັດຕາດອກເບ້ຍຜິດນັດ ສຳລັບຈຳນວນເງິນຕົ້ນທີ່ຄ້າງຊຳລະ ໂດຍຄຳນວນນັບຈາກວັນຄົບກຳນົດໄຖ່ຖອນຮຸ້ນກູ້ ຈົນເຖິງ (ແຕ່ບໍ່ລວມ) ວັນທີ ຜູ້ຖືຮຸ້ນກູ້ໄດ້ຮັບຊຳລະເງິນຕົ້ນທີ່ຄ້າງຊຳລະຄົບຖ້ວນແລ້ວ. ອັດຕາດອກເບ້ຍຜິດນັດ ແມ່ນອັດຕາດອກເບ້ຍທີ່ກຳນົດຕາມການເຈລະຈາລະຫວ່າງ ຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້ ແຕ່ຕ້ອງບໍ່ຫຼຸດ ຫຼື ເທົ່າກັບຕາມອັດຕາດອກເບ້ຍທີ່ໄດ້ຮັບຈາກການອອກຮຸ້ນກູ້ໃນຄັ້ງນີ້.
ວິທີການຊຳລະດອກເບ້ຍ ແລະ ຕົ້ນທຶນ	ຜູ້ອອກຮຸ້ນກູ້ຈະຊຳລະດອກເບ້ຍແຕ່ລະງວດ ໃຫ້ແກ່ຜູ້ຖືຮຸ້ນກູ້ຜ່ານນາຍທະບຽນຫຼັກຊັບຕາມຊື່ທີ່ປະກົດຢູ່ໃນປຶ້ມທະບຽນຜູ້ຖືຮຸ້ນກູ້ໃນມື້ປິດປຶ້ມເພື່ອກຳນົດສິດຮັບດອກເບ້ຍແລ້ວໂອນໃຫ້ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ (ຫຼື ບໍລິສັດຫຼັກຊັບທີ່ຜູ້ຖືຮຸ້ນກູ້ເປີດບັນຊີນຳ) ເປັນຜູ້ກະຈາຍເງິນໄປຫາຜູ້ລົງທຶນ ໂດຍການໂອນເງິນຜ່ານຕົວແທນຂອງບໍລິສັດ ຫຼື ວິທີ່ອື່ນໆ ຕາມຜູ້ອອກ ແລະ ນາຍທະບຽນໄດ້ຕົກລົງກັນຕາມແຕ່ລະກໍລະນີ, ສ່ວນການຊຳລະດອກເບ້ຍງວດສຸດທ້າຍ ແມ່ນຈະຊຳລະພ້ອມກັບຕົ້ນທຶນ.
ການໄຖ່ຖອນຫຸ້ນກູ້ໃນມື້ຄົບກຳນົດ	ຜູ້ອອກຮຸ້ນກູ້ຈະຊຳລະຕົ້ນທຶນພ້ອມກັບດອກເບ້ຍງວດສຸດທ້າຍ ໃຫ້ແກ່ຜູ້ຖືຮຸ້ນກູ້ ຜ່ານນາຍທະບຽນຫຼັກຊັບ ຕາມຊື່ທີ່ປະກົດຢູ່ໃນປຶ້ມທະບຽນຜູ້ຖືຮຸ້ນກູ້ໃນມື້ປິດປຶ້ມເພື່ອກຳນົດສິດຮັບດອກເບ້ຍ ແລ້ວໂອນໃຫ້ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ (ຫຼື ບໍລິສັດຫຼັກຊັບທີ່ຜູ້ຖືຮຸ້ນກູ້ເປີດບັນຊີນຳ) ເປັນຜູ້ກະຈາຍເງິນໄປຫາຜູ້ລົງທຶນ ໂດຍການໂອນເງິນຜ່ານທະນາຄານຕົວແທນຂອງບໍລິສັດ ຫຼື ວິທີ່ອື່ນໆ ຕາມຜູ້ອອກຮຸ້ນກູ້ ແລະ ນາຍທະບຽນຫຼັກຊັບ ໄດ້ຕົກລົງກັນຕາມແຕ່ລະກໍລະນີ.
ການຊື້ຮຸ້ນກູ້ຄືນ	ຜູ້ອອກຮຸ້ນກູ້ມີສິດຊື້ຮຸ້ນກູ້ຄືນຈາກຜູ້ຖືຮຸ້ນກູ້, ການຊື້ຄືນຮຸ້ນກູ້ ແມ່ນ ການຊຳລະຕົ້ນທຶນ ແລະ ດອກເບ້ຍ ຕາມມູນຄ່າທີ່ກຳນົດໄວ້ໃນໜ້າໃບຢັ້ງຢືນຮຸ້ນກູ້ພ້ອມທັງຄ່າເສຍໂອກາດ ຕາມການຕົກລົງລະຫວ່າງຜູ້ອອກ ແລະ ຜູ້ຖືຮຸ້ນກູ້ ໃນກໍລະນີຜູ້ອອກຮຸ້ນກູ້ຕ້ອງການໄຖ່ຖອນຮຸ້ນກູ້ກ່ອນຄົບກຳນົດ. ຜູ້ອອກຮຸ້ນກູ້ສາມາດຊື້ຮຸ້ນກູ້ຄືນ ທັງໝົດ ຫຼື ບາງສ່ວນກໍ່ໄດ້ ພາຍຫຼັງທີ່ຮຸ້ນກູ້ອອກຈຳໜ່າຍເກີນ 1 ປີ ຊຶ່ງນັບຈາກ ວັນທີ 19 ພຶດສະພາ ປີ 2023 (ວັນອອກຮຸ້ນກູ້) ເປັນຕົ້ນໄປ.

	ເມື່ອຜູ້ອອກຮຸ້ນກູ້ໄດ້ ຊື້ຄືນຮຸ້ນກູ້ແລ້ວໃຫ້ຖືວ່າ ໜີ້ຕາມຮຸ້ນກູ້ດັ່ງກ່າວ ໄດ້ສິ້ນສຸດແລ້ວ. ການໄຖ່ຖອນຮຸ້ນກູ້ກ່ອນເຖິງວັນຄົບກຳນົດເວລາ ມູນຄ່າຮຸ້ນກູ້ທີ່ບໍ່ສາມາດໄຖ່ຖອນໄດ້ແມ່ນ ປະຕິບັດຕາມລະບຽບການຂອງ ຕລຊລ ທີ່ກ່ຽວຂ້ອງ.
ມື້ພັກ	ຖ້າຫາກວັນຄົບກຳນົດຊຳລະຕົ້ນທຶນ ຫຼື ດອກເບ້ຍ ຫຼື ມື້ທີ່ຕ້ອງໄດ້ເຮັດການຊຳລະອື່ນໆ ທີ່ກ່ຽວຂ້ອງກັບຮຸ້ນກູ້ໃຫ້ແກ່ຜູ້ຖືຮຸ້ນກູ້ ຫາກກົງກັບວັນພັກ, ວັນຊຳລະເງິນດັ່ງກ່າວຈະຖືກເລື່ອນເປັນວັນລັດຖະການຖັດໄປ ໂດຍຈະບໍ່ມີການຄຳນວນດອກເບ້ຍສຳລັບການເລື່ອນວັນຊຳລະເງິນ.
ນາຍທະບຽນຫຼັກຊັບ	ຕະຫຼາດຫຼັກຊັບລາວ.

6. ການຜິດນັດຊຳລະ ແລະ ຜົນຂອງການຜິດນັດຊຳລະ

6.1 ກໍລະນີດັ່ງຕໍ່ໄປນີ້ຖືເປັນເຫດການຜິດນັດຕາມຮຸ້ນກູ້ (ເຫດການຜິດນັດ)

ເຫດການຜິດນັດຊຳລະແມ່ນເຫດການທີ່ ຜູ້ອອກຮຸ້ນກູ້ບໍ່ສາມາດປະຕິບັດຕາມແຜນການຊຳລະຕົ້ນທຶນ ແລະ/ຫຼື ດອກເບ້ຍໄດ້ ຕາມທີ່ໄດ້ກຳນົດໃນຂໍ້ 5 ຂອງຂໍ້ກຳນົດສະບັບນີ້ (ຍົກເວັ້ນໃນກໍລະນີທີ່ເກີດຂຶ້ນຈາກຂະບວນການໂອນເງິນ ຫຼື ຄວາມຜິດພາດທາງເທັກນິກ ໂດຍຜູ້ອອກຮຸ້ນກູ້ໄດ້ມີການຊຳລະເງິນດັ່ງກ່າວແລ້ວພາຍໃນ 3 ວັນລັດຖະການນັບຈາກວັນຄົບກຳນົດຊຳລະດັ່ງກ່າວ) ທີ່ເປັນເຫດໃຫ້ບໍ່ສາມາດແກ້ໄຂໄດ້ ຫຼື ກໍລະນີເຫດການດັ່ງກ່າວເປັນເຫດທີ່ສາມາດແກ້ໄຂໄດ້ ແຕ່ບໍ່ໄດ້ຮັບການແກ້ໄຂພາຍໃນໄລຍະເວລາ 30 ວັນ ນັບແຕ່ວັນທີ່ຜິດນັດຊຳລະ

6.2 ເມື່ອມີເຫດເກີດຜິດນັດໃດໜຶ່ງເກີດຂຶ້ນ ແລະ ເຫດຜິດນັດດັ່ງກ່າວຍັງຄົງດຳເນີນຢູ່ ຫາກວ່າ:

6.2.1 ຜູ້ຖືຮຸ້ນກູ້ ຊຶ່ງຖືຮຸ້ນກູ້ຮ່ວມກັນບໍ່ໜ້ອຍກວ່າ 50% ຂອງຈຳນວນໜີ້ຄົງຄ້າງພາຍໃຕ້ຮຸ້ນກູ້ທັງໝົດ ອອກໜັງສືແຈ້ງການຜິດນັດໄປຫາຜູ້ອອກຮຸ້ນກູ້ ໂດຍລະບຸເຖິງເຫດຜິດນັດ ແລະ ເລັ່ງໃຫ້ມີການຊຳລະໂດຍໄວ;

6.2.2 ກອງປະຊຸມຜູ້ຖືຮຸ້ນກູ້ລົງມະຕິເຫັນດີໃຫ້ມີການເລັ່ງຊຳລະໜີ້ຮຸ້ນກູ້ ແລະ ສົ່ງລາຍງານການປະຊຸມຜູ້ຖືຮຸ້ນກູ້ດັ່ງກ່າວໄປຍັງຜູ້ອອກຮຸ້ນກູ້;

6.2.3 ຜູ້ຖືຮຸ້ນກູ້ລາຍໃດໜຶ່ງສາມາດໄດ້ແຈ້ງໜັງສືເປັນລາຍລັກອັກສອນເຖິງເຫດການຜິດນັດດັ່ງກ່າວໄປຫາຜູ້ອອກຮຸ້ນກູ້

ໃຫ້ຖືວ່າ ໜີ້ຮຸ້ນກູ້ທັງໝົດໄດ້ຮອດເວລາໄຖ່ຖອນກ່ອນກຳນົດແບບກະທັນຫັນ ແລະ ຜູ້ອອກຮຸ້ນກູ້ຈະຕ້ອງຊຳລະເງິນຕົ້ນຄົງຄ້າງທັງໝົດພ້ອມດ້ວຍດອກເບ້ຍ ທີ່ຄຳນວນຈົນເຖິງ (ແຕ່ບໍ່ລວມ) ວັນທີ ຜູ້ຖືຮຸ້ນກູ້ໄດ້ຮັບຊຳລະເງິນຕົ້ນທີ່ຄ້າງຊຳລະຄົບຖ້ວນແລ້ວ.

6.3 ໃນກໍລະນີທີ່ຜູ້ອອກຮຸ້ນກູ້ຍັງບໍ່ຊໍາລະເງິນໃຫ້ຄົບຖ້ວນແກ່ຜູ້ຖືຮຸ້ນກູ້ພາຍໃນເວລາທີ່ກໍານົດເວລາຕາມທີ່ກໍານົດໄວ້ໃນຂໍ້ 6.2 ຂ້າງເທິງນັ້ນ, ຜູ້ຖືຮຸ້ນກູ້ແຕ່ລະລາຍອາດຈະດໍາເນີນການທາງກົດໝາຍຕໍ່ຜູ້ອອກຮຸ້ນກູ້ໄດ້ໂດຍກົງ ເພື່ອທີ່ຈະດໍາເນີນໃຫ້ມີການໃຊ້ໜີ້ຮຸ້ນກູ້ຂອງຕົນຕາມທີ່ກົດໝາຍອານຸຍາດ.

7. ສິດ ແລະ ໜ້າທີ່ຂອງຜູ້ອອກຮຸ້ນກູ້

ຜູ້ອອກຮຸ້ນກູ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1) ຊໍາລະຕົ້ນທຶນ ແລະ ດອກເບ້ຍ ຮຸ້ນກູ້ ເມື່ອຄົບກໍານົດເວລາຊໍາລະດອກເບ້ຍ ແລະ ໄຖ່ຖອນຮຸ້ນກູ້;
2) ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງໃຫ້ແກ່ຜູ້ລົງທຶນຕາມລະບຽບການ;
3) ແຈ້ງໃຫ້ແກ່ຜູ້ຖືຮຸ້ນກູ້ ທັນທີ ເມື່ອມີເຫດການໃດໜຶ່ງທີ່ເກີດຂຶ້ນດັ່ງນີ້:

- ຜິດນັດຊໍາລະ ຕົ້ນທຶນ ຫຼື ດອກເບ້ຍ;
- ຜູ້ອອກຈໍາໜ່າຍຮຸ້ນກູ້ ຖືກດໍາເນີນຄະດີ ຫຼື ຖືກກ່າວຫາໃຫ້ເປັນຝ່າຍຮັບຜິດຊອບ ໃນຂໍ້ຂັດແຍ່ງໃດໜຶ່ງ ຊຶ່ງອາດມີຜົນກະທົບຢ່າງຮ້າຍແຮງຕໍ່ຄວາມສາມາດໃນການຊໍາລະຕົ້ນທຶນ ຫຼື ດອກເບ້ຍ;

4) ແລະ ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ

8. ສິດ ແລະ ໜ້າທີ່ຂອງຜູ້ຖືຮຸ້ນກູ້

ຜູ້ຖືຮຸ້ນກູ້ ມີສິດ ແລະ ໜ້າທີ່ດັ່ງນີ້:

1) ໄດ້ຮັບການຊໍາລະຕົ້ນທຶນ ແລະ ດອກເບ້ຍຮຸ້ນກູ້ ເມື່ອຄົບກໍານົດເວລາຊໍາລະດອກເບ້ຍ ແລະ ໄຖ່ຖອນຮຸ້ນກູ້;
2) ໄດ້ຮັບຂໍ້ມູນຂ່າວສານ ແລະ ສາມາດກວດສອບເອກະສານ ທີ່ກ່ຽວຂ້ອງກັບການເຄື່ອນໄຫວທຸລະກິດຂອງຜູ້ອອກຈໍາໜ່າຍຮຸ້ນກູ້ ຕາມລະບຽບການ;
3) ຮຽກຮ້ອງໃຫ້ຜູ້ຈໍາໜ່າຍຮຸ້ນກູ້ ຊໍາລະຕົ້ນທຶນ ແລະ ດອກເບ້ຍຕາມທີ່ໄດ້ກໍານົດໃນໃບຢັ້ງຢືນຮຸ້ນກູ້ ເມື່ອມີການຜິດນັດຊໍາລະ;
4) ສາມາດຊື້ຂາຍ, ມອບ, ໂອນ ແລະ ນໍາໄປເປັນຫຼັກຊັບຄໍ້າປະກັນໄດ້ຕາມລະບຽບທີ່ກ່ຽວຂ້ອງ;
5) ແລະ ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

9. ຫຼັກເກນໃນການຈັດກອງປະຊຸມ

9.1 ຜູ້ອອກຮຸ້ນກູ້ ມີສິດຮຽກປະຊຸມຜູ້ຖືຮຸ້ນກູ້ໄດ້ (ທຸກເວລາ) ແຕ່ຜູ້ອອກຮຸ້ນກູ້ຈະຕ້ອງຮຽກປະຊຸມຜູ້ຖືຮຸ້ນກູ້ພາຍໃນ 30 ວັນ ນັບຕັ້ງແຕ່ວັນທີ່ຜູ້ຖືຮຸ້ນກູ້ ຊຶ່ງຖືຮຸ້ນກູ້ຮ່ວມກັນບໍ່ໜ້ອຍກວ່າ 25% ຂອງຈໍານວນຮຸ້ນກູ້ທີ່ຍັງບໍ່ໄດ້ມີການໄຖ່ຖອນທັງໝົດ ໄດ້ມີໜັງສືຄໍາຮ້ອງຂໍໃຫ້ຜູ້ອອກຮຸ້ນກູ້ຮຽກປະຊຸມຜູ້ຖືຮຸ້ນກູ້ ຫຼື ນັບແຕ່ວັນທີ່ຜູ້ອອກຮຸ້ນກູ້ຮັບຊາບວ່າມີກໍລະນີໃດໜຶ່ງດັ່ງຕໍ່ໄປນີ້ເກີດຂຶ້ນ:

9.1.1 ຖ້າເກີດເຫດຜິດນັດຊຳລະກໍລະນີໃດໜຶ່ງ ແລະ ໃນຂະນະນັ້ນຍັງບໍ່ທັນໄດ້ມີການສົ່ງໜັງສືແຈ້ງມາຍັງຜູ້ອອກຮຸ້ນກູ້ ຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນຂໍ້ 6.1 ຫຼື 6.2.3;

9.1.2 ຖ້າມີການສະເໜີຂໍແກ້ໄຂປ່ຽນແປງຂໍ້ກຳນົດສະບັບນີ້ ຕາມທີ່ກຳນົດໄວ້ໃນຂໍ້ 10; ຫຼື

9.1.3 ຖ້າມີເຫດການສຳຄັນໃດໜຶ່ງ ຊຶ່ງຜູ້ຖືຮຸ້ນກູ້ ທີ່ໄດ້ຮ່ວມຕົວກັນບໍ່ໜ້ອຍກວ່າ 25% ຂອງຈຳນວນໜີ້ຄົງຄ້າງທັງໝົດພາຍໃນຮຸ້ນກູ້ (ໂດຍມີໜັງສືສະເໜີເຖິງຜູ້ອອກຮຸ້ນກູ້) ເຫັນວ່າກະທົບຕໍ່ສ່ວນໄດ້ເສຍຂອງຜູ້ອອກຮຸ້ນກູ້ ຫຼື ຄວາມສາມາດຂອງຜູ້ອອກຮຸ້ນກູ້ໃນການປະຕິບັດຕາມຂໍ້ກຳນົດສະບັບນີ້.

ທັງນີ້, ໃນກໍລະນີທີ່ຜູ້ອອກຮຸ້ນກູ້ບໍ່ດຳເນີນການຮຽກປະຊຸມຜູ້ຖືຮຸ້ນກູ້ຕາມເງື່ອນໄຂ ແລະ ຫຼັກເກນທີ່ລະບຸໄວ້ໃນຂໍ້ກຳນົດສະບັບນີ້, ຜູ້ຖືຮຸ້ນກູ້ (ບໍ່ວ່າລາຍດຽວ ຫຼື ຫຼາຍລາຍຮ່ວມກັນ) ຊຶ່ງຖືຮຸ້ນກູ້ຮ່ວມກັນ ບໍ່ໜ້ອຍກວ່າ 25% ຂອງຈຳນວນຮຸ້ນກູ້ທີ່ຍັງບໍ່ໄດ້ມີການໄຖ່ຖອນ ແມ່ນສາມາດດຳເນີນດຳເນີນການຮຽກປະຊຸມຜູ້ຖືຮຸ້ນກູ້ເອງໄດ້.

9.2 ມະຕິເຫັນດີ ຂອງກອງປະຊຸມຜູ້ຖືຮຸ້ນກູ້ ທີ່ຮຽກປະຊຸມ ແລະ ດຳເນີນການປະຊຸມສຳເລັດ ແມ່ນໃຫ້ຖືວ່າມະຕິດັ່ງກ່າວມີຜົນສັກສິດ ແລະ ຜູກພັນຕໍ່ຜູ້ຖືຮຸ້ນກູ້ທຸກລາຍ ບໍ່ວ່າຈະໄດ້ເຂົ້າຮ່ວມ ຫຼື ບໍ່ກໍ່ຕາມ ສ່ວນຫຼັກເກນໃນການປະຊຸມຜູ້ຖືຮຸ້ນກູ້ນັ້ນ ຈະເປັນໄປຕາມເອກະສານຊ້ອນທ້າຍຂອງຂໍ້ກຳນົດສະບັບນີ້.

9.3 ຍົກເວັ້ນກໍລະນີການປະຊຸມຜູ້ຖືຮຸ້ນກູ້ ເມື່ອເກີດເຫດການຜິດນັດທີ່ລະບຸໄວ້ໃນຂໍ້ 9.1.1, 9.1.2 ແລະ 9.1.3 ຜູ້ຖືຮຸ້ນກູ້ອາດຈະໃຊ້ວິທີການລົງມະຕິເປັນລາຍລັກອັກສອນແທນການປະຊຸມຜູ້ຖືຮຸ້ນກໍ່ໄດ້ ໂດຍມະຕິໃນລັກສະນະດັ່ງກ່າວຈະຕ້ອງສະແດງໃຫ້ເຫັນວ່າຜູ້ຖືຮຸ້ນກູ້ ມີມະຕິ ແລະ ໄດ້ລົງລາຍເຊັນພ້ອມຊື່ໃນມະຕິດັ່ງກ່າວ ແລ້ວ ສົ່ງມອບໃຫ້ຜູ້ອອກຮຸ້ນກູ້. ທັງນີ້, ວັດຖຸປະສົງຂອງຂໍ້ 9.3 ນີ້ ຄະແນນສຽງທີ່ຈະຕ້ອງໄດ້ຮັບເພື່ອການອະນຸມັດໃນແຕ່ລະເລື່ອງ ຫຼື ວາລະ ນັ້ນ ແມ່ນໃຫ້ເປັນໄປຕາມ ທີ່ໄດ້ລະບຸໄວ້ໃນຂໍ້ 6 ຂອງເອກະສານຊ້ອນທ້າຍ 2 ວ່າດ້ວຍຫຼັກເກນໃນການປະຊຸມຜູ້ຖືຮຸ້ນກູ້ຂອງຂໍ້ກຳນົດສະບັບນີ້.

9.4 ໃນກໍລະນີທີ່ມີຜູ້ຖືຮຸ້ນກູ້ພຽງ ໜຶ່ງລາຍ ໃຫ້ຖືວ່າ ມະຕິທີ່ເຮັດເປັນລາຍລັກອັກສອນ ແລະ ລົງລາຍເຊັນໂດຍຜູ້ຖືຮຸ້ນກູ້ດັ່ງກ່າວເປັນມະຕິໂດຍເຫັນດີຂອງທີ່ປະຊຸມຜູ້ຖືຮຸ້ນກູ້ ໂດຍບໍ່ຕ້ອງຈັດໃຫ້ມີການປະຊຸມຜູ້ຖືຮຸ້ນກູ້.

9.5 ຜູ້ອອກຮຸ້ນກູ້ຈະເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຮຽກ ແລະ ຈັດປະຊຸມຜູ້ຖືຮຸ້ນກູ້ຕາມຂໍ້ກຳນົດສະບັບນີ້.

10. ການແກ້ໄຂເພີ່ມຕື່ມໃນຂໍ້ກຳນົດ

ການແກ້ໄຂເພີ່ມຕື່ມໃນຂໍ້ກຳນົດສະບັບນີ້ ຕ້ອງໄດ້ຮັບຄວາມເຫັນດີຈາກຜູ້ອອກຮຸ້ນກູ້ ແລະ ກອງປະຊຸມຜູ້ຖືຮຸ້ນກູ້ເສຍກ່ອນ ເຖິງແນວໃດກໍ່ຕາມ ການແກ້ໄຂເພີ່ມຕື່ມດັ່ງກ່າວຕ້ອງບໍ່ຂັດກັບນິຕິກຳຫຼັກຊັບ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ ທີ່ມີຜົນຕໍ່ກັບ ຮຸ້ນກູ້ ຫຼື ຜູ້ອອກຮຸ້ນກູ້.

ຜູ້ອອກຮຸ້ນກູ້ຈະຈັດສົ່ງເອກະສານຂໍ້ກຳນົດທີ່ມີການແກ້ໄຂເພີ່ມຕື່ມໃຫ້ແກ່ ນາຍທະບຽນຫຼັກຊັບ ແລະ ສຄຄຊ ທີ່ໄດ້ກຳນົດຕາມລະບຽບທີ່ກ່ຽວຂ້ອງ ແລະ ຈະຈັດສົ່ງໃຫ້ຜູ້ຖືຮຸ້ນກູ້ ຕາມກໍລະນີທີ່ມີການຮ້ອງຂໍ.

11. ການຈອງຊື້ຮຸ້ນກູ້ ແລະ ການວາງເງິນມັດຈຳ

ການຈອງຊື້ຮຸ້ນກູ້ຂັ້ນຕ່ຳ ຕ້ອງຊື້ຂັ້ນຕ່ຳ 50.000 ໂດລາສະຫະລັດ ແລະ ທະວີຄູນຄັ້ງລະ 50.000 ໂດລາ ສະຫະລັດ ຂຶ້ນໄປ, ສ່ວນລາຍລະອຽດຂອງການຈອງຊື້ຮຸ້ນກູ້ແມ່ນໄດ້ກຳນົດໄວ້ໃນໜັງສືຊວນຊື້.

ເວລາເປີດການຈອງຊື້ຮຸ້ນກູ້ ຜູ້ລົງທຶນຕ້ອງໂອນເງິນຊຳລະຄ່າຈອງຊື້ຮຸ້ນກູ້ໃຫ້ຄົບຖ້ວນ ຕາມມູນຄ່າຮຸ້ນກູ້ທີ່ຕົນສັ່ງຈອງ ໂດຍໂອນເຂົ້າບັນຊີເງິນຝາກສຳລັບການເປີດຈອງຮຸ້ນກູ້ທີ່ກຳນົດໄວ້ ພ້ອມທັງແຈ້ງຜົນການໂອນເງິນ ຫຼື ຫຼັກຖານການໂອນ ເງິນ ໃຫ້ຕົວແທນການຈັດຈຳໜ່າຍຮຸ້ນກູ້ຮັບຊາບ.

ໃນໄລຍະເວລາເປີດການຈອງຊື້ຮຸ້ນກູ້ ຜູ້ລົງທຶນໃດ ທີ່ໄດ້ຈອງຊື້ຮຸ້ນກູ້ ແລະ ວາງເງິນມັດຈຳແລ້ວ ແມ່ນບໍ່ສາມາດ ຍົກເລີກການຈອງຊື້ຮຸ້ນກູ້ຂອງຕົນໄດ້

12. ການຈັດສັນ

ພາຍຫຼັງຜູ້ລົງທຶນ ສຳເລັດການຈອງຊື້ຮຸ້ນກູ້ ແລະ ໂອນເງິນມັດຈຳເຂົ້າບັນຊີສະເພາະສຳລັບເປີດຈອງຊື້ຮຸ້ນກູ້ ຮຽບຮ້ອຍ ແລ້ວ. ຕົວແທນການຈັດຈຳໜ່າຍຮຸ້ນກູ້ຈະດຳເນີນການຈັດສັນຮຸ້ນກູ້ ໃຫ້ຜູ້ລົງທຶນທີ່ໄດ້ຈອງຊື້ຮຸ້ນກູ້ ຕາມວິທີການທີ່ໄດ້ກຳ ນົດໄວ້ໃນໜັງສືຊວນຊື້.

13. ການອອກໃບຢັ້ງຢືນການຈັດສັນຮຸ້ນກູ້

ຜູ້ອອກຈຳໜ່າຍຮຸ້ນກູ້ ຈະອອກໃບຢັ້ງຢືນການຈັດສັນຮຸ້ນກູ້ ໃຫ້ ຜູ້ຈອງຊື້ຮຸ້ນກູ້ ພາຍໃນ 5 ວັນລັດຖະການ ນັບແຕ່ວັນ ສິ້ນສຸດການຈອງຊື້ຮຸ້ນກູ້ ເປັນຕົ້ນໄປ.

14. ການຝາກຮຸ້ນກູ້

ຜູ້ອອກຮຸ້ນກູ້ ຈະນຳຮຸ້ນກູ້ໄປຝາກໄວ້ໃນສູນຮັບຝາກຫຼັກຊັບ ພາຍຫຼັງໄດ້ຮັບຮັບໃບຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້ ຈາກ ສຄຄຊ ຕາມນິຕິກຳທີ່ກ່ຽວຂ້ອງກຳນົດ.

15. ການຊື້ຂາຍຮຸ້ນກູ້

ຜູ້ອອກຮຸ້ນກູ້ຈະດຳເນີນນຳຮຸ້ນກູ້ໄປຈົດທະບຽນໃນ ຕລຊລ ສາມາດຊື້ຂາຍໄດ້ ໂດຍປະຕິບັດຕາມເງື່ອນໄຂ ແລະ ຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ຂອງ ຕລຊລ.

16. ພັນທະທາງອາກອນຂອງຜູ້ຖືຄອງຮຸ້ນກູ້

ອີງຕາມກົດໝາຍວ່າດ້ວຍອາກອນລາຍໄດ້ ເລກທີ 67/ສພຊ ລົງທີ 18 ມິຖຸນາ 2019, ມາດຕາ 35 ລາຍໄດ້ທີ່ຖືກຍົກເວັ້ນອາກອນລາຍໄດ້ ຂໍ້ 11. ເຫັນວ່າ ລາຍໄດ້ດອກເບ້ຍຈາກການຖືຮຸ້ນກູ້ແມ່ນຈະຖືກຍົກເວັ້ນອາກອນລາຍໄດ້ ເວັ້ນເສຍແຕ່ ກົດໝາຍ ຫຼື ນິຕິກຳຈະມີການກຳນົດເປັນຢ່າງອື່ນ.

17. ການຈັດຕັ້ງປະຕິບັດ

ຂໍ້ກຳນົດສະບັບນີ້ຈະມີຜົນສັກສິດ ແລະ ຈັດຕັ້ງປະຕິບັດ ນັບແຕ່ວັນອອກຈຳໜ່າຍຮຸ້ນກູ້ເປັນຕົ້ນໄປ ຈົນເຖິງ ມື້ທີ່ມີການຊຳລະໜີ້ຕາມຮຸ້ນກູ້ ຄົບຖ້ວນຮຽບຮ້ອຍ.

18. ຜົນສັກສິດ

ຂໍ້ກຳນົດສະບັບນີ້ແມ່ນມີຜົນສັກສິດນຳໃຊ້ ນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ອຳນວຍການ

ພັນໄມລາ ສຸຄະບັນດິດ

ເອກະສານຊ້ອນທ້າຍ 1 : ຮ່າງໃບຢັ້ງຢືນຮຸ້ນກູ້

ເອກະສານຊ້ອນທ້າຍ 2 : ຫຼັກເກນໃນການປະຊຸມຜູ້ຖືຮຸ້ນກູ້

<u>ເອກະສານຊ້ອນທ້າຍ 2</u>

<u>ຫຼັກເກນໃນການປະຊຸມຜູ້ຖືຮຸ້ນກູ້</u>

1. ການຮຽກປະຊຸມ

ຜູ້ອອກຮຸ້ນກູ້ ຫຼື ຜູ້ຖືຮຸ້ນກູ້ ທີ່ມີຈຸດປະສົງຮຽກເປີດກອງປະຊຸມຜູ້ຖືຮຸ້ນກູ້ (ຕາມແຕ່ລະກໍລະນີ) ສາມາດດຳເນີນການໃຫ້ນາຍທະບຽນຫຼັກຊັບຈັດສົ່ງໜັງສືເຊີນປະຊຸມໄດ້ ໂດຍສົ່ງເຖິງຜູ້ອອກຮຸ້ນກູ້ (ໃນກໍລະນີທີ່ຜູ້ອອກຮຸ້ນກູ້ບໍ່ແມ່ນຜູ້ຮຽກປະຊຸມ) ແລະ ຜູ້ຖືຮຸ້ນກູ້ ບໍ່ຕ່ຳກວ່າ 7 ວັນ (ບໍ່ນັບວັນທີ່ສົ່ງໜັງສືເຊີນປະຊຸມ ແລະ ວັນນັດປະຊຸມ) ກ່ອນວັນນັດປະຊຸມ. ໜັງສືເຊີນປະຊຸມຜູ້ຖືຮຸ້ນກູ້ ຈະຕ້ອງລະບຸ ວັນ,ເວລາ ແລະ ສະຖານທີ່ ສຳລັບການປະຊຸມ, ວາລະປະຊຸມ ແລະ ຜູ້ທີ່ຂໍໃຫ້ຮຽກປະຊຸມ. ທັງນີ້, ນາຍທະບຽນຫຼັກຊັບຈະຈັດສົ່ງໜັງສືເຊີນກອງປະຊຸມຜູ້ຖືຮຸ້ນກູ້ ໃຫ້ແກ່ຜູ້ຖືຮຸ້ນກູ້ ທຸກລາຍ ຕາມລາຍຊື່ ແລະ ທີ່ຢູ່ ທີ່ປາກົດໃນປຶ້ມທະບຽນຜູ້ຖືຮຸ້ນກູ້ ດ້ວຍຮູບ ແບບເອກະສານ ຫຼື ເອເລັກໂຕຣນິກ (ຕາມແຕ່ລະກໍລະນີ)

2. ຜູ້ມີສິດເຂົ້າຮ່ວມກອງປະຊຸມ

ຜູ້ມີສິດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນກູ້ ແຕ່ລະຄັ້ງຈະປະກອບດ້ວຍບຸກຄົນຕ່າງໆ ດັ່ງຕໍ່ໄປນີ້:

(ກ) ຜູ້ຖືຮຸ້ນກູ້ ແລະ ຜູ້ອອກຮຸ້ນກູ້;

(ຂ) ຜູ້ຖືຮຸ້ນກູ້ ສາມາດແຕ່ງຕັ້ງຜູ້ຖືຮຸ້ນກູ້ລາຍອື່ນ ຫຼື ບຸກຄົນອື່ນ (ຜູ້ໄດ້ຮັບມອບສິດ) ເຂົ້າຮ່ວມກອງປະຊຸມ ແລະ ອອກສຽງລົງຄະແນນແທນຕົນໄດ້ ໂດຍຕ້ອງເຮັດໜັງສືໃບມອບສິດ (ຕາມແບບຟອມທີ່ນາຍທະບຽນຫຼັກຊັບກຳນົດ ທີ່ຈັດສົ່ງໃຫ້ແກ່ຜູ້ຖືຮຸ້ນກູ້ ພ້ອມກັບໜັງສືເຊີນປະຊຸມ) ໃຫ້ແກ່ນາຍທະບຽນຫຼັກຊັບຢ່າງຕ່ຳ 1 ມື້ກ່ອນເວລານັດປະຊຸມ;

(ຄ) ທີ່ປຶກສາທາງການເງິນ, ທີ່ປຶກສາກົດໝາຍ ຫຼື ບຸກຄົນ ທີ່ມີສ່ວນກ່ຽວຂ້ອງກັບວາລະກອງປະຊຸມຈະພິຈາລະນາ ຊຶ່ງໄດ້ຮັບການຮ້ອງຂໍຈາກຜູ້ອອກຮຸ້ນກູ້ໃຫ້ເຂົ້າຮ່ວມປະຊຸມ ເພື່ອຊີ້ແຈງ ແລະ ສະແດງຄຳເຫັນໃນກອງປະຊຸມ;

(ງ) ບຸກຄົນອື່ນ ທີ່ປະທານກອງປະຊຸມຮຸ້ນກູ້ໄດ້ອະນຸຍາດໃຫ້ເຂົ້າຮ່ວມປະຊຸມໃນຖານະຜູ້ສັງເກດການ.

3. ອົງປະຊຸມ

3.1 ໃນການປະຊຸມຜູ້ຖືຮຸ້ນກູ້ ເພື່ອພິຈາລະນາ ແລະ ລົງມະຕິໃນວາລະຕ່າງໆ ນອກຈາກທີ່ກຳນົດໄວ້ໃນ ຂໍ້ 6.3 ແລະ 6.4 ໃນເອກະສານສະບັບນີ້ ຈະຕ້ອງມີຜູ້ຖືຮຸ້ນກູ້ ຕັ້ງແຕ່ 2 ລາຍຂຶ້ນໄປ ເຊິ່ງຖືຮຸ້ນກູ້ຈຳນວນລວມກັນບໍ່ໜ້ອຍກວ່າ 25% ຂອງຮຸ້ນກູ້ທີ່ຍັງບໍ່ທັນໄດ້ໄຖ່ຖອນທັງໝົດເຂົ້າຮ່ວມປະຊຸມ ຈຶ່ງຖືວ່າຄົບອົງປະຊຸມ. ໃນກໍລະນີ ການປະຊຸມຜູ້ຖືຮຸ້ນກູ້ເປັນການປະຊຸມຄັ້ງໃໝ່ ທີ່ເລື່ອນມາຈາກການປະຊຸມຄັ້ງກ່ອນ ຊຶ່ງບໍ່ສາມາດປະຊຸ່ມໄດ້ ເນື່ອງຈາກຂາດອົງປະຊຸມຕາມຂໍ້ 3.1 ນີ້. ອົງປະຊຸມສຳລັບການປະຊຸມຄັ້ງໃໝ່ທີ່ເລື່ອນ

ມານີ້ ຈະຕ້ອງປະກອບດ້ວຍຜູ້ຖືຮຸ້ນກູ້ ຕັ້ງແຕ່ 2 ລາຍຂຶ້ນໄປບໍ່ວ່າຈະຖືຮຸ້ນກູ້ເປັນຈຳນວນເທົ່າໃດກໍ່ຕາມ ເຂົ້າຮ່ວມກອງປະຊຸມ;

3.2 ການປະຊຸມຜູ້ຖືຮຸ້ນກູ້ເພື່ອພິຈາລະນາ ແລະ ລົງມະຕິໃນອາລະຕ່າງໆ ຕາມທີ່ກຳນົດໄວ້ໃນຂໍ້ 6.3 ຈະຕ້ອງມີຜູ້ຖືຮຸ້ນກູ້ຕັ້ງແຕ່ 2 ລາຍຂຶ້ນໄປ ຊຶ່ງຖືຮຸ້ນກູ້ ຮ່ວມກັນຈຳນວນບໍ່ໜ້ອຍກວ່າ 50% ຂອງຮຸ້ນກູ້ທີ່ຍັງບໍ່ໄດ້ໄຖ່ຖອນທັງໝົດ ທີ່ໄດ້ຮ່ວມປະຊຸມ ຈຶ່ງຖືວ່າຄົບອົງປະຊຸມ. ໃນກໍລະນີການປະຊຸມຜູ້ຖືຮຸ້ນກູ້ເປັນການປະຊຸມຄັ້ງໃໝ່ທີ່ເລື່ອນມາຈາກການປະຊຸມຄັ້ງກ່ອນຊຶ່ງບໍ່ສາມາດຈັດປະຊຸມໄດ້ເນື່ອງຈາກຂາດອົງປະຊຸມຕາມຂໍ້ 3.2 ນີ້ ອົງປະຊຸມສຳລັບການປະຊຸມຄັ້ງໃໝ່ທີ່ເລື່ອນມານີ້ ຈະຕ້ອງປະກອບດ້ວຍຜູ້ຖືຮຸ້ນກູ້ຕັ້ງແຕ່ 2 ລາຍຂຶ້ນໄປຊຶ່ງຖືຮຸ້ນກູ້ເປັນຈຳນວນບໍ່ໜ້ອຍກວ່າ 25% ຂອງຮຸ້ນກູ້ທີ່ຍັງບໍ່ໄດ້ໄຖ່ຖອນທັງໝົດເຂົ້າຮ່ວມປະຊຸມ;

3.3 ການປະຊຸມຜູ້ຖືຮຸ້ນກູ້ເພື່ອພິຈາລະນາ ແລະ ລົງມະຕິໃນອາລະຕ່າງໆ ຕາມທີ່ກຳນົດໄວ້ໃນ ຂໍ້ 6.4 ຈະຕ້ອງມີຜູ້ຖືຮຸ້ນກູ້ ຕັ້ງແຕ່ 2 ລາຍຂຶ້ນໄປຊຶ່ງຖືຮຸ້ນກູ້ເປັນຈຳນວນລວມກັນບໍ່ໜ້ອຍກວ່າ 80% ຂອງຮຸ້ນກູ້ທີ່ຍັງບໍ່ໄດ້ໄຖ່ຖອນທັງໝົດເຂົ້າຮ່ວມປະຊຸມ ຈຶ່ງຖືວ່າຄົບອົງປະຊຸມ ໃນກໍລະນີທີ່ການປະຊຸມຜູ້ຖືຮຸ້ນ ເປັນການປະຊຸມຄັ້ງໃໝ່ທີ່ເລື່ອນມາຈາກການປະຊຸມຄັ້ງກ່ອນ ຊຶ່ງບໍ່ສາມາດປະຊຸມໄດ້ເນື່ອງຈາກຂາດອົງປະຊຸມຕາມຂໍ້ 3.3 ນີ້ ອົງປະຊຸມສຳລັບການປະຊຸມຄັ້ງໃໝ່ທີ່ເລື່ອນມານີ້ຈະຕ້ອງປະກອບດ້ວຍຜູ້ຖືຮຸ້ນກູ້ຕັ້ງແຕ່ 2 ລາຍຂຶ້ນໄປ ຊຶ່ງຖືຮຸ້ນກູ້ເປັນຈຳນວນບໍ່ໜ້ອຍກວ່າ 70% ຂອງຮຸ້ນກູ້ທີ່ຍັງບໍ່ທັນໄດ້ໄຖ່ຖອນທັງໝົດເຂົ້າຮ່ວມປະຊຸມ;

4. ປະທານກອງປະຊຸມ

ປະທານຂອງກອງປະຊຸມຈະຖືກແຕ່ງຕັ້ງ ໃນກໍລະນີດັ່ງລຸ່ມນີ້:

- ໃນກໍລະນີ ຜູ້ອອກຮຸ້ນກູ້ເປັນຜູ້ຮຽກປະຊຸມ ປະທານຂອງກອງປະຊຸມ ຈະແມ່ນ ຜູ້ອອກຮຸ້ນກູ້ເປັນປະທານ
- ໃນກໍລະນີ ຜູ້ຖືຮຸ້ນຮຸ້ນກູ້ ຫາກເປັນຜູ້ຮຽກປະຊຸມ ປະທານຂອງກອງປະຊຸມ ຈະແມ່ນ ບຸກຄົນ ຫຼື ຜູ້ຖືຮຸ້ນກູ້ລາຍໃດໜຶ່ງ ທີ່ໄດ້ຮັບມອບໝາຍຈາກບັນດາຜູ້ຖືຮຸ້ນກູ້ເຮັດໜ້າທີ່ເປັນປະທານຂອງກອງປະຊຸມ. ໃນກໍລະນີທີ່ຜູ້ທີ່ຈະເຮັດໜ້າທີ່ເປັນປະທານກອງປະຊຸມ ບໍ່ມາປະຊຸມຕາມໂມງເປີດກອງປະຊຸມ ເຊິ່ງໄດ້ການເວລາ ເປັນເວລາ 45 ນາທີ່ແລ້ວ ໃຫ້ກອງປະຊຸມລົງມະຕິເລືອກຜູ້ຖືຮຸ້ນກູ້ລາຍໃດລາຍໜຶ່ງເປັນປະທານໃນທີ່ປະຊຸມ.

5. ການເລື່ອນກອງປະຊຸມ

5.1 ໃນການປະຊຸມຜູ້ຖືຮຸ້ນກູ້ (ບໍ່ວ່າຄັ້ງໃດໆ) ຫາກປະກົດວ່າໄດ້ການເວລານັດໄປແລ້ວເຖິງ 45 ນາທີ ຍັງມີຜູ້ຖືຮຸ້ນກູ້ເຂົ້າຮ່ວມປະຊຸມບໍ່ຄົບອົງປະຊຸມ ປະທານກອງປະຊຸມຈະຕ້ອງສັ່ງຍົກເລີກກອງປະຊຸມ ໂດຍ:

(ກ) ໃນກໍລະນີທີ່ຜູ້ອອກຮຸ້ນກູ້ເປັນຜູ້ຮຽກປະຊຸມ ໃຫ້ປະທານໃນກອງປະຊຸມເລື່ອນເວລາການປະຊຸມຜູ້ຖືຮຸ້ນກູ້ ໄປປະຊຸມໃນ ວັນ, ເວລາ ແລະ ສະຖານທີ່ ທີ່ປະທານກອງປະຊຸມກຳນົດ ໂດຍວັນນັດປະຊຸມໃໝ່ຈະຕ້ອງຢູ່ພາຍໃຕ້ເວລາບໍ່ຕ່ຳກວ່າ 7 ວັນ ແຕ່ບໍ່ເກີນ 14 ວັນ ນັບຈາກວັນນັດປະຊຸມເດີມ. ທັງນີ້, ເວັ້ນແຕ່ຜູ້ອອກຮຸ້ນກູ້ມີຄຳເຫັນ ບໍ່ໃຫ້ມີການຮຽກປະຊຸມຄັ້ງໃໝ່. ນອກຈາກນີ້, ວາລະທີ່ຈະພິຈາລະນາ ແລະ ລົງມະຕິໃນຄັ້ງໃໝ່ ຈະຕ້ອງເປັນວາລະເກົ່າທີ່ອາດຈະພິຈາລະນາຄືນກ່ຳໄດ້;

(ຂ) ໃນກໍລະນີທີ່ຜູ້ຖືຮຸ້ນກູ້ເປັນຜູ້ຮ້ອງຂໍໃຫ້ຮຽກຈັດກອງປະຊຸມ ແມ່ນຈະບໍ່ມີການຮຽກປະຊຸມໃໝ່ຕາມທີ່ກຳນົດໄວ້ໃນ ຂໍ້ (ກ) ຂ້າງເທິງນີ້;

(ຄ) ໃນກໍລະນີທີ່ການປະຊຸມຂາດອົງປະຊຸມນີ້ ເປັນການປະຊຸມທີ່ໄດ້ຮຽກປະຊຸມເນື່ອງຈາກການປະຊຸມໃນຄັ້ງກ່ອນຂາດອົງປະຊຸມ ແມ່ນຈະບໍ່ມີການຮຽກປະຊຸມໃໝ່ຕາມທີ່ກຳນົດໄວ້ໃນ ຂໍ້ (ກ) ຂ້າງຕົ້ນ.

5.2 ນາຍທະບຽນຫຼັກຊັບຈະຕ້ອງຈັດສົ່ງໜັງສືເຊີນສຳລັບການປະຊຸມຄັ້ງໃໝ່ທີ່ຈະຈັດຂຶ້ນເນື່ອງຈາກການປະຊຸມຄັ້ງກ່ອນຂາດອົງປະຊຸມໃຫ້ແກ່ຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້ ພາຍໃນໄລຍະເວລາ ບໍ່ຕ່ຳກວ່າ 3 ວັນ ກ່ອນວັນນັດປະຊຸມຄັ້ງໃໝ່ (ບໍ່ນັບວັນທີ່ສົ່ງໜັງສືຮຽກປະຊຸມ ແລະ ວັນນັດປະຊຸມ) ໂດຍໜັງສືເຊີນປະຊຸມຜູ້ຖືຮຸ້ນ ຈະຕ້ອງລະບຸວັນເວລາ ສະຖານທີ່ສຳລັບການປະຊຸມ ວາລະການປະຊຸມ ແລະ ອົງປະຊຸມທີ່ຕ້ອງການສຳລັບການປະຊຸມຄັ້ງໃໝ່.

6. ມະຕິປະຊຸມ

6.1 ການລົງມະຕິໃນວາລະຕ່າງໆ ຂອງກອງປະຊຸມຜູ້ຖືຮຸ້ນກູ້ ໃຫ້ຕັດສິນໂດຍການລົງຄະແນນສຽງຕາມທີ່ປະທານກອງປະຊຸມກຳນົດ ຊຶ່ງຜູ້ຖືຮຸ້ນກູ້ ຫຼື ຜູ້ໄດ້ຮັບມອບສິດແຕ່ລະລາຍຈະມີຄະແນນສຽງເທົ່າຈຳນວນຮຸ້ນກູ້ທີ່ຕົນຖືຢູ່ ໂດຍໃຫ້ຖືວ່າ ຮຸ້ນກູ້ໜຶ່ງໜ່ວຍມີໜຶ່ງສຽງ. ໃນກໍລະນີຄະແນນສຽງເທົ່າກັນແມ່ນໃຫ້ປະທານໃນກອງປະຊຸມມີຄະແນນສຽງຊີ້ຂາດ ເພີ່ມຈາກຄະແນນສຽງທີ່ປະທານໃນກອງປະຊຸມ ຊຶ່ງອາດຈະມີຖານະທີ່ຕົນເປັນຜູ້ຖືຮຸ້ນກູ້ ຫຼື ຜູ້ໄດ້ຮັບມອບສິດ.

6.2 ມະຕິກອງປະຊຸມຮຸ້ນກູ້ໃນວາລະຕ່າງທີ່ນອກເໜືອຈາກທີ່ກຳນົດໄວ້ໃນຂໍ້ 6.3 ແລະ 6.4, ການລົງມະຕິຈະມີຄຸນຄ່າໃຊ້ໄດ້ກໍ່ຕໍ່ເມື່ອໄດ້ຮັບຄະແໜນສຽງຫຼາຍກວ່າ 50% ຂອງຈຳນວນຮຸ້ນກູ້ທີ່ຍັງບໍ່ໄດ້ໄຖ່ຖອນທັງໝົດທີ່ເຂົ້າຮ່ວມປະຊຸມ.

6.3 ມະຕິກອງປະຊຸມຮຸ້ນກູ້ໃນການແກ້ໄຂປ່ຽນແປງຂໍ້ກຳນົດ ຊຶ່ງບໍ່ກ່ຽວຂ້ອງກັບວາລະຕ່າງໆ ທີ່ກຳນົດໄວ້ໃນ ຂໍ້ 6.4 ,ການລົງມະຕິຈະມີຄຸນຄ່າໃຊ້ໄດ້ກໍ່ຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າ 70% ຂອງຈຳນວນຂອງຮຸ້ນກູ້ທີ່ຍັງບໍ່ໄດ້ໄຖ່ຖອນທັງໝົດທີ່ເຂົ້າຮ່ວມປະຊຸມ.

6.4 ມະຕິກອງປະຊຸມຮຸ້ນກູ້ໃນວາລະຕ່າງໆ ຕໍ່ໄປນີ້ຈະຕ້ອງເປັນມະຕິທີ່ໄດ້ຮັບຄະແນນສຽງຫຼາຍກວ່າ 80% ຂອງຈຳນວນຂອງຮຸ້ນກູ້ທີ່ຍັງບໍ່ໄດ້ໄຖ່ຖອນທັງໝົດທີ່ເຂົ້າຮ່ວມປະຊຸມ.

(ກ) ການແກ້ໄຂ ອັນຄົບກຳນົດໄຖ່ຖອນຮຸ້ນກູ້ ຫຼື ອັນຄົບກຳນົດຊຳລະເງິນບໍ່ວ່າຈຳນວນໃດໆຕາມຮຸ້ນກູ້;

(ຂ) ການແກ້ໄຂເນື້ອໃນບາງສ່ວນໃນໜັງສືຊວນຊື້, ການຫຼຸດ, ຍົກເລີກ ຫຼື ປ່ຽນແປງແກ້ໄຂຈຳນວນເງິນຕົ້ນດອກເບ້ຍ ແລະ/ຫຼື ເງິນຈຳນວນອື່ນໃດທີ່ຄ້າງຊຳລະ ຫຼື ທີ່ຈະຕ້ອງຊຳລະຕາມຮຸ້ນກູ້;

(ຄ) ການປ່ຽນແປງສະກຸນເງິນຕາຂອງເງິນບໍ່ວ່າຈຳນວນໃດໆ ທີ່ຈະຕ້ອງຊຳລະຕາມຮຸ້ນກູ້;

(ງ) ການແກ້ໄຂປ່ຽນແປງຫຼັກເກນໃນການປະຊຸມຜູ້ຖືຮຸ້ນກູ້ໃນສ່ວນທີ່ກ່ຽວຂ້ອງກັບອົງປະຊຸມ (ຂໍ້ 3) ແລະ ມະຕິຂອງກອງປະຊຸມ (ຂໍ້ 6);

(ຈ) ການແກ້ໄຂປ່ຽນແປງຂໍ້ກຳນົດສິດ ເພື່ອໃຫ້ສາມາດດຳເນີນການໃນເລື່ອງໃດເລື່ອງໜຶ່ງຕາມ ຂໍ້ (ກ) ຮອດ ຂໍ້ (ງ);

6.5 ປະທານກອງປະຊຸມຜູ້ຖືຮຸ້ນກູ້, ຜູ້ຖືຮຸ້ນກູ້ລາຍໃດທີ່ມີສ່ວນໄດ້ເສຍເປັນພິເສດໃນວາລະໃດໜຶ່ງ ຈະບໍ່ມີສິດລົງຄະແນນສຽງໃນວາລະດັ່ງກ່າວ.

7. ລາຍງານການປະຊຸມຜູ້ຖືຮຸ້ນກູ້

ຜູ້ອອກຮຸ້ນກູ້ຈະຕ້ອງສ້າງບົດລາຍງານກອງປະຊຸມຜູ້ຖືຮຸ້ນກູ້ ແລະ ໃຫ້ປະທານກອງປະຊຸມໃນຄັ້ງນັ້ນລົງລາຍເຊັນຮັບຮອງພາຍໃນ 14 ວັນ ນັບແຕ່ວັນປະຊຸມ ແລະ ເກັບຮັກສາຕົ້ນສະບັບໄວ້ ລວມທັງຈັດໃຫ້ມີການສຳເນົາເພື່ອໃຫ້ຜູ້ຖືຮຸ້ນກູ້ສາມາດກວດສອບໄດ້ ທີ່ສຳນັກງານຂອງຜູ້ອອກຮຸ້ນກູ້ ແລະ ນາຍທະບຽນຫຼັກຊັບ ໃນວັນ ແລະ ເວລາໂມງລັດຖະການຂອງຜູ້ອອກຮຸ້ນກູ້ ແລະ ນາຍທະບຽນຫຼັກຊັບ (ຕາມແຕ່ກໍລະນີ).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ

ເລກທະບຽນວິສາຫະກິດ 0036/ຈຫວ

ເລກທີ່

ນະຄອນຫຼວງວຽງຈັນ, ວັນທີ

(ແບບຮ່າງໃບຢັ້ງຢືນການຖືຄອງຮຸ້ນກູ້)

ຮຸ້ນກູ້ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປະເພດລະບຸຊື່ຜູ້ຖື ບໍ່ດ້ອຍສິດບໍ່ມີຄ້ຳປະກັນ ແລະ ຕິດແທນຜູ້ຖືຮຸ້ນກູ້ ຄັ້ງທີ່ 1, ງວດທີ່ 1, ຄົບອາຍຸການໄຖ່ຖອນ ປີ 2027 ມູນຄ່າລວມ 3.000.000 ໂດລາ ສະຫະລັດ,ຈຳນວນທີ່ອອກ 60 ໜ່ວຍ, ມູນຄ່ານຳມິດ 50.000 ໂດລາ ສະຫະລັດ ຕໍ່ໜ່ວຍ, ລາຄາຂາຍ 50.000 ໂດລາ ສະຫະລັດ ຕໍ່ໜ່ວຍ, ອາຍຸ 4 ປີ, ວັນອອກຮຸ້ນກູ້ 19 ພຶດສະພາ 2023, ວັນຄົບອາຍຸການໄຖ່ຖອນ 19 ພຶດສະພາ 2027, ຊຳລະດອກເບ້ຍ ທຸກໆ 6 ເດືອນ ຕະລອດອາຍຸຮຸ້ນກູ້, ອັດຕາດອກເບ້ຍຄົງທີ່ 7,50% ຕໍ່ປີ.

ຜູ້ອຳນວຍການ ບໍລິສັດ ສຸວັນນີ ໂຮມເຊັນເຕີ ຂໍອອກໃບຢັ້ງຢືນການຖືຄອງຮຸ້ນກູ້ ໃຫ້ແກ່ ທ່ານ.....
ໂດຍມີລາຍລະອຽດດັ່ງລຸ່ມນີ້

➢ **ຂໍ້ຜູ້ຖືຮຸ້ນກູ້:**

ຊື່ບັນຊີຮຸ້ນກູ້	
ເລກບັນຊີຮຸ້ນກູ້	
ລະຫັດຜູ້ລົງທຶນ	

➢ **ຂໍ້ມູນຮຸ້ນກູ້:**

ຜູ້ອອກຈຳໜ່າຍຮຸ້ນກູ້	ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ປະເພດການອອກຈຳໜ່າຍ	ໃນວົງຈຳກັດ (Private Placement)
ເລກລະຫັດຮຸ້ນກູ້	
ສະກຸນເງິນ	ໂດລາ ສະຫະລັດ
ອາຍຸ	4 ປີ
ວັນທີ, ເດືອນ, ປີ ອອກຮຸ້ນກູ້	19 ພຶດສະພາ 2023
ວັນທີ, ເດືອນ, ປີ ຄົບກຳນົດໄຖ່ຖອນ	19 ພຶດສະພາ 2027
ງວດຈ່າຍດອກເບ້ຍ	ທຸກໆ 6 ເດືອນ (ວັນທີ 19 ພຶດສະພາ ແລະ 19 ພະຈິກ)ຕະຫຼອດອາຍຸຮຸ້ນກູ້
ອັດຕາດອກເບ້ຍຕໍ່ປີ (%)	7,5% (ຄົງທີ່) ຕໍ່ປີ
ມູນຄ່ານຳມິດຕໍ່ໜ່ວຍ (USD)	50.000 ໂດລາ ສະຫະລັດ
ລາຄາສະເໜີຂາຍຕໍ່ໜ່ວຍ (USD)	50.000 ໂດລາ ສະຫະລັດ
ຈຳນວນຮຸ້ນກູ້ (ໜ່ວຍ)	
ມູນຄ່າທັງໝົດ	USD

ຜູ້ອຳນວຍການ

ບາງຂໍ້ຄວາມສຳຄັນຂອງຮຸ້ນກູ້

- ❖ ໃບຮຸ້ນກູ້ນີ້ ແມ່ນຢູ່ພາຍໃຕ້ຂໍ້ກຳນົດວາດ້ວຍ ສິດ ແລະ ໜ້າທີ່ຂອງຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້ ສຳລັບຮຸ້ນກູ້ ຂອງ ບໍລິສັດ ສຸວັນນີໂອມເຊັນເຕີ ມະຫາຊົນ ຄັ້ງທີ 1, ງວດທີ 1, ຄົບອາຍຸການໄຖ່ຖອນ ປີ 2027
- ❖ ຮຸ້ນກູ້ແມ່ນໜີ້ໂດຍກົງ ແລະ ທົ່ວໄປຂອງຜູ້ອອກຮຸ້ນກູ້ ທີ່ບໍ່ມີເງື່ອນໄຂ ບໍ່ມີການຄ້ຳປະກັນ ແລະ ເປັນໜີ້ ບໍ່ດ້ອຍສິດ ໂດຍໜີ້ຮຸ້ນກູ້ມີຖານະທາງກົດໝາຍເທົ່າທຽມກັນທຸກໜ່ວຍ ທັງນີ້, ຜູ້ຖືຮຸ້ນກູ້ແຕ່ລະລາຍຈະມີສິດໄດ້ຮັບຊຳລະໜີ້ຕາມຮຸ້ນກູ້ຂອງຕົນບໍ່ດ້ອຍກວ່າສິດໃນການຮັບຊຳລະໜີ້ຂອງເຈົ້າໜີ້ສາມັນທີ່ມີຫຼັກຊັບຄ້ຳປະກັນ ແລະ ບໍ່ດ້ອຍສິດທັງໃນປະຈຸບັນ ແລະ ອານາຄົດຂອງຜູ້ອອກຮຸ້ນກູ້ ເວັ້ນເສຍແຕ່ ບັນດາໜີ້ທີ່ມີກົດໝາຍຄຸ້ມຄອງໂດຍສະເພາະ ຫຼື ໂດຍທົ່ວໄປໄດ້ຮັບຊຳລະໜີ້ກ່ອນ.
- ❖ ການປິດປຶ້ມທະບຽນຜູ້ຖືຮຸ້ນກູ້ ຈະປິດກ່ອນ 2 ວັນລັດຖະການກ່ອນວັນຊຳລະເປັນວັນປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນກູ້
- ❖ ວິທີການຊຳລະຕົ້ນທຶນ ແລະ ດອກເບ້ຍ

ການຊຳລະຄືນຕົ້ນທຶນ	ຊຳລະຄືນເງິນຕົ້ນທຶນຈຳນວນທັງໝົດໃນມື້ຄົບກຳນົດໄຖ່ຖອນຮຸ້ນກູ້ ໃນກໍລະນີທີ່ວັນຄົບກຳນົດການໄຖ່ຖອນຮຸ້ນກູ້ດັ່ງກ່າວ ຫາກກົງກັບວັນພັກ ວັນຊຳລະເງິນດັ່ງກ່າວຈະຖືກເລື່ອນເປັນວັນຊື້ຂາຍຖັດໄປ
ການຊຳລະດອກເບ້ຍ	ບໍລິສັດຈະຊຳລະດອກເບ້ຍຂອງຮຸ້ນກູ້ ທຸກໆ ທຸກໆ 6 (ຫົກ) ເດືອນ ໃນວັນທີ 19 ພຶດສະພາ ແລະ 19 ພະຈິກ ຂອງທຸກປີ ຕະຫຼອດອາຍຸຂອງຮຸ້ນກູ້. ໂດຍດອກເບ້ຍງວດທຳອິດຈະເລີ່ມຊຳລະແມ່ນໃນວັນທີ 19 ພະຈິກ 2023 ແລະ ດອກເບ້ຍງວດສຸດທ້າຍ ຈະຊຳລະໃນວັນຄົບກຳນົດໄຖ່ຖອນຮຸ້ນກູ້. ໃນກໍລະນີທີ່ ວັນຄົບກຳນົດຊຳລະດອກເບ້ຍຂອງຮຸ້ນກູ້ດັ່ງກ່າວ ຫາກບໍ່ກົງກັບ ວັນຊື້ຂາຍຮຸ້ນ ແມ່ນໃຫ້ເລື່ອນວັນຊຳລະດອກເບ້ຍເປັນວັນ ຊື້ຂາຍຮຸ້ນໃນມື້ວັນຖັດໄປ ໂດຍບໍລິສັດບໍ່ຈຳເປັນຕ້ອງຊຳລະດອກເບ້ຍ ຫຼື ເງິນເພີ່ມໃດໆສຳລັບການເລື່ອນຊຳລະດອກເບ້ຍ. ຍົກເວັ້ນໃນກໍລະນີການຊຳລະດອກເບ້ຍຮຸ້ນກູ້ງວດສຸດທ້າຍນັ້ນ ໃຫ້ຄຳນວນດອກເບ້ຍຕາມເງື່ອນໄຂໃນຂໍ້ກຳນົດຕໍ່ໄປຈົນເຖິງ (ແຕ່ບໍ່ລວມ) ວັນທີ່ມີການຊຳລະຕົວຈິງ.
ການຄິດໄລ່ດອກເບ້ຍ	ຈຳນວນດອກເບ້ຍທີ່ຈະຕ້ອງຊຳລະ ຈະຄິດໄລ່ໂດຍການນຳ (ກ) ຜົນຄູນຂອງຈຳນວນເງິນຕົ້ນຄົງຄ້າງຂອງຮຸ້ນກູ້ແຕ່ລະງວດ ກັບອັດຕາດອກເບ້ຍຮຸ້ນກູ້ ໄປຄູນກັບ (ຂ) ຈຳນວນວັນສຳລັບງວດດອກເບ້ຍນັ້ນແລ້ວນຳມາຫານດ້ວຍ 365 ຫຼື ຈຳນວນວັນຕົວຈິງໃນປີປະຕິທິນນັ້ນ. ການຄິດໄລ່ດອກເບ້ຍແມ່ນເລີ່ມຕັ້ງແຕ່ (ລວມເຖິງ) ວັນອອກພັນທະບັດ ຈົນເຖິງ (ແຕ່ບໍ່ນັບລວມ) ວັນຈ່າຍດອກເບ້ຍແຕ່ລະງວດ ຫຼື ວັນຄົບກຳນົດໄຖ່ຖອນຮຸ້ນກູ້ດັ່ງກ່າວ ແລະ ໃຫ້ຜົນຄິດໄລ່ດອກເບ້ຍຮຸ້ນກູ້ມີຈຳນວນດອກເບ້ຍຈະກຳນົດທິດສະນິຍົມບໍ່ເກີນ 2 ຕຳແໜ່ງ (ໃນກໍລະນີຜົນອອກມາມີ 3 ຕຳແໜ່ງ ໃຫ້ປັດເສດທິດສະນິຍົມໃນຕຳແໜ່ງທີ 2 ຂຶ້ນ ຫາກມີເລກເສດຫຼາຍກວ່າ ຫຼື ເທົ່າກັບ 5, ນອກນັ້ນໃຫ້ປັດລົງ).
ດອກເບ້ຍຜິດນັດ	ກໍລະນີ ຜິດນັດຊຳລະດອກເບ້ຍຮຸ້ນກູ້ທີ່ຍັງບໍ່ຮອດກຳນົດໄຖ່ຖອນ ແລະ ເຫດການຜິດນັ້ນ ບໍ່ໄດ້ເປັນສາເຫດ ເຮັດໃຫ້ຮຸ້ນກູ້ຮອດກຳນົດການໄຖ່ຖອນກ່ອນກຳນົດແມ່ນ: ໃຫ້ຄິດໄລ່ດອກເບ້ຍໃນອັດຕາດອກເບ້ຍຜິດນັດ ສຳລັບຈຳນວນເງິນຕົ້ນທີ່ຄ້າງຊຳລະ ໂດຍຄຳນວນນັບຈາກວັນຜິດນັດຊຳລະຈົນເຖິງ (ແຕ່ບໍ່ລວມ) ວັນທີ ຜູ້ຖືຮຸ້ນກູ້ໄດ້ຮັບຊຳລະດອກເບ້ຍຜິດນັດທີ່ຄ້າງຊຳລະຄົບຖ້ວນແລ້ວ. ກໍລະນີ ຜິດນັດຊຳລະດອກເບ້ຍຮຸ້ນກູ້ທີ່ຍັງບໍ່ຮອດກຳນົດໄຖ່ຖອນແຕ່ເຫດການຜິດນັດຊຳລະ ເປັນເຫດໃຫ້ຮຸ້ນກູ້ຮອດກຳນົດໄຖ່ຖອນກ່ອນກຳນົດເວລາ ແມ່ນ: ໃຫ້ຄິດໄລ່ດອກເບ້ຍໃນອັດຕາດອກເບ້ຍຜິດນັດ ສຳລັບຈຳນວນເງິນຕົ້ນທີ່ຄ້າງຊຳລະ ໂດຍຄຳນວນນັບຈາກວັນຄົບກຳນົດໄຖ່ຖອນຮຸ້ນກູ້ງວດນັ້ນທີ່ຮອດກຳນົດຊຳລະກ່ອນວັນຄົບກຳນົດໄຖ່ຖອນອັນເນື່ອງຈາກການຜິດນັດຊຳລະຈົນເຖິງ (ແຕ່ບໍ່ລວມ) ວັນທີ ຜູ້ຖືຮຸ້ນກູ້ໄດ້ຮັບຊຳລະເງິນຕົ້ນທີ່ຄ້າງຊຳລະຄົບຖ້ວນແລ້ວ. ກໍລະນີ ຜິດນັດຊຳລະດອກເບ້ຍຮຸ້ນກູ້ທີ່ຄົບກຳນົດໄຖ່ຖອນ ແມ່ນ: ໃຫ້ຄິດໄລ່ດອກເບ້ຍໃນອັດຕາດອກເບ້ຍຜິດນັດ ສຳລັບຈຳນວນເງິນຕົ້ນທີ່ຄ້າງຊຳລະ ໂດຍຄຳນວນນັບຈາກວັນຄົບກຳນົດໄຖ່ຖອນຮຸ້ນກູ້ ຈົນເຖິງ (ແຕ່ບໍ່ລວມ) ວັນທີ ຜູ້ຖືຮຸ້ນກູ້ໄດ້ຮັບຊຳລະເງິນຕົ້ນທີ່ຄ້າງຊຳລະຄົບຖ້ວນແລ້ວ. ອັດຕາດອກເບ້ຍຜິດນັດ ແມ່ນອັດຕາດອກເບ້ຍທີ່ກຳນົດຕາມການເຈລະຈາລະຫວ່າງ ຜູ້ອອກຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້ ແຕ່ຕ້ອງບໍ່ໜຼຸດ ຫຼື ເທົ່າກັບຕາມອັດຕາດອກເບ້ຍທີ່ໄດ້ຮັບຈາກການອອກຮຸ້ນກູ້ໃນຄັ້ງນີ້.
ວິທີການຊຳລະດອກເບ້ຍ ແລະ ຕົ້ນທຶນ	ຜູ້ອອກຮຸ້ນກູ້ຈະຊຳລະດອກເບ້ຍແຕ່ລະງວດ ໃຫ້ແກ່ຜູ້ຖືຄອງຮຸ້ນຕາມວິທີທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ຫຼື ວິທີອື່ນໆ ຕາມຜູ້ອອກຮຸ້ນກູ້ ແລະ ນາຍທະບຽນໄດ້ຕົກລົງກັນຕາມແຕ່ລະກໍລະນີ, ສ່ວນການຊຳລະດອກເບ້ຍງວດສຸດທ້າຍ ແມ່ນຈະຊຳລະພ້ອມກັບຕົ້ນທຶນ.
ການໄຖ່ຖອນຫຸ້ນກູ້ໃນມື້ຄົບກຳນົດ	ຜູ້ອອກຮຸ້ນກູ້ຈະຊຳລະຕົ້ນທຶນພ້ອມກັບດອກເບ້ຍງວດສຸດທ້າຍ ໃຫ້ແກ່ຜູ້ຖືຄອງຮຸ້ນກູ້ ໃຫ້ແກ່ຜູ້ຖືຄອງຮຸ້ນຕາມວິທີທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ຫຼື ວິທີອື່ນໆ ຕາມຜູ້ອອກຮຸ້ນກູ້ ແລະ ນາຍທະບຽນໄດ້ຕົກລົງກັນຕາມແຕ່ລະກໍລະນີ.
ການຊື້ຮຸ້ນກູ້ຄືນ	ຜູ້ອອກຮຸ້ນກູ້ມີສິດຊື້ຮຸ້ນກູ້ຄືນຈາກຜູ້ຖືຮຸ້ນກູ້, ການຊື້ຄືນຮຸ້ນກູ້ ແມ່ນການຊຳລະຕົ້ນທຶນ ແລະ ດອກເບ້ຍ ຕາມມູນຄ່າທີ່ກຳນົດໄວ້ໃນໜ້າໃບຢັ້ງຢືນຮຸ້ນກູ້ ພ້ອມທັງຄ່າເສຍໂອກາດ ຕາມການຕົກລົງລະຫວ່າງຜູ້ອອກ ແລະ ຜູ້ຖືຮຸ້ນກູ້ ໃນກໍລະນີຜູ້ອອກຮຸ້ນກູ້ຕ້ອງການໄຖ່ຖອນຮຸ້ນກູ້ກ່ອນຄົບກຳນົດ. ຜູ້ອອກຮຸ້ນກູ້ສາມາດຊື້ຮຸ້ນກູ້ຄືນ ທັງໝົດ ຫຼື ບາງສ່ວນກໍ່ໄດ້ ພາຍຫຼັງທີ່ຮຸ້ນກູ້ອອກຈຳໜ່າຍເກີນ 1 ປີ ຊຶ່ງນັບຈາກ ວັນທີ 19 ພຶດສະພາ ປີ 2023 (ວັນອອກຮຸ້ນກູ້) ເປັນຕົ້ນໄປ. ເມື່ອຜູ້ອອກຮຸ້ນກູ້ໄດ້ ຊື້ຄືນຮຸ້ນກູ້ແລ້ວໃຫ້ຖືວ່າ ໜີ້ຕາມຮຸ້ນກູ້ດັ່ງກ່າວ ໄດ້ສິ້ນສຸດແລ້ວ. ການໄຖ່ຖອນຮຸ້ນກູ້ກ່ອນເຖິງວັນຄົບກຳນົດເວລາ ມູນຄ່າຮຸ້ນກູ້ທີ່ບໍ່ສາມາດໄຖ່ຖອນໄດ້ແມ່ນ ປະຕິບັດຕາມລະບຽບການຂອງ ຕລຊລ ທີ່ກ່ຽວຂ້ອງ.
ມື້ພັກ	ຖ້າຫາກວັນຄົບກຳນົດຊຳລະຕົ້ນທຶນ ຫຼື ດອກເບ້ຍ ຫຼື ມື້ທີ່ຕ້ອງໄດ້ເຮັດການຊຳລະອື່ນໆ ທີ່ກ່ຽວຂ້ອງກັບຮຸ້ນກູ້ໃຫ້ແກ່ຜູ້ຖືຄອງຮຸ້ນກູ້ ຫາກກົງກັບວັນພັກ, ວັນຊຳລະເງິນດັ່ງກ່າວຈະຖືກເລື່ອນເປັນວັນລັດຖະການຖັດໄປ ໂດຍຈະບໍ່ມີການຄຳນວນດອກເບ້ຍສຳລັບການເລື່ອນວັນຊຳລະເງິນ.
ນາຍທະບຽນຫຼັກຊັບ	ຕະຫຼາດຫຼັກຊັບລາວ.

ຊີວະປະຫວັດຫຍໍ້ ຂອງສະມາຊິກສະພາບໍລິຫານ

ທ່ານທີ 1



ຊື່ - ນາມສະກຸນ: ທ່ານ ສົມຈິດ ອິນທະມິດ
ອາຍຸ: 63 ປີ
ສັນຊາດ: ລາວ
ວຸດທາມສຶກສາ: ປະລິນຍາໂທ ດ້ານ ເສດຖະສາດ ພັດທະນາ, ມະຫາວິທະຍາໄລ ຕິນ ລຸເທີ ຮານເລ ວິດເຕີນແບກ, ປະເທດ ເຢຍລະມັນ, ປີ 1985

ທີ່ຢູ່ປະຈຸບັນ: ບ້ານ ຈອມມະນີ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ໜັງສືຜ່ານແດນ ເລກທີ D0030771.

ປະສົບການເຮັດວຽກ:
- ວິຊາການ ສະຖານທູດລາວ ທີ່ນະຄອນຫຼວງເບີລິນ ປີ 1985-1986
- ວິຊາການ ພະແນກການວາງແຜນກະສິກຳ, ຄະນະກະມະການການວາງແຜນແຫ່ງລັດ ປີ 1987-1988
- ຜູ້ຊ່ວຍຮອງລັດຖະມົນຕີ ກະຊວງການຄ້າ ແລະ ການພົວພັນເສດຖະກິດຕ່າງປະເທດ ປີ 1989-1990
- ຮອງຫົວໜ້າກົມ ກົມຮ່ວມມືເສດຖະກິດ, ກະຊວງການຄ້າ ແລະ ພົວພັນເສດຖະກິດຕ່າງປະເທດ ປີ 1990-1993
- ຮອງຫົວໜ້າກົມ ກົມຮ່ວມມືເສດຖະກິດຕ່າງປະເທດ, ຄະນະກຳມະການແຜນການ ແລະ ການຮ່ວມມື ປີ 1994-1996
- ຫົວໜ້າກົມ ກົມຮ່ວມມືເສດຖະກິດອາຊຽນ ປີ 1996-1999
- ຄະນະ ເປັນເຈົ້າໜ້າທີ່ອາວຸໂສ ດ້ານເສດຖະກິດ ຂອງ ສປປ ລາວ ປະຈຳອາຊຽນ (SOM) ປີ 1997-2005
- ຄະນະ ຄະນະເຈລະຈາກັບອົງການການຄ້າໂລກ ປີ 2004
- ຫົວໜ້າກົມ ກົມເສດຖະກິດ, ກະຊວງການຕ່າງປະເທດ ປີ 1999-2007
- ຫົວໜ້າກົມ ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ປີ 2008-2011

- ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ປີ 2011-2014
- ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ປີ 2014-2021
- ຮອງຫົວໜ້າຄະນະ ຄະນະກຳມະການດ້ານເສດຖະກິດ-ການເງິນສະພາທິດສະດີສູນກາງພັກ ວັນທີ 25/01/2022 ເຖິງປະຈຸບັນ

ຕຳແໜ່ງງານໃນປະຈຸບັນ: ປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ວັນທີຮັບຕຳແໜ່ງ: 07 ເມສາ 2023

ລັກສະນະຄວາມສຳພັນ:
- ການຖືຮຸ້ນບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ **- ບໍ່ມີ -**
- ການເປັນຜູ້ອຳນວຍການໃນກິດຈະການທີ່ແຂ່ງຂັນ ຫຼື ກ່ຽວເນື່ອງກັບທຸລະກິດຈຳໜ່າຍວັດສະດຸກໍ່ສ້າງ **- ບໍ່ມີ -**
- ການມີຄວາມສຳພັນເປັນຢາດພີ່ນ້ອງນຳສະມາຊິກສະພາບໍລິຫານ/ຜູ້ຖືຮຸ້ນລາຍໃຫຍ່/ຄະນະກຳມະການບໍລິຫານຂອງບໍລິສັດ **- ບໍ່ມີ -**
- ການມີຄວາມສຳພັນທາງທຸລະກິດເຊັ່ນ: ການຊື້-ຂາຍວັດຖຸດິບ, ສິນຄ້າ, ການກູ້ຍືມເງິນນຳບໍລິສັດ **- ບໍ່ມີ -**

ທ່ານທີ 2



ຊື່ - ນາມສະກຸນ: ທ່ານ ຮສ.ປອ. ໄຊພອນ ກອງມະນີລາ

ອາຍຸ: 50 ປີ

ສັນຊາດ: ລາວ

ວຸດການສຶກສາ: ປະລິນຍາເອກ ບໍລິຫານທຸລະກິດ ມະຫາວິທະຍາໄລ ຮິໂຣຊິມ່າ ປະເທດຍີ່ປຸ່ນ, ປີ 2009

ທີ່ຢູ່ປະຈຸບັນ: ບ້ານ ນາສ້ຽວ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ, ບັດປະຈຳຕົວ ເລກທີ 10-0145293.

ການອົບຮົມຕ່າງໆ:
- ທີ່ປຶກສາບັນຊີລາວ (CPA) ຈັດໂດຍ ສະພາວິຊາຊີບການບັນຊີ ແລະ ກວດສອບ ລາວ,ກົມບັນຊີ, ກະຊວງການເງິນ, ປີ 2003.
- ທີ່ປຶກສາບັນຊີອົດສະຕາລີ (CPA Australia) ຈັດໂດຍ CPA Australia, ປີ 2010.
- ການເປັນມືອາຊີບທາງດ້ານບັນຊີ ຈັດໂດຍ ສະຖາບັນວິຊາຊີບການບັນຊີສິງກະໂປ, ປີ 2019

ປະສົບການເຮັດວຽກ:
- ວິຊາການ ບໍລິສັດ ລາວໂທລະຄົມ, ປີ 1995-1997;
- ຜູ້ກວດສອບພາຍໃນ ບໍລິສັດ ໄຮຄີ ແຄຄອນ ຈຳກັດ, ປີ 2001;
- ຫົວໜ້າພະແນກການຕະຫລາດ ແລະ ປະຕິບັດການ ບໍລິສັດ ຄ້າຮຸ່ງໂຮດ ລາວ, ປີ 2001;
- ອາຈານສອນ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ, ປີ 2002-2011;
- ຮອງຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ, ປີ 2011-2017 ; ແລະ
- ຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ, ປີ 2017-ປຸຈະບັນ.

ຕຳແໜ່ງງານໃນປະຈຸບັນ: - ຮອງປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມ ເຊັນເຕີ ມະຫາຊົນ

ວັນທີຮັບຕຳແໜ່ງ: 07 ເມສາ 2023

ລັກສະນະຄວາມສຳພັນ: - ການຖືຮຸ້ນບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ **- ບໍ່ມີ -**

- ການເປັນຜູ້ອຳນວຍການໃນກິດຈະການທີ່ແຂ່ງຂັນ ຫຼື ກ່ຽວເນື່ອງກັບທຸລະກິດຈຳໜ່າຍວັດສະດຸກໍ່ສ້າງ **- ບໍ່ມີ -**

- ການມີຄວາມສຳພັນເປັນຍາດພີ່ນ້ອງນຳສະມາຊິກສະພາບໍລິຫານ/ຜູ້ຖືຮຸ້ນລາຍໃຫຍ່/ຄະນະກຳມະການບໍລິຫານຂອງບໍລິສັດ **- ບໍ່ມີ -**

- ການມີຄວາມສຳພັນທາງທຸລະກິດເຊັ່ນ: ການຊື້-ຂາຍວັດຖຸດິບ, ສິນຄ້າ, ການກູ້ຍືມເງິນນຳບໍລິສັດ **- ບໍ່ມີ -**

ທ່ານທີ 3



ຊື່ - ນາມສະກຸນ: ທ່ານ ບຸນເຕີມ ກົມມິດຕະພາບ

ອາຍຸ: 68 ປີ

ສັນຊາດ: ລາວ

ວຸດທາມສຶກສາ: ປະລິນຍາຕີ ດ້ານກົດໝາຍຍຸຕິທຳ ຈາກ ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດລາວ, ປີ 2011

ທີ່ຢູ່ປະຈຸບັນ: ບ້ານ ໂພນສະອາດ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ບັດປະຈຳຕົວ ເລກທີ 10-19002075.

ປະສົບການເຮັດວຽກ:
- ຮັບຜິດຊອບວຽກງານບໍລິຫານ ກະຊວງຍຸຕິທຳ, ປີ 1982-1994
- ຮັບຜິດຊອບວຽກງານການເງິນ ທີ່ຄະນະນິຕິສາດລັດຖະສາດ, ປີ 1994-1997
- ຫົວໜ້າພະແນກສັງລວມ-ກວດກາ, ປີ 1999
- ຜູ້ພິພາກສາຫົວໜ້າຄະນະສານ, ປີ 1997-2015

ຕຳແໜ່ງງານໃນປະຈຸບັນ: - ສະມາຊິກສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ວັນທີຮັບຕຳແໜ່ງ: 07 ເມສາ 2023

ລັກສະນະຄວາມສຳພັນ:
- ການຖືຮຸ້ນບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ **- ບໍ່ມີ -**
- ການເປັນຜູ້ອຳນວຍການໃນກິດຈະການທີ່ແຂ່ງຂັນ ຫຼື ກ່ຽວເນື່ອງກັບທຸລະກິດຈຳໜ່າຍວັດສະດຸກໍ່ສ້າງ **- ບໍ່ມີ -**
- ການມີຄວາມສຳພັນເປັນຢາດພີ່ນ້ອງນຳສະມາຊິກສະພາບໍລິຫານ/ຜູ້ຖືຮຸ້ນລາຍໃຫຍ່/ຄະນະກຳມະການບໍລິຫານຂອງບໍລິສັດ **- ບໍ່ມີ -**
- ການມີຄວາມສຳພັນທາງທຸລະກິດເຊັ່ນ: ການຊື້-ຂາຍວັດຖຸດິບ, ສິນຄ້າ, ການກູ້ຍືມເງິນນຳບໍລິສັດ **- ບໍ່ມີ -**

ທ່ານທີ 4



ຊື່ - ນາມສະກຸນ: ທ່ານ ອັດຕານາ ສຸຄະບັນດິດ
ອາຍຸ: 57 ປີ
ສັນຊາດ: ລາວ
ວຸດທາມສຶກສາ: ປະລິນຍາໂທ ບໍລິຫານທຸລະກິດ, ມະຫາວິທະຍາໄລມະຫາ ສາຣະຄາມ, ປະເທດໄທ, ປີ 2002.

ທີ່ຢູ່ປະຈຸບັນ: ບ້ານ ວຽງຈະເລີນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ບັດປະຈຳຕົວ ເລກທີ 01-18 048538.

ປະສົບການເຮັດວຽກ: ຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 1988-ປະຈຸບັນ

ຕຳແໜ່ງງານໃນປະຈຸບັນ: ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ສຸວັນນີ ໂຮມເຊັນ ເຕີ ມະຫາຊົນ.

ວັນທີຮັບຕຳແໜ່ງ: 07 ເມສາ 2023

ທ່ານທີ 5



ຊື່ - ນາມສະກຸນ: ທ່ານ ພັນໂນລາ ສຸຄະບັນດິດ

ອາຍຸ: 54 ປີ

ສັນຊາດ: ລາວ

ວຸດທາມສຶກສາ: ປະລິນຍາໂທ ບໍລິຫານທຸລະກິດ, ມະຫາວິທະຍາໄລມະຫາ ສາຣະຄາມ, ປະເທດໄທ, ປີ 2002.

ທີ່ຢູ່ປະຈຸບັນ: ບ້ານ ໂພນສະຫວັນເໜືອ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ບັດປະຈຳຕົວ ເລກທີ 01-18 030146.

ປະສົບການເຮັດວຽກ: ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍການເງິນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 1988-ປະຈຸບັນ.

ຕຳແໜ່ງງານໃນປະຈຸບັນ: ສະມາຊິກສະພາບໍລິຫານ ແລະ ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍການເງິນ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

ວັນທີຮັບຕຳແໜ່ງ: 07 ເມສາ 2023

ທ່ານທີ 6



ຊື່ - ນາມສະກຸນ: ທ່ານ ກິດສະດາ ສຸຄະບັນດິດ
ອາຍຸ: 51 ປີ
ສັນຊາດ: ລາວ
ວຸດທາມສຶກສາ: ປະລິນຍາໂທ ບໍລິຫານທຸລະກິດ ວິທະຍາໄລຂອນແກ່ນ, ປະເທດໄທ, ປີ 2007.

ທີ່ຢູ່ປະຈຸບັນ: ບ້ານ ໜອງໜ່ຽງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ບັດປະຈຳຕົວເລກທີ ກ1-20 000066.

ປະສົບການເຮັດວຽກ: ຮອງຜູ້ອຳນວຍການ ຜູ້ອຳນວຍການຝ່າຍປະຕິບັດການ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 2000-ປະຈຸບັນ.

ຕຳແໜ່ງງານໃນປະຈຸບັນ: ສະມາຊິກສະພາບໍລິຫານ ແລະ ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍປະຕິບັດການ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

ວັນທີຮັບຕຳແໜ່ງ: 07 ເມສາ 2023

ທ່ານທີ 7



ຊື່ - ນາມສະກຸນ: ທ່ານ ນາງ ຄຳໄຂ ລໍວັນໄຊ

ອາຍຸ: 45 ປີ

ສັນຊາດ: ລາວ

ວຸດທາມສຶກສາ: ປະລິຍາຕີ ບໍລິຫານທຸລະກິດ, ວິທະຍາໄລ ເສດຖາບໍລິຫານ ທຸລະກິດ, ປະເທດລາວ, ປີ 2010.

ທີ່ຢູ່ປະຈຸບັນ: ບ້ານ ນາແຄຄຳ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ບັດປະຈຳຕົວເລກທີ 01-20024510.

ປະສົບການເຮັດວຽກ:
- ພະນັກງານຂາຍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 2000-2005.
- ຫົວໜ້າຝ່າຍຂາຍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 2005-2014.
- ຜູ້ຈັດການຝ່າຍຈັດຊື້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ປີ 2015-ປະຈຸບັນ.

ຕຳແໜ່ງງານໃນປະຈຸບັນ: ສະມາຊິກສະພາບໍລິຫານ ແລະ ຜູ້ຈັດການຝ່າຍຈັດຊື້ ຂອງ ບໍລິສັດ ສຸວັນນີ ໂຮມເຊັນ ເຕີ ມະຫາຊົນ.

ວັນທີຮັບຕຳແໜ່ງ: 07 ເມສາ 2023

ທ່ານທີ 8



ຊື່ - ນາມສະກຸນ: ທ່ານ ນາງ ຊຸຕິການ ສີແສງຈັນ

ອາຍຸ: 54 ປີ

ສັນຊາດ: ໄທ

ວຸດທາມສຶກສາ: ປະລິນຍາໂທ ບໍລິຫານທຸລະກິດມະຫາບັນດິດ ມະຫາວິທະຍາໄລ ຂອນແກ່ນ, ປະເທດໄທ, ປີ 2001.

ທີ່ຢູ່ປະຈຸບັນ: ແຂວງ ຂອນແກ່ນ, ປະເທດໄທ, ໜັງສືຜ່ານແດນ ເລກທີ AB 3370972.

ປະສົບການເຮັດວຽກ:
- ກຳມະການບໍລິສັດ Siam Global House PCL, ປີ 2008-2012.
- ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍບັນຊີແລະການເງິນ Siam Global House PCL, ປີ 2012-ປະຈຸບັນ.

ຕຳແໜ່ງງານໃນປະຈຸບັນ:
- ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.
- ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍບັນຊີແລະການເງິນ Siam Global House PCL.

ວັນທີຮັບຕຳແໜ່ງ: 07 ເມສາ 2023

ท่านที่ 9



ชื่ - นามสะกุน: ท่าน พิพิบ อาดสะໜາอาชาสะกุน
ອายุ: 53 ปี
สันชาด: ไท
อุดทามสึกสา: ปะลินยาติ มะนุดสาด มะหาอิทะยาไลทะเสดสาด, ปี 1993.

ที่ยู่ปะจุบัน: ภูเทบมะหานะถอน, ปะเทดไท, ໜັງสือผ่านแดน เลทที AC 2581329.

ปะสิบทานเธ็ดอ฽ทา:
- ผู้ช่วยธอ฽งปะทานเจ้าໜ้าที่บໍลิหานฝ่ายพัดทะนาทุละกิด Siam Global House PCL, ปี 2014-2017.
- ธอ฽งปะทานเจ้าໜ้าที่บໍลิหานฝ่ายพัดทะนาทุละกิด Siam Global House PCL, ปี 2017-ปะจุบัน.
- ถะนะกำมะกาน บໍลิสัด พิทิ ถาทูกาด้า เดโป้ บันกูมัน ทิบิเถ (ปะเทด อิน โดเนเซย) ปี 2022-ปะจุบัน.

ตำแหน่งงานในปะจุบัน:
- สะมาชิกสะพาบໍลิหาน ของ บໍลิสัด สุวันนี โฮมเซ็นเตี มะหาชิน.
- ธอ฽งปะทานเจ้าໜ้าที่บໍลิหานฝ่ายพัดทะนาทุละกิด Siam Global House PCL.

อันทิธับตำแหน่ง: 07 เมสา 2023

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

pwc

ເອກະສານລາຍງານການເງິນ

ວັນທີ 31 ທັນວາ 2022



www.pwc.com/la

ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ສະເໜີຕໍ່ຄະນະຜູ້ອຳນວຍການ ແລະ ຜູ້ຖືຮຸ້ນຂອງ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ.

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນ ຂອງ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ (ບໍລິສັດ) ໄດ້ສະແດງສະຖານະທາງການເງິນຂອງບໍລິສັດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

ການກວດສອບຂອງພວກເຮົາມີດັ່ງນີ້

ເອກະສານລາຍງານການເງິນຂອງບໍລິສັດປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2022;
- ໃບລາຍງານຜົນໄດ້ຮັບ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບອິດສະຫຼະ ສຳລັບການກວດສອບ ເອກະສານລາຍງານການເງິນ ໃນບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫຼະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນ. ພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບ ຈາກຫຼັກການບັນຊີ ມາດຕະຖານການລາຍງານການເງິນສາກົນ (IFRSs). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຕາມ IFRS. ທັ້ງນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

pwc

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີສິ້ນສຸດນີ້. ພວກເຮົາໄດ້ນຳເນື້ອໃນສຳຄັນເຫຼົ່ານີ້ມາລວມໃນການກວດສອບເອກະສານລາຍງານການເງິນ ມູນຄ່າຂອງເຄື່ອງໃນສາງ ເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ມູນຄ່າຂອງເຄື່ອງໃນສາງ ອີງຕາມບົດອະທິບາຍຊ້ອນທ້າຍຂໍ້ 4 'ການປະມານການບັນຊີ, ຂໍ້ສົມມຸດຕິຖານ ແລະ ດຸນພິນິດທີ່ສຳຄັນ' ແລະ ບົດອະທິບາຍຊ້ອນທ້າຍຂໍ້ 7 'ເຄື່ອງໃນສາງ ສຸດທິ' ໃນເອກະສານລາຍງານການເງິນ. ໃນວັນທີ 31 ທັນວາ 2022. ຍອດເຫຼືອເຄື່ອງໃນສາງກ່ອນ ສຳຮອງເງິນແຮ ມູນຄ່າ 409.531 ລ້ານກີບ ເທົ່າກັບ 29% ຂອງຍອດຊັບສິນທັງໝົດ ຂອງ ບໍລິສັດ ແລະ ສຳຮອງເງິນແຮເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝມູນຄ່າ 7.067 ລ້ານກີບ. ເຄື່ອງໃນສາງນີ້ ສ່ວນໃຫຍ່ ປະກອບມີ ເຄື່ອງໃນສາງຄົງເຫຼືອໃນຫ້ອງວາງສະແດງສິນຄ້າ ແລະ ເຄື່ອງໃນສາງຄົງເຫຼືອ ໃນສາງສິນຄ້າ. ວັນທີ 31 ທັນວາ 2022, ຜູ້ບໍລິຫານໄດ້ທົບທວນຄືນການຕັ້ງສຳຮອງເງິນແຮເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ ໂດຍພິຈາລະນາຈາກຂໍ້ມູນທັ້ງສອງໃນອະດີດ ລວມທັ້ງສະພາບຂອງເຄື່ອງໃນສາງຈາກການນັບເຄື່ອງໃນສາງ ແລະ ຄວາມເປັນໄປໄດ້ໃນການຂາຍສິນຄ້າໃນອະນາຄົດ, ຜູ້ບໍລິຫານໄດ້ປະມານການເຄື່ອນໄຫວຂອງເຄື່ອງໃນສາງ ແລະ ລະບຸກຸ່ມຂອງຜະລິດຕະພັນທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ, ຜູ້ບໍລິຫານຍັງໄດ້ຕັ້ງສຳຮອງເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ ໂດຍການນຳໃຊ້ອັດຕາເປີເຊັນ ທີ່ແຕກຕ່າງກັນໄປ ສຳລັບສິນຄ້າທີ່ບໍ່ເຄື່ອນໄຫວຕັ້ງແຕ່ ຫົກເດືອນເປັນຕົ້ນໄປ ເຊິ່ງຜູ້ບໍລິຫານພິຈາລະນາແລ້ວເຫັນວ່າລາຍການທີ່ເກີດຂຶ້ນໃນອະດີດ ແລະ ການຄາດຄະເນຂອງລາຍການຂາຍໃນອະນາຄົດຂອງສິນຄ້າໃນສາງທີ່ກ່ຽວຂ້ອງ. ນອກຈາກນີ້, ບໍລິສັດປະມານການມູນຄ່າເຄື່ອງໃນສາງດ້ວຍລາຄາຕ່ຳສຸດ ຫຼື ມູນຄ່າສຸດທິທີ່ຈະໄດ້ຮັບ (NRV) ຜູ້ບໍລິຫານປະມານການມູນຄ່າສຸດທິທີ່ຈະໄດ້ຮັບໂດຍປຽບທຽບກັບລາຄາຂາຍປົກກະຕິ ຫັກຄ່າໃຊ້ຈ່າຍໃນການຂາຍ. ພວກເຮົາສຸມໃສ່ບັນຫານີ້ ເພາະວ່າການປະມານການມູນຄ່າຂອງເຄື່ອງໃນສາງຄົງເຫຼືອປະກອບດ້ວຍການຮ່ວມການຕັດສິນໃຈຂອງຜູ້ບໍລິຫານຢ່າງມີສາລະສຳຄັນ ເພື່ອກຳນົດເປີເຊັນທີ່ເໝາະສົມ ເມື່ອປະມານການສຳຮອງເງິນແຮສຳລັບເຄື່ອງໃນສາງທີ່ບໍ່ເຄື່ອນໄຫວເພື່ອປະມານການລາຄາຂາຍ ເພື່ອພິຈາລະນາວ່າມູນຄ່າຂອງເຄື່ອງໃນສາງນັ້ນເໝາະສົມ.	ພວກເຮົາປະເມີນຄວາມເໝາະສົມຂອງການປະເມີນມູນຄ່າສິນຄ້າຄົງຄ້າງໂດຍ: • ທຳຄວາມເຂົ້າໃຈນະໂຍບາຍຂອງບໍລິສັດ ກ່ຽວກັບການກຳນົດການປະເມີນຂອງມູນຄ່າຂອງເຄື່ອງໃນສາງ ແລະ ທົບທວນຄືນຂັ້ນຕອນການເກັບຂໍ້ມູນເພື່ອໃຫ້ໝັ້ນໃຈວ່າການກວດກາຖືກຕ້ອງ ແລະ ຄົບຖ້ວນກ່ຽວກັບຂໍ້ມູນທີ່ກ່ຽວຂ້ອງທີ່ໃຊ້ສຳລັບການທົບທວນຄືນຂອງພວກເຮົາ; • ດຳເນີນການກວດສອບການຄວບຄຸມພາຍໃນ ການຈັດຊື້ ແລະ ຊຳລະເງິນ ເຊິ່ງລວມມີ ໃບຂໍອະນຸຍາດສັ່ງຊື້, ໃບສັ່ງຊື້, ການຮັບສິນຄ້າ, ການຊຳລະ ແລະ ການບັນທຶກ ເພື່ອທົດສອບຄວາມຖືກຕ້ອງຂອງຕົ້ນທຶນສິນຄ້າໃນສາງ; • ວິເຄາະການເຄື່ອນໄຫວຂອງສິນຄ້າ ແລະ ປຽບທຽບກັບຜົນການປະມານການສິນຄ້າເຄື່ອນໄຫວຊ້າ ແລະ ຫຼ້າສະໄໝຂອງຜູ້ບໍລິຫານ; • ການຕິດຕາມການນັບສິນຄ້າໃນສາງໂດຍຜູ້ບໍລິຫານ ລວມທັ້ງການກວດກາກັບການຄິດໄລ່ການສຳຮອງທີ່ກ່ຽວຂ້ອງ ໂດຍສະເພາະ ສິນຄ້າຫຼ້າສະໄໝ ແລະ ດ້ອຍຄ່າ. • ສັງເກດການນັບເຄື່ອງໃນສາງ ເພື່ອເຂົ້າເຖິງເງື່ອນໄຂຂອງການໃນການປະມານການສຳຮອງເງິນແຮສຳລັບສິນຄ້າດ້ອຍຄ່າ ແລະ ເປ່ເພ. • ປະເມີນຄວາມເໝາະສົມໃນການຄິດໄລ່ລາຄາຂາຍ ຕ່ຳຫົວໜ່ວຍຂອງຜູ້ບໍລິຫານທີ່ໃຊ້ໃນການຄິດໄລ່ສຳຮອງເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ ແລະ ສຸ່ມກວດກາລາຄາຂາຍຫຼັງທ້າຍງວດບັນຊີ ແລະ ຫຼັກຖານປະກອບທີ່ກ່ຽວຂ້ອງ. ຈາກຂັ້ນຕອນຂ້າງເທິງ ພວກເຮົາເຫັນວ່າ ຜູ້ອຳນວຍການປະມານການ ສຳຮອງເງິນແຮສິນຄ້າເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ ດ້ວຍຄວາມສົມເຫດສົມຜົນ.

pwc

ຂໍ້ມູນອື່ນ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານການເງິນປະຈຳປີ ແຕ່ບໍ່ລວມເຖິງ ເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບເອກະສານ ລາຍ ງານການເງິນປະຈຳປີ ພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ໃນການກວດສອບຂອງພວກເຮົາ ຄວາມຮັບຜິດຊອບຂອງພວກເຮົາ ທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ ຄືການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບເອກະສານລາຍງານການເງິນ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດ ສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ. ພວກເຮົາຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດ ສອບ ແລະ ຜູ້ບໍລິຫານຮັບຊາບເພື່ອດັດແກ້ ແລະ ເຜີຍແຜ່ບົດລາຍງານອີກເທື່ອໜຶ່ງ.

ຄວາມຮັບຜິດຊອບຂອງຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ແລະ ນຳສະເໜີ ໂດຍສອດຄ່ອງກັບ ຫຼັກການບັນຊີ ດັ່ງ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ບໍລິຫານໄດ້ກຳນົດ ໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດ ໃນການດຳເນີນງານ ຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳລັບການດຳເນີນ ງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບໄດ້ຊ່ວຍຜູ້ອຳນວຍການ ໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກຽມບົດລາຍງານການ ເງິນ.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມ ປາສະຈາກ ການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານ ລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນ ການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໜີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນ ສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນ ຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

pwc

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີ ຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກ ການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳ ເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນ ໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບ ຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັ້ງ ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານ ການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ ສົງໄສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານ ລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາ ຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບ ຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງ ການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫຼັກຈັນຍາບັນກ່ຽວຂ້ອງກັບຄວາມເປັນ ອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນ ທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫຼັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນ ອິດສະຫຼະ.

pwc

ຈາກເລື່ອງທີ່ສື່ສານກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາເລື່ອງຕ່າງໆທີ່ເປັນສາລະສຳຄັນ ທີ່ສຸດໃນການກວດສອບ ເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ. ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີ ສ໌ (ລາວ) ຈຳກັດ ຜູ້ດຽວ

ໂດຍ: ອະພິສິດ ທ່ຽງຕິງພິນໂຍ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 14 ກຸມພາ 2023

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ໃບລາຍງານສະຖານະການເງິນ
ວັນທີ 31 ທັນວາ 2022

	ບິດ ອະທິບາຍ	2022 ກີບ	2021 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	5	38.288.451.914	3.285.274.048
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	6	6.217.863.819	12.497.867.185
ເຄື່ອງໃນສາງ, ສຸດທິ	7	402.463.937.243	289.175.467.358
ຊັບສິນໝຸນວຽນອື່ນໆ	8	20.547.738.684	7.159.850.423
ລວມຊັບສິນໝຸນວຽນ		**467.517.991.660**	**312.118.459.014**
ຊັບສິນບໍ່ໝຸນວຽນ			
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	9	904.691.252.324	637.484.068.573
ຊັບສິນບໍ່ໝຸນວຽນອື່ນໆ	8	20.355.868.711	-
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ	10	116.392.238	41.679.842
ລວມຊັບສິນບໍ່ໝຸນວຽນ		**925.163.513.273**	**637.525.748.415**
ລວມຊັບສິນ		**1.392.681.504.933**	**949.644.207.429**

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 14 ກຸມພາ 2023

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 14 ກຸມພາ 2023

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ໃບລາຍງານສະຖານະການເງິນ
ວັນທີ 31 ທັນວາ 2022

	ບົດອະທິບາຍ	2022 ກີບ	2021 ກີບ
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ	11	51.745.048.229	59.803.233.466
ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ	12	84.934.340.351	85.686.567.355
ສ່ວນໝຸນວຽນຂອງເງິນໃຫ້ກູ້ຢືມໄລຍະຍາວ	12	20.671.002.986	13.820.250.486
ໜີ້ຕ້ອງສິ່ງອາກອນກຳໄລ	13	11.564.148.709	4.066.651.565
ເງິນມັດຈຳຈາກລູກຄ້າ	14	2.003.390.891	2.129.487.607
ໜີ້ສິນໝຸນວຽນອື່ນໆ	15	14.345.115.421	14.747.214.631
ລວມໜີ້ສິນໝຸນວຽນ		**185.263.046.587**	**180.253.405.110**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	12	58.329.409.126	9.671.632.212
ລວມໜີ້ສິນບໍ່ໝຸນວຽນ		**58.329.409.126**	**9.671.632.212**
ລວມໜີ້ສິນ		**243.592.455.713**	**189.925.037.322**
ທຶນ			
ທຶນຈົດທະບຽນ		330.000.000.000	330.000.000.000
ສ່ວນເພີ່ມມູນຄ່າຮຸ້ນ		24.735.724.722	24.735.724.722
ກຳໄລສະສົມ			
ເງິນສຳຮອງຕາມກົດໝາຍ	17	14.102.046.968	8.440.875.640
ເງິນສຳຮອງອື່ນໆ	17	13.852.046.968	8.190.875.640
ກຳໄລລໍຖ້າແບ່ງປັນ		217.954.979.089	180.915.608.468
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		548.444.251.473	207.436.085.637
ລວມທຶນ		**1.149.089.049.220**	**759.719.170.107**
ລວມໜີ້ສິນ ແລະ ທຶນ		**1.392.681.504.933**	**949.644.207.429**

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ອັດດາມາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 14 ກຸມພາ 2023

ພັນໄມລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 14 ກຸມພາ 2023

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 30 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບສິ້ນສຸດ ວັນທີ 31 ທັນວາ 2022

	ບິດ ອະທິບາຍ	2022 ກີບ	2021 ກີບ
ລາຍໄດ້ຈາກການຂາຍ		647.161.515.668	455.188.800.941
ຕົ້ນທຶນໃນການຂາຍ	18	(485.502.857.955)	(358.083.962.107)
ກຳໄລລວມຂັ້ນຕົ້ນ		**161.658.657.713**	**97.104.838.834**
ລາຍຮັບອື່ນໆ		2.561.646.580	1.541.717.834
ລາຍຈ່າຍໃນການຂາຍ	18	(53.069.064.227)	(35.015.267.862)
ລາຍຈ່າຍບໍລິຫານ	18	(43.132.823.609)	(31.639.110.135)
ຕົ້ນທຶນການເງິນ		(8.124.604.117)	(4.989.577.589)
ກຳໄລ / (ຂາດທຶນ) ຈາກອັດຕາແລກປ່ຽນ		6.662.858.647	1.610.145.798
ກຳໄລ ກ່ອນຈ່າຍອາກອນກຳໄລ		**66.556.670.987**	**28.612.746.880**
ລາຍຈ່າຍອາກອນກຳໄລ	19	(9.944.957.710)	(3.943.260.210)
ກຳໄລສຸດທິ		**56.611.713.277**	**24.669.486.670**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ		343	150

ອັດດາພາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 14 ກຸມພາ 2023

ພັນໃນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 14 ກຸມພາ 2023

	ຍິດ ອະທິບາຍ	ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ ກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ກີບ	ສຳຮອງເງິນ ຕາມກົດໝາຍ ກີບ	ສຳຮອງເງິນ ອື່ນໆ ກີບ	ກຳໄລສະສົມ ຍົກຍ້າແບ່ງປັນ ກີບ	ຜົດຕ່າງຈາກການແປງ ຄ່າເອກະສານລາຍ ງານການເງິນ ກີບ	ລວມ ກີບ
ຍອດຍົກມາ ວັນທີ 1 ມັງກອນ 2021		330.000.000.000	24.735.724.722	5.973.926.973	5.723.926.973	164.542.719.132	172.891.823.493	703.868.121.293
ສຳຮອງເງິນຕາມກົດໝາຍ		-	-	2.466.948.667	-	(2.466.948.667)	-	-
ສຳຮອງເງິນອື່ນໆ		-	-	-	2.466.948.667	(2.466.948.667)	-	-
ກຳໄລສຸດທິໃນປີ		-	-	-	-	24.669.486.670	-	24.669.486.670
ຈ່າຍເງິນປັນຜົນ	20	-	-	-	-	(3.362.700.000)	-	(3.362.700.000)
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	34.544.262.144	34.544.262.144
ຍອດເຫຼືອໃນວັນທີ 31 ທັນວາ 2021		**330.000.000.000**	**24.735.724.722**	**8.440.875.640**	**8.190.875.640**	**180.915.608.468**	**207.436.085.637**	**759.719.170.107**
ຍອດຍົກມາ ວັນທີ 1 ມັງກອນ 2022		330.000.000.000	24.735.724.722	8.440.875.640	8.190.875.640	180.915.608.468	207.436.085.637	759.719.170.107
ສຳຮອງເງິນຕາມກົດໝາຍ		-	-	5.661.171.328	-	(5.661.171.328)	-	-
ສຳຮອງເງິນອື່ນໆ		-	-	-	5.661.171.328	(5.661.171.328)	-	-
ກຳໄລສຸດທິໃນປີ		-	-	-	-	56.611.713.277	-	56.611.713.277
ຈ່າຍເງິນປັນຜົນ	20	-	-	-	-	(8.250.000.000)	-	(8.250.000.000)
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	341.008.165.836	341.008.165.836
ຍອດເຫຼືອໃນວັນທີ 31 ທັນວາ 2022		**330.000.000.000**	**24.735.724.722**	**14.102.046.968**	**13.852.046.968**	**217.954.979.090**	**548.444.251.473**	**1.149.089.049.220**

ອັດດາພາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 14 ກຸມພາ 2023

ພັນໃນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 14 ກຸມພາ 2023

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານ ກະແສເງິນສົດ
ສຳລັບສິ້ນສຸດ ວັນທີ 31 ທັນວາ 2022

	ບົດ ອະທິບາຍ	2022 ກີບ	2021 ກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ກຳໄລສຸດທິກ່ອນອາກອນກຳໄລສຳລັບປີ		66.556.670.987	28.612.746.880
ການດັດແກ້:			
ຄ່າຫຼ້ຍຫ້ຽນ	9	23.011.152.048	18.280.657.823
ການຕັດຈ່າຍ	10	6.694.689	26.848.512
(ກຳໄລ) ຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ		(341.145.801)	(26.915.457)
(ກຳໄລ) / ຂາດທຶນຈາກອັດຕາແລກປ່ຽນ		10.898.529.381	(507.670.338)
ລາຍຈ່າຍດອກເບ້ຍ		8.124.604.117	4.989.577.589
ສຳຮອງເງິນແຮເຄື່ອງໃນສາງ		1.507.680.606	73.117.833
ສຳຮອງເງິນແຮໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		3.660.182.750	588.643.401
ສຳຮອງສຳລັບສິ່ງຄືນການຂາຍ		800.697.550	130.957.064
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນໝຸນວຽນ		114.225.066.327	52.167.963.307
ການປ່ຽນແປງຈາກ ການດຳເນີນງານຂອງຊັບສິນ ແລະ ໜີ້ສິນ			
- ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		7.318.076.794	(1.454.749.302)
- ເຄື່ອງໃນສາງ		12.438.560.104	(32.972.704.626)
- ຊັບສິນໝຸນວຽນອື່ນໆ		(30.593.484.562)	569.744.061
- ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ		(33.568.273.843)	12.501.743.628
- ເງິນມັດຈຳຈາກລູກຄ້າ		(1.063.052.890)	944.472.113
- ໜີ້ສິນໝຸນວຽນອື່ນໆ		(6.949.828.997)	(2.756.303.782)
ກະແສເງິນສົດເພີ່ມຂຶ້ນຈາກການດຳເນີນງານ		61.807.062.933	29.000.165.399
ຈ່າຍດອກເບ້ຍ		(8.065.521.527)	(4.830.017.364)
ຈ່າຍອາກອນກຳໄລ	13	(3.951.260.210)	(699.384.936)
ເງິນສົດສຸດທິ ໃຊ້ໄປສຳລັບກິດຈະກຳ ການດຳເນີນງານ		49.790.281.196	23.470.763.099
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ:			
ຊື້ອາຄານ ແລະ ອຸປະກອນ		(14.489.151.307)	(22.689.529.359)
ຊື້ຊໍ່ອບແວຄອມພິວເຕີ		(63.068.285)	(28.511.654)
ຮັບເງິນຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ		550.065.950	125.517.385
ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ		(14.002.153.642)	(22.592.523.628)

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 14 ກຸມພາ 2023

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 14 ກຸມພາ 2023

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 30 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ໃບລາຍງານ ກະແສເງິນສົດ
ສຳລັບສິ້ນສຸດ ວັນທີ 31 ທັນວາ 2022

	ບິດ ອະທິບາຍ	2022 ກີບ	2021 ກີບ
ກະແສເງິນສົດຈາກກິດຈະກຳການເງິນ:			
ຮັບເງິນກູ້ຢືມຈາກທະນາຄານ		496.320.013.715	405.638.543.748
ການຊຳລະຄືນຂອງເງິນກູ້ຢືມຈາກທະນາຄານ		(489.601.287.323)	(405.480.357.342)
ຈ່າຍເງິນປັນຜົນ	20	(8.250.000.000)	(3.362.700.000)
ເງິນສົດສຸດທິໃຊ້ໃນກິດຈະກຳທາງການເງິນ		(1.531.273.608)	(3.204.513.594)
ເພີ່ມຂຶ້ນ/(ຫຼຸດລົງ)ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		34.256.853.946	(2.326.284.123)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ	5	3.285.274.048	3.734.536.186
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		746.323.920	1.877.021.985
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**38.288.451.914**	**3.285.274.048**
ລາຍການບໍ່ແມ່ນເງິນສົດທີ່ສຳຄັນ			
ໜີ້ຕ້ອງສິ່ງອື່ນໆຈາກການຊື້ອາຄານ ແລະ ອຸປະກອນ		789.048.267	1.591.866.396
ດອກເບ້ຍຄ້າງຊຳລະ		68.702.138	159.560.225

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 14 ກຸມພາ 2023

ພັນໄມລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 14 ກຸມພາ 2023

1. ຂໍ້ມູນທົ່ວໄປ

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ (ຊື່ເກົ່າແມ່ນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ) ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ. ກິດຈະການຫຼັກແມ່ນຂາຍສິນຄ້າ ແລະ ອຸປະກອນສຳລັບການກໍ່ສ້າງ, ນອກຈາກນັ້ນ ຍັງມີການຕົບແຕ່ງ, ການສ້ອມແປງ ແລະ ປັບປຸງອາຄານ, ບ້ານເຮືອນ ແລະ ສະຖານທີ່ຢູ່ອາໄສ ແລະ ສະໜອງການບໍລິການທີ່ກ່ຽວຂ້ອງໃຫ້ກັບທຸລະກິດຂາຍຍ່ອຍ.

ມີສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ສ ປປ ລາວ. ແລະຍັງມີສາຂາ 07 ສາຂາ ເຊັ່ນ: ບ້ານໂພນຕ້ອງສະຫວາດ, ບ້ານສີໄຄ, ບ້ານ ໂຊກໃຫຍ່, ເມືອງປາກຊັນ, ເມືອງທ່າແຂກ, ສະຫວັນນະເຂດ ແລະ ເມືອງປາກເຊ.

ໃນວັນທີ 15 ມັງກອນ 2022, ໄດ້ມີການເປີດສາຂາໃໝ່ທີ່ນະຄອນໄກສອນພົມພິຫານ, ແຂວງສະຫວັນນະເຂດ.

ເອກະສານລາຍງານການເງິນສະບັບນີ້ໄດ້ຜ່ານການອະນຸມັດ ໂດຍຜູ້ອຳນວຍການ ໃນວັນທີ 14 ກຸມພາ 2023.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ

ວິທີການບັນຊີທີ່ໄດ້ນຳໃຊ້ໃນການກະກຽມເຂົ້າໃນເອກະສານລາຍງານການເງິນມີດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ IFRS, ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ເພື່ອກະກຽມເຣັດແຜນປະຕິບັດການ ໃນການນຳໃຊ້ IFRS ພາຍໃນໄລຍະເວລາສີ່ປີ. ເຖິງຢ່າງໃດກໍ່ຕາມ, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຄວນປະຕິບັດການ ໃນການນຳໃຊ້ IFRS ຕັ້ງແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ. ຫຼັກການບັນຊີທີ່ນຳໃຊ້ອາດແຕກຕ່າງຢ່າງມີສາລະສຳຄັນ ຈາກຫຼັກການບັນຊີ (IFRSs).

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກຳນົດຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສຳຄັນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນຢ່າງເປັນສາລະສຳຄັນ.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.2 ການປ່ຽນຄ່າເງິນຕາຕ່າງປະເທດ

ກ) ສະກຸນເງິນຫຼັກທີ່ນຳໃຊ້ ແລະ ນຳສະເໜີ

ການວັດມູນຄ່າໃນເອກະສານລາຍງານການເງິນຂອງບໍລິສັດ ແມ່ນຮັບຮູ້ເປັນສະກຸນເງິນບາດ ເຊິ່ງເປັນສະກຸນເງິນຫຼັກທາງເສດຖະກິດໃນການປະຕິບັດງານຂອງບໍລິສັດ ໂດຍສະເພາະແມ່ນການຊື້ສິນຄ້າ.

ຂ) ລາຍການເຄື່ອນໄຫວ ແລະ ຍອດຄົງເຫຼືອ

ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ ຈະຖືກປ່ຽນຄ່າເປັນສະກຸນເງິນບາດໂດຍໃຊ້ອັດຕາແລກປ່ຽນຂອງບໍລິສັດ ໃນວັນທີ ທີ່ມີລາຍການນັ້ນເກີດຂຶ້ນ, ກຳໄລ ແລະ ຂາດທຶນ ຈາກອັດຕາແລກປ່ຽນ ຂອງການສະສາງບັນດາລາຍການເຄື່ອນໄຫວ ແລະ ການແປງຄ່າ ອັດຕາແລກປ່ຽນໃນທ້າຍປີ ຂອງ ຊັບສິນ ແລະ ໜີ້ສິນ ທາງການເງິນ ໃນສະກຸນເງິນຕາຕ່າງປະເທດແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບ 'ກຳໄລ (ຂາດທຶນ) ສຸດທິ ຈາກອັດຕາແລກປ່ຽນ'. ໂດຍອັດຕາແລກປ່ຽນແມ່ນນຳໃຊ້ຈາກ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL).

ບໍລິສັດໄດ້ແປງເອກະສານລາຍງານການເງິນຈາກສະກຸນບາດ ເປັນສະກຸນເງິນກີບ ເຊິ່ງເປັນສະກຸນເງິນທີ່ນຳສະເໜີດັ່ງຕໍ່ໄປນີ້:

- ຊັບສິນ ແລະ ໜີ້ສິນ ໃນໃບລາຍງານຖານະທາງການເງິນ ທີ່ນຳສະເໜີ ແມ່ນຖືກແປງຄ່າ ດ້ວຍອັດຕາແລກປ່ຽນໃນມື້ປິດບັນຊີຂອງໃບລາຍງານຖານະທາງການເງິນ ຍົກເວັ້ນທຶນຈົດທະບຽນເຊິ່ງຖືກນຳສະເໜີໂດຍອີງຕາມມູນຄ່າຕົ້ນທຶນເດີມ.
- ລາຍຮັບ ແລະ ລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບສັງລວມ ແມ່ນ ຖືກແປງຄ່າ ດ້ວຍອັດຕາແລກປ່ຽນສະເລ່ຍໃນລະຫວ່າງປີ.
- ຜົນຕ່າງຈາກການແປງຄ່າ ແມ່ນຮັບຮູ້ ແລະ ສະແດງພາຍໃຕ້ຄ່າຜິດຕ່ຽງຈາກການແປງຄ່າເອກະສານລາຍງານການເງິນໃນໃບລາຍງານສ່ວນປ່ຽນແປງທຶນ.

2.3 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ໃນໃບລາຍງານກະແສເງິນສົດ, ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ລວມເຖິງ ເງິນສົດໃນມື, ເງິນຝາກທະນາຄານທີ່ສາມາດຖອນຄືນໄດ້ໃນເວລາຕ້ອງການ ແລະ ເງິນລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ເຊິ່ງມີອາຍຸການຄົບກຳນົດໃນ 3 ເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ຊື້. ໃນໃບລາຍງານຖານະການເງິນ ເງິນເບີກເກີນບັນຊີ ຈະຖືສະແດງໃນໜີ້ສິນໝຸນວຽນ.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.4 ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າ ແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນຕໍ່ມາ ແມ່ນນຳມູນຄ່າຍັງເຫຼືອ ຫັກລົບສຳຮອງໜີ້ສົງໄສຈະສູນ ໂດຍອີງຕາມການທົບທວນຄືນມູນຄ່າຄ້າງຊຳລະທັງໝົດໃນທ້າຍປີ. ຈຳນວນເງິນທີ່ຫັກຂອງໜີ້ສົງໄສຈະສູນ ແມ່ນສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີ ຂອງໜີ້ຕ້ອງຮັບ ແລະ ມູນຄ່າທີ່ຄາດວ່າຈະເກັບຄືນໄດ້. ໜີ້ສູນແມ່ນ ຈະຖືກສະສາງໃນປີເຊິ່ງຈະຖືກລະບຸໃນກຳໄລ ຫຼື ຂາດທຶນພາຍໃຕ້ລາຍຈ່າຍບໍລິຫານ.

2.5 ເຄື່ອງໃນສາງ

ເຄື່ອງໃນສາງສະແດງອອກ ຕາມລາຄາທີ່ຕ່ຳກວ່າລະຫວ່າງລາຄາຕົ້ນທຶນ ແລະ ມູນຄ່າສຸດທິທີ່ຈະໄດ້ຮັບ. ຕົ້ນທຶນ ໄດ້ນຳໃຊ້ ວິທີສະເລ່ຍຕາມນ້ຳໜັກ, ຕົ້ນທຶນຊື້ ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງ ທີ່ຕິດພັນກັບການຊື້ເຄື່ອງໃນສາງ ເຊັ່ນ: ຄ່າທຳນຽມທີ່ກ່ຽວຂ້ອງກັບການນຳເຂົ້າ, ຄ່າຂົນສົ່ງ, ຫັກລົບທຸກສ່ວນຫຼຸດທີ່ໄດ້ຮັບ. ມູນຄ່າສຸດທິທີ່ຈະໄດ້ຮັບ ແມ່ນລາຄາທີ່ ເຄື່ອງໃນສາງ ສາມາດຂາຍອອກໃນຮອບວຽນ ປົກກະຕິຂອງວິສາຫະກິດ ຫຼັງຈາກຫັກຕົ້ນທຶນໃນການຂາຍອອກ. ຄ່າສຳຮອງ ເງິນແຮທີ່ເກີດຂຶ້ນ, ກໍລະນີ ສິນຄ້າເຄື່ອນໄຫວຊ້າ ຫຼື ຫຼ້າສະໄໝ, ເສຍຄຸນເຄື່ອງໃນສາງອື່ນໆ.

2.6 ທີ່ດິນ ແລະ ອຸປະກອນ

ຊັບສິນມີຕົວຕົນທັງໝົດ, ສິ່ງປຸກສ້າງ ແລະ ອຸປະກອນແມ່ນໄດ້ຖືກບັນທຶກຕາມຄ່າຕົ້ນທຶນເດີມ ຫັກຄ່າຫຼ້ຽຫ້ຽນສະສົມ. ມູນຄ່າຕົ້ນທຶນເດີມ ລວມມີລາຍຈ່າຍໂດຍກົງເພື່ອການໄດ້ມາຂອງລາຍການນັ້ນໆ.

ຕົ້ນທຶນໃນການປ່ຽນແທນ ແມ່ນໄດ້ລວມມີມູນຄ່າຕາມບັນຊີຂອງຊັບສິນເມື່ອ ມີຄວາມແນ່ໃຈວ່າຈະເກີດປະໂຫຍດທາງ ເສດຖະກິດໃນອະນາຄົດ ເຂົ້າສູ່ບໍລິສັດ ແລະ ມູນຄ່າຕາມບັນຊີທີ່ຖືກປ່ຽນແທນພາກສ່ວນດັ່ງກ່າວ ແມ່ນບໍ່ໄດ້ຮັບຮູ້. ຄ່າ ສ້ອມແປງ ແລະ ບຳລຸງຮັກສາ ແມ່ນຈະສະແດງໃນໃບລາຍງານຜົນໄດ້ຮັບສັງລວມ ໃນລະຫວ່າງໄລຍະທາງການເງິນ ເມື່ອ ລາຍການນັ້ນເກີດຂຶ້ນ.

ທີ່ດິນບໍ່ໄດ້ຖືກຄິດໄລ່ຄ່າຫຼ້ຽຫ້ຽນ. ຄ່າຫຼ້ຽຫ້ຽນແມ່ນໄດ້ຄິດໄລ່ໂດຍການຄິດໄລ່ຄ່າຫຼ້ຽຫ້ຽນບົນຫຼັກການ ການຄິດໄລ່ ແບບຄົງ ຕົວ, ເພື່ອຈັດສັນກັບມູນຄ່າຍັງເຫຼືອ ຂອງແຕ່ລະລາຍການຊັບສິນຕາມອາຍຸການໃຊ້ງານທີ່ຄາດຄະເນມີດັ່ງຕໍ່ໄປນີ້:

	ປີ
ອາຄານ ແລະ ສ່ວນປັບປຸງທີ່ດິນ	30,20
ເຄື່ອງໃຊ້ຫ້ອງການ	3 – 5
ເຟີນີເຈີ ແລະ ສິ່ງທີ່ຕິດຕັ້ງຖາວອນ	2 – 10
ພາຫະນະ	3 – 5

ມູນຄ່າຄົງເຫຼືອ ແລະ ອາຍຸການນຳໃຊ້ຂອງຊັບສິນແມ່ນໄດ້ຖືກກວດກາຄືນໃໝ່ ແລະ ປັບປຸງໃຫ້ເໝາະສົມໃນທ້າຍຂອງແຕ່ລະ ໄລຍະການລາຍງານ.

ມູນຄ່າຕາມບັນຊີຂອງຊັບສິນແມ່ນຖືກຈັດບັນທຶກທັນທີໃຫ້ເທົ່າກັບມູນຄ່າທີ່ສາມາດເກັບຄືນໄດ້ຖ້າມູນຄ່າຕາມບັນຊີຂອງຊັບ ສິນສູງກວ່າມູນຄ່າທີ່ຄາດຄະເນ ສາມາດເກັບຄືນໄດ້.

ກຳໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະຖືກກຳນົດ ໂດຍການສົມທຽບ ຂັ້ນຕອນ ກັບມູນຄ່າຕາມບັນຊີ ແລະ ບັນທຶກ ໃນ (ຂາດທຶນ)/ກຳໄລ ສຸດທິ ໃນໃບລາຍງານຜົນໄດ້ຮັບສັງລວມ.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.7 ຊັບສິນຄົງທີ່ບໍ່ມີຕົວຕົນ

2.7.1 ໂປແກຼມຄອມພິວເຕີ

ສິດທິການໃຊ້ໂປແກຼມຄອມພິວເຕີໂດຍທີ່ຊື້ມາ ແມ່ນຈະຖືກບັນທຶກເປັນຊັບສິນໂດຍຄິດໄລ່ຈາກຕົ້ນທຶນໃນການໄດ້ມາ ແລະ ການດຳເນີນການໃຫ້ໂປແກຼມຄອມພິວເຕີດັ່ງກ່າວນັ້ນ ສາມາດນຳມາໃຊ້ງານໄດ້ຕາມເປົ້າໝາຍ ແລະ ຈະຖືກຕັດຈ່າຍຕະຫຼອດອາຍຸປະເມີນການໃຫ້ປະໂຫຍດພາຍໃນໄລຍະເວລາ ສາມ ປີ. ຕົ້ນທຶນທີ່ກ່ຽວຂ້ອງກັບການບຳລຸງຮັກສາຂອງໂປແກຼມຄອມພິວເຕີແມ່ນຈະຖືກບັນທຶກເປັນລາຍຈ່າຍເມື່ອລາຍການດັ່ງກ່າວເກີດຂຶ້ນ.

2.8 ເງິນກູ້ຢືມ

ເງິນກູ້ຢືມ ຈະຖືກຮັບຮູ້ຕາມມູນຄ່າກູ້ຢືມເບື້ອງຕົ້ນຂອງເງິນທີ່ໄດ້ຮັບ.

ເງິນກູ້ຢືມນີ້ ແມ່ນຖືກຈັດປະເພດເປັນໜີ້ສິນໝຸນວຽນ ໂດຍການເຍື່ອນຊຳລະໜີ້ສິນ ຢ່າງໜ້ອຍ ສິບສອງ ເດືອນ ຫຼັງຈາກມື້ໃນໃບລາຍງານຖານະການເງິນ.

2.8.1 ຕົ້ນທຶນເງິນກູ້ຢືມ

ຕົ້ນທຶນຂອງເງິນກູ້ຢືມທົ່ວໄປ ແລະ ສະເພາະ ທີ່ກ່ຽວຂ້ອງໂດຍກົງກັບການໄດ້ມາ, ການກໍ່ສ້າງ ຫຼື ການຜະລິດຂອງຊັບສິນທີ່ມີຄຸນສົມບັດຕາມກຳນົດ ເຊິ່ງເປັນຊັບສິນທີ່ຈຳເປັນຕ້ອງໃຊ້ໄລຍະເວລາພໍສົມຄວນໃນການກຽມໃຫ້ພ້ອມສຳລັບການໃຊ້ງານ ຫຼື ຂາຍ ຕາມວັດຖຸປະສົງ ຈະຖືກລວມເຂົ້າໃນຕົ້ນທຶນຂອງຊັບສິນດັ່ງກ່າວຈົນກວ່າຈະເຖິງເວລາທີ່ຊັບສິນມີຄວາມພ້ອມສຳລັບການໃຊ້ງານ ຫຼື ຂາຍ.

ຄ່າທຳນຽມທີ່ຈ່າຍໄປສຳລັບການກູ້ຢືມຈະໄດ້ຮັບຮູ້ເປັນຕົ້ນທຶນຂອງເງິນກູ້ຢືມ ຕໍ່ເມື່ອມີຄວາມເປັນໄປໄດ້ທີ່ຈະໃຊ້ວົງເງິນກູ້ບາງສ່ວນ ຫຼື ທັງໝົດ. ໃນກໍລະນີນີ້, ຄ່າທຳນຽມ ແມ່ນຈະຖືກຮັບຮູ້ຈົນຮອດມື້ຖອນເງິນ ຫາກບໍ່ມີຫຼັກຖານທີ່ມີຄວາມເປັນໄປໄດ້ທີ່ຈະໃຊ້ວົງເງິນກູ້ບາງສ່ວນ ຫຼື ທັງໝົດ ຄ່າທຳນຽມແມ່ນຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍຈ່າຍລ່ວງໜ້າສຳລັບການໃຫ້ບໍລິການ ແລະ ຕັດຄ່າເຊື່ອມ ຕາມໄລຍະເວລາຂອງເງິນກູ້ຢືມທີ່ກ່ຽວຂ້ອງ.

ລາຍໄດ້ຈາກການລົງທຶນທີ່ໄດ້ຮັບຈາກການລົງທຶນຊົ່ວຄາວຂອງເງິນກູ້ຢືມສະເພາະ ການໃຊ້ຈ່າຍໃນຊັບສິນທີ່ມີຄຸນສົມບັດຕາມກຳນົດແມ່ນຖືກຫັກອອກຈາກຕົ້ນທຶນເງິນກູ້ຢືມຢ່າງເໝາະສົມສຳລັບການບັນທຶກເຂົ້າເປັນຕົ້ນທຶນຂອງຊັບສິນ.

ຕົ້ນທຶນເງິນກູ້ຢືມອື່ນ ຈະຖືກຮັບຮູ້ເປັນລາຍຈ່າຍໃນງວດທີ່ເກີດຂຶ້ນ.

2.9 ເງິນແຮ

ເງິນແຮ ຖືກບັນທຶກບັນຊີ ໃນເວລາມີພັນທະໃນປະຈຸບັນຕາມກົດໝາຍ ຫຼື ພັນທະການກໍ່ສ້າງ ເຊິ່ງເກີດຈາກເຫດການຜ່ານມາ. ເປັນໄປໄດ້ວ່າ ແຫຼ່ງຊັບພະຍາກອນຈະໄຫຼອອກເພື່ອສະສາງພັນທະ ແລະ ຈຳນວນເງິນສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້. ຍົກເວັ້ນເງິນແຮ ເພື່ອຜົນປະໂຫຍດພະນັກງານ ຕາມທີ່ໄດ້ ອະທິບາຍຂໍ້ 2.12.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.10 ການຮັບຮູ້ລາຍຮັບ

ລາຍຮັບໃນໃບເກັບເງິນຈາກການຂາຍສິນຄ້າສຸດທິຫຼັງຫັກສ່ວນຫຼຸດທີ່ໄດ້ຮັບ ແລະ ສ່ວນຫຼຸດຈາກການສັ່ງຊື້. ລາຍຮັບຈາກການຂາຍສິນຄ້າຮັບຮູ້ເມື່ອມີຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້. ນະໂຍບາຍ ບໍລິສັດໃນການຂາຍສິນຄ້າໃຫ້ຜູ້ຊື້ໂດຍໃຫ້ສິດໃນການສົ່ງຄືນພາຍໃນ 30 ວັນ. ດັ່ງນັ້ນ, ໜີ້ສິນຈາກການສົ່ງຄືນສິນຄ້າຈາກ ລູກຄ້າ (ຖືກລວມຢູ່ໃນບັນຊີໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ) ແລະ ສິດໃນການຄືນສິນຄ້າ (ຖືກລວມຢູ່ໃນຊັບສິນ ໝຸນວຽນອື່ນໆ) ຖືກຮັບຮູ້ຕາມຈຳນວນທີ່ຄາດວ່າລູກຄ້າຈະສົ່ງສິນຄ້າຄືນ ກິດຈະການປະເມີນ ໂດຍໃຊ້ວິທີມູນຄ່າທີ່ຄາດວ່າຈະ ໄດ້ຮັບ ຈາກປະສົບການ ແລະ ຂໍ້ມູນໃນອະດີດ ເນື່ອງຈາກຈຳນວນສິນຄ້າທີ່ລູກຄ້າສົ່ງຄືນມາມີຈຳນວນຄ່ອນຂ້າງຄົງທີ່ ຈຶ່ງມີ ຄວາມເປັນໄປໄດ້ສູງທີ່ການກັບລາຍການທີ່ມີສາລະສຳຄັນໃນລາຍໄດ້ທີ່ຮັບຮູ້ສະສົມຈະບໍ່ເກີດຂຶ້ນ ກິດຈະການທົບທວນຄວາມ ເໝາະສົມຂອງຂໍ້ສົມມຸດຕິຖານນີ້ ແລະ ປະເມີນຈຳນວນເງິນທີ່ຈະຕ້ອງຊຳລະຄືນລູກຄ້າເມື່ອມີການຄືນສິນຄ້າທຸກຮອບໄລຍະ ເວລາລາຍງານ.

ການຂາຍສິນຄ້າ ທີ່ມີການຕິດຕັ້ງ ແລະ ການກວດກາສະພາບຂອງສິນຄ້າ ແມ່ນໄດ້ຮັບຮູ້ເມື່ອຜູ້ຊື້ໄດ້ຮັບສິນຄ້າ. ການຕິດຕັ້ງ ແລະ ການກວດກາສຳເລັດ.

ລາຍຮັບຈາກການບໍລິການບຳລຸງຮັກສາແມ່ນຮັບຮູ້ເປັນລາຍຮັບເມື່ອການໃຫ້ບໍລິການແກ່ລູກຄ້າສຳເລັດສົມບູນ.

ລາຍຮັບອື່ນໆແມ່ນຮັບຮູ້ອີງຕາມພື້ນຖານດັ່ງນີ້:

- ລາຍຮັບຈາກດອກເບ້ຍແມ່ນຮັບຮູ້ຕາມອັດຕາພື້ນຖານຄິດໄລ່ຕາມໄລຍະເວລາ, ຄິດໄລ່ຈາກບັນຊີເງິນຕົ້ນທີ່ຍັງຄ້າງ ແລະ ອັດຕາດອກເບ້ຍໃນຊ່ວງເວລາທີ່ກຳນົດ. ເມື່ອມີຄວາມແນ່ນອນວ່າລາຍໄດ້ຈະເກີດຂຶ້ນກັບບໍລິສັດ.
- ລາຍຮັບອື່ນໆແມ່ນຮັບຮູ້ໃນເກນຄ້າງຮັບຄ້າງຈ່າຍ.

2.11 ອາກອນ

ບໍລິສັດ ບັນທຶກ ອາກອນລາຍໄດ້ ຕາມເກນຫຼັກຄ້າງຮັບຄ້າງຈ່າຍ. ບໍລິສັດ ບໍ່ໄດ້ບັນທຶກ ອາກອນລາຍໄດ້ຕ້ອງຈ່າຍ ຫຼື ຕ້ອງຮັບ ໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດຊົ່ວຄາວ. ລາຍຈ່າຍອາກອນແມ່ນຮັບຮູ້ບົນພື້ນຖານຜົນການດຳເນີນງານໃນປີ ຫຼັງ ດັດແກ້ ບໍ່ຫັກລາຍຈ່າຍ ແລະ ລາຍການເຄື່ອນໄຫວອື່ນໆ ຕາມກົດໝາຍວ່າດ້ວຍ ສ່ວຍສາອາກອນ ແລະ ອັດຕາອາກອນ. ພາຍໃຕ້ລະບຽບການບັນຊີ ແລະ ກົດໝາຍສ່ວຍສາອາກອນ. ລາຍຈ່າຍອາກອນ ໃນປີ ແມ່ນໄດ້ຄິດໄລ່ຕາມ ພື້ນຖານລາຍຮັບ ຂອງບໍລິສັດ (ບົດອະທິບາຍ ຂໍ້ທີ 19).

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາລາຍລະອຽດຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ. ໃນ ການກວດກາຄືນດັ່ງກ່າວອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມເຕີມ ຫຼື ຮັບຄືນ ໃນຄວາມຈຳເປັນ. ເຫດນີ້ຈະມີຜົນໃນການຈ່າຍເງິນ ຫຼື ຮັບ ຄືນ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍອາກອນລາຍໄດ້ໃນປີທີ່ມີການກວດກາໄດ້ສຳເລັດ.

2.12 ຜົນປະໂຫຍດໃຫ້ພະນັກງານ

ອີງຕາມກົດໝາຍແຮງງານປະກັນສັງຄົມລົງວັນທີ 27 ມິຖຸນາ 2018 ແລະ ແຈ້ງການລົງວັນທີ 13 ສິງຫາ 2018. ບໍລິສັດ ແລະ ພະນັກງານ ຍັງໄດ້ປະກອບສ່ວນເງິນອຸດໜູນເຂົ້າອົງການປະກັນສັງຄົມ 6% ແລະ 5,5% ຂອງເງິນເດືອນພະນັກງານ. ເງິນເດືອນພື້ນຖານໃນແຕ່ລະເດືອນ ເປັນພື້ນຖານໃນການຄິດໄລ່. ແຕ່ບໍ່ເກີນ 4.5 ລ້ານກີບ.

ອີງຕາມກົດໝາຍ ເມື່ອພະນັກງານເຂົ້າບຳນານ ຫຼື ບໍ່ເຖິງເກນໃນກົດໝາຍແຮງງານ. ສະນັ້ນ, ບໍລິສັດຈະໄດ້ມີພັນທະດ້ານ ເງິນບຳນານຕໍ່ກັບພະນັກງານ.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.12 ຜົນປະໂຫຍດໃຫ້ພະນັກງານ (ຕໍ່)

ບໍ່ມີການຕັ້ງສຳຮອງເງິນສະຫວັດດີການໃຫ້ພະນັກງານພາຍໃນປີ. ໜີ້ຕ້ອງສົ່ງແມ່ນຖືກຮັບຮູ້ໃນເບື້ອງໃບສະຫລຸບຊັບສິນບັດ ແລະ ບັນດາລາຍຈ່າຍທີ່ກ່ຽວຂ້ອງແມ່ນຮັບຮູ້ຢູ່ໃນໃບລາຍງານຜົນໄດ້ຮັບສັງລວມອີງຕາມຈຳນວນເກີດຂຶ້ນຕົວຈິງ.

3. ການບໍລິຫານຄວາມສ່ຽງທາງດ້ານການເງິນ

ປັດໄຈຄວາມສ່ຽງທາງດ້ານການເງິນ

ບໍລິສັດມີຫນ້າທີ່ຕ້ອງຈຳກັດຄວາມສ່ຽງທາງດ້ານການເງິນ: ຄວາມສ່ຽງທາງດ້ານການຕະຫຼາດ (ໄດ້ແກ່ການປ່ຽນແປງຂອງອັດຕາ ແລກປ່ຽນ, ອັດຕາດອກເບ້ຍກະແສເງິນສົດ,ຄວາມສ່ຽງທາງດ້ານລາຄາ) ຄວາມສ່ຽງສິນເຊື່ອ ແລະ ຄວາມສ່ຽງທາງດ້ານສະພາບຄ່ອງ.

ຜູ້ບໍລິຫານຂອງບໍລິສັດ ຕ້ອງແນໃສ່ຄວາມບໍ່ແນ່ນອນຂອງຕະຫຼາດການເງິນ ແລະ ເລັ່ງໃສ່ຜົນກະທົບທີ່ອາດຈະເກີດຂຶ້ນ ຕໍ່ປະສິດທິພາບການເງິນຂອງບໍລິສັດທັງໝົດ ໃນລັກສະນະທີ່ຄຸ້ມຄ່າ.

ການບໍລິຫານຄວາມສ່ຽງໂດຍທົ່ວໄປ ແມ່ນບໍລິຫານຈັດການພາຍໃຕ້ການດຸແລກວດກາຈາກຄະນະຜູ້ອຳນວຍການ.

3.1 ຄວາມສ່ຽງທາງດ້ານອັດຕາແລກປ່ຽນ

ບໍລິສັດດຳເນີນກິດຈະການພາຍໃນປະເທດ ແຕ່ມີຄວາມສ່ຽງທາງດ້ານອັດຕາແລກປ່ຽນເກີດຂຶ້ນ ໂດຍສ່ວນໃຫຍ່ມາຈາກການຊື້ສິນຄ້າໃນສະກຸນເງິນບາດ. ນອກຈາກນີ້ ຄວາມສ່ຽງທາງດ້ານອັດຕາແລກປ່ຽນຍັງເກີດຈາກການເຄື່ອນໄຫວທາງດ້ານການຄ້າອື່ນໆ ແລະ ເງິນກູ້ຢືມ.

ຜູ້ບໍລິຫານ ພິຈາລະນາຄວາມສ່ຽງທາງດ້ານອັດຕາແລກປ່ຽນຈາກການເຄື່ອນໄຫວທາງດ້ານການຄ້າຢູ່ໃນລະດັບຕ່ຳ ເນື່ອງຈາກທາງບໍລິສັດນຳໃຊ້ການປ້ອງກັນຄວາມສ່ຽງຈາກການຊື້ ແລະ ການຂາຍໃນສະກຸນເງິນດຽວກັນ. ໂດຍກຳນົດລາຄາຂາຍເປັນສະກຸນເງິນບາດທີ່ເປັນສະກຸນດຽວກັນກັບຜູ້ສະໜອງສ່ວນໃຫຍ່ ແລະ ໄລຍະເວລາໃນການຊຳລະໜີ້ ແລະ ການເກັບເງິນຄືນ ແມ່ນບໍ່ແຕກຕ່າງກັນຢ່າງເປັນສາລະສຳຄັນ.

ໃນວັນທີ 31 ທັນວາ 2022. ຜູ້ບໍລິຫານບໍ່ມີນະໂຍບາຍເປັນທາງການ ແລະ ບໍ່ມີການນຳໃຊ້ເຄື່ອງມືທາງດ້ານການເງິນ ຫຼື ເຄື່ອງມືອື່ນໆໃນການບໍລິຫານຄວາມສ່ຽງທາງດ້ານອັດຕາແລກປ່ຽນຈາກເງິນກູ້ຢືມເປັນເງິນບາດ. ແນວໃດກໍຕາມ, ຜູ້ບໍລິຫານ ແມ່ນໄດ້ຕິດຕາມການເຄື່ອນໄຫວຂອງອັດຕາແລກປ່ຽນເງິນຕາຕ່າງປະເທດໃນເວລາທີ່ເໝາະສົມ ແລະ ອາດຈະໃຊ້ເຄື່ອງມືທາງດ້ານການເງິນ ຫຼື ເຄື່ອງມືອື່ນໆເພື່ອບໍລິຫານຄວາມສ່ຽງດັ່ງກ່າວຖ້າຫາກວ່າຜູ້ບໍລິຫານເຫັນວ່າມີຄວາມສຳຄັນ. ດັ່ງນັ້ນ, ການປ່ຽນແປງຂອງອັດຕາແລກປ່ຽນອາດມີ ເປັນສ່ວນສຳຄັນທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຂອງບໍລິສັດ. ຜົນການດຳເນີນງານ. ເງື່ອນໄຂທາງດ້ານການເງິນ ແລະ ໂອກາດຕ່າງໆ.

3. ການບໍລິຫານຄວາມສ່ຽງທາງດ້ານການເງິນ (ຕໍ່)

3.2 ຄວາມສ່ຽງທາງດ້ານສິນເຊື່ອ

ຄວາມສ່ຽງທາງດ້ານສິນເຊື່ອສ່ວນໃຫຍ່ແມ່ນເກີດຈາກການຂາຍທີ່ໃຫ້ສິນເຊື່ອກັບບໍລິສັດ ແລະ ລູກຄ້າລາຍຍ່ອຍ. ດັ່ງນັ້ນ, ຜູ້ບໍລິຫານຈຶ່ງຕ້ອງຈັດການຄວາມສ່ຽງທາງດ້ານສິນເຊື່ອຢ່າງຮອບຄອບ, ຫຼັກການຈັດການຄວາມສ່ຽງທາງດ້ານສິນເຊື່ອຂອງບໍລິສັດ ມີດັ່ງຕໍ່ໄປນີ້:

- ຜູ້ບໍລິຫານທົບທວນຄືນ ແລະ ຕິດຕາມບັນຊີໜີ້ຕ້ອງຮັບທັງໝົດທີ່ມີອາຍຸຫຼາຍກວ່າ ຫົກ ເດືອນເປັນປະຈຳ.
- ຜູ້ບໍລິຫານມອບໝາຍໃຫ້ທີມງານໃຫ້ມີສ່ວນຮ່ວມໃນການຕິດຕໍ່ກັບລູກຄ້າໂດຍກົງ.
- ຜູ້ບໍລິຫານປະເມີນຕັ້ງສຳຮອງໜີ້ສູນຂຶ້ນຈາກຍອດບັນຊີໜີ້ຕ້ອງຮັບທີ່ຄ້າງຊຳລະເກີນກວ່າ ຫົກ ເດືອນໂດຍທົບທວນການຊຳລະເງິນໃນອະດີດຫຼ້າສຸດ ແລະ ຄາດຄະເນກ່ຽວກັບຄວາມສາມາດໃນການເກັບຄືນໃນອະນາຄົດ.

3.3 ຄວາມສ່ຽງທາງດ້ານອັດຕາດອກເບ້ຍ

ທາງບໍລິສັດບໍ່ມີສິນຊັບທີ່ຕ້ອງອ້າງອີງອັດຕາດອກເບ້ຍຢ່າງມີໄລຍະສຳຄັນ. ແຕ່ຄວາມສ່ຽງທາງດ້ານອັດຕາແລກປ່ຽນທີ່ເກີດຈາກການກູ້ຢືມ ໃນອັດຕາດອກເບ້ຍຕາມລາຄາຕະຫຼາດ ບໍລິສັດ ໄດ້ລຸດຄວາມສ່ຽງໂດຍການກູ້ຢືມເງິນໄລຍະສັ້ນ ຊຶ່ງຜູ້ບໍລິຫານເຊື່ອວ່າ ຜົນກະທົບຈາກການປ່ຽນແປງໃນອັດຕາດອກເບ້ຍ ຈະບໍ່ສົ່ງຜົນກະທົບຕໍ່ກັບບໍລິສັດຢ່າງເປັນສາລະສຳຄັນ.

3.4 ຄວາມສ່ຽງທາງດ້ານສະພາບຄ່ອງ

ການບໍລິຫານຄວາມສ່ຽງທາງດ້ານສະພາບຄ່ອງແມ່ນເວົ້າເຖິງຄວາມພຽງພໍຂອງເງິນສົດ ແລະ ການລົງທຶນໄລຍະສັ້ນ. ການວາງແຜນການບໍລິຫານແມ່ນເພື່ອຮັກສາເງິນສົດທີ່ໃຊ້ເພື່ອຮັກສາສະພາບຄ່ອງ ແລະ ເຮັດໃຫ້ໝັ້ນໃຈວ່າທຶນຈະມີຄວາມພຽງພໍຕໍ່ກັບຄວາມຕ້ອງການນຳໃຊ້ໃນໄລຍະສັ້ນເຊິ່ງຈະປະກອບດ້ວຍການຈ່າຍເງິນກູ້ຢືມ ແລະ ແຜນການລົງທຶນໄລຍະຍາວ.

3.5 ການບໍລິຫານຄວາມສ່ຽງຂອງທຶນ

ການບໍລິຫານຄວາມສ່ຽງຂອງທຶນເພື່ອການຄຸ້ມຄອງທຶນ ໂດຍມີວັດຖຸປະສົງ ໃຫ້ທຶນຢູ່ໃນລະດັບປອດໄພ ແລະ ເຮັດໃຫ້ມີຄວາມອາດສາມາດດຳເນີນງານຢ່າງຕໍ່ເນື່ອງ ແລະ ໃຫ້ມີຜົນປະໂຫຍດໃຫ້ຜູ້ຖືຮຸ້ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ແລະ ສືບຕໍ່ຮັກສາໂຄງສ້າງຂອງທຶນເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍຂອງການຈັດຫາທຶນ.

ເພື່ອທີ່ຈະຮັກສາ ຫຼື ປັບປຸງ ໂຄງສ້າງທຶນ ໃຫ້ສະດວກໃນການດຳເນີນງານ ແລະ ແຜນການລົງທຶນ. ບໍລິສັດ ອາດອອກຮຸ້ນໃໝ່, ຄືນເງິນທຶນໃຫ້ແກ່ຜູ້ຖືຮຸ້ນ ແລະ ດັດແກ້ຈຳນວນເງິນປັນຜົນທີ່ຈະຈ່າຍໃຫ້ຜູ້ຖືຮຸ້ນ ໃນອະນາຄົດ.

4. ການປະມານການບັນຊີ, ຂໍ້ສົມມຸດຕິຖານ ແລະ ດຸນພິນິດທີ່ສຳຄັນ

ການປະມານການບັນຊີ, ຂໍ້ສົມມຸດຕິຖານ ແລະ ດຸນພິນິດທີ່ສຳຄັນ ແມ່ນໄດ້ດຳເນີນການຢ່າງຕໍ່ເນື່ອງ ແລະ ຢູ່ເທິງພື້ນຖານປະສົບການທີ່ຜ່ານມາ ແລະ ປັດໄຈສຳຄັນອື່ນໆ ລວມເຖິງການຄາດຫວັງເຫດການໃນອະນາຄົດທີ່ເຊື່ອວ່າ ຈະສົມເຫດສົມຜົນໃນສະຖານະການໃນຕອນນັ້ນ.

ບໍລິສັດ ໄດ້ປະມານການບັນຊີ ແລະ ກຳນົດຂໍ້ສົມມຸດຕິຖານ ທີ່ກ່ຽວກັບອະນາຄົດ. ຜົນການປະເມີນການບັນຊີຈະບໍ່ເປັນໄປຕາມຜົນທີ່ເກີດຂຶ້ນຈິງ. ການປະມານການ ແລະ ຂໍ້ສົມມຸດຕິຖານ ທີ່ມີຄວາມສ່ຽງທີ່ເປັນສາລະສຳຄັນຕໍ່ກັບການດັດແກ້ມູນຄ່າຕາມບັນຊີຂອງຊັບສິນ ແລະ ໜີ້ສິນ ໃນການເງິນປີຕໍ່ໄປມີດັ່ງຕໍ່ໄປນີ້:

4. ການປະມານການບັນຊີ, ຂໍ້ສົມມຸດຕິຖານ ແລະ ດຸນພິນິດທີ່ສຳຄັນ (ຕໍ່)

4.1 ຄ່າເຊື່ອມມູນຄ່າຂອງໜີ້ຕ້ອງຮັບການຄ້າ

ທາງ ບໍລິສັດ ໄດ້ກຳນົດສຳຮອງໜີ້ສົງໄສຈະສູນທີ່ຈະສະທ້ອນໃຫ້ເຫັນເຖິງ ຄ່າເຊື່ອມມູນຄ່າຂອງໜີ້ຕ້ອງຮັບຈາກການຄ້າ, ທີ່ກ່ຽວຂ້ອງກັນກັບເງິນສຳຮອງຂາດທຶນຈາກການຮຽກເກັບເງິນກັບລູກຄ້າ. ສຳຮອງໜີ້ສົງໄສຈະສູນອັນເປັນຜົນມາຈາກການປະເມີນເງິນສົດທີ່ຄາດວ່າຈະໄດ້ຮັບໃນອະນາຄົດຂອງ ບໍລິສັດ ເຊິ່ງການປະເມີນການແມ່ນຢູ່ເທິງພື້ນຖານການພິຈາລະນາປະສົບການທີ່ຜ່ານມາໃນການຮຽກເກັບເງິນຈາກລູກຄ້າ ແລະ ການຜິດນັດໃນການຊຳລະໜີ້ໂດຍຈະພິຈາລະນາຕາມແນວໂນ້ມຂອງຕະຫຼາດ.

4.2 ຄ່າສຳຮອງເງິນແຮເພື່ອຫຼຸດມູນຄ່າຂອງເຄື່ອງໃນສາງ

ທາງ ບໍລິສັດ ໄດ້ປະເມີນການຄ່າສຳຮອງເງິນແຮເພື່ອຫຼຸດມູນຄ່າຂອງເຄື່ອງໃນສາງລົງ ເພື່ອສະທ້ອນໃຫ້ເຫັນເຖິງມູນຄ່າສຸດທິຂອງເຄື່ອງໃນສາງ. ຄ່າສຳຮອງເງິນແຮເພື່ອຫຼຸດມູນຄ່າຂອງເຄື່ອງໃນສາງແມ່ນໄດ້ສະແດງ ການວິເຄາະຄວາມຫຼ້າສະໄໝຂອງສິນຄ້າ ແລະ ການຄາດການທີ່ກ່ຽວກັບການຂາຍສິນຄ້າໃນອະນາຄົດ. ຍອດເຫຼືອຂອງສິນຄ້າຄ້າງສາງ ແມ່ນຈະຖືກຕັດອອກທາງບັນຊີ ເມື່ອຮັບຮູ້ວ່າ ສິນຄ້າດັ່ງກ່າວແມ່ນ ໄດ້ຫຼ້າສະໄໝ ຫຼື ບໍ່ສາມາດຂາຍໄດ້.

5. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2022 ກີບ	2021 ກີບ
ເງິນສົດໃນມື	1.547.393.028	637.529.904
ເງິນຝາກທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ	36.741.058.886	2.647.744.144
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	38.288.451.914	3.285.274.048

ເງິນສົດໃນມືແມ່ນເງິນທີ່ພ້ອມຈ່າຍ ແລະ ເງິນທີ່ໄດ້ຈາກການຂາຍທີ່ໃຊ້ໄວ້ເພື່ອການໃຊ້ຈ່າຍທົ່ວໄປ.

ເງິນຝາກທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການກັບ ສະຖາບັນການເງິນ ໝາຍເຖິງ ເງິນຝາກກັບທະນາຄານທີ່ມີຊື່ສຽງພາຍໃນປະເທດໃນ ສາມ ສະກຸນເງິນ ໂດລາສະຫະລັດ, ບາດ ແລະ ກີບ ໃນບັນຊີກະແສລາຍວັນ ທີ່ມີອັດຕາດອກເບ້ຍແຕ່ 0,6%-2,0% ຕໍ່ປີ (2021: 1,75% - 2,0% ຕໍ່ປີ) ແລະ ໃນບັນຊີເງິນຝາກປະຢັດທີ່ມີອັດຕາດອກເບ້ຍແຕ່ 0,45% - 1,25% ຕໍ່ປີ.

6. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ

	2022 ກີບ	2021 ກີບ
ໜີ້ຕ້ອງຮັບການຄ້າ	12.191.152.544	12.905.664.740
ຫັກ ສຳຮອງເງິນແຮໜີ້ສົງໄສຈະສູນ	(6.266.253.522)	(1.395.937.031)
ໜີ້ຕ້ອງຮັບການຄ້າ ສຸດທິ	5.924.899.022	11.509.727.709
ເງິນກູ້ຢືມພະນັກງານ	188.935.487	196.184.144
ໜີ້ຕ້ອງຮັບອື່ນໆ	104.029.310	791.955.332
	292.964.797	988.139.476
ລວມໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ	6.217.863.819	12.497.867.185

ຍອດເຫຼືອໜີ້ຕ້ອງຮັບການຄ້າ ໃນວັນທີ 31 ທັນວາ 2022 ມີອາຍຸການດັ່ງລຸ່ມນີ້:

	2022 ກີບ	2021 ກີບ
ບໍ່ຄົບກຳນົດ	4.588.327.213	6.351.403.747
ເກີນກຳນົດ		
1 - 3 ເດືອນ	1.330.605.896	1.845.543.058
3 - 6 ເດືອນ	5.965.782	141.087.731
6 - 12 ເດືອນ	611.402.541	101.794.992
ເກີນ 12 ເດືອນ	5.654.851.112	4.465.835.212
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ	12.191.152.544	12.905.664.740
ຫັກ ສຳຮອງເງິນແຮໜີ້ສົງໄສຈະສູນ	(6.266.253.522)	(1.395.937.031)
ໜີ້ຕ້ອງຮັບການຄ້າ ສຸດທິ	5.924.899.022	11.509.727.709

ໜີ້ຕ້ອງຮັບການຄ້າທີ່ມີອາຍຸເກີນ ຫົກ ເດືອນສ່ວນໃຫຍ່ເປັນໜີ້ຕ້ອງຮັບທີ່ຍັງຄົງມີການຊື້ຂາຍ ກັບບໍລິສັດຢ່າງຕໍ່ເນື່ອງ ການຕັ້ງສຳຮອງເງິນແຮໜີ້ສົງໄສຈະສູນ ອີງຕາມຍອດໜີ້ຕ້ອງຮັບຄ້າງຊຳລະເກີນ ຫົກ ເດືອນ ແລະ ໄດ້ຮັບການປະເມີນຈາກ ຜູ້ບໍລິຫານໃນເລື່ອງ ການຊຳລະຂອງບັນຊີໜີ້ຕ້ອງຮັບຄືນຫຼັງ ແລະ ຄາດຄະເນກ່ຽວກັບການເກັບເງິນຄືນຈາກໜີ້ຕ້ອງຮັບການຄ້າໃນອະນາຄົດ.

7. ເຄື່ອງໃນສາງ, ສຸດທິ

	2022 ກີບ	2021 ກີບ
ເຄື່ອງໃນສາງ	409.531.257.556	292.865.882.718
ຫັກ ສຳຮອງເງິນແຮເຄື່ອງໃນສາງທີ່ເຄື່ອນໄຫວຊ້ຳ ແລະ ຫຼ້າສະໄໝ	(6.748.748.957)	(3.500.789.509)
ສຳຮອງເງິນແຮມູນຄ່າໂດຍຂຶ້ນກັບມູນຄ່າສຸດທິທີ່ຄາດວ່າຈະໄດ້ຮັບ	(318.571.356)	(189.625.851)
ສິນຄ້າໃນສາງ ສຸດທິ	402.463.937.243	289.175.467.358

ຕົ້ນທຶນຂອງເຄື່ອງໃນສາງຖືກຮັບຮູ້ເປັນລາຍຈ່າຍ ແລະ ລວມຢູ່ໃນ 'ຕົ້ນທຶນການຂາຍ' ເປັນຈຳນວນເງິນ 485.502 ລ້ານກີບ (ໃນປີ 2021: 358.083 ລ້ານກີບ).

ໃນວັນທີ 31 ທັນວາ 2022, ຜູ້ບໍລິຫານໄດ້ປະເມີນ ແລະ ທົບທວນຄືນການສຳຮອງເງິນແຮສຳລັບ ເຄື່ອງໃນສາງທີ່ເຄື່ອນໄຫວຊ້ຳ ແລະ ຫຼ້າສະໄໝ, ເງິນແຮສຳລັບເຄື່ອງໃນສາງທີ່ເຄື່ອໄຫວຊ້ຳ ແລະ ຫຼ້າສະໄໝໃນອະດີດ ແມ່ນໄດ້ດັດແກ້ໃຫ້ເພີ່ມຂຶ້ນ ເປັນຈຳນວນເງິນ 7.607 ລ້ານກີບ (ໃນປີ 2021: 3.690 ລ້ານກີບ) ເນື່ອງຈາກເຄື່ອງໃນສາງທີ່ເຄື່ອໄຫວຊ້ຳ ສາມາດຂາຍໄດ້ໜ້ອຍລົງ, ຜົນຈາກການປັບຫຼຸດ ດັ່ງກ່າວ ເຮັດໃຫ້ເງິນແຮ ແລະ ຕົ້ນທຶນຂາຍ ຖືກປັບໃຫ້ເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບຄວາມເປັນຈິງ ແລະ ການວິເຄາະຂ້າງເທິງ.

8. ຊັບສິນໝຸນວຽນອື່ນໆ

	2022 ກີບ	2021 ກີບ
ຊັບສິນໝຸນວຽນ		
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ	773.039.615	2.936.838.606
ເງິນຈ່າຍລ່ວງໜ້າຄ່າປະກັນໄພ	137.934.712	150.125.591
ສ່ວນຫຼຸດຄ້າງຮັບຈາກຜູ້ສະໜອງສິນຄ້າ (i)	3.897.621.436	2.228.267.751
ເງິນຈ່າຍລ່ວງໜ້າຄ່າເຊົ່າ (ບົດອະທິບາຍຂໍ້ 21,2) (ii)	13.404.352.054	-
ອື່ນໆ	2.334.790.867	1.844.618.475
ຊັບສິນບໍ່ໝຸນວຽນ		
ເງິນຈ່າຍລ່ວງໜ້າຄ່າເຊົ່າ (ບົດອະທິບາຍຂໍ້ 21,2) (ii)	20.355.868.711	-
ຊັບສິນໝຸນວຽນອື່ນໆ	40.903.607.395	7.159.850.423

(i) ສ່ວນຫຼຸດຈາກຜູ້ສະໜອງ ສະແດງໃຫ້ເຫັນຍອດສ່ວນຫຼຸດຍັງຄ້າງຮັບທີ່ຜູ້ສະໜອງໄດ້ຍັ້ງຍືນຍອດມາ ແລະ ຈະໄດ້ຮັບຊຳລະໂດຍການຫັກຈາກເງິນໃນໃບເກັບເງິນເມື່ອບໍລິສັດຕ້ອງຈ່າຍໃຫ້ແກ່ຜູ້ສະໜອງ. ສ່ວນຫຼຸດຄ້າງຮັບຈາກຜູ້ສະໜອງໃນວັນທີ 31 ທັນວາ 2022 ສ່ວນຫຼາຍຈະໄດ້ຮັບຊຳລະພາຍໃນໄຕມາດທຳອິດຂອງປີ 2023.

(ii) ເງິນຈ່າຍລ່ວງໜ້າຄ່າເຊົ່າ ແມ່ນມາຈາກສັນຍາເຊົ່າທີ່ດິນ ທີ່ມີອາຍຸສັນຍາລະຫວ່າງ 3 – 5 ປີ, ເຊິ່ງໄດ້ຊຳລະລ່ວງໜ້າເຕັມຈຳນວນພາຍໃນປີ, ຍອດຄົງເຫຼືອແມ່ນໄດ້ຖືກແຍກປະເພດເປັນຊັບສິນບໍ່ໝຸນວຽນ.

9. ທີ່ດິນ ອາຄານ ແລະ ອຸປະກອນ, ສຸດທິ

	ທີ່ດິນ ກີບ	ອາຄານ ແລະ ສ່ວນ ປັບປຸງທີ່ດິນ ກີບ	ເຄື່ອງໃຊ້ຫ້ອງການ ກີບ	ເຟີນີເຈີ ແລະ ສິ່ງຕິດ ຕັ້ງຖາວອນ ກີບ	ພາຫະນະ ກີບ	ລະຫວ່າງການ ກໍ່ສ້າງ ກີบ	ລວມ ກີบ
ໃນວັນທີ 1 ມັງກອນ 2021							
ຕົ້ນທຶນ	267.896.239.572	163.271.129.789	6.272.815.082	39.873.046.920	15.009.016.541	12.869.814.616	505.192.062.520
ສ່ວນຕ່າງອັດຕາແລກປ່ຽນຈາກການແປງ ຄ່າ	100.381.703.861	47.191.078.789	530.457.619	6.255.608.543	1.848.215.150	12.590.201.037	168.797.264.999
ຫັກ ຄ່າຫຼຸ້ຍຫ້ຽນສະສົມ	-	(33.723.977.485)	(4.662.079.734)	(19.908.043.702)	(12.649.069.413)	-	(70.943.170.334)
ມູນຄ່າຕາມບັນຊີສຸດທິ	**368.277.943.433**	**176.738.231.093**	**2.141.192.967**	**26.220.611.761**	**4.208.162.278**	**25.460.015.653**	**603.046.157.185**
ທ້າຍປີ ວັນທີ 31 ທັນວາ 2021							
ຍອດຍົກມາຕາມບັນຊີສຸດທິ	368.277.943.433	176.738.231.093	2.141.192.967	26.220.611.761	4.208.162.278	25.460.015.653	603.046.157.185
ສ່ວນຕ່າງອັດຕາແລກປ່ຽນຈາກການແປງ ຄ່າ	17.776.025.429	8.304.052.891	72.133.051	1.043.708.968	110,952,367	1.228.902.895	28.535.775.601
ການເພີ່ມຂຶ້ນ	-	-	511.075.937	1.060.548.987	428.830.002	22.281.146.450	24.281.601.376
ການໂອນເຂົ້າ(ອອກ)	-	11.888.972	121.276.275	3.170.810.610	9.524.198	(3.313.500.055)	-
ການຕັດ-ສຸດທິ	-	-	(38.877.123)	(59.929.948)	(695)	-	(98.807.766)
ຄ່າຫຼຸ້ຍຫ້ຽນ	-	(7.246.045.817)	(997.655.059)	(7.091.542.781)	(2.945.414.166)	-	(18.280.657.823)
ຍອດເຫຼືອຕາມບັນຊີສຸດທິ	**386.053.968.862**	**177.808.127.139**	**1.809.146.048**	**24.344.207.597**	**1.812.053.984**	**45.656.564.943**	**637.484.068.573**
ໃນວັນທີ 31 ທັນວາ 2021							
ຕົ້ນທຶນ	267.896.239.572	163.283.018.761	6.752.322.407	43.883.776.851	15.162.256.741	31.837.461.011	528.815.075.343
ສ່ວນຕ່າງອັດຕາແລກປ່ຽນຈາກການແປງ ຄ່າ	118.157.729.290	55.495.131.680	602.590.670	7.299.317.511	1.959.167.517	13.819.103.932	197.333.040.600
ຫັກ ຄ່າຫຼຸ້ຍຫ້ຽນສະສົມ	-	(40.970.023.302)	(5.545.767.029)	(26.838.886.765)	(15.309.370.274)	-	(88.664.047.370)
ມູນຄ່າຕາມບັນຊີສຸດທິ	**386.053.968.862**	**177.808.127.139**	**1.809.146.048**	**24.344.207.597**	**1.812.053.984**	**45.656.564.943**	**637.484.068.573**

9. ທີ່ດິນ ອາຄານ ແລະ ອຸປະກອນ, ສຸດທິ (ຕໍ່)

	ທີ່ດິນ ກີບ	ອາຄານ ແລະ ສ່ວນ ປັບປຸງທີ່ດິນ ກີບ	ເຄື່ອງໃຊ້ຫ້ອງການ ກີບ	ເຟີນີເຈີ ແລະ ອຸປະກອນ ຕົ້ງຖາວອນ ກີບ	ພາຫະນະ ກີບ	ລະຫວ່າງການ ກໍ່ສ້າງ ກີບ	ລວມ ກີບ
ໃນວັນທີ 1 ມັງກອນ 2022							
ຕົ້ນທຶນ	267.896.239.572	163.283.018.761	6.752.322.407	43.883.776.851	15.162.256.741	31.837.461.011	528.815.075.343
ສ່ວນຕ່າງອັດຕາແລກປ່ຽນຈາກການແປງ ຄ່າ	118.157.729.290	55.495.131.680	602.590.670	7.299.317.511	1.959.167.517	13.819.103.932	197.333.040.600
ຫັກ ຄ່າຫຼ້ຍຫ້ຽນສະສົມ	-	(40.970.023.302)	(5.545.767.029)	(26.838.886.765)	(15.309.370.274)	-	(88.664.047.370)
ມູນຄ່າຕາມບັນຊີສຸດທິ	**386.053.968.862**	**177.808.127.139**	**1.809.146.048**	**24.344.207.597**	**1.812.053.984**	**45.656.564.943**	**637.484.068.573**
ທ້າຍປີ ວັນທີ 31 ທັນວາ 2022							
ຍອດຍົກມາຕາມບັນຊີສຸດທິ	386.053.968.862	177.808.127.139	1.809.146.048	24.344.207.597	1.812.053.984	45.656.564.943	637.484.068.573
ສ່ວນຕ່າງອັດຕາແລກປ່ຽນຈາກການແປງ ຄ່າ	169.860.415.376	76.442.143.679	613.472.205	9.172.269.899	564.127.224	20.088.494.387	276.740.922.770
ການເພີ່ມຂຶ້ນ	-	-	1.231.430.617	784.112.985	534.295.538	11.136.494.038	13.686.333.178
ການໂອນເຂົ້າ(ອອກ)	-	63.521.664.990	23.424.468	6.520.204.104	1.932.487.190	(71.997.780.752)	-
ການຕັດ-ສຸດທິ	-	-	(27.765.101)	(181.154.547)	(501)	-	(208.920.149)
ຄ່າຫຼ້ຍຫ້ຽນ	-	(11.005.711.062)	(1.121.123.816)	(9.452.260.784)	(1.432.056.386)	-	(23.011.152.048)
ຍອດເຫຼືອຕາມບັນຊີສຸດທິ	**555.914.384.238**	**306.766.224.746**	**2.528.584.421**	**31.187.379.254**	**3.410.907.049**	**4.883.772.616**	**904.691.252.324**
ໃນວັນທີ 31 ທັນວາ 2022							
ຕົ້ນທຶນ	267.896.239.572	226.804.683.751	7.979.412.391	51.006.939.393	17.629.038.968	4.883.772.616	576.200.086.691
ສ່ວນຕ່າງອັດຕາແລກປ່ຽນຈາກການແປງ ຄ່າ	288.018.144.666	131.937.275.359	1.216.062.875	16.471.587.410	2.523.294.741	-	440.166.365.051
ຫັກ ຄ່າຫຼ້ຍຫ້ຽນສະສົມ	-	(51.975.734.364)	(6.666.890.845)	(36.291.147.549)	(16.741.426.660)	-	(111.675.199.418)
ມູນຄ່າຕາມບັນຊີສຸດທິ	**555.914.384.238**	**306.766.224.746**	**2.528.584.421**	**31.187.379.254**	**3.410.907.049**	**4.883.772.616**	**904.691.252.324**

ການເພີ່ມຂຶ້ນເປັນຈຳນວນ 13.688 ລ້ານກີບ ປະກອບມີ ລາຍການເຄື່ອນໄຫວເງິນສົດຈຳນວນ 13.119 ລ້ານກີບ ແລະ ການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ ຈຳນວນ 789 ລ້ານກີບ.

10. ຊັບສິນບັດຄົງທີ່ ທີ່ບໍ່ມີຕົວຕົນ, ສຸດທິ

ທ້າຍປີ ວັນທີ 31 ທັນວາ 2021	ກີບ
ຍອດຍົກມາຕາມບັນຊີສຸດທິ	38.975.565
ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ	1.041.135
ການເພີ່ມຂຶ້ນ	28.511.654
ຄ່າຕັດຈ່າຍ	(26.848.512)
ຍອດເຫຼືອຕາມບັນຊີສຸດທິ	41.679.842

ໃນວັນທີ 31 ທັນວາ 2021	
ຕົ້ນທຶນ	896.612.394
ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ	95.662.692
ຫັກ ຄ່າຕັດຈ່າຍສະສົມ	(950.595.244)
ຍອດເຫຼືອຕາມບັນຊີສຸດທິ	41.679.842

ທ້າຍປີ ວັນທີ 31 ທັນວາ 2022	ກີບ
ຍອດຍົກມາຕາມບັນຊີສຸດທິ	41.679.842
ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ	18.338.770
ການເພີ່ມຂຶ້ນ	63.068.315
ການຕັດ ຄ່າຕັດຈ່າຍ	(6.694.689)
ມູນຄ່າຕາມບັນຊີສຸດທິ	116.392.238

ໃນວັນທີ 31 ທັນວາ 2022	
ຕົ້ນທຶນ	959.680.709
ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ	114.001.462
ຫັກ ຄ່າຕັດຈ່າຍສະສົມ	(957.289.933)
ຍອດເຫຼືອຕາມບັນຊີສຸດທິ	116.392.238

11. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	2022 ກີບ	2021 ກີບ
ໜີ້ຕ້ອງສົ່ງການຄ້າ– ບຸກຄົນທີສາມ	40.199.324.412	47.745.460.523
ໜີ້ຕ້ອງສົ່ງການຄ້າ– ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 21)	10.877.529.142	10.943.297.126
ໜີ້ຕ້ອງສົ່ງອື່ນ (i)	668.194.675	1.114.475.817
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	51.745.048.229	59.803.233.466

(i) ໜີ້ຕ້ອງສົ່ງອື່ນ ສະແດງໜີ້ສິນຈາກການສົ່ງຄືນສິນຄ້າຈາກລູກຄ້າ.

12. ເງິນກູ້ຢືມ

	2022 ກີບ	2021 ກີບ
ໝຸນວຽນ		
ເງິນເບີກເກີນບັນຊີ	1.547.005.498	5.088.905.747
ເງິນກູ້ຢືມໃນໄລຍະສັ້ນ	83.387.334.853	80.597.661.608
ສ່ວນທີ່ໝຸນວຽນຂອງເງິນກູ້ຢືມໃນໄລຍະຍາວ	20.671.002.986	13.820.250.486
ບໍ່ໝຸນວຽນ		
ເງິນກູ້ຢືມໃນໄລຍະຍາວ	58.329.409.126	9.671.632.212
ເງິນກູ້ຢືມ	163.934.752.463	109.178.450.053

ອັດຕາດອກເບ້ຍຂອງເງິນກູ້ຢືມ ຂອງບໍລິສັດ ມີດັ່ງນີ້:

	2022 ກີບ	2021 ກີບ
ເງິນກູ້ຢືມ		
ອັດຕາດອກເບ້ຍຄົງທີ່	158.461.996.044	104.155.141.145
ອັດຕາດອກເບ້ຍລອຍໂຕ	5.472.756.419	5.023.308.908
ເງິນກູ້ຢືມ	163.934.752.463	109.178.450.053

i) ເງິນກູ້ຢືມໄລຍະສັ້ນ ຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງມີອັດຕາດອກເບ້ຍຕ່ຳຈຳກັດ (LRL) ບວກອັດຕາເປີເຊັນເພີ່ມຕໍ່ປີ ຕ້ອງຊຳລະຄືນພາຍໃນ ຫ້າ ເດືອນຫລັງຈາກເບີກເງິນກູ້. ມີຫຼັກຊັບຄ้ำປะกันโดยที่ดินของผู้ถือหุ้น, ສຳລັບໄລຍະປີສິ້ນສຸດວັນທີ 31 ທັນວາ 2022, ໄດ້ມີການເບີກຖອນ ຈຳນວນ 49.396 ລ້ານກີບ.

12. ເງິນກູ້ຢືມ (ຕໍ່)

ii) ເງິນກູ້ຢືມໄລຍະສັ້ນຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງ ຈຳນວນໃນສັນຍາມູນຄ່າ 30 ລ້ານ ບາດ ເຊິ່ງມີອັດຕາ ດອກເບ້ຍ 6,05% ຕໍ່ປີ. ຕົ້ນທຶນເງິນກູ້ແມ່ນຈະຖືກຊຳລະເປັນໄຕມາດ ແລະ ດອກເບ້ຍຊຳລະທຸກໆເດືອນ. ເງິນກູ້ຢືມນີ້ມີ ຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ. ສຳລັບປີສິ້ນສຸດວັນທີ 31 ທັນວາ 2022, ໄດ້ມີການເບີກຖອນ ຈຳນວນ 287.800 ລ້ານກີບ.

iii) ເງິນກູ້ຢືມໄລຍະສັ້ນຈາກທະນາຄານທຸລະກິດຕ່າງປະເທດ, ເຊິ່ງຈຳນວນໃນສັນຍາມູນຄ່າ 250 ລ້ານບາດ ໃນອັດຕາດອກ ເບ້ຍຄົງທີ່ 4%. ການຊຳລະຄືນແມ່ນພາຍໃນ 150 ວັນ ຫຼັງຈາກເບີກຖອນ ແລະ ດອກເບ້ຍຊຳລະທຸກໆເດືອນ. ມີຫຼັກ ຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ. ສຳລັບປີສິ້ນສຸດວັນທີ 31 ທັນວາ 2022, ໄດ້ມີການເບີກຖອນ ຈຳນວນ 112.432 ລ້ານກີບ.

iv) ເງິນກູ້ຢືມໄລຍະຍາວຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງຈຳນວນໃນສັນຍາ 50 ລ້ານ ບາດ ເຊິ່ງມີອັດຕາດອກເບ້ຍ 5% ຕໍ່ປີ, ເຊິ່ງມີກຳນົດເຖິງເດືອນທັນວາ 2025. ເງິນຕົ້ນຊຳລະຄືນເປັນໄຕມາດເລີ່ມຈາກເດືອນມີຖຸນາ 2021 ແລະ ດອກ ເບ້ຍຊຳລະທຸກໆເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ. ກູ້ຢືມດັ່ງກ່າວແມ່ນໄດ້ເບີກຖອນໝົດແລ້ວ ໃນທ້າຍປີ 2022.

v) ພາຍໃນປີ ບໍລິສັດໄດ້ຕົກລົງສັນຍາເງິນກູ້ໃໝ່ກັບທະນາຄານທຸລະກິດພາຍໃນ ມູນຄ່າສັນຍາທີ່ 145ລ້ານບາດ ດ້ວຍດອກ ເບ້ຍ 5% ຕໍ່ປີ, ເຊິ່ງມີກຳນົດໃນວັນທີ 31 ພຶດສະພາ 2027. ເງິນຕົ້ນຊຳລະຄືນເປັນໄຕມາດ ເລີ່ມແຕ່ວັນທີ 31 ສິງຫາ 2022 ແລະ ດອກເບ້ຍຊຳລະທຸກໆເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ. ກູ້ຢືມດັ່ງກ່າວແມ່ນໄດ້ ເບີກຖອນໝົດແລ້ວໃນເດືອນກໍລະກົດ 2022.

ຄ່າທຳນຽມບໍລິການທາງການເງິນຕັດຈ່າຍ ແມ່ນຮັບຮູ້ເປັນລາຍຈ່າຍລ່ວງໜ້າເມື່ອເກີດຂຶ້ນ ແລະ ຕັດຈ່າຍໂດຍວິທີຕາມອາຍຸຂອງ ສັນຍາ.

13. ໜີ້ຕ້ອງສົ່ງອາກອນກຳໄລ

ການເຄື່ອນໄຫວຂອງ ໜີ້ຕ້ອງສົ່ງອາກອນກຳໄລ ໃນປີ 2022 ມີດັ່ງຕໍ່ໄປນີ້:

	ກີບ
ວັນທີ 1 ມັງກອນ 2022	4.066.651.565
ອາກອນກຳໄລສຳລັບປີ (ບົດອະທິບາຍ ຂໍ້ທີ 19)	9.944.957.710
ຊຳລະໃນລະຫວ່າງປີ	(3.951.260.210)
ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ	1.503.799.644
ອາກອນກຳໄລຕ້ອງສົ່ງໃນວັນທີ 31 ທັນວາ 2022	11.564.148.709

14. ເງິນມັດຈຳຈາກລູກຄ້າ

ເງິນຝາກຈະຖືກຊຳລະ ແລະ ສະສາງ ຕາມປົກກະຕິ ພາຍໃນ ໜຶ່ງເຖິງສອງ ເດືອນ ເມື່ອລູກຄ້າຍອມຮັບ ການຈັດສົ່ງສິນຄ້າ

15. ໜີ້ສິນໝຸນວຽນອື່ນໆ

	2022 ກີບ	2021 ກີບ
ລາຍຮັບລ່ວງໜ້າຈາກລູກຄ້າ	5.812.926.314	2.463.480.925
ໜີ້ສິນກ່ຽວກັບກິດຈະກຳສົ່ງເສີມການຕະຫຼາດ	4.065.268.799	-
ໜີ້ສິນລາຍຈ່າຍຄ້າງຊຳ	-	2.594.224.470
ໜີ້ສິນອື່ນໆ	4.466.920.308	9.689.509.236
ໜີ້ສິນໝຸນວຽນອື່ນໆ	14.345.115.421	14.747.214.631

16. ທຶນ

	ຈຳນວນຮຸ້ນ ຮຸ້ນ	ຮຸ້ນສາມັນ ກີບ	ສ່ວນເກີນມູນຄ່າຮຸ້ນ ກີບ	ລວມ ກີບ
ວັນທີ 1 ມັງກອນ 2021	165.000.000	330.000.000.000	24.735.724.722	354.735.724.722
ອອກຮຸ້ນ	-	-	-	-
ວັນທີ 31 ທັນວາ 2021	165.000.000	330.000.000.000	24.735.724.722	354.735.724.722
ອອກຮຸ້ນ	-	-	-	-
ໃນວັນທີ 31 ທັນວາ 2022	165.000.000	330.000.000.000	24.735.724.722	354.735.724.722

ໃນວັນທີ 31 ທັນວາ 2022 ບໍລິສັດມີທຶນຈົດທະບຽນ ທີ່ມີຈຳນວນຮຸ້ນສາມັນ 165.000.000 ຮຸ້ນ ທີ່ມີມູນຄ່າຮຸ້ນລະ 2.000 ກີບ ເຊິ່ງຮຸ້ນດັ່ງກ່າວໄດ້ຊຳລະເຕັມ.

17. ສຳຮອງ

ເງິນສຳຮອງຕາມກົດໝາຍ

	2022 ກີບ	2021 ກີບ
ວັນທີ 1 ມັງກອນ	8.440.875.640	5.973.926.973
ການເພີ່ມຂຶ້ນ	5.661.171.328	2.466.948.667
ວັນທີ 31 ທັນວາ	14.102.046.968	8.440.875.640

ເງິນສຳຮອງຕາມກົດໝາຍ ຖືກສ້າງຂຶ້ນໂດຍສອດຄ່ອງກັບ ກົດໝາຍວິສາຫະກິດ ຂອງ ສປປ ລາວ, ເຊິ່ງຕ້ອງມີການຕັ້ງສຳຮອງຢ່າງ ໜ້ອຍ 10% ຂອງກຳໄລສຸດທິປະຈຳປີ ຕາມກົດໝາຍຈົນກວ່າທຶນສຳຮອງດັ່ງກ່າວຈະຮອດ 50% ຂອງທຶນຈົດທະບຽນ.

ເງິນສຳຮອງອື່ນໆ

ນອກຈາກ ເງິນສຳຮອງຕາມກົດໝາຍ ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງອື່ນໆ, ໂດຍເປັນໄປຕາມນະໂຍບາຍຂອງທາງ ບໍລິສັດ ທີ່ໄດຮັບການຈົດທະບຽນກັບ ກະຊວງການເງິນຂອງ ສປປ ລາວ ໃນວັນທີ 22 ກັນຍາ 2017. ເງິນສຳຮອງອື່ນໆ ແມ່ນກຳ ນົດໄວ້ໃຊ້ສຳລັບເຫດການທີ່ບໍ່ແນ່ນອນ ເຊັ່ນ: ໄພພິບັດທາງທຳມະຊາດ, ໂດຍທາງ ບໍລິສັດ ຈະໃຊ້ເງິນສຳຮອງດັ່ງກ່າວໃນການຟື້ນຟູ ເພື່ອໃຫ້ນຳມາໃຊ້ງານຕາມປົກກະຕິ.

18. ລາຍຈ່າຍຕາມລັກສະນະ

ລາຍຈ່າຍທີ່ສຳຄັນໄດ້ຈັດປະເພດຕາມລັກສະນະດັ່ງນີ້:

	2022 ກີບ	2021 ກີບ
ຄ່າປ່ຽນແປງເຄື່ອງໃນສາງ	483.995.177.348	358.013.807.788
ເງິນເດືອນ ແລະ ແຮງງານ ແລະ ຜົນປະໂຫຍດອື່ນໆຂອງພະນັກງານ	37.799.096.100	27.101.793.060
ເງິນແຮສຳຮອງມູນຄ່າເຄື່ອງໃນສາງ	1.507.680.606	70.154.486
ຄ່າຫຼ້ຍຫ້ຽນ (ບົດອະທິບາຍ ຂໍ້ທີ 9-10)	23.017.846.737	18.307.506.335
ການສົ່ງເສີມການຂາຍ ແລະ ການດຳເນີນງານ	2.379.328.674	2.245.418.154
ຄ່າເຊົ່າ - ຫ້ອງການ ແລະ ຫ້ອງວາງສະແດງ	11.699.614.268	6.279.312.895
ຄ່ານ້ຳມັນເຊື້ອໄຟ	3.713.277.140	1.860.176.080
ຄ່າບຳລຸງຮັກສາ ແລະ ສ້ອມແປງ	3.641.222.160	2.472.805.765
ເຄື່ອງສາທາລະນຸປະໂພກ	2.966.892.544	2.687.347.230
ຄ່າຜູ້ຊ່ຽວຊານ	2.886.659.559	1.921.649.415
ຄ່າອື່ນໆ	8.097.950.655	3.778.368.896
	581.704.745.791	424.738.340.104

19. ອາກອນກຳໄລ

ບໍລິສັດ ບໍ່ໄດ້ຮັບຮູ້ອາກອນກຳໄລ, ການຈ່າຍ ຫຼື ຮັບ ໃນອະນາຄົດສຳລັບຜົນແຕກຕ່າງຊົ່ວຄາວ. ອາກອນກຳໄລແມ່ນຮັບຮູ້ຕາມຜົນການດຳເນີນງານຂອງໄລຍະ ແລະ ອັດຕາອາກອນທີ່ກ່ຽວຂ້ອງ.

	ກີບ
ການສົມທຽບລະຫວ່າງອາກອນກຳໄລ ແລະ ກຳໄລທາງບັນຊີ:	
ກຳໄລທາງບັນຊີກ່ອນອາກອນ	66.556.670.987
ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການສຳລັບອາກອນ (1)	(16.831.882.437)
ກຳໄລທາງອາກອນກ່ອນອາກອນກຳໄລ	49.724.788.550
ຄິດໄລ່ອາກອນກຳໄລ ໃນອັດຕາອາກອນ 20 % (2021: 20 %)	9.944.957.710

(1) ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການ ສຳລັບອາກອນສ່ວນໃຫຍ່ປະກອບມີ ການກັບຄືນເງິນແຮສຳຮອງເຄື່ອງໃນສາງ, ກຳໄລ ຂາດທຶນທີ່ບໍ່ໄດ້ຮັບຮູ້ຈາກການປະເມີນຊັບສິນ, ໜີ້ສິນ ໃນສະກຸນເງິນຕ່າງປະເທດໃນມື້ປິດບັນຊີ ແລະ ຄ່າຫຼ້ຍຫ້ຽນທີ່ຫັກເກີນອັດຕາ ຫຼື ອາຍຸການນຳໃຊ້ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາກອນລາຍໄດ້.

20. ເງິນປັນຜົນ

ຈາກກອງປະຊຸມສາມັນປະຈຳປີຜູ້ຖືຮຸ້ນ ໃນວັນທີ 5 ເມສາ 2022 ຜູ້ຖືຮຸ້ນໄດ້ຮັບຮອງເອົາມະຕິປະກາດຈ່າຍເງິນປັນຜົນ ຈາກລາຍຮັບຄ້າງເກັບທີ່ຍັງບໍ່ທັນໝາະສົມພາຍຫຼັງຫັກເງິນແຮສຳຮອງຕາມກົດໝາຍ ແລະ ການຈັດສັນຄ້າງສຳຮອງອື່ນ ແລະ ຈາກກຳໄລສຸດທິແຕ່ວັນທີ 1 ມັງກອນ 2021 ຫາ 31 ທັນວາ 2021 ຈຳນວນ 50 ກີບຕໍ່ຮຸ້ນ ລວມມູນຄ່າທັງໝົດ 8.250 ລ້ານກີບ (ປີ 2021: 3.362 ລ້ານກີບ) ເງິນປັນຜົນໄດ້ຈ່າຍ ໃນເດືອນພຶດສະພາ 2022 ໃຫ້ຜູ້ຖືຮຸ້ນ.

21. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ສ່ວນບຸກຄົນທີ່ມີ ການຄວບຄຸມ ຫຼື ຖືກຄວບຄຸມ ຫຼື ຢູ່ພາຍໃຕ້ການຄວບຄຸມທົ່ວໄປ ໂດຍກົງ ຫຼື ໂດຍທາງອ້ອມ ຜ່ານໜຶ່ງ ຫຼື ຫຼາຍຊ່ອງທາງ ກັບບໍລິສັດ. ລວມທັງບໍລິສັດຖືຮຸ້ນ, ບໍລິສັດຍ່ອຍ ແລະ ບໍລິສັດອື່ນໆທີ່ກ່ຽວຂ້ອງກົດຈະການຂອງບໍລິສັດ , ສະມາຄົມ ແລະ ບຸກຄົນທີ່ເປັນເຈົ້າຂອງ ໂດຍກົງຫຼືທາງອ້ອມ. ມີສິດໃນການລົງຄະແນນສຽງຂອງບໍລິສັດທີ່ເຮັດໃຫ້ເຂົາເຈົ້າມີອິດທິພົນສຳຄັນໃນວິສາຫະກິດ. ຜູ້ບໍລິຫານ ລວມທັງຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວ ຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັບບຸກຄົນເຫລົ່ານີ້ຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາສາຍສຳພັນ ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ບໍລິສັດ ຄຳນຶງເຖິງເນື້ອຫາຂອງ ສາຍສຳພັນ ແລະບໍ່ພຽງແຕ່ຮູບແບບ ທາງດ້ານກົດໝາຍ.

ບໍລິສັດ ໄດ້ຖືກບໍລິຫານໂດຍ ຄອບຄົວ ສຸຄະບັນດິດ ເຊິ່ງເປັນຜູ້ທີ່ຖືຮຸ້ນສ່ວນໃຫຍ່ ຂອງບໍລິສັດ. ຊຶ່ງຖືຮຸ້ນ 51% ຂອງຮຸ້ນ ບໍລິສັດ. ສ່ວນ 34% ຂອງຮຸ້ນ ບໍລິສັດ ແມ່ນຖືກຖືໂດຍ "Global house International Limited". ຊຶ່ງເປັນ ບໍລິສັດ ທີ່ຈົດທະບຽນ ໃນປະເທດ ໄທ ແລະ ສ່ວນທີ່ເຫຼືອ 15% ແມ່ນຖືກຖືໂດຍບຸກຄົນທົ່ວໄປ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໃນປີ ວັນທີ 31 ທັນວາ 2022 ທີ່ມີຄວາມສຳຄັນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

21.1 ລາຍຮັບ ແລະ ລາຍຈ່າຍ

	2022 ກີບ	2021 ກີບ
ຊື້ສິນຄ້າ ຈາກພາກສ່ວນທີ່ກ່ຽວຂ້ອງ	118.292.444.214	81.054.770.914
ລາຍຈ່າຍຄ່າເຊົ່າ	13.604.490.242	6.475.803.333

ລາຍຈ່າຍໃນການເຊົ່າ ແມ່ນ ຄ່າເຊົ່າທີ່ດິນ ແລະ ສິ່ງປຸກສ້າງ ຈາກຜູ້ຖືຮຸ້ນຫຼັກ ເພື່ອໃນການດຳເນີນງານ ໂດຍຄ່າເຊົ່າແມ່ນຂຶ້ນຢູ່ກັບການຕົກລົງທັ້ງສອງຝ່າຍ ໂດຍອ້າງອີງຈາກລາຄາຕາມທ້ອງຕະຫຼາດ.

21.2 ຍອດຍັງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງກັນ

	2022 ກີບ	2021 ກີບ
ລ່ວງໜ້າຄ່າເຊົ່າ – ພາກສ່ວນທີ່ກ່ຽວຂ້ອງ	33.760.220.765	-
ໜີ້ຕ້ອງສົ່ງການຄ້າ – ພາກສ່ວນທີ່ກ່ຽວຂ້ອງ	10.877.529.142	10.943.297.126
ລາຍຈ່າຍຄ່າເຊົ່າຄ້າງຈ່າຍ	-	2.594.224.397

21. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

21.3 ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ

ຜູ້ບໍລິຫານຫຼັກລວມເຖິງຜູ້ອຳນວຍການ. ເງິນຊົດເຊີຍທີ່ຈ່າຍໃຫ້ກັບຜູ້ບໍລິຫານສຳລັບການ ບໍລິການການຈ້າງງານແມ່ນດັ່ງຕໍ່ໄປນີ້:

	2022 ກີບ	2021 ກີບ
ເງິນເດືອນ	2.978.805.616	2.138.794.365

22. ພັນທະ ແລະ ຂໍ້ຕົກລົງທີ່ເປັນສາລະສຳຄັນ

ພັນທະຄ່າເຊົ່າໃນການດຳເນີນງານ. ເຊິ່ງບໍລິສັດເປັນຜູ້ເຊົ່າ

ບໍລິສັດ ເຊົ່າທີ່ດິນ ແລະ ຫ້ອງການພາຍໃຕ້ສັນຍາທີ່ບໍ່ສາມາດຍົກເລີກໄດ້ ຈາກຜູ້ຖືຮຸ້ນ. ໄລຍະການໃຫ້ເຊົ່າແມ່ນ ຫ້າປີ. ແລະ ສັນຍາເຊົ່າສ່ວນໃຫຍ່ນີ້ແມ່ນສາມາດຕໍ່ເມື່ອສັນຍາເກົ່າໝົດອາຍຸໃນອັດຕາທີ່ຕົກລົງກັນໃໝ່.

	2022 ກີບ	2021 ກີບ
ໜ້ອຍກວ່າ 1 ປີ	6.994.972.670	1.250.349.754
1 ຫາ 5 ປີ	34.309.820.146	2.504.125.123
ລວມ	41.304.792.816	3.754.474.877

23. ເຫດການທີ່ຈະເກີດຂຶ້ນຫລັງໄລຍະການລາຍງານ

ບໍ່ມີເຫດການສຳຄັນເກີດຂຶ້ນພາຍຫຼັງມື້ອອກໃບລາຍງານຖານະການເງິນ ທີ່ຈຳເປັນຕ້ອງມີການດັດແກ້ ຫຼື ເປີດເຜີຍ ໃນ ເອກະສານ ລາຍງານການເງິນສຳລັບປີສິ້ນສຸດ ວັນທີ 31 ທັນວາ 2022.

ແບບຟອມການຈອງຊື້ຮຸ້ນກູ້ (ອອກໃນຮູບແບບວົງຈຳກັດ) ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ຮຸ້ນກູ້ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປະເພດລະບຸຊື່ຜູ້ຖື ບໍ່ດ້ອຍສິດ ບໍ່ມີຄ້ຳປະກັນ ແລະ ຕີລາຄາໜ່ວຍໜ້ຽ ເທົ່າກັບ 1,000,000 ກີບ ອາຍຸການໄຖ່ຖອນ ປີ 2027ມູນຄ່າລວມ 3.000.000 ໂດລາ ສຫລ, 60 ໜ່ວຍ, ມູນຄ່າຫ້ຳນິດ 50.000 ໂດລາ ສຫລ ຕ່ຳໜ່ວຍ, ລາຄາຂາຍ 50.000 ໂດລາ ສຫລ ຕ່ຳໜ່ວຍ, ອາຍຸ 4 ປີ ຈອງຊື້ຂັ້ນຕ່ຳ 50.000 ໂດລາສະຫະລັດ ແລະ ທະວີຄູນຄັ້ງລະ 50.000 ໂດລາສະຫະລັດ.

ວັນທີ:____/_____/_____ **ເລກທີ** _____

ຜູ້ຈອງຊື້ຮຸ້ນກູ້ ກະລຸນາຕື່ມຂໍ້ມູນໃສ່ດ້ານລຸ່ມນີ້ໃຫ້ຄົບຖ້ວນ ຊັດເຈນ

ຊື່ ແລະ ນາມສະກຸນ ຫຼື ນິຕິບຸກຄົນ (ພາສາອັງກິດ)_____

ເລກບັນຊີຮຸ້ນກູ້_____ ສຳເນົາເອກະສານປະກອບ ( ) ບັດປະຊາຊົນ ( ) ບັດຕ່າງດ້າວ ( ) ໜັງສືຜ່ານແດນ ( ) ໃບທະບຽນວິສາຫະກິດ

ເລກທີ_____ສັນຊາດ _____ ວັນເດືອນປີເກີດ _____ ອາຊີບ _____

ທີ່ຢູ່ປະຈຸບັນ _____ ປະເທດ_____ ໂທລະສັບ_____

ມືຖື _____ແຟັກ _____ອີເມວ_____

ຂ້າພະເຈົ້າ/ພວກເຮົາ ຂໍສະເໜີຈອງຊື້ຮຸ້ນກູ້ ໂດຍມີລາຍລະອຽດ ດັ່ງຕໍ່ໄປນີ້:

ອາຍຸ (ປີ)	ຈຳນວນ (ໜ່ວຍ)	ລາຄາສະເໜີຂາຍ (ໂດລາສະຫະລັດ/ ໜ່ວຍ)	ຈຳນວນເງິນທີ່ຕ້ອງຈ່າຍ (ໂດລາສະຫະລັດ)	ຈຳນວນເງິນເປັນຕົວໜັງສື (ໂດລາສະຫະລັດ)
04		50.000		
ລວມ				

ສັ່ງຈ່າຍຜ່ານ: **ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ດ້ງບັນຊີລຸ່ມນີ້:

ຊື່ບັນຊີ: **BCEL-KT (SVN CORPORATE BOND FOR SUBSCRIPTION) USD** A/C No: ....., ສະກຸນເງິນ: **ໂດລາສະຫະລັດ**

ຈຳນວນ: _____ໂດລາສະຫະລັດ, ທີ່ຢູ່ ທຄຕລ: ເລກທີ 01, ຖະໜົນ ປາງຄຳ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ

ລະຫັດ SWIFT: COEBLALA.

ຖ້າຂ້າພະເຈົ້າ/ພວກເຮົາ ໄດ້ຮັບການຈັດສັນຮຸ້ນກູ້ແລ້ວ, ຂ້າພະເຈົ້າ/ພວກເຮົາ ເຫັນດີໃຫ້ ຜູ້ອອກຈຳໜ່າຍຮຸ້ນກູ້ ອອກໃບຢັ້ງຢືນການຖືຄອງຮຸ້ນກູ້ໃນຊື່ "ສູນຮັບຝາກຫຼັກຊັບ" ສຳລັບການຈັດສັນຮຸ້ນກູ້ ແລະ ໂອນ ຕໍ່ໄປຫາບໍລິສັດຫຼັກຊັບ_____ເພື່ອຝາກຮຸ້ນກູ້ດັ່ງກ່າວໄວ້ທີ່"ສູນຮັບຝາກຫຼັກຊັບ " ໃນບັນຊີຮຸ້ນກູ້ຂອງ ຂ້າພະເຈົ້າ/ພວກເຮົາ ຊື່ບັນຊີຮຸ້ນກູ້:_____(ຊື່ຜູ້ຈອງຈະຕ້ອງເປັນຊື່ດຽວກັນກັບຊື່ບັນຊີຮຸ້ນກູ້), ເລກບັນຊີຮຸ້ນກູ້:_____.

ຖ້າຂ້າພະເຈົ້າ/ພວກເຮົາ ບໍ່ໄດ້ຮັບການຈັດສັນຈຳນວນຮຸ້ນກູ້ທີ່ຈອງ ຫຼື ບໍ່ໄດ້ຄືບຖ້ວນຕາມຈຳນວນທີ່ສັ່ງຈອງ, ຂ້າພະເຈົ້າ/ພວກເຮົາ ເຫັນດີໃຫ້ສົ່ງເງິນຄືນ ຫຼື ສົ່ງເງິນຈຳນວນທີ່ເກີນໄປຫາບັນຊີ ຂອງຂ້າພະເຈົ້າ/ພວກເຮົາ ດັ່ງລາຍລະອຽດຂໍ້ມູນລຸ່ມນີ້:

☐ ຝາກເງິນໄປບັນຊີຂ້າພະເຈົ້າ/ພວກເຮົາ ທີ່ທະນາຄານ:_____ , ສາຂາ: _____ , ເລກບັນຊີ _____.

(ໝາຍເຫດ: ຄ່າທຳນຽມ ທະນາຄານ ຫຼື ຄ່າໃຊ້ຈ່າຍອື່ນໆທີ່ເກີດຂຶ້ນຈະຕ້ອງໄດ້ຫັກຈາກຈຳນວນເງິນທີ່ສົ່ງຄືນຂອງຜູ້ສັ່ງຈອງຊື້ຮຸ້ນກູ້)

ຂ້າພະເຈົ້າ/ພວກເຮົາ ຂໍດຳເນີນການຈອງຊື້ຮຸ້ນກູ້ຂ້າງເທິງຕາມຈຳນວນທີ່ໄດ້ຮັບການຈັດສັນໃຫ້ຂ້າພະເຈົ້າ/ພວກເຮົາ ແລະ ຈະບໍ່ຍົກເລີກການຈອງຊື້ຮຸ້ນກູ້ໃນຄັ້ງນີ້ ລວມທັງຍອມຮັບການສົ່ງເງິນຄືນ, ໃນກໍລະນີການຈອງຊື້ຮຸ້ນກູ້ຂອງຂ້າພະເຈົ້າ/ພວກເຮົາ ຫາກຖືກປະຕິເສດຍ້ອນສາເຫດເອກະສານບໍ່ຄົບຖ້ວນຕາມທີ່ບໍລິສັດຕ້ອງການ ຫຼື ສາເຫດອື່ນໆ.

ລາຍເຊັນຜູ້ສັ່ງຈອງ _____

ຊື່ແຈ້ງ _____

ທ່ານຄວນສຶກສາລາຍລະອຽດຂອງຮຸ້ນກູ້ກ່ອນການລົງທຶນ

>> ສຳລັບພະນັກງານເທົ່ານັ້ນ >>	ຜູ້ກວດກາ:_____ ວັນທີ _____/_____/_____	ຜູ້ປ້ອນຂໍ້ມູນ: _____ ວັນທີ _____/_____/_____

ຜູ້ອະນຸມັດ: _____

ຊື່ແຈ້ງ: _____

ໃບຢັ້ງຢືນການຈອງຊື້ຮຸ້ນກູ້ (ຜູ້ຈອງຊື້ຮຸ້ນກູ້ ກະລຸນາຕື່ມຂໍ້ມູນໃສ່ດ້ານລຸ່ມນີ້ໃຫ້ຄົບຖ້ວນ ຊັດເຈນ)

ວັນທີຈອງ: ...../...../..... ໃບຈອງເລກທີ _____

ຫຼັກຖານການຊຳລະຄ່າຈອງຊື້ຮຸ້ນກູ້ (ຊື່ຜູ້ສັ່ງຈອງ)_____ສຳລັບການຈອງຊື້ຮຸ້ນກູ້ ຈຳນວນ_____ໜ່ວຍ, ລາຄາ: 50.000 ໂດລາສະຫະລັດຕໍ່ໜ່ວຍ, ມູນຄ່າທັ້ງໝົດ:_____ໂດລາສະຫະລັດ, ຈຳນວນເງິນເປັນຕົວໜັງສື (_____ ໂດລາສະຫະລັດ). ຊຳລະເງິນຄ່າຈອງຊື້ຮຸ້ນກູ້ເມື່ອວັນທີ _____,ໄດ້ຍື່ນ ແລະ ຖືກຮັບໄວ້ຮຽບຮ້ອຍແລ້ວ.

ຖ້າຮຸ້ນກູ້ຫາກໄດ້ຮັບການຈັດສັນໃຫ້ຂ້າພະເຈົ້າ/ພວກເຮົາແລ້ວ, ຂ້າພະເຈົ້າ/ພວກເຮົາ ເຫັນດີໃຫ້ ຜູ້ອອກຮຸ້ນກູ້ ອອກໃບຢັ້ງຢືນການຖືຄອງໃນຊື່ "ສູນຮັບຝາກຫຼັກຊັບ" ສຳລັບຮຸ້ນກູ້ທີ່ໄດ້ຮັບການຈັດສັນ ແລະ ຈະໂອນຮຸ້ນກູ້ໄປຫາບໍລິສັດຫຼັກຊັບ_____, ບັນຊີຮຸ້ນກູ້ຂອງຂ້າພະເຈົ້າ/ພວກເຮົາ ເລກທີ _____

ຜູ້ອະນຸມັດ _____

ຊື່ແຈ້ງ_____

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
Souvanny Home Center Public Company

ຂໍ້ສັງເກດທີ່ສຳຄັນ:

ໜັງສືຊວນຊື້ສະບັບນີ້ ແມ່ນເອກະສານທີ່ສຳຄັນ ແລະ ຄວນອ່ານໃຫ້ເຂົ້າໃຈເນື້ອໃນທັງໝົດຂອງ
ໜັງສືຊວນຊື້ສະບັບນີ້. ທ່ານຍັງສາມາດປຶກສາກັບນາຍໜ້າຊື້ຂາຍຫຼັກຊັບ, ບໍລິສັດກວດສອບບັນຊີ,
ທີ່ປຶກສາກົດໝາຍ ຫຼື ຊ່ຽວຊານດ້ານອື່ນໆ ເພື່ອຂໍຄຳແນະນຳກ່ຽວກັບເນື້ອໃນຂອງໜັງສືຊວນຊື້ສະບັບນີ້.